# ປື້ມຄູ່ມື

# ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

# (Economic Dispute Resolution)

ໂດຍ ກຸ່ມແພ່ງ ແລະ ເສດຖະກິດ
ໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທຳ ແຫ່ງ ສປປ ລາວ

ດ້ວຍການຮ່ວມມືລະຫວ່າງ ສານປະຊາຊົນ, ອົງການໄອຍະການປະຊາຊົນ,
ກະຊວງຍຸຕິທຳ, ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ
ກັບ ອົງການຮ່ວມມືສາກົນ ຍີ່ປຸ່ນ (JICA)

ປີ 2017

# ປື້ມຄູ່ມືການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

# (Economic Dispute Resolution)

ໂດຍ ກຸ່ມແພ່ງ ແລະ ເສດຖະກິດ

ໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທຳ ແຫ່ງ ສປປ ລາວ

ດ້ວຍການຮ່ວມມືລະຫວ່າງ ສານປະຊາຊົນ, ອົງການໄອຍະການປະຊາຊົນ, ກະຊວງຍຸຕິທຳ,

ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ

ກັບ ອົງການຮ່ວມມືສາກົນ ຍີ່ປຸ່ນ (JICA)

ປີ 2017

## ຄະນະຊີ້ນໍາໂຄງການ

| | |
|---|---|
| ທ່ານ ສຈ. ເກດ ກຽດຕິສັກ | ຮອງລັດຖະມົນຕີກະຊວງຍຸຕິທໍາ |
| ທານ ຄໍາພາ ແສງດາຣາ | ຮອງປະທານສານປະຊາຊົນສູງສຸດ |
| ທານ ໄຊຊະນະ ໂຄດພູທອນ | ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ |
| ທານ ຮສ ປອ ສາຍຂອງ ສາຍນະສິນ | ຮອງອະທິການບໍດີມະຫາວິທະຍາໄລແຫ່ງຊາດ |

## ຄະນະບໍລິຫານໂຄງການ

| | |
|---|---|
| ທ່ານ ປອ ຈອມຄໍາ ບຸບຜາລີວັນ | ຫົວໜ້າກົມສົ່ງເສີມລະບົບຍຸຕິທໍາ ກະຊວງຍຸຕິທໍາ |
| ທ່ານ ບຸນຂວາງ ທະວີສັກ | ຫົວໜ້າຫ້ອງການ, ສານປະຊາຊົນສູງສຸດ |
| ທ່ານ ສີສູນທອນ ສ.ຜາບມີໄຊຍ໌ | ຫົວໜ້າຫ້ອງການ, ອົງການໄອຍະການ ຕາງໜ້າໂດຍ ທ່ານ ຄໍາເພັດ ສີມວໍລະຈິດ |
| ທ່ານ ຮສ ວຽງວິໄລ ທ່ຽງຈັນໄຊ | ຄະນະບໍດີຄະນະນິຕິສາດ ແລະ ລັດຖະສາດ, ມະຫາວິທະຍາໄລແຫ່ງຊາດ |

## ຄົ້ນຄວ້າ ແລະ ຮຽບຮຽງ ໂດຍ:

| | |
|---|---|
| ທ່ານ ສົມສັກ ໄຕບຸນລັກ | ສານປະຊາຊົນສູງສຸດ |
| ທ່ານ ບຸນຂວາງ ທະວີສັກ | ສານປະຊາຊົນສູງສຸດ |
| ທ່ານ ສິງເພັດ ວໍລະຈິດ | ສານປະຊາຊົນສູງສຸດ |
| ທ່ານ ສຸລິສັກ ແກ້ວປະເສີດ | ສານປະຊາຊົນສູງສຸດ |
| ທ່ານ ນາງ ມະນີຂັນ ເພັດວິໄຊ | ສານປະຊາຊົນສູງສຸດ |
| ທ່ານ ບົວລີ ເພັດມີໄຊ | ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ນາງ ລັດຕະນະພອນ ພະພັກດີ | ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ຄໍາຫຼ້າ ຄໍາສິງກາ | ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ບຸນໄທ ວົງລໍຄໍາ | ອົງການໄອຍະການປະຊາຊົນສູງສຸດ |
| ທ່ານ ຮສ ໄພມະນີ ໄຊວົງສາ | ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ບຸນເຖິງ ສີທອນແກ້ວຈໍາປາ | ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ທອງຄໍາ ລໍ່ຢ່າງ | ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |
| ທ່ານ ພູໄຊ ຈັນທະວົງ | ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ |

| | |
|---|---|
| ທ່ານ ປອ ວຽງເພັດ ເຊັງຊີ້ງເຢຍລໍ່ໄຟຈິງ | ກະຊວງຍຸຕິທຳ |
| ທ່ານ ປອ ສີຣິມະຕະ ຈັນທະຣາສີ | ກະຊວງຍຸຕິທຳ |
| ທານ ນາງ ສີສຸດາ ໂສພາວັນດີ | ກະຊວງຍຸຕິທຳ |
| ທານ ແສງຕາວັນ ວົງປະເສີດ | ກະຊວງຍຸຕິທຳ |
| ທ່ານ ວັນນະກອນ ຈັນທະປັນຍາ | ກະຊວງຍຸຕິທຳ |
| ທ່ານ ແນວພະຈັນ ຄຳມະນີວົງ | ກະຊວງຍຸຕິທຳ |

# ປົດຄຳເຫັນ

ຂ້າພະເຈົ້າ ຕາງໜ້າຄະນະຊີ້ນຳໂຄງການ ຂໍສະແດງຄວາມຊົມເຊີຍຄະນະຄົ້ນຄວ້າກຸ່ມແພ່ງ ແລະ ເສດຖະກິດ ທີ່ໄດ້ໃຊ້ຄວາມພະຍາຍາມລວບລວມບັນດາທິດສະດີ, ຫຼັກການຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ບົດຮຽນຂອງສາກົນ ສົມທົບກັບການຈັດຕັ້ງປະຕິບັດຕົວຈິງຂອງ ສປປ ລາວ ຂຽນປຶ້ມຄູ່ມືການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອເປັນຄູ່ມືໃຫ້ຜູ້ນຳໃຊ້ເຂົ້າໃຈຢ່າງເປັນເອກະພາບໃນການຈັດຕັ້ງປະຕິບັດ. ຄະນະຂຽນປຶ້ມຄູ່ມືເຫຼັ້ມນີ້ ປະກອບດ້ວຍ ນັກວິຊາການຄົ້ນຄວ້າກົດໝາຍ ທີ່ມາຈາກຫຼາຍພາກສ່ວນ ເປັນຕົ້ນ ສານປະຊາຊົນ, ອົງການໄອຍະການປະຊາຊົນ, ຄະນະນິຕິສາດ ແລະ ລັດຖະສາດ ມະຫາວິທະຍາໄລແຫ່ງຊາດ ແລະ ກະຊວງຍຸຕິທຳ ໂດຍການຮ່ວມມືຈາກກະຊວງຍຸຕິທຳຍີ່ປຸ່ນ ຜ່ານອົງການຮ່ວມມືສາກົນ ຍີ່ປຸ່ນ (JICA) ພາຍໃຕ້ໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທຳ ຊຶ່ງໄດ້ໃຫ້ການສະໜັບສະໜູນທາງດ້ານທຶນຮອນ ເປັນຕົ້ນ ທຶນສຳລັບຄະນະຄົ້ນຄວ້າໄປຝຶກອົບຮົມ, ທັດສະນະສຶກສາຢູ່ພາຍໃນ ແລະ ຕ່າງປະເທດ, ຊ່ວຍຈັດພິມ ແລະ ເຜີຍແຜ່ປຶ້ມຄູ່ມືສະບັບນີ້. ນອກຈາກນີ້ ຍັງປະກອບສ່ວນທາງດ້ານວິຊາການ ເຊັ່ນ ອາຈານ, ສາດສະດາຈານ ແລະ ຜູ້ຊ່ຽວຊານທາງດ້ານກົດໝາຍຫຼາຍທ່ານ ຈາກມະຫາວິທະຍາໄລກົດໝາຍຂອງປະທດຍີ່ປຸ່ນ ເພື່ອໃຫ້ບົດຮຽນ ແລະ ແນະນຳວິທີການຂຽນ, ອະທິບາຍເນື້ອໃນ ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ລວມທັງກົດໝາຍອື່ນທີ່ກ່ຽວຂ້ອງ ໂດຍມີການປຽບທຽບກັບກົດໝາຍຍີ່ປຸ່ນ ແລະ ສົນທິສັນຍາສາກົນວ່າດ້ວຍ ການຮັບຮູ້ ແລະ ການຈັດຕັ້ງປະຕິບັດຄຳຕັດສິນກ່ຽວກັບຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດ ຫຼື ຮັບຮູ້ກັນໃນນາມ ສົນທິສັນຍານິວຢອກ ປີ 1958 ທີ່ ສປປ ລາວ ໄດ້ເຂົ້າເປັນພາຄີ.

ການພັດທະນາລະບົບກົດໝາຍຢູ່ ສປປ ລາວ ຕິດພັນກັບການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍເທື່ອລະກ້າວ. ສະນັ້ນ, ການເຄື່ອນໄຫວວຽກງານການແກ້ໄຂຂໍ້ແຍ່ງທາງດ້ານເສດຖະກິດຢູ່ ສປປ ລາວ ແມ່ນວຽກງານໜຶ່ງທີ່ມີຄວາມສຳຄັນໃນຂະແໜງການຍຸຕິທຳ ເພື່ອແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ຊຶ່ງໃນລະຍະຜ່ານມາ ໄດ້ມີນິຕິກຳຈຳນວນໜຶ່ງ ເປັນບ່ອນອີງພື້ນຖານໃຫ້ແກ່ຕໍ່ການເຄື່ອນໄຫວວຽກງານດັ່ງກ່າວ ແຕ່ຍ້ອນສະພາບເສດຖະກິດ-ສັງຄົມ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ຈຶ່ງເຮັດໃຫ້ບາງບົດບັນຍັດຂອງນິຕິກຳບໍ່ສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດເຮົາ. ດ້ວຍເຫດນີ້ ຈຶ່ງໄດ້ມີການປັບປຸງ, ຮັບຮອງ ແລະ ປະກາດໃຊ້ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບ ປີ 2010. ໃນພາກປະຕິບັດຕົວຈິງເຫັນວ່າ ຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຍັງບໍ່ທັນເລິກເຊິ່ງ ແລະ ບໍ່ທັນເປັນເອກະພາບ. ເພື່ອສ້າງເງື່ອນໄຂສະດວກແກ່ຜູ້ຈັດຕັ້ງປະຕິບັດວຽກງານຕົວຈິງ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຂອງລັດ, ລວມໝູ່ ແລະ ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ. ສະນັ້ນ, ບັນດາທິດສະດີ, ຫຼັກການກົດໝາຍ ລວມທັງວິທີການຈັດຕັ້ງປະຕິບັດວຽກງານແກ້ໄຂຂໍ້ຂັດແຍ່ງ ຢູ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈຶ່ງໄດ້ຖືກລວບລວມ ແລະ ອະທິບາຍໄວ້ໃນປຶ້ມຄູ່ມືເຫຼັ້ມນີ້.

ຂ້າພະເຈົ້າ ຕາງໜ້າຄະນະຄົ້ນຄວ້າຂຽນປຶ້ມຄູ່ມືກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຕາງໜ້າປະຊາຊົນລາວບັນດາເຜົ່າ ຂໍສະແດງຄວາມຂອບໃຈມາຍັງລັດຖະບານ ແລະ ປະຊາຊົນຍີ່ປຸ່ນ, ສາດສະດາຈານ ແລະ ຜູ້ຊ່ຽວຊານກົດໝາຍຍີ່ປຸ່ນ ຜ່ານອົງການພັດທະນາຊັບພະຍາກອນມະນຸດໃນຂົງເຂດຍຸຕິທຳ (JICA) ທີ່ໄດ້ໃຫ້ການຊ່ວຍເຫຼືອດ້ານທຶນຮອນ ແລະ ວິຊາການໃນການສ້າງຊັບພະຍາກອນມະນຸດ ຂອງ ສປປ ລາວ ກໍຄືການສ້າງນັກກົດໝາຍລາວ. ຫວັງ

ຢ່າງຍິ່ງວ່າປຶ້ມຄູ່ມືເຫຼັ້ມນີ້ຈະເປັນມໍຣະດົກ ແລະ ເປັນຄັງຄວາມຮູ້ອັນລ້ຳຄ່າທາງດ້ານວິຊາການ ໃຫ້ແກ່ທ່ານຜູ້ອ່ານ ເພື່ອປະກອບສ່ວນໃນການພັດທະນາລັດ ສປປ ລາວ ໃຫ້ກາຍເປັນລັດປົກຄອງດ້ວຍກົດໝາຍເທື່ອລະກ້າວ.

ໃນການຂຽນປຶ້ມຄູ່ມືເຫຼັ້ມນີ້ ເຖິງວ່າຄະນະຄົ້ນຄວ້າກຸ່ມແພ່ງ ແລະ ເສດຖະກິດ ໄດ້ສົມທົບກັບ ບັນດາສາດສະດາຈານຍີ່ປຸ່ນ ແລະ ຜູ້ຊ່ຽວຊານກົດໝາຍປະຈຳໂຄງການ ຊຶ່ງໄດ້ພ້ອມກັນສຸມສະຕິປັນຍາຄົ້ນຄວ້າຫາແຫຼ່ງຂໍ້ມູນ ຜ່ານການຄົ້ນຄວ້າເປັນກຸ່ມຍ່ອຍ, ຜ່ານການໄປທັດສະນະສຶກສາທັງພາຍໃນ ແລະ ຕ່າງປະເທດ ແລ້ວນຳເອົາຜົນຂອງການຄົ້ນຄວ້າແຕ່ລະຄັ້ງມາຜັນຂະຫຍາຍບັນຈຸເຂົ້າເນື້ອໃນຂອງປຶ້ມຄູ່ມືເຫຼັ້ມນີ້ ແລະ ໃຊ້ເວລາໃນການຂຽນ ແລະ ຮຽບຮຽງຄືນເຖິງສອງປີກໍຕາມ ແຕ່ກໍປາຈະຈາກບໍ່ໄດ້ຂໍ້ຂາດຕົກບົກພ່ອງບາງປະການ ຫວັງຢ່າງຍິ່ງວ່າ ບັນດາທ່ານຜູ້ອ່ານ, ນັກຄົ້ນຄວ້າ, ນັກຮຽນຮູ້ ປັນຍາຊົນ ແລະ ຜູ້ທີ່ມີຄວາມສົນໃຈ ຫາກໄດ້ອ່ານ ຫາກພົບເຫັນກະລຸນາຊ່ວຍໃຫ້ຄຳຕຳນິຕິຊົມ, ແນະນຳ ແລະ ໃຫ້ຄຳເຫັນ ເພື່ອໃຫ້ຄະນະຄົ້ນຄວ້າຂຽນປຶ້ມຄູ່ມືເຫຼັ້ມນີ້ ມີທິດທາງໃນການປັບປຸງເນື້ອໃນໃຫ້ມີຄວາມຄົບຖ້ວນ ແລະ ສົມບູນຍິ່ງຂຶ້ນໃນອະນາຄົດ.

**ຮອງປະທານສານປະຊາຊົນສູງສຸດ**
**ຄະນະຊີ້ນຳໂຄງການ**

ຄຳພາ ແສງດາຣາ

# ຄຳເຫັນຊ່ຽວຊານປະຈຳໂຄງການ

ທ່ານ ນາງ ທະນະຫະຊິ ເລໂກະ
Ms. TANAHASHI Reiko

ປື້ມຄູ່ມືຫົວນີ້ ແມ່ນປື້ມອະທິບາຍກ່ຽວກັບການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຢ່າງຄົບຖ້ວນ ທີ່ປະຕິບັດຢູ່ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສກສ ຫຼື ຫກສ), ພ້ອມທັງ ອະທິບາຍລະບົບການແກ້ໄຂ, ເນື້ອໃນທີ່ກຳນົດໄວ້ໃນກົດໝາຍ ແລະ ມີແຜນວາດທີ່ສະແດງໃຫ້ເຫັນທຸກຂັ້ນຕອນຂອງການດຳເນີນ, ມີແບບຟອມທີ່ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນຳໃຊ້ຕົວຈິງ ປະກອບເຂົ້າໃນປື້ມຫົວນີ້ດ້ວຍ. ດັ່ງນັ້ນ, ຂ້າພະເຈົ້າຄິດວ່າ ປື້ມຄູ່ມືຫົວນີ້ຈະເປັນປະໂຫຍດຫຼາຍໃຫ້ແກ່ຜູ້ທີ່ມີຄວາມສົນໃຈກ່ຽວກັບ ທິດສະດີກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້າານເສດຖະກິດ ແລະ ຜູ້ທີ່ກຳລັງຄິດຈະນຳໃຊ້ການແກ້ໄຂດັ່ງກ່າວ.

ກ່ອນທີ່ຈະສຳເລັດປື້ມຄູ່ມືຫົວນີ້ ສະມາຊິກກຸ່ມແຜ່ງ ແລະ ເສດຖະກິດຂອງໂຄງການ ຈຳນວນ 21 ທ່ານ ໄດ້ຕັ້ງໃຈປັບປຸງຮ່າງເນື້ອໃນຫຼາຍຄັ້ງ ໂດຍອີງໃສ່ການເຄື່ອນໄຫວ ຈັດກອງປະຊຸມພາຍໃນ ແລະ ນອກສະຖານທີ່ ຈົນນັບເທື່ອບໍ່ໄດ້, ຈັດຝຶກອົບຮົມຢູ່ປະເທດຍີ່ປຸ່ນ ແລກປ່ຽນຄວາມຮູ້ຮ່ວມກັນກັບ ບັນດາອາຈານຈາກມະຫາວິທະຍາໄລ ແລະ ນັກວິຊາການ ຂອງປະເທດຍີ່ປຸ່ນຈົນບໍ່ສາມາດຮູ້ໄດ້ວ່າ ໃນມື້ໜຶ່ງໄດ້ແລກປ່ຽນຄຳຄິດເຫັນຕໍ່ກັບບັນຫາໜຶ່ງຈັກເທື່ອ. ຕໍ່ສິ່ງດັ່ງກ່າວ, ຂ້າພະເຈົ້າ ຈຶ່ງຂໍສະແດງຄວາມຂອບໃຈ ແລະ ນັບຖືເປັນຢ່າງສູງ ສຳລັບຄວາມພະຍາຍາມຂອງສະມາຊິກ ເຖິງວ່າແຕ່ລະທ່ານຈະມີວຽກຂອງຕົນຫຍຸ້ງຍາກຫຼາຍປານໃດກໍຕາມ ແຕ່ກໍຍັງເສຍສະຫຼະເວລາສຸມໃສ່ການສ້າງປື້ມຄູ່ມືຫົວນີ້ຈົນສຳເລັດ ລວມທັງການຮ່ວມມືຊ່ວຍເຫຼືອຈາກພະນັກງານຂອງ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນຕົ້ນ ທ່ານ ເພັດສະໝອນ ຕັນນຸວົງ, ທ່ານ ບຸນທິດາ ພົມສະຫວັນ ແລະ ທ່ານ ບຸນເພັງ ວົງໂພທອງ ໄດ້ເຂົ້າຮ່ວມກອງປະຊຸມເປັນປະຈຳ ແລະ ໃຫ້ຂໍ້ມູນທີ່ເປັນປະໂຫຍດໃນການສ້າງປື້ມ ໃຫ້ແກ່ພວກເຮົາຕະຫຼອດມາ.

ປື້ມຄູ່ມືຫົວນີ້ ເປັນພຽງຜົນສຳເລັດອັນໜຶ່ງເທົ່ານັ້ນ ເພາະຖ້າເວົ້າເຖິງການພັດທະນາລະບົບກົດໝາຍຂອງ ສປປ ລາວ ແລ້ວຍັງເປັນພຽງບາດກ້າວທຳອິດ. ສຳລັບຜູ້ອ່ານແລ້ວ ທ່ານກໍຈະໄດ້ຄວາມຮູ້ຈາກປື້ມຫົວນີ້ແນ່ນອນ ແລະ ຢາກຝາກເຖິງທຸກທ່ານ ເມື່ອໄດ້ອ່ານແລ້ວ ຫາກມີຄຳເຫັນຕິຊົມແນວໃດ ກໍໃຫ້ມີຄຳເຫັນແກ່ພວກເຮົາດ້ວຍ. ຂ້າພະເຈົ້າຄິດວ່າ ສະມາຊິກຜູ້ສ້າງປື້ມຄູ່ມືຫົວນີ້ ຈະນຳເອົາຄຳຄິດຄຳເຫັນຂອງທ່ານ ມາປັບປຸງໃຫ້ດີຂຶ້ນ ແລະ ເຊື່ອວ່າຄຳເຫັນດັ່ງກ່າວ ຈະກໍ່ໃຫ້ເກີດການຄົ້ນຄ້ວາ ເຊື່ອມໄປຫາການພັດທະນາທິດສະດີກົດໝາຍ ແລະ ການປັບປຸງລະບົບການດຳເນີນການໃນຕໍ່ໜ້າ.

ສຸດທ້າຍນີ້ ຂ້າພະເຈົ້າຄິດວ່າ ຜູ້ໃຫ້ການສະນັບສະໜູນ ການສ້າງປື້ມຄູ່ມືຫົວນີ້ ຄົງຈະຮູ້ສຶກດີໃຈຫຼາຍ ຖ້າປື້ມຫົວນີ້ ຫາກໄດ້ເປັນສ່ວນໜຶ່ງ ໃນການຊ່ວຍພັດທະນາທິດສະດີກົດໝາຍ ຂອງ ສປປ ລາວໄດ້ ໃນຕໍ່ໜ້າ.

ຂໍຂອບໃຈ

# ແຜນວາດ
## ຂັ້ນຕອນຫຍໍ້ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ



# ແຜນວາດ
## ການຍື່ນຄຳຮ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ




---

* ໃນພາກປະຕິບັດຕົວຈິງ ອາດມີຄວາມແຕກຕ່າງຈາກຂັ້ນຕອນໃນແຜນວາດ ຊຶ່ງມີລາຍລະອຽດໃນບົດທີ 4 ຂໍ້ 2

** ໃນພາກປະຕິບັດຕົວຈິງ ການພິຈາລະນາຄຳຮ້ອງອາດມີຄວາມແຕກຕ່າງຈາກຂັ້ນຕອນໃນແຜນວາດ ຊຶ່ງມີລາຍລະອຽດໃນບົດທີ 4 ຂໍ້ 4.2

**ແຜນວາດ**

**ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການໄກ່ເກ່ຍ**




* ເນື້ອໃນລະອຽດກ່ຽວກັບການສິ້ນສຸດການໄກ່ເກ່ຍໄດ້ອະທິບາຍໃນ ບົດທີ 5 ຂໍ້ 5

# ແຜນວາດການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການຕັດສິນ




* ເນື້ອໃນລະອຽດກ່ຽວກັບການຕົກລົງຂອງຄູ່ກໍລະນີກ່ອນການຕັດສິນ ໄດ້ອະທິບາຍໃນບົດທີ 6 ຂໍ້ 4

**ໝາຍເຫດ**

| | |
|---|---|
| | ຂັ້ນຕອນຫຼັກຂອງການຍື່ນຄຳຮ້ອງ |
| | ຂັ້ນຕອນຫຼັກຂອງການແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍ |
| | ຂັ້ນຕອນຫຼັກຂອງການແກ້ໄຂຂໍ້ຂັດແຍ່ງດ້ວຍການຕັດສິນ |
| | ຂັ້ນຕອນຍ່ອຍ |
| | ຂັ້ນຕອນດຳເນີນປົກກະຕິ |
| | ຂັ້ນຕອນດຳເນີນບໍ່ປົກກະຕິ |
| | ຂອບເຂດ |
| | ລະຍະເວລາ |
| | ການອະທິບາຍ |
| * | ຈຸດຊີ້ບອກເນື້ອໃນລະອຽດ |
| **ສກສ** | ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ |
| **ຫກສ** | ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ |
| **ມ ໐໐** | ມາດຕາຂອງ ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ |

## ສາລະບານ


**ບົດນຳ**..........1

**ບົດທີ 1 ປະຫວັດຄວາມເປັນມາຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**..........3

**1. ປະຫວັດຄວາມເປັນມາຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ**..........3

**1.1 ສະພາບລວມກ່ອນການສ້າງຕັ້ງ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**..........3

**1.2 ການສ້າງຕັ້ງ ແລະ ການພັດທະນາ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**..........3

**2. ການເຂົ້າຮ່ວມສົນທິສັນຍານິວຢອກ 1958 ຂອງ ສປປ ລາວ**..........7

**2.1 ຄວາມໝາຍ**..........7

**2.2 ຄວາມຈຳເປັນໃນການເຂົ້າເປັນພາຄີສົນທິສັນຍານິວຢອກ 1958**..........8

**2.3 ຜົນປະໂຫຍດທີ່ໄດ້ຮັບຈາກການເຂົ້າເປັນພາຄີຂອງສົນທິສັນຍານິວຢອກປີ 1958**..........8

**ບົດທີ 2 ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**..........10

**1. ຄວາມຮູ້ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**..........10

**1.1 ຄວາມໝາຍ**..........10

**1.2 ຄວາມສຳຄັນ**..........10

**1.3 ຈຸດປະສົງ**..........11

**2. ຫຼັກການ, ຮູບການ ແລະ ຂອບເຂດ ຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**..........11

**2.1 ຫຼັກການຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**..........11

2.1.1 ຮັບປະກັນຄວາມຍຸຕິທຳ ແລະ ສອດຄ່ອງກັບກົດໝາຍ.......... 12

2.1.2 ຄວາມສະໝັກໃຈຂອງຄູ່ກໍລະນີ..........12

2.1.3 ຄວາມສະເໝີພາບຂອງຄູ່ກໍລະນີ..........12

2.1.4 ຄວາມເປັນເອກະລາດ ແລະ ທ່ຽງທຳ ຂອງຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ..........12

2.1.5 ພາສາ ທີ່ນຳໃຊ້..........13

2.1.6 ການຮັບປະກັນຄວາມລັບ.......... 13

**2.2 ຮູບການ**..........14

**2.3 ຂອບເຂດການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**..........14

**3. ຜູ້ດຳເນີນການແກ້ໄຂຂໍ້ຂັແຍ່ງ**.......... 14

**3.1 ຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນ**..........14

**3.2 ມາດຕະຖານຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນ**..........15

**3.3 ສິດ ແລະ ໜ້າທີ່ຂອງຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນ**..........15

**3.4 ຂໍ້ຫ້າມສຳລັບຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນ**.......... 15

**4. ຜູ້ເຂົ້າຮ່ວມການແກ້ໄຂທາງດ້ານເສດຖະກິດ**..........16

**4.1 ຄູ່ກໍລະນີ**.......... 16

4.1.1 ສິດຂອງຄູ່ກໍລະນີ..........16

4.1.2 ພັນທະຂອງຄູ່ກໍລະນີ..........16

4.1.3 ຂໍ້ຫ້າມສຳລັບຄູ່ກໍລະນີ........ 17
**4.2 ຜູ້ຕາງໜ້າ**........ 17
4.2.1 ຜູ້ຕາງໜ້າຕາມກົດໝາຍ........ 17
4.2.2 ຜູ້ຕາງໜ້າຕາມການມອບໝາຍ........ 17
**4.3 ບຸກຄົນທີສາມ**........ 17
**4.4 ຜູ້ຊ່ຽວຊານ**........ 18
4.4.1 ສິດຂອງຜູ້ຊ່ຽວຊານ........ 18
4.4.2 ພັນທະຂອງຜູ້ຊ່ຽວຊານ........ 19
**4.5 ຜູ້ແປພາສາ**........ 19
4.5.1 ສິດຂອງຜູ້ແປພາສາ........ 19
4.5.2 ພັນທະຂອງຜູ້ແປພາສາ........ 19
**4.6 ພະຍານ**........ 19
4.6.1 ສິດຂອງພະຍານ........ 19
4.6.2 ພັນທະຂອງພະຍານ........ 20
**5. ອົງການຮັບຜິດຊອບ, ອົງການຄຸ້ມຄອງ ແລະ ອົງການກວດກາ ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**........ 20
**5.1 ອົງການຮັບຜິດຊອບ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດະກິດ**........ 20
5.1.1 ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ........ 20
5.1.2 ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ........ 21
**5.2 ອົງການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**........ 22
5.2.1 ກະຊວງ ຍຸຕິທຳ........ 22
5.2.2 ພະແນກ ຍຸຕິທຳແຂວງ........ 22
**5.3 ອົງການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**........ 23
5.3.1 ອົງການກວດກາພາຍໃນ........ 24
5.3.2 ອົງການກວດກາພາຍນອກ........ 24
**ບົດທີ 3 ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**........ 25
**1. ຄວາມຮູ້ກ່ຽວກັບຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**........ 25
**1.1 ຄວາມໝາຍ**........ 25
**1.2 ຄວາມສຳຄັນ**........ 25
**1.3 ຈຸດປະສົງ**........ 25
**2. ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**........ 25
2.1 **ຄ່າທຳນຽມ**........ 26
2.1.1 ຄວາມໝາຍ........ 26
2.1.2 ລະບຽບການເກັບ........ 26
2.1.3 ຄວາມຮັບຜິດຊອບໃນການເກັບ ແລະ ຈ່າຍຄ່າທຳນຽມ........ 26
**2.2 ຄ່າບໍລິການ**........ 27
2.2.1 ຄວາມໝາຍ........ 27
2.2.2 ລະບຽບການເກັບ........ 27
2.2.3 ຄວາມຮັບຜິດຊອບໃນການເກັບ ແລະ ຈ່າຍຄ່າບໍລິການ........ 27
**2.3 ຄ່າແຮງງານ**........ 27

2.3.1 ຄວາມໝາຍ........................................................................................ 27
2.3.2 ລະບຽບການເກັບ........................................................................................ 27
2.3.3 ຄວາມຮັບຜິດຊອບໃນການເກັບ ແລະ ຈ່າຍຄ່າແຮງງານ........................................ 28
**3. ການຄຸ້ມຄອງ ແລະ ກວດກາຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**............................ 29
**3.1 ການຄຸ້ມຄອງ**........................................................................................ 29
**3.2 ການກວດກາ**........................................................................................ 30
**ບົດທີ 4 ການຍື່ນຄຳຮ້ອງ, ການພິຈາລະນາ ແລະ ການເລືອກຮູບການ**........................ 31
**1. ຄວາມຮູ້ກ່ຽວກັບຄຳຮ້ອງ**........................................................................................ 31
**1.1 ຄວາມໝາຍ**........................................................................................ 31
**1.2 ຄວາມສຳຄັນ**........................................................................................ 31
**1.3 ຈຸດປະສົງ**........................................................................................ 31
**1.4 ເນື້ອໃນ**........................................................................................ 31
**1.4.1** ຂໍ້ມູນທົ່ວໄປຂອງຄູ່ກໍລະນີ........................................................................................ 32
**1.4.2** ບັນຫາທີ່ເກີດຂໍ້ຂັດແຍ່ງ........................................................................................ 32
**1.4.3** ມູນຄ່າຂອງຂໍ້ຂັດແຍ່ງ........................................................................................ 32
**1.4.4** ການແກ້ໄຂຂໍ້ຂັດແຍ່ງໃນລະຍະຜ່ານມາ........................................................................................ 32
**1.4.5** ຂໍ້ສະເໜີຂອງຄູ່ກໍລະນີ........................................................................................ 32
**1.4.6** ວິທີເລືອກຮູບການແກ້ໄຂຂໍ້ຂັດແຍ່ງ........................................................................................ 33
**2. ການຕົກລົງກັນຂອງຄູ່ກໍລະນີ**........................................................................................ 33
**2.1 ການຕົກລົງກັນ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ**........................................................................................ 33
**2.2 ການຕົກລົງກັນ ພາຍຫຼັງທີ່ມີຂໍ້ຂັດແຍ່ງທາງດ້ານເສດຖະກິດ**........................................................................................ 33
**2.2.1** ການຕົກລົງກັນກ່ອນການຍື່ນຄຳຮ້ອງ........................................................................................ 33
**2.2.2** ການຕົກລົງກັນໃນເວລາຍື່ນຄຳຮ້ອງ........................................................................................ 34
**3. ການປະກອບເອກະສານ**........................................................................................ 35
**3.1 ຄຳຮ້ອງ**........................................................................................ 35
**3.2 ສັນຍາທີ່ກ່ຽວຂ້ອງ**........................................................................................ 35
**3.3 ຄຳຕົກລົງຂອງຄູ່ກໍລະນີ**........................................................................................ 35
**3.4 ຂໍ້ມູນ ຫຼື ເອກະສານອື່ນ ທີ່ເປັນຫຼັກຖານ**........................................................................................ 35
**4. ການຍື່ນຄຳຮ້ອງ ແລະ ຂັ້ນຕອນການພິຈາລະນາຄຳຮ້ອງ**........................................................................................ 35
**4.1 ການຍື່ນຄຳຮ້ອງ**........................................................................................ 35
**4.1.1** ການຍື່ນດ້ວຍຕົນເອງ........................................................................................ 36
**4.1.2** ການຍື່ນຄຳຮ້ອງໂດຍຜູ້ຕາງໜ້າ........................................................................................ 36
**4.1.3** ສະຖານທີ່ຍື່ນຄຳຮ້ອງ........................................................................................ 36
**4.2 ຂັ້ນຕອນການພິຈາລະນາຄຳຮ້ອງ**........................................................................................ 37
**4.2.1** ການຮັບຄຳຮ້ອງ........................................................................................ 37
**4.2.2** ການພິຈາລະນາຄຳຮ້ອງ........................................................................................ 37
**5. ການເຊີນຄູ່ກໍລະນີ**........................................................................................ 39
**6. ການແກ້ຄຳຮ້ອງ ແລະ ຂັ້ນຕອນການພິຈາລະນາຄຳແກ້ຄຳຮ້ອງ**........................................................................................ 39

6.1 ການແກ້ຄຳຮ້ອງ....39
6.2 ການຮັບຄຳແກ້ຄຳຮ້ອງ....40
6.3 ການພິຈາລະນາ....40
7. ການປະກອບສຳນວນຂໍ້ຂັດແຍ່ງທາງດ້ານເສດຖະກິດ....40
8. ການເລືອກຮູບການ....41
ບົດທີ 5 ການແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍ....42
1. ຄວາມຮູ້ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍ....42
1.1 ຄວາມໝາຍ....42
1.2 ຄວາມສຳຄັນ.... 42
1.3 ຈຸດປະສົງ....44
1.4 ຄວາມຄ້າຍຄື ແລະ ແຕກຕ່າງ ລະຫວ່າງ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍວິທີການໄກ່ເກ່ຍ ຢູ່ ສກສ ຫຼື ຫກສ ແລະ ການໄກ່ເກ່ຍ ຢູ່ສານປະຊາຊົນ.... 44
2. ການເລືອກ, ການແຕ່ງຕັ້ງ, ການຖອນຕົວ ແລະ ການຄ້ານຕົວຜູ້ໄກ່ເກ່ຍ....46
2.1 ການເລືອກຜູ້ໄກ່ເກ່ຍ....46
2.1.1 ກໍລະນີເລືອກຜູ້ໄກ່ເກ່ຍ ໜຶ່ງ ຄົນ....47
2.1.2 ກໍລະນີເລືອກຜູ້ໄກ່ເກ່ຍ ສາມ ຄົນຂຶ້ນໄປ....47
2.2 ການແຕ່ງຕັ້ງຜູ້ໄກ່ເກ່ຍ....47
2.2.1 ສິດໃນການແຕ່ງຕັ້ງຜູ້ໄກ່ເກ່ຍ....47
2.2.2 ການມອບສຳນວນໃຫ້ຜູ້ຖືກແຕ່ງຕັ້ງ....48
2.3 ການຖອນຕົວ ແລະ ການຄ້ານຕົວ....48
2.3.1 ການຖອນຕົວ....48
2.3.2 ການຄ້ານຕົວ.... 49
3. ຂັ້ນຕອນການດຳເນີນການໄກ່ເກ່ຍ....50
3.1 ການກະກຽມການໄກ່ເກ່ຍ....50
3.1.1 ການກະກຽມເບື້ອງຕົ້ນ....50
3.1.2 ການກະກຽມກອງປະຊຸມໄກ່ເກ່ຍ....50
3.2 ການດຳເນີນການໄກ່ເກ່ຍ....51
3.2.1 ການເປີດກອງປະຊຸມ, ແຈ້ງລາຍຊື່ ແລະ ເນື້ອໃນ....51
3.2.2 ການໄກ່ເກ່ຍ....51
4. ບົດບັນທຶກການໄກ່ເກ່ຍ....54
5. ການສິ້ນສຸດການໄກ່ເກ່ຍ....56
5.1 ການຕົກລົງກັນໄດ້ຂອງຄູ່ກໍລະນີ....56
5.2 ການບໍ່ເຂົ້າຮ່ວມໂດຍບໍ່ມີເຫດຜົນຂອງຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ....57
5.3 ຄູ່ກໍລະນີບໍ່ສາມາດຕົກລົງກັນໄດ້....57
5.3.1 ສິດການປ່ຽນຮູບການແກ້ໄຂ....57
5.3.2 ການປ່ຽນຮູບການແກ້ໄຂ....57
5.4 ຄູ່ກໍລະນີເສຍຊີວິດໂດຍບໍ່ມີຜູ້ສືບທອດ....58
ບົດທີ 6 ການແກ້ໄຂຂໍ້ຂັດແຍ່ງດ້ວຍການຕັດສິນ....59
1. ຄວາມຮູ້ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ ດ້ວຍການຕັດສິນ....59

1.1 ຄວາມໝາຍ ..... 59
1.2 ຄວາມສຳຄັນ ..... 59
1.3 ຈຸດປະສົງ ..... 60
2. ການເລືອກ, ການແຕ່ງຕັ້ງ, ການມອບສຳນວນຂໍ້ຂັດແຍ່ງ, ການຖອນຕົວ ແລະ ການຄ້ານຕົວ ຄະນະກຳມະການຕັດສິນ ..... 60
2.1 ການເລືອກ, ການແຕ່ງຕັ້ງ ແລະ ການມອບສຳນວນຂໍ້ຂັດແຍ່ງ ..... 60
2.1.1 ການເລືອກຄະນະກຳມະການຕັດສິນ ..... 60
2.1.2 ການແຕ່ງຕັ້ງຄະນະກຳມະການຕັດສິນ ..... 61
2.1.3 ການມອບສຳນວນຂໍ້ຂັດແຍ່ງ ..... 61
2.2 ການຖອນຕົວ ແລະ ການຄ້ານຕົວ ຄະນະກຳມະການຕັດສິນ ..... 62
2.2.1 ການຖອນຕົວ ..... 62
2.2.2 ການຄ້ານຕົວ ..... 62
3. ການດຳເນີນການຕັດສິນ ..... 63
3.1 ການກະກຽມການຄົ້ນຄວ້າສຳນວນຂໍ້ຂັດແຍ່ງ ..... 63
3.2 ການຄົ້ນຄວ້າສຳນວນຂໍ້ຂັດແຍ່ງ ..... 63
3.3 ການປະກອບຂໍ້ມູນ ຫຼັກຖານຂອງຄູ່ກໍລະນີ, ການລົງເກັບກຳ ແລະ ການພິ ສູດຂໍ້ມູນ ຫຼັກຖານ ..... 64
3.3.1 ການປະກອບຫຼັກຖານຂອງຄູ່ກໍລະນີ ..... 64
3.3.2 ການລົງເກັບກຳຂໍ້ມູນ ຫຼັກຖານ ຂອງຄະນະກຳມະການຕັດສິນ ..... 64
3.3.3 ການພິສູດຫຼັກຖານ ..... 65
3.4 ກຳນົດເວລາຕັດສິນ ..... 66
3.5 ການນຳໃຊ້ມາດຕະການປົກປ້ອງຜົນປະໂຫຍດ ..... 66
4. ການຕົກລົງກ່ອນການຕັດສິນ ..... 66
4.1 ການຕົກກັນຂອງຄູ່ກໍລະນີໃນລະຍະການດຳເນີນຂອງຄະນະກຳມະການ ..... 66
4.2 ການຕົກລົງກັນຂອງຄູ່ກໍລະນີ ຢູ່ນອກ ສກສ ຫຼື ຫກສ ..... 67
5. ການລົງຄຳຕັດສິນ ແລະ ເນື້ອໃນຄຳຕັດສິນ ..... 67
5.1 ການລົງຄຳຕັດສິນ ..... 67
5.2 ເນື້ອໃນຄຳຕັດສິນ ..... 68
6. ການຄັດຄ້ານຄຳຕັດສິນ ..... 68
ບົດທີ 7 ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ..... 70
1. ຄວາມຮູ້ກ່ຽວກັບການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ..... 70
1.1 ຄວາມໝາຍ ..... 70
1.2 ຄວາມສຳຄັນ ..... 70
1.3 ຈຸດປະສົງ ..... 70

2. ການຈັດຕັ້ງປະຕິບັດຜົນ ຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ....71
2.1 ການຈັດຕັ້ງປະຕິບັດໂດຍຄູ່ກໍລະນີ....71
2.1.1 ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ....71
2.1.2 ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງ....71
2.2 ການຈັດຕັ້ງປະຕິບັດໂດຍອີງການປະຕິບັດຄຳຕັດສິນຂອງສານ....72
2.2.1 ການຍື່ນຄຳຮ້ອງຂໍຕໍ່ສານ....72
2.2.2 ຂັ້ນຕອນການພິຈາລະນາຂອງສານ....72
2.2.3 ຂັ້ນຕອນການຈັດຕັ້ງປະຕິບັດ....73
3. ການຮັບຮູ້ ແລະ ປະຕິບັດຄຳຕັດສິນຂອງຄະນະກຳມະການຕັດສິນຕາງປະເທດ....75
3.1 ການຍື່ນຄຳຮ້ອງຂໍ....75
3.2 ຂັ້ນຕອນການພິຈາລະນາຂອງສານ....76
3.3 ຂັ້ນຕອນໃນການປະຕິບັດຄຳຕັດສິນ....77

# ບົດນໍາ

ເມື່ອສັງຄົມມີການພັດທະນາ ແລະ ຈະເລີນເຕີບໂຕຂຶ້ນ, ຮູບການແລກປ່ຽນສິນຄ້າ ແລະ ການບໍລິການ ຈາກຮູບແບບທໍາມະຊາດກ້າວໄປເຖິງຮູບແບບທຸລະກິດ ຕາມກົນໄກເສດຖະກິດຕະຫຼາດ, ມີຄວາມຫຍຸ້ງຍາກ ແລະ ສະຫຼັບຊັບຊ້ອນ ເຊັ່ນ ການຊື້ຂາຍ, ການກໍ່ສ້າງ, ການຂົນສົ່ງ, ການປະກັນໄພ, ການແລກປ່ຽນ, ການຂາຍຝາກ, ການກູ້ຢືມ, ການເຊົ່າຊັບສິ່ງຂອງ, ການບໍລິການ, ການທະນາຄານ, ການໂຄສະນາ, ທີ່ປຶກສາດ້ານກົດໝາຍ ແລະ ການລົງທຶນໃນຮູບແບບອື່ນໆ ຊຶ່ງໃນປັດຈຸບັນ ຮູບແບບທຸລະກິດ ມີທັງຮູບແບບທຸລະກິດພາຍໃນປະເທດ ແລະ ລະຫວ່າງປະເທດ. ການດໍາເນີນທຸລະກິດໄດ້ເຮັດໃຫ້ຄົນໃນສັງຄົມມີວຽກເຮັດງານທໍາ, ມີການພັດທະນາບຸກຄະລາກອນໃຫ້ມີຄວາມຊໍານິຊໍານານໃນດ້ານຕ່າງໆ ຊຶ່ງໄດ້ເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມ ມີການຂະຫຍາຍຕົວ, ສ້າງລາຍຮັບໃຫ້ແກ່ງົບປະມານແຫ່ງຊາດ.

ປັດຈຸບັນ ການພັດທະນາເສດຖະກິດ-ສັງຄົມ ໄດ້ມີການຂະຫຍາຍຕົວຢ່າງວ່ອງໄວນັ້ນ ໄດ້ເຮັດໃຫ້ມີການປ່ຽນແປງຫຼາຍດ້ານ ຊຶ່ງມີທັງດ້ານດີ ແລະ ດ້ານຫຍໍ້ທໍ້ທີ່ກາຍເປັນຂໍ້ຂັດແຍ່ງລະຫວ່າງບຸກຄົນ ກັບ ບຸກຄົນ, ບຸກຄົນ ກັບ ນິຕິບຸກຄົນ, ນິຕິບຸກຄົນດ້ວຍກັນ ຊຶ່ງຕ້ອງໄດ້ຮັບການແກ້ໄຂດ້ວຍວິທີການ ແລະ ຂັ້ນຕອນທີ່ຖືກຕ້ອງ ແລະ ເໝາະສົມ.

ສໍາລັບວິທີການແກ້ໄຂຂໍ້ຂັດແຍ່ງນັ້ນ ກໍມີຫຼາຍວິທີ. ແຕ່ລະວິທີກໍມີກົດໝາຍ ຫຼື ນິຕິກໍາທີ່ກ່ຽວຂ້ອງສະເພາະ, ຂັ້ນຕອນ ແລະ ວິທີການກໍມີຄວາມແຕກຕ່າງກັນ ເຊັ່ນ ການແກ້ໄຂຂໍ້ຂັດແຍ່ງໃນສານ ແລະ ການແກ້ໄຂຂໍ້ຂັດແຍ່ງນອກສານ.

ການແກ້ໄຂຂໍ້ຂັດແຍ່ງໃນສານ ແມ່ນການພິຈາລະນາຕັດສິນດ້ວຍຜູ້ພິພາກສາຂອງສານປະຊາຊົນ ບົນພື້ນຖານການດໍາເນີນຄະດີຂອງສານ ຕາມການຮ້ອງຟ້ອງ, ການຮ້ອງຂໍຂອງຄູ່ກໍລະນີຝ່າຍໃດ ຝ່າຍໜຶ່ງ ໂດຍທີ່ຄູ່ກໍລະນີອີກຝ່າຍໜຶ່ງບໍ່ໄດ້ມີຄວາມສະໝັກໃຈ ຊຶ່ງສານຕ້ອງໄດ້ຊອກທຸກເງື່ອນໄຂ ແລະ ວິທີການ ເພື່ອໃຫ້ຄູ່ຄວາມສາມາດຕົກລົງກັນດ້ວຍດີ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

ໃນຂະບວນການດໍາເນີນຄະດີຂອງສານ ກໍມີການແກ້ໄຂດ້ວຍວິທີການໄກ່ເກ່ຍ ຊຶ່ງສາມາດດໍາເນີນການໄກ່ເກ່ຍໄດ້ໃນທຸກຂັ້ນຕອນຂອງການດໍາເນີນຄະດີ ແລະ ສານທຸກຂັ້ນ ໂດຍນໍາໃຊ້ອໍານາດຕຸລາການທີ່ເປັນອໍານາດຂອງລັດ.

ສໍາລັບການແກ້ໄຂຂໍ້ຂັດແຍ່ງດ້ວຍວິທີການໄກ່ເກ່ຍ ຢູ່ສານໃນບາງປະເທດ[1] ຖືວ່າເປັນການໄກ່ເກ່ຍນອກລະບົບສານ ຫຼື ເອີ້ນວ່າ (ALTERNATIVE DISPUTE RESOLUTION ຂຽນຫຍໍ້ວ່າ ADR). ເນື່ອງຈາກວ່າ ຄູ່ກໍລະນີໄດ້ສະໝັກໃຈໄກ່ເກ່ຍ ແລະ ຜູ້ພິພາກສາທີ່ດໍາເນີນການໄກ່ເກ່ຍນັ້ນ ກໍພຽງແຕ່ເຮັດໜ້າທີ່ເປັນຄົນກາງ ແລະ ອໍານວຍຄວາມສະດວກໃຫ້ແກ່ຄູ່ກໍລະນີ ໂດຍບໍ່ໄດ້ນໍາໃຊ້ອໍານາດຕຸລາການທີ່ເປັນອໍານາດຂອງລັດ ຊຶ່ງຄະນະຮັບຜິດຊອບຄົ້ນຄວ້າຂຽນປຶ້ມເຫຼັ້ມນີ້ ເຫັນວ່າ ມີຄວາມແຕກຕ່າງກັບການໄກ່ເກ່ຍ ຢູ່ ສານ ຂອງ ສປປ ລາວ.

ການແກ້ໄຂຂໍ້ຂັດແຍ່ງນອກສານ ຫຼື ADR ແມ່ນການແກ້ໄຂຂໍ້ຂັດແຍ່ງ ດ້ວຍການທີ່ຄູ່ກໍລະນີສະໝັກໃຈເລືອກວິທີການແກ້ໄຂເອງ ໂດຍອີງໃສ່ຄູ່ກໍລະນີ ເປັນໃຈກາງ ເປັນຕົ້ນ ການເຈລະຈາ ຫຼື ການປຶກສາຫາລື, ການໄກ່ເກ່ຍ, ການຕັດສິນດ້ວຍຄະນະກໍາມະການ.

ໂດຍທົ່ວໄປແລ້ວ ການແກ້ໄຂຂໍ້ຂັດແຍ່ງນອກສານ ຢູ່ ສປປ ລາວ ມີຫຼາຍວິທີການ ເປັນຕົ້ນ ການແກ້ໄຂດ້ວຍການເຈລະຈາ ຫຼື ປຶກສາຫາລື, ການແກ້ໄຂດ້ວຍຄະນະໄກ່ເກ່ຍຂັ້ນບ້ານ ແລະ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະ

[1]ຍົກຕົວຢ່າງ ບົດຮຽນຂອງປະເທດຍີ່ປຸ່ນ (ອະທິບາຍການດໍາເນີນການໄກ່ເກ່ຍຂອງສານຂັ້ນງ່າຍດາຍຂອງ KOBE: ຜູ້ພິພາກສາບໍ່ໄດ້ເຮັດບົດບາດເປັນໃຈກາງໃນການແກ້ໄຂ ພຽງແຕ່ເຮັດໜ້າທີ່ເປັນຜູ້ຊ່ວຍໃນການຕິດຕາມ ຄວາມຖືກຕ້ອງຂອງຂະບວນການ ແລະ ເອກະສານໃນການແກ້ໄຂ)

ກິດ ໂດຍສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສກສ) ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ຫກສ).

ສໍາລັບ ປຶ້ມຄູ່ມືເຫຼັ້ມນີ້ ລົງເລິກກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍ ສກສ ຫຼື ຫກສ.

# ບົດທີ 1
# ປະຫວັດຄວາມເປັນມາຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

## 1. ປະຫວັດຄວາມເປັນມາຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ

### 1.1 ສະພາບລວມກ່ອນການສ້າງຕັ້ງ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນປີ 1986 ລັດຖະບານ ແຫ່ງ ສປປ ລາວ ໄດ້ມີການປັບປຸງ ແລະ ຫັນປ່ຽນກົນໄກການຄຸ້ມຄອງທີ່ມີລັກສະນະແບບລວມສູນ ແລະ ບໍລິຫານເກື້ອກູນມາເປັນການຄຸ້ມຄອງດ້ວຍການສົ່ງເສີມໃຫ້ມີເສດຖະກິດຫຼາຍພາກສ່ວນ ທີ່ສາມາດເຄື່ອນໄຫວຕາມກົນໄກເສດຖະກິດຕະຫຼາດ ໂດຍມີການຄຸ້ມຄອງ ແລະ ດັດສົມຂອງລັດ, ຫັນປ່ຽນຈາກເສດຖະກິດທຳມະຊາດ ໄປສູ່ເສດຖະກິດສິນຄ້າ, ດຳເນີນນະໂຍບາຍເປີດປະຕູອອກສູ່ພາຍນອກ, ເປີດກ້ວາງການຮ່ວມມືເສດຖະກິດກັບຕ່າງປະເທດ, ປັບປຸງນະໂຍບາຍສົ່ງເສີມການລົງທຶນທັງພາຍໃນ ແລະ ຕ່າງປະເທດແນໃສ່ດຶງດູດນັກລົງທຶນຈາກຕ່າງປະເທດເຂົ້າມາລົງທຶນໃນ ສປປ ລາວ ເພື່ອເປັນການພັດທະນາເສດຖະກິດແຫ່ງຊາດດ້ວຍການນຳເອົາເຕັກໂນໂລຊີ, ເຕັກນິກວິທະຍາສາດ ແລະ ບົດຮຽນໃໝ່ໆເຂົ້າມາ ເພື່ອພັດທະນາຂະແໜງກະສິກຳ ແລະ ອຸດສາຫະກຳໃຫ້ທັນສະໄໝເທື່ອລະກ້າວ. ພ້ອມກັບການປັບປຸງ ແລະ ຫັນປ່ຽນກົນໄກການຄຸ້ມຄອງ ລັດຖະບານ ແຫ່ງ ສປປ ລາວ ຈຶ່ງໄດ້ປະກາດໃຊ້ ລັດຖະທຳມະນູນ, ກົດໝາຍ ແລະ ອອກລະບຽບການ ເພື່ອຮອງຮັບໃຫ້ແກ່ການລົງທຶນ.

ຈາກການຫັນປ່ຽນກົນໄກຄຸ້ມຄອງເສດຖະກິດທຳມະຊາດ ໄປສູ່ກົນໄກເສດຖະກິດຕະຫຼາດ ໂດຍເລີ່ມນຳໃຊ້ກົນໄກເສດຖະກິດແບບໃໝ່ (New Economic Mechanism) ໃນປີ 1986 ນັ້ນ ຈຶ່ງເຮັດໃຫ້ລະບົບເສດຖະກິດຂອງ ສປປ ລາວ ໄດ້ມີການຂະຫຍາຍຕົວຢ່າງວ່ອງໄວ ແລະ ມີການເປີດກ້ວາງການພົວພັນຮ່ວມມືກັບຕ່າງປະເທດຫຼາຍຂຶ້ນເປັນກ້າວໆ. ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ຈຶ່ງມີຄວາມຈຳເປັນພາວະວິໄສ ສຳລັບ ສປປ ລາວ. ຈາກນີ້ ສປປ ລາວ ຈຶ່ງໄດ້ມີການຮັບຮອງກົດໝາຍຫຼາຍສະບັບ ແລະ ມີການປັບປຸງໃຫ້ສອດຄ່ອງກັບຄວາມເປັນຈິງພາຍໃນປະເທດ, ພາກພື້ນ ແລະ ສາກົນ.

### 1.2 ການສ້າງຕັ້ງ ແລະ ການພັດທະນາ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ພາຍຫຼັງ ສປປ ລາວ ໄດ້ມີນະໂຍບາຍນຳໃຊ້ກົນໄກເສດຖະກິດຕະຫຼາດແຕ່ປີ 1986 ເປັນຕົ້ນມາ ການລົງທຶນພາຍໃນ ແລະ ຕ່າງປະເທດໄດ້ມີການຂະຫຍາຍຕົວ, ຫົວໜ່ວຍວິສາຫະກິດເອກະຊົນ ກໍໄດ້ຮັບການສ້າງຕັ້ງຂຶ້ນເປັນຈຳນວນຫຼວງຫຼາຍ ແລະ ມີການຂະຫຍາຍຕົວຢ່າງໄວວາ, ຄຽງຄູ່ກັບນັ້ນ ກໍມີຂໍ້ຂັດແຍ່ງທາງດ້ານເສດຖະກິດເກີດຂຶ້ນ ຊຶ່ງຮຽກຮ້ອງໃຫ້ມີອົງການຮັບຜິດຊອບແກ້ໄຂຂໍ້ຂັດແຍ່ງດັ່ງກ່າວສະເພາະ ຕາມລະຍະຂອງການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ. ດັ່ງນັ້ນ, ລັດຖະບານ ແຫ່ງ ສປປ ລາວ ຈຶ່ງໄດ້ສ້າງຕັ້ງອົງການທີ່ມີພາລະບົດບາດ ໃນການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ ໂດຍຜ່ານແຕ່ລະ ລະຍະຂອງການພັດທະນາ ດັ່ງນີ້:

#### ກ. ລະຍະທີ 1 ແຕ່ປີ 1989 ຫາ 1994

ລະຍະນີ້ ເປັນລະຍະເລີ່ມຕົ້ນຂອງການສ້າງຕັ້ງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ ຊຶ່ງໄດ້ຮັບການສ້າງຕັ້ງຂຶ້ນໃນທ້າຍປີ 1989 ໂດຍມີຊື່ເອີ້ນວ່າ "ອົງການໄກ່ເກ່ຍເສດຖະກິດ" ຕາມດຳລັດຂອງປະທານສະພາລັດຖະມົນຕີ ສະບັບເລກທີ 146/ປສລ, ລົງວັນທີ 28 ທັນວາ 1989 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງເສດຖະກິດ, ແຜນການ ແລະ ການເງິນ. ໃນລະຍະນີ້ ອົງການດັ່ງກ່າວມີແຕ່ຢູ່ຂັ້ນສູນກາງມີຖານະທຽບເທົ່າກົມ ທີ່ຂຶ້ນກັບການຄຸ້ມຄອງຂອງກະຊວງເສດຖະກິດ, ແຜນການ ແລະ ການເງິນ, ມີພາລະບົດບາດເປັນເສນາ

ທີການໃຫ້ກະຊວງ ໃນການແນະນຳຫຼືໜ່ວຍການຜະລິດ ແລະ ທຸລະກິດໃນການສ້າງ ແລະ ການຄຸ້ມຄອງການປະຕິບັດສັນຍາທາງດ້ານທຸລະກິດ, ສ່ວນຂອບເຂດຄວາມຮັບຜິດຊອບ, ສິດ ແລະ ໜ້າທີ່ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນັ້ນຍັງບໍ່ທັນໄດ້ມີການກຳນົດລະອຽດ.

**ຂ. ລະຍະທີ 2 ແຕ່ປີ 1994 ຫາ 2005**

ໃນລະຍະນີ້ ການລົງທຶນທັງພາຍໃນ ແລະ ຕ່າງປະເທດມີການຂະຫຍາຍຕົວ ແລະ ເພີ່ມຂຶ້ນ ຊຶ່ງຮຽກຮ້ອງໃຫ້ອົງການໄກ່ເກ່ຍເສດຖະກິດມີຂອບເຂດຄວາມຮັບຜິດຊອບ, ສິດ ແລະ ໜ້າທີ່ທີ່ຈະແຈ້ງ ແລະ ສອດຄ່ອງກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ. ດ້ວຍເຫດນີ້ ນາຍົກລັດຖະມົນຕີ ຈຶ່ງໄດ້ອອກດຳລັດ ສະບັບເລກທີ 106/ນຍ, ລົງວັນທີ 15 ກໍລະກົດ 1994 ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອເປັນນິຕິກຳພື້ນຖານ ສຳລັບການຫັນປ່ຽນລະບົບການຈັດຕັ້ງຂອງອົງການໄກ່ເກ່ຍເສດຖະກິດ ມາເປັນສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ຍົກຍ້າຍອົງການດັ່ງກ່າວມາ ຂຶ້ນກັບການຄຸ້ມຄອງຂອງຂະແໜງການຍຸຕິທຳ ຊຶ່ງປະກອບມີ 2 ຂັ້ນ ຄື: ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ.

ສຳລັບ ຂັ້ນສູນກາງ ມີສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເອີ້ນຫຍໍ້ວ່າ: "ສກສ" ມີຖານະທຽບເທົ່າກົມ ທີ່ຂຶ້ນກັບກະຊວງຍຸຕິທຳ. ປະກອບມີ ສາມ ພະແນກ ຄື: ພະແນກຄຸ້ມຄອງ-ບໍລິຫານ, ພະແນກຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ພະແນກກົດໝາຍ.

ສຳລັບ ຂັ້ນທ້ອງຖິ່ນ ມີສາຂາສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເອີ້ນຫຍໍ້ວ່າ: "ສາຂາ ສກສ" ຊຶ່ງຫົວໜ້າມີຖານະທຽບເທົ່າກັບຮອງຫົວໜ້າພະແນກຂອງແຂວງ ແລະ ຂຶ້ນກັບພະແນກຍຸຕິທຳແຂວງ. ສາຂາ ສກສ ປະກອບມີ ສອງ ໜ່ວຍງານ ຄື: ໜ່ວຍງານຄຸ້ມຄອງ-ບໍລິຫານ ແລະ ໜ່ວຍງານຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ໃນຂອບທົ່ວປະເທດປະກອບມີ ສີ່ ສາຂາ ສກສ ຄື: ສາຂາ ພາກກາງ ຕັ້ງຢູ່ ແຂວງ ສະຫວັນນະເຂດ ຊຶ່ງໄດ້ສ້າງຕັ້ງຂຶ້ນໃນວັນທີ 17 ກໍລະກົດ 1997, ພາກເໜືອ ຕັ້ງຢູ່ ແຂວງ ຫຼວງພະບາງ ຊຶ່ງໄດ້ສ້າງຕັ້ງຂຶ້ນໃນວັນທີ 30 ພະຈິກ 1997 ແລະ ຕັ້ງຢູ່ ແຂວງ ອຸດົມໄຊ ຊຶ່ງໄດ້ສ້າງຕັ້ງຂຶ້ນໃນວັນທີ 04 ສິງຫາ 2003 ແລະ ສາຂາ ພາກໃຕ້ ຕັ້ງຢູ່ ແຂວງ ຈຳປາສັກ ຊຶ່ງໄດ້ສ້າງຕັ້ງຂຶ້ນໃນວັນທີ 01 ພະຈິກ 2004.

**ຄ. ລະຍະທີ 3 ແຕ່ປີ 2005 ຫາ 2010**

ໃນລະຍະນີ້ ການພັດທະນາເສດຖະກິດ-ສັງຄົມກໍມີການຂະຫຍາຍຕົວ ແລະ ສປປ ລາວ ກໍໄດ້ເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ ເປັນຕົ້ນ ການເຂົ້າເປັນສະມາຊິກອາຊຽນ, ເຈລະຈາເຂົ້າເປັນສະມາຊິກຂອງອົງການການຄ້າໂລກ, ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາ ແລະ ສັນຍາສາກົນ. ສະນັ້ນ, ເມື່ອ ສປປ ລາວ ເຫັນວ່າ ການພັດທະນາເສດຖະກິດ-ສັງຄົມມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ມີບາງເນື້ອໃນຂອງດຳລັດ ສະບັບເລກທີ 106/ນຍ, ລົງວັນທີ 15 ກໍລະກົດ 1994 ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ເປັນບ່ອນອີງໃນການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນຍັງມີຫຼາຍບັນຫາບໍ່ລະອຽດ, ບາງບັນຫາກໍຍັງບໍ່ທັນໄດ້ກຳນົດ. ຈາກເຫດຜົນດັ່ງກ່າວນີ້ ກະຊວງຍຸຕິທຳ ຈຶ່ງໄດ້ສົມທົບກັບຂະແໜງການຕ່າງໆທີ່ກ່ຽວຂ້ອງ ຕົກລົງເປັນເອກະພາບກັນຫັນດຳລັດສະບັບດັ່ງກ່າວມາເປັນກົດໝາຍ ຊຶ່ງເອີ້ນວ່າ ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 02/ສພຊ, ລົງວັນທີ 19 ພຶດສະພາ 2005 ເພື່ອເປັນພື້ນຖານໃຫ້ແກ່ລະບົບການຈັດຕັ້ງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຊຶ່ງປະກອບມີສອງ ຂັ້ນຄື: ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ. ສຳລັບຢູ່ຂັ້ນສູນກາງບໍ່ມີການປ່ຽນແປງ, ສ່ວນຢູ່ທ້ອງຖິ່ນມີການປ່ຽນແປງໄປຕາມເນື້ອໃນຂອງກົດໝາຍ ຊຶ່ງໄດ້ປ່ຽນຊື່ ຈາກ ສາຂາ ສກສ ມາເປັນຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເອີ້ນຫຍໍ້ວ່າ "ຫກສ".

### ງ. ລະຍະທີ 4 ແຕ່ປີ 2010 ເຖິງ ປັດຈຸບັນ

ໃນລະຍະນີ້ ການຮ່ວມມືການດໍາເນີນທຸລະກິດ, ການຜະລິດ, ການຄ້າ ໃນລະດັບພາກພື້ນ ແລະ ສາກົນ ໄດ້ມີການຂະຫຍາຍຕົວ. ສະນັ້ນ, ມີບາງໝວດ, ບາງມາດຕາຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປີ 2005 ຍັງບໍ່ສອດຄ່ອງກັບການຂະຫຍາຍຕົວດັ່ງກ່າວ. ສະນັ້ນ, ສປປ ລາວ ຈຶ່ງປັບປຸງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາເປັນສະບັບເລກທີ 06/ສພຊ, ລົງວັນທີ 17 ທັນວາ 2010. ຊຶ່ງລະບົບການຈັດຕັ້ງຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນເຄື່ອນໄຫວວຽກງານຕາມເນື້ອໃນຂອງກົດໝາຍສະບັບປັບປຸງດັ່ງກ່າວ ຊຶ່ງປະກອບມີສອງຂັ້ນ ຄື: ຂັ້ນສູນກາງ ມີການປ່ຽນຕາມເນື້ອໃນຂອງກົດໝາຍ ໂດຍໄດ້ປ່ຽນຊື່ຈາກ “ສໍານັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ” ມາເປັນ “ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ” ເອີ້ນຫຍໍ້ວ່າ “ສກສ”, ປ່ຽນຊື່ພະແນກກົດໝາຍມາເປັນ ພະແນກນິຕິກໍາ ແລະ ສ້າງຕັ້ງຂຶ້ນໃໝ່ 1 ພະແນກຄື ພະແນກຕິດຕາມການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ສໍາລັບຢູ່ທ້ອງຖິ່ນ ບໍ່ມີການປ່ຽນແປງ.

ໃນລະຍະນີ້ ສກສ ສາມາດຂະຫຍາຍຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ຕື່ມອີກຈໍານວນ ເຈັດແຫ່ງ, ຢູ່ພາກເໜືອມີ ສີ່ ແຂວງ ຄື: ຜົ້ງສາລີ ສ້າງຕັ້ງຂຶ້ນໃນວັນທີ 05 ມີຖຸນາ 2013, ຫົວພັນ, ຫຼວງນໍ້າທາ ແລະ ຊຽງຂວາງ ສ້າງຕັ້ງຂຶ້ນໃນວັນທີ 13 ພຶດສະພາ 2014 ແລະ ພາກກາງ ສ້າງຕັ້ງຂຶ້ນຢູ່ ແຂວງ ວຽງຈັນ. ພາກໃຕ້ມີ ສອງແຂວງ ຄື: ຄໍາມ່ວນ ສ້າງຕັ້ງຂຶ້ນໃນວັນທີ 27 ຕຸລາ 2014 ແລະ ສາລະວັນ ໃນວັນທີ 16 ຕຸລາ 2014. ມາຮອດປັດຈຸບັນນີ້ ມີຫ້ອງການແກ້ໄຂຂໍ້ຂັດແຍ່ງທັງໝົດໃນຂອບເຂດ ທົ່ວປະເທດ 11 ແຫ່ງ ຄື: ແຂວງ ຜົ້ງສາລີ, ອຸດົມໄຊ, ຫຼວງນໍ້າທາ, ຫົວພັນ, ຊຽງຂວາງ, ຫຼວງພະບາງ, ວຽງຈັນ, ຄໍາມ່ວນ, ສະຫວັນນະເຂດ, ຈໍາປາສັກ ແລະ ສາລະວັນ.

ໃນປັດຈຸບັນ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ນໍາໃຊ້ດ້ວຍຮູບການໄກ່ເກ່ຍ ແລະ ຮູບການຕັດສິນ, ການແກ້ໄຂຈະນໍາໃຊ້ຮູບການໃດນັ້ນ ແມ່ນຂຶ້ນກັບຄວາມສະໝັກໃຈຂອງຄູ່ກໍລະນີ. ຕົວຢ່າງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນປີ 2010 ຂໍ້ຂັດແຍ່ງ ທີ່ນໍາເຂົ້າສູ່ການແກ້ໄຂນັ້ນ ມີ 24 ເລື່ອງ ຊຶ່ງມີ ພາຍໃນ ກັບ ຕ່າງປະເທດ 12 ເລື່ອງ; ພາຍໃນ ກັບ ພາຍໃນ ມີ 12 ເລື່ອງ, ປີ 2015 ຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຂໍ້ຂັດແຍ່ງ 36 ເລື່ອງ ໃນນັ້ນລະຫວ່າງ ພາຍໃນ ກັບ ຕ່າງປະເທດ ມີ 17 ເລື່ອງ, ພາຍໃນ ກັບ ພາຍໃນ 16 ເລື່ອງ ຊຶ່ງແຕກໂຕນກັນຫຼາຍຈາກ ປີ 1994 ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການໄກ່ເກ່ຍຕົວຈິງມີພຽງ 80% ແລະ ອີກ 20% ແມ່ນຄໍາຮ້ອງຂໍຄໍາແນະນໍາ.

ສະນັ້ນ, ເມື່ອສົມທຽບເບິ່ງແລ້ວ ການພັດທະນາເສດຖະກິດຂອງ ສປປ ລາວ ກໍຄືການລົງທຶນຂອງຕ່າງປະເທດ, ພາຍໃນ ກັບ ພາຍໃນ ເຫັນວ່າມີການຂະຫຍາຍຕົວຢ່າງໄວວາ ແຕ່ເຖິງຢ່າງໃດກໍຕາມກໍບໍ່ສາມາດຫຼີກລ່ຽງຂໍ້ຂັດແຍ່ງທາງດ້ານເສດຖະກິດ ຊຶ່ງສະແດງອອກໃນປີ 2010-2016 ແມ່ນມີແນວໂນ້ມເພີ່ມຂຶ້ນຕາມຕາຕາລາງສະຖິຕິການແກ້ໄຂຂໍ້ຂັດແຍ່ງ ລຸ່ມນີ້.

## ຕາຕະລາງສະຖິຕິການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສກສ

| ລ/ດ | ຂໍ້ຂັດແຍ່ງ | | ປີ | | | | | | |
|---|---|---|---|---|---|---|---|---|---|
| | | | 2010 | 2011 | 2012 | 2013 | 2014 | 2015 | 2016 |
| 1 | ຂໍ້ຂັດແຍ່ງທີ່ນຳເຂົ້າແກ້ໄຂ | ຂໍ້ຂັດແຍ່ງທັງໝົດ | 24 | 35 | 28 | 15 | 20 | 36 | 34 |
| | | ພາຍໃນກັບພາຍໃນ | 12 | 16 | 9 | 6 | 10 | 16 | 22 |
| | | ພາຍໃນກັບຕ່າງປະເທດ | 12 | 19 | 17 | 8 | 9 | 17 | 10 |
| | | ຕ່າງປະເທດກັບຕ່າງປະເທດ | 0 | 0 | 2 | 1 | 1 | 3 | 2 |
| 2 | ຂໍ້ຂັດແຍ່ງທີ່ແກ້ໄຂແລ້ວ | ແກ້ໄຂໄດ້ | 4 | 6 | 9 | 10 | 10 | 20 | 17 |
| | | ພາຍໃນກັບພາຍໃນ | 2 | 3 | 2 | 4 | 5 | 8 | 14 |
| | | ພາຍໃນກັບຕ່າງປະເທດ | 2 | 3 | 6 | 5 | 4 | 12 | 3 |
| | | ຕ່າງປະເທດກັບຕ່າງປະເທດ | 0 | 0 | 1 | 1 | 1 | 0 | 0 |
| 3 | ຂໍ້ຂັດແຍ່ງທີ່ສົ່ງຄືນໃຫ້ຄູ່ກໍລະນີຫຼືສົ່ງໄປສານ | ສົ່ງຄືນໃຫ້ຄູ່ກໍລະນີຫຼືສົ່ງໄປສານ | 9 | 16 | 15 | 2 | 4 | 4 | 6 |
| | | ພາຍໃນກັບພາຍໃນ | 2 | 8 | 6 | 1 | 3 | 1 | 1 |
| | | ພາຍໃນກັບຕ່າງປະເທດ | 7 | 8 | 8 | 1 | 1 | 2 | 3 |
| | | ຕ່າງປະເທດກັບຕ່າງປະເທດ | 0 | 0 | 1 | 0 | 0 | 1 | 2 |
| 4 | | ຄ້າງມາແຕ່ປີກ່ອນ | 0 | 8 | 12 | 4 | 3 | 6 | 12 |
| ໝາຍເຫດ: ສະຖິຕິປີ 2016 ເລີ່ມແຕ່ວັນທີ 6 / 9 / 2015 ຫາທີ 8 / 9 / 2016 | | | | | | | | | |



| ສະຖິຕິຂໍ້ຂັດແຍ່ງທາງດ້ານເສດຖະກິດຕາມແຕ່ລະສັນຍາ ແຕ່ປີ 2012 ຫາ ເດືອນກຸມພາ 2016 | | |
|---|---|---|
| ລ/ດ | ປະເພດຂໍ້ຂັດແຍ່ງ | ຈຳນວນຂໍ້ຂັດແຍ່ງ |
| 1 | ສັນຍາກໍ່ສ້າງ | 28 |
| 2 | ສັນຍາກູ້ຢືມ | 43 |
| 3 | ສັນຍາບໍລິການ | 14 |
| 4 | ສັນຍາເຊົ່າ | 3 |
| 5 | ສັນຍາຮ່ວມທຶນ | 15 |
| 6 | ສັນຍາຊື້ - ຂາຍ | 11 |




## 2. ການເຂົ້າຮ່ວມສົນທິສັນຍານິວຢອກ 1958 ຂອງ ສປປ ລາວ

### 2.1 ຄວາມໝາຍ

ສົນທິສັນຍາວ່າດ້ວຍການຮັບຮູ້ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດ ຊຶ່ງເອີ້ນໂດຍຫຍໍ້ວ່າ “ສົນທິສັນຍານິວຢອກ 1958” ແມ່ນສົນທິສັນຍາທີ່ໄດ້ຮັບການຮັບຮອງ ໃນວັນທີ 10 ມິຖຸນາ 1958 ທີ່ນະຄອນນິວຢອກ ສະຫະລັດອາເມລິກາ (ເອກະສານຊ້ອນທ້າຍທີ 1). ສົນທິສັນຍາສະບັບນີ້ ເປັນນິຕິກຳສາກົນພື້ນຖານທີ່ໃຊ້ປະຕິບັດຕໍ່ການຮັບຮູ້ຈັດຕັ້ງປະຕິບັດຄຳຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ໄດ້ຕັດສິນຢູ່ດິນແດນຂອງລັດພາຄີທີ່ບໍ່ແມ່ນດິນແດນຂອງລັດທີ່ຖືກຮ້ອງຂໍໃຫ້ຮັບຮູ້ ແລະ ຈັດຕັ້ງປະຕິບັດຊຶ່ງແມ່ນຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງບຸກຄົນ ຫຼື ນິຕິບຸກຄົນດ້ວຍກັນລວມທັງໃຊ້ປະຕິບັດຕໍ່ບັນດາຄຳຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ບໍ່ໄດ້ຖືວ່າແມ່ນຄຳຕັດສິນພາຍໃນຂອງລັດທີ່ຖືກຮ້ອງຂໍໃຫ້ຮັບຮູ້ແລະຈັດຕັ້ງປະຕິບັດ. ສົນທິສັນຍາສະບັບນີ້ໃຊ້ປະຕິບັດສະເພາະຄຳຕັດສິນທີ່ໄດ້ຕັດສິນຢູ່ດິນແດນຂອງລັດພາຄີ, ແຕ່ລະລັດພາຄີຈະຮັບຮູ້ຄຳຕັດສິນທີ່ເປັນລາຍລັກອັກສອນທີ່ຄູ່ກໍລະນີໄດ້ຍື່ນຮ້ອງຂໍໃຫ້ຮັບຮູ້ ຊຶ່ງມາຮອດປັດຈຸບັນນີ້ ມີ 156 ປະເທດ ທີ່ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາສະບັບດັ່ງກ່າວ.

ແຕ່ລະລັດພາຄີ ຈະຮັບຮູ້ຄຳຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຜົນສັກສິດວ່າ ມີຂໍ້ຜູກມັດ ແລະ ຈັດຕັ້ງຈັດຕັ້ງປະຕິບັດຄຳຕັດສິນດັ່ງກ່າວ ຕາມກົດໝາຍ ແລະ ລະບຽບການ ຂອງດິນແດນບ່ອນທີ່ນຳເອົາຄຳຕັດສິນໄປຈັດຕັ້ງ

ປະຕິບັດ ພາຍໃຕ້ເງື່ອນໄຂທີ່ໄດ້ກຳນົດໄວ້ໃນສົນທິສັນຍາດັ່ງກ່າວ, ຈະບໍ່ສ້າງເງື່ອນໄຂທີ່ຫຍຸ້ງຍາກ ຫຼື ເກັບຄ່າທຳນຽມສູງ, ຄ່າໃຊ້ຈ່າຍໃນການຮັບຮູ້ ຫຼື ການຈັດຕັ້ງປະຕິບັດຄຳຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດຕາມສົນທິສັນຍາສະບັບນີ້[2].

ເວົ້າລວມແລ້ວ ພາຍຫຼັງທີ່ ສປປ ລາວ ເຂົ້າຮ່ວມເປັນລັດພາຄີຂອງສົນທິສັນຍານິວຢອກ 1958 ແລ້ວ ກໍສາມາດນຳເອົາຄຳຕັດສິນຂອງຄະນະກຳມະການຕັດສິນຂອງອີກລັດພາຄີໜຶ່ງມາປະຕິບັດໄດ້. ຖ້າ ສປປ ລາວ ຫາກບໍ່ໄດ້ເຂົ້າຮ່ວມເປັນພາຄີ ຂອງສົນທິສັນຍາດັ່ງກ່າວ ເມື່ອເກີດມີຂໍ້ຂັດແຍ່ງທາງດ້ານເສດຖະກິດ ກໍຕ້ອງໄດ້ແກ້ໄຂຕາມກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ ເທົ່ານັ້ນ ແລະ ກໍບໍ່ສາມາດນຳໄປບັງຄັບປະຕິບັດຜົນຂອງການແກ້ໄຂດັ່ງກ່າວຢູ່ຕ່າງປະເທດໄດ້.

### 2.2 ຄວາມຈຳເປັນໃນການເຂົ້າເປັນພາຄີສົນທິສັນຍານິວຢອກ 1958

ສປປ ລາວ ມີຄວາມຈຳເປັນໃນການເຂົ້າເປັນພາຄີຂອງສົນທິສັນຍາສາກົນນິວຢອກ 1958 ກໍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງການລົງທຶນທັງພາຍໃນ ແລະ ຕ່າງປະເທດ ໃນກໍລະນີມີຄຳຕັດສິນທີ່ໄດ້ຕັດສິນຢູ່ໃນດິນແດນຂອງລັດພາຄີອື່ນດ້ວຍການຮັບຮູ້ຄຳຕັດສິນດັ່ງກ່າວມາປະຕິບັດຢູ່ ສປປ ລາວ ຫຼື ໄປປະຕິບັດຢູ່ດິນແດນຂອງລັດພາຄີອື່ນ, ທັງເປັນການຢືນຢັນ ແລະ ສ້າງຄວາມໝັ້ນໃຈແກ່ນັກລົງທຶນຕ່າງປະເທດເປັນຕົ້ນຄວາມໝັ້ນໃຈ ຕໍ່ບົດບັນຍັດກົດໝາຍ ແລະ ລະບຽບການທີ່ສອດຄ່ອງກັບສົນທິສັນຍາດັ່ງກ່າວໃນຖານະທີ່ ສປປ ລາວ ເປັນລັດພາຄີ.

ການເປັນລັດພາຄີຂອງສົນທິສັນຍາ 1958 ຍັງເປັນການດຶງດູດການລົງທຶນຕ່າງປະເທດມາລົງທຶນ ຫຼື ດຳເນີນທຸລະກິດຢູ່ ສປປ ລາວ ທັງເປັນການຮັບຮູ້ ແລະ ປະຕິບັດຄຳຕັດສິນກ່ຽວກັບຂໍ້ຂັດແຍ່ງທີ່ເກີດຈາກການປະຕິບັດສັນຍາທາງການຄ້າ, ການລົງທຶນ, ການບໍລິການ ແລະ ອື່ນໆ ໂດຍການຕັດສິນຂອງຄະນະກຳມະການຢູ່ຕ່າງປະເທດແລ້ວນຳມາຂໍການຢັ້ງຢືນ ແລະ ປະຕິບັດຢູ່ ສປປ ລາວ. ສະນັ້ນ, ສປປ ລາວ ຈຶ່ງໄດ້ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາດັ່ງກ່າວແຕ່ວັນທີ 15 ກັນຍາ 1998 ຕາມແຈ້ງການ ສະບັບເລກທີ 2425/ຫສນຍ[3] ເປັນຕົ້ນມາ.

### 2.3 ຜົນປະໂຫຍດທີ່ໄດ້ຮັບຈາກການເຂົ້າເປັນພາຄີຂອງສົນທິສັນຍານິວຢອກປີ 1958

ຜົນປະໂຫຍດທີ່ໄດ້ຮັບຈາກການເຂົ້າເປັນພາຄີຂອງສົນທິສັນຍານິວຢອກ ປີ 1958 ເພື່ອປົກປ້ອງ ແລະ ສົ່ງເສີມການລົງທຶນລະຫວ່າງ ລາວ ແລະ ຕ່າງປະເທດ ທັງເປັນຜົນປະໂຫຍດໃຫ້ແກ່ ສປປ ລາວ ໃນກົດໝາຍລະຫວ່າງປະເທດຄື ການຕອບສະໜອງນະໂຍບາຍເປີດກວ້າງການຮ່ວມມືເສດຖະກິດກັບຕ່າງປະເທດ, ສ້າງຄວາມສະດວກໃນການປະຕິບັດຜົນຂອງຄຳຕັດສິນຂອງຕ່າງປະເທດ, ເຮັດໃຫ້ນັກທຸລະກິດມີຄວາມເຊື່ອໝັ້ນໃນການນຳໃຊ້ການແກ້ໄຂຂໍ້ຂັດແຍ່ງເມື່ອມີຂໍ້ຂັດແຍ່ງ ແລະ ສ້າງຄວາມເຂັ້ມແຂງໃຫ້ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ເພື່ອເປັນການປົກປ້ອງ ແລະ ສົ່ງເສີມການລົງທຶນ ລະຫວ່າງ ສປປ ລາວ ແລະ ຕ່າງປະເທດ ທັງເປັນການອຳນວຍຄວາມສະດວກ ໃຫ້ແກ່ນັກລົງທຶນໃນເວລາທີ່ມີຂໍ້ຂັດແຍ່ງເກີດຂຶ້ນ ສປປ ລາວ ໄດ້ນຳເອົາເນື້ອໃນຈິດໃຈສຳຄັນຂອງ ສົນທິສັນຍານິວຢອກປີ 1958 ມາຈັດຕັ້ງປະຕິບັດຢູ່ ສປປ ລາວ ໂດຍໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາດຕາ 52 ຊຶ່ງກຳນົດໄວ້ວ່າ ສປປ ລາວ ຮັບຮູ້ ແລະ ປະຕິບັດຄຳຕັດສິນຂອງຄຳຕັດສິນຂອງຄະນະກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ໃນມາດຕາ 52 ໂດຍໄດ້ຮັບການຢັ້ງຢືນຈາກສານປະຊາຊົນຂອງ ສປປ ລາວ ຊຶ່ງພິຈາລະນາຢັ້ງຢືນຄຳຕັດສິນຕ່າງປະເທດ ຫຼື ສາກົນ ໄດ້ກໍຕໍ່ເມື່ອມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1.) ຄູ່ກໍລະນີ ຕ້ອງຖືສັນຊາດຂອງປະເທດ ທີ່ເປັນພາຄີຂອງສົນທິສັນຍານິວຢອກ ປີ 1958 ວ່າດ້ວຍການຮັບຮູ້ ແລະ ບັງຄັບປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ;

[2] ສົນທິສັນຍາວ່າດ້ວຍການຮັບຮູ້ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດ, ປີ 1958

[3] ລາຍລະອຽດມີເອກະສານຊ້ອນທ້າຍທີ 1

2.) ບໍ່ຂັດກັບລັດຖະທຳມະນູນ ແລະ ລະບຽບກົດໝາຍກ່ຽວກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ;

3.) ຄູ່ກໍລະນີຝ່າຍທີ່ມີພັນທະໃຊ້ແທນໜີ້ສິນ ມີຊັບສິນ, ກິດຈະການ, ຮຸ້ນ, ເງິນຝາກ ຫຼື ຊັບສິນອື່ນ ຢູ່ ສປປ ລາວ[4] ແລະ ມາດຕາ 38 ຂໍ້ 2 ກໍກຳນົດກ່ຽວກັບການຮ້ອງຂໍໃຫ້ຢັ້ງຢືນ ຫຼື ບັງຄັບປະຕິບັດຄຳຕົກລົງ ຫຼື ຄຳຕັດສິນຂອງສານ ຫຼື ຂອງກຳມະການຕັດສິນຕ່າງປະເທດ, ຄຳຕັດສິນຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ສະເພາະກິດ.

[4] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 52

# ບົດທີ 2
# ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

## 1. ຄວາມຮູ້ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### 1.1 ຄວາມໝາຍ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນການແກ້ໄຂບັນຫາທີ່ບໍ່ຖືກຕ້ອງປອງດອງກັນ, ຂັດແຍ່ງກັນທາງດ້ານສິດ ແລະ ຜົນປະໂຫຍດຂອງຄູ່ກໍລະນີ ທີ່ເກີດຂຶ້ນຈາກການລະເມີດສັນຍາ, ການດໍາເນີນການຜະລິດ-ທຸລະກິດທີ່ພາໃຫ້ເກີດຄວາມເສຍຫາຍແກ່ສິດ ແລະ ຜົນປະໂຫຍດຂອງຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຊຶ່ງຄວາມເສຍຫາຍທີ່ໄດ້ເກີດຂຶ້ນດັ່ງກ່າວ ອາດພາໃຫ້ມີການຮ້ອງຟ້ອງ ຫຼື ຮ້ອງຂໍ ເພື່ອໃຫ້ມີການພິຈາລະນາແກ້ໄຂໃນຫຼາຍຮູບການ ເຊັ່ນ ການຮ້ອງຟ້ອງທາງແພ່ງ, ການຮ້ອງຂໍໃຫ້ມີການໄກ່ເກ່ຍ ຫຼື ການຕັດສິນຂອງຄະນະກໍາມະການ ແລະ ອື່ນໆ.

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ຂຽນຫຍໍ້ວ່າ ສກສ) ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ຂຽນຫຍໍ້ວ່າ ຫກສ) ແມ່ນການເຄື່ອນໄຫວແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນອກລະບົບສານ (ADR) ຊຶ່ງເປັນການແກ້ໄຂຂໍ້ພິພາດທາງດ້ານຜົນປະໂຫຍດ ທີ່ເກີດຂຶ້ນຈາກການລະເມີດຂໍ້ຜູກພັນໃນສັນຍາການດໍາເນີນການຜະລິດ, ທຸລະກິດ ເປັນຕົ້ນ ການຄ້າ, ການລົງທຶນ, ການບໍລິການ ແລະ ອື່ນໆ ດ້ວຍການໄກ່ເກ່ຍ ຫຼື ດ້ວຍການຕັດສິນ ບົນພື້ນຖານຄວາມສະໝັກໃຈຂອງຄູ່ກໍລະນີໃຫ້ແກ້ໄຂ ຊຶ່ງອາດສະແດງອອກໃນຂໍ້ກໍານົດທີ່ຄູ່ກໍລະນີທັງສອງຝ່າຍໄດ້ຕົກລົງກັນໄວ້ໃນສັນຍາ ຫຼື ພາຍຫຼັງທີ່ມີຂໍ້ຂັດແຍ່ງເກີດຂຶ້ນແລ້ວ ຄູ່ກໍລະນີສະໝັກໃຈໃຫ້ ສກສ ຫຼື ຫກສ ພິຈາລະນາແກ້ໄຂ ຊຶ່ງສັງລວມແລ້ວຂໍ້ຂັດແຍ່ງທີ່ຈະນໍາມາແກ້ໄຂນັ້ນ ແມ່ນຂໍ້ຂັດແຍ່ງທີ່ນອນຢູ່ໃນຂົງເຂດເສດຖະກິດ-ການຄ້າ ຕາມທີ່ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ກໍານົດໄວ້[5] ໂດຍມີການຮ້ອງຂໍໃຫ້ພິຈາລະນາແກ້ໄຂຈາກຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫຼື ທັງສອງຝ່າຍ.

### 1.2 ຄວາມສໍາຄັນ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຄວາມສໍາຄັນໃນການແກ້ໄຂຂໍ້ຂັດແຍ່ງກ່ຽວກັບສິດ ແລະ ຜົນປະໂຫຍດລະຫວ່າງຄູ່ກໍລະນີທີ່ມີຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການແກ້ໄຂຂອງ ສກສ ຫຼື ຫກສ ຕາມກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຊຶ່ງສະແດງອອກ ດັ່ງນີ້:

- ເປັນລະບົບການແກ້ໄຂຂໍ້ຂັດຂໍ້ຂັດແຍ່ງທີ່ສ້າງຂຶ້ນໂດຍລັດ ແລະ ຖືກຮັບຮູ້ໂດຍສາກົນ ປະກອບສ່ວນທີ່ສໍາຄັນເຂົ້າໃນການຫຼຸດຜ່ອນການແກ້ໄຂຄະດີຢູ່ສານປະຊາຊົນ;
- ຫັນເຂົ້າສູ່ລະບົບການແກ້ໄຂຂໍ້ຂັດແຍ່ງສາກົນເທື່ອລະກ້າວ, ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກຂອງ ສກສ ແລະ ຫກສ ໃຫ້ແກ່ຄູ່ກໍລະນີ, ຜູ້ໄກ່ເກ່ຍ ແລະ ກໍາມະການຕັດສິນ ໃນການດໍາເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ແກ້ໄຂບັນຫາໃຫ້ແທດເໝາະກັບສະພາວະຄວາມເປັນຈິງຂອງຂໍ້ຂັດແຍ່ງບົນພື້ນຖານຄວາມສະໝັກໃຈຂອງຄູ່ກໍລະນີ ໂດຍບໍ່ມີການບັງຄັບ, ນາບຂູ່, ບໍ່ມີການຈໍາແນກເພດ, ເຊື້ອຊາດ, ສາສະໜາ, ສັນຊາດ, ເຜົ່າຊົນ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຍຸ, ຄວາມເຊື່ອຖື, ພູມລໍາເນົາ, ບໍ່ເຂົ້າຂ້າງອອກຂາ, ບໍ່ມີການແຊກແຊງຈາກພາຍນອກ, ຖືເອົາຄຸນນະທໍາ, ເຫັນອົກເຫັນໃຈກັນຂອງຄູ່ກໍລະນີ, ມີການຜ່ອນຜັນ ຫຼື ຍິນຍອມກັນລະຫວ່າງຄູ່ກໍລະນີ ແລະ ພິຈາລະນາແກ້ໄຂບົນພື້ນຖານກົດໝາຍ ແລະ ລະບຽບການ;

---

[5] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 2 ວັກ 2

- ເປັນວິທີການແກ້ໄຂຂໍ້ຂັດແຍ່ງ ທີ່ຍຸຕິທຳ, ມະນຸດສະທຳ ແລະ ມີຂະບວນການດຳເນີນທີ່ກະທັດຮັດ, ບໍ່ຜ່ານຫຼາຍຂັ້ນຕອນ ເຮັດໃຫ້ຄູ່ກໍລະນີປະຢັດຄ່າໃຊ້ຈ່າຍ ແລະ ເວລາ;
- ຂໍ້ຂັດແຍ່ງທີ່ຖືກນຳມາພິຈາລະນາແກ້ໄຂນັ້ນ ແມ່ນບໍ່ສາມາດເປີດເຜີຍສູ່ສັງຄົມ, ເວັ້ນເສັຍແຕ່ໄດ້ຮັບອະນຸຍາດຈາກຄູ່ກໍລະນີ;
- ປະກອບສ່ວນອັນສຳຄັນເຂົ້າໃນການສ້າງຄວາມເປັນລະບຽບຮຽບຮ້ອຍໃຫ້ແກ່ສັງຄົມ ແນໃສ່ເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມຂະຫຍາຍຕົວ ແລະ ຍືນຍົງ.

### 1.3 ຈຸດປະສົງ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຈຸດປະສົງເພື່ອແກ້ໄຂຂໍ້ຂັດແຍ່ງທີ່ຄູ່ກໍລະນີ ຮ້ອງຂໍມາຍັງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂຂໍ້ຂັດແຍ່ງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຖືກຕ້ອງຕາມຂໍ້ຜູກພັນທີ່ສອງຝ່າຍຕົກລົງກັນໄວ້, ສອດຄ່ອງກັບສະພາວະຄວາມເປັນຈິງຂອງຄູ່ກໍລະນີເອງ.

ຈຸດປະສົງຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດສະແດງອອກຢ່າງຈະແຈ້ງ ດັ່ງນີ້:

1) ເພື່ອແກ້ໄຂບັນຫາທີ່ຂັດແຍ່ງກັນລະຫວ່າງຄູ່ກໍລະນີຢ່າງສັນຕິວິທີ, ເປັນທຳ ແລະ ວ່ອງໄວ[6] ໝາຍຄວາມວ່າ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນເພື່ອແກ້ໄຂບັບຫາທີ່ຂັດແຍ່ງກັນ ຫຼື ບໍ່ລົງລອຍກັນນັ້ນໃຫ້ສິ້ນສຸດລົງດ້ວຍຄວາມພໍໃຈຂອງຄູ່ກໍລະນີ, ບໍ່ເຂົ້າຂ້າງອອກຂາຝ່າຍໃດຝ່າຍໜຶ່ງ ແລະ ບໍ່ທ່ວງດຶງບໍ່ແກ່ຍາວເວລາ;
2) ເພື່ອຟື້ນຟູສິດ ແລະ ຜົນປະໂຫຍດທີ່ຖືກລະເມີດ ໝາຍຄວາມວ່າ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນແນໃສ່ທວງໃຫ້ຟື້ນຟູສິດ ແລະ ຜົນປະໂຫຍດຄືນໃຫ້ແກ່ຄູ່ກໍລະນີຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດ;
3) ເພື່ອໃຫ້ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມສະຫງົບ.

## 2. ຫຼັກການ, ຮູບການ ແລະ ຂອບເຂດ ຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### 2.1 ຫຼັກການໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນການແກ້ໄຂຂໍ້ຂັດແຍ່ງຂອງອົງແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1) ຄວາມຍຸຕິທຳ ແລະ ຄວາມສອດຄ່ອງກັບກົດໝາຍ;
2) ຄວາມສະໝັກໃຈຂອງຄູ່ກໍລະນີ;
3) ຄວາມສະເໝີພາບຂອງຄູ່ກໍລະນີ;
4) ຄວາມເປັນເອກະລາດ ແລະ ທ່ຽງທຳຂອງຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ;
5) ພາສາທີ່ນຳໃຊ້;
6) ການຮັບປະກັນຄວາມລັບ[7].

---

[6] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 1

[7] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 8

### 2.1.1 ການຮັບປະກັນຄວາມຍຸຕິທຳ ແລະ ສອດຄ່ອງກັບກົດໝາຍ

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ ຕ້ອງຮັບປະກັນຄວາມຍຸຕິທຳ ແລະ ໃຫ້ສອດຄ່ອງກັບລະບຽບກົດໝາຍ[8].

ຫຼັກການຄວາມຍຸຕິທຳ ແລະ ສອດຄ່ອງກັບກົດໝາຍ ຕ້ອງຮັບປະກັນ ສອງດ້ານ ຄື: ດ້ານທີໜຶ່ງ ແມ່ນຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ ຕ້ອງໃຫ້ຄວາມສະເໝີພາບ ແລະ ສິດເທົ່າທຽມກັນ ແກ່ຄູ່ລະນີ ແລະ ຖືເອົາຄວາມເປັນຈິງຂອງຂໍ້ຂັດແຍ່ງ ເປັນພື້ນຖານການພິຈາລະນາແກ້ໄຂ, ຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ ຕ້ອງທ່ຽງທຳ, ໂປ່ງໃສ, ບໍ່ລຳອຽງ, ບໍ່ກົດໜ່ວງ, ຖ່ວງດຶງ ຫຼື ສ້າງຄວາມຫຍຸ້ງຍາກໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງ, ບໍ່ທວງເອົາເງິນ ຫຼື ຜົນປະໂຫຍດໃດໜຶ່ງ ຈາກຄູ່ກໍລະນີ ແລະ ບໍ່ບັງຄັບນາບຂູ່ຄູ່ກໍລະນີ ແລະ ດ້ານທີສອງ ແມ່ນຄຳຕົກລົງຂອງຜູ້ໄກ່ເກ່ຍ ຫຼື ຄຳຕັດສິນຂອງຄະນະກຳມະການຕັດສິນ ຕ້ອງຖືກຕ້ອງຕາມກົດໝາຍ, ສອດຄ່ອງກັບຕົວຈິງ ແລະ ສາມາດປະຕິບັດໄດ້.

### 2.1.2 ຄວາມສະໝັກໃຈຂອງຄູ່ກໍລະນີ

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼັກການຄວາມສະໝັກໃຈ ຖືເປັນຫຼັກການພື້ນຖານທີ່ຂາດບໍ່ໄດ້. ດັ່ງນັ້ນ, ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈຶ່ງໄດ້ກຳນົດວ່າ “ຄູ່ກໍລະນີມີສິດນຳເອົາຂໍ້ຂັດແຍ່ງທາງດ້ານເສດຖະກິດສະເໜີຕໍ່ ສກສ ຫຼື ຫກສ ເພື່ອແກ້ໄຂໂດຍບໍ່ມີການບັງຄັບ, ນາບຂູ່ຈາກບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ”[9] ໝາຍຄວາມວ່າ ແມ່ນຄູ່ກໍລະນີເອງ ທີ່ຕ້ອງການໃຫ້ ສກສ ຫຼື ຫສກ ພິຈາລະນາແກ້ໄຂຂໍ້ຂັດແຍ່ງຂອງຕົນ.

### 2.1.3 ຄວາມສະເໝີພາບຂອງຄູ່ກໍລະນີ

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄູ່ກໍລະນີແຕ່ລະຝ່າຍ ມີສິດສະເໝີພາບຕໍ່ໜ້າກົດໝາຍ ໂດຍບໍ່ຈຳແນກເພດ, ເຊື້ອຊາດ, ສັນຊາດ, ເຜົ່າ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຍຸ, ຄວາມເຊື່ອຖື, ພູມລຳເນົາ ແລະ ອື່ນໆ.

ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ດຳເນີນທຸລະກິດຢູ່ ສປປ ລາວ ກໍມີຄວາມສະເໝີພາບຄືກັນກັບພົນລະເມືອງລາວ ຖ້າວ່າກົດໝາຍ ຫາກບໍ່ໄດ້ກຳນົດໄວ້ຢ່າງອື່ນ[10].

ຄວາມສະເໝີພາບໃນການແກ້ໄຂຂໍ້ຂັດແຍ່ງ ຕໍ່ໜ້າກົດໝາຍຂອງ ຄູ່ກໍລະນີ ສະແດງອອກ ດັ່ງນີ້:

1) ໃນການກຳນົດ ຫຼື ເລືອກສະຖານທີ່ແກ້ໄຂຂໍ້ຂັດແຍ່ງ ຊຶ່ງບາງຄັ້ງໄດ້ກຳນົດໄວ້ໃນສັນຍາ ຫຼື ຄູ່ກໍລະນີ ອາດເຫັນດີນຳເອົາຂໍ້ຂັດແຍ່ງດັ່ງກ່າວໄປແກ້ໄຂ ຢູ່ ພາຍໃນ ຫຼື ຕ່າງປະເທດ;
2) ໃນການເລືອກຮູບການແກ້ໄຂຂໍ້ຂັດແຍ່ງ ຢູ່ ສກສ ຫຼື ຫກສ;
3) ໃນການເລືອກ ຫຼື ຄ້ານຕົວ ຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ;
4) ການສະເໜີຂໍ້ມູນ ຫຼັກຖານ;
5) ໃນການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

### 2.1.4 ຄວາມເປັນເອກະລາດ ແລະ ທ່ຽງທຳ ຂອງຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ ປະຕິບັດໜ້າທີ່ ຢ່າງເປັນເອກະລາດ, ດ້ວຍຄວາມທ່ຽງທຳ ແລະ ປອດໃສ ພາຍໃຕ້ກົດໝາຍ ແລະ ລະບຽບການ.

ຄວາມເປັນເອກະລາດ ໝາຍເຖິງການປະຕິບັດໜ້າທີ່ຂອງຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ ດ້ວຍຄວາມອິດສະລະ ຕາມກົດໝາຍ ໂດຍປາສະຈາກການແຊກແຊງຈາກບຸກຄົນອື່ນ ຫຼື ອົງການຈັດຕັ້ງໃດໜຶ່ງ.

---

[8] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 9

[9] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 10

[10] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 11

ຄວາມທ່ຽງທຳ ໝາຍເຖິງຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ ຕ້ອງມີຈັນຍາບັນ-ຈັນຍາທຳຕໍ່ຫຼັກວິຊາຊີບ, ບໍ່ມີອະຄະຕິ, ບໍ່ເຂົ້າຂ້າງອອກຂາ ບົນພື້ນຖານຄວາມເປັນຈິງຂອງຂໍ້ຂັດແຍ່ງທີ່ເກີດຂຶ້ນ, ອີງໃສ່ຂໍ້ມູນຫຼັກ ຖານທີ່ໜັກແໜ້ນຕາມກົດໝາຍ.

### 2.1.5 ພາສາ ທີ່ນຳໃຊ້

ພາສາທີ່ນຳໃຊ້ ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງ ຢູ່ ສກສ ຫຼື ຫກສ ຕ້ອງແມ່ນພາສາລາວ ເວັ້ນເສຍແຕ່ສັນຍາ ຫຼື ຄູ່ກໍລະນີ ຫາກໄດ້ຕົກລົງໄວ້ຢ່າງອື່ນ, ສ່ວນຄູ່ກໍລະນີ ຫຼື ຜູ້ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງ ທີ່ບໍ່ຮູ້ພາສາລາວ ສາມາດນຳໃຊ້ພາສາຕົນເອງ ຫຼື ພາສາອື່ນໂດຍຜ່ານຜູ້ແປພາສາ[11] ໝາຍຄວາມວ່າ ທຸກຂໍ້ຂັດແຍ່ງທີ່ນຳມາແກ້ໄຂຢູ່ ສກສ ຫຼື ຫກສ ຕ້ອງນຳໃຊ້ພາສາລາວ, ຖ້າຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫຼື ທັງສອງຝ່າຍ ຫາກບໍ່ຮູ້ພາສາລາວ ກໍສາມາດນຳໃຊ້ພາສາຂອງຕົນ ຫຼື ພາສາອື່ນກໍໄດ້ ໂດຍຜ່ານຜູ້ແປພາສາ.

### 2.1.6 ການຮັບປະກັນຄວາມລັບ

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂໍ້ມູນ ແລະ ເອກະສານຕ່າງໆ ທີ່ໄດ້ນຳສະເໜີໃນເວລາໄກ່ເກ່ຍ ຫຼື ຕັດສິນ ຕ້ອງຮັກສາເປັນຄວາມລັບ.

ຜູ້ໄກ່ເກ່ຍ, ກຳມະການຕັດສິນ, ຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມອື່ນ ບໍ່ມີສິດເຜີຍຄວາມລັບ ຕໍ່ບຸກຄົນພາຍນອກ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກຄູ່ກໍລະນີເທົ່ານັ້ນ[12].

ຄູ່ກໍລະນີ, ຜູ້ເຂົ້າຮ່ວມອື່ນ, ຜູ້ໄກ່ເກ່ຍ ແລະ  ຄະນະກຳມະການຕັດສິນ ບໍ່ມີສິດເປີດເຜີຍເນື້ອໃນຂອງຂໍ້ຂັດແຍ່ງທີ່ຕົນໄດ້ຮູ້ ໂດຍບໍ່ໄດ້ຮັບອະນຸຍາດຈາກຄູ່ກໍລະນີ, ບໍ່ມີສິດນຳໃຊ້ຂໍ້ມູນ ທີ່ຕົນເອງໄດ້ຮູ້ເພື່ອຫາຜົນປະໂຫຍດສ່ວນຕົວ ຫຼື ເພື່ອລະເມີດສິດ ແລະ ຜົນປະໂຫຍດຂອງບຸກຄົນອື່ນ. ໃນກໍລະນີມີການລະເມີດທີ່ສ້າງຄວາມເສຍຫາຍໃຫ້ແກ່ລັດ, ສັງຄົມ ຫຼື ບຸກຄົນອື່ນ ຜູ້ລະເມີດກໍຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ ຫຼື ດຳເນີນຄະດີຕາມກົດໝາຍ ພ້ອມທັງໃຫ້ໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນ.

ນອກຈາກບັນດາຫຼັກການທີ່ໄດ້ອະທິບາຍມາເທິງນີ້ແລ້ວ ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສກສ ຫຼື ຫກສ ຍັງຕ້ອງໄດ້ອີງໃສ່ຫຼັກການວິຊາສະເພາະຕື່ມອີກ ຊຶ່ງຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ ຕ້ອງເປັນຜູ້ມີຄວາມຮູ້, ຄວາມສາມາດທາງດ້ານວິຊາສະເພາະໃດໜຶ່ງທີ່ແນ່ນອນ ໂດຍມີໃບຢັ້ງຢືນຢ່າງຖືກຕ້ອງ ແລະ ໄດ້ຜ່ານ ຫຼື ມີປະສົບປະການໃນວຽກງານນັ້ນຢ່າງໜ້ອຍຫ້າປີ[13].

ຫຼັກການວິຊາສະເພາະ ແມ່ນຫຼັກການຄວາມສອດຄ່ອງກັນທາງດ້ານເງື່ອນໄຂຂອງຜູ້ໄກ່ເກ່ຍ ຫຼື ຄະນະກຳມະການຕັດສິນ ແລະ ຂໍ້ຂັດແຍ່ງທີ່ເກີດຂຶ້ນໃນຕົວຈິງ. ການຄັດເລືອກຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ  ຄູ່ກໍລະນີຕ້ອງເລືອກເຟັ້ນເອົາບຸກຄົນທີ່ມີຄວາມຮູ້ ແລະ ມີປະສົບການໃນດ້ານນັ້ນ  ເນື່ອງຈາກວ່າ ຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ເກີດຂຶ້ນນັ້ນ ມີຈຸດພິເສດຕ່າງກັນ, ມີລັກສະນະຕ່າງກັນ, ເປົ້າໝາຍຂອງຂໍ້ຂັດແຍ່ງຕ່າງກັນ, ມີລະດັບຄວາມສະຫຼັບສັບຊ້ອນຕ່າງກັນ. ສະນັ້ນ, ການດຳເນີນການແກ້ໄຂຂໍ້ຂັດແຍ່ງໃຫ້ຖືກຕ້ອງຕາມກົດໝາຍ, ມີວິທະຍາສາດ, ສອດຄ່ອງກັບຄວາມເປັນຈິງ ແລະ ສາມາດບັນລຸໄດ້ຕາມເປົ້າໝາຍຂອງຄູ່ກໍລະນີນັ້ນ ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການຕັດສິນ ຕ້ອງແມ່ນຜູ້ມີຄວາມຮູ້ທາງດ້ານວິຊາສະເພາະ ແລະ ປະສົບການໃນຂົງເຂດວຽກງານທີ່ກ່ຽວຂ້ອງອີກດ້ວຍ.

---

[11] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 13

[12] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 14

[13] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 44

ຕົວຢ່າງ: ຂໍ້ຂັດແຍ່ງທີ່ເກີດຂຶ້ນກ່ຽວກັບການບໍ່ປະຕິບັດສັນຍາຂົນສົ່ງ. ຄູ່ກໍລະນີ ສາມາດເລືອກເອົາຜູ້ໄກ່ເກ່ຍ ຫຼື ກໍາມະການຕັດສິນ ທີມີຄວາມຮູ້ ແລະ ປະສົບການກ່ຽວກັບການຂົນສົ່ງມາເປັນຜູ້ໄກ່ເກ່ຍ ຫຼື ຄະນະກໍາມະການຕັດສິນ ຜູ້ກ່ຽວຈຶ່ງສາມາດຮູ້ໄດ້ເຖິງລະບຽບການ, ຄວາມຫຍຸ້ງຍາກຂອງການຂົນສົ່ງ ແລະ ຜົນເສຍຫາຍຕໍ່ສິນຄ້າທີ່ຂົນສົ່ງ.

### 2.2 ຮູບການ

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຢູ່ ສປປ ລາວ ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ກໍານົດສອງຮູບການ ຄື: ການແກ້ໄຂດ້ວຍການໄກ່ເກ່ຍ ແລະ ການແກ້ໄຂດ້ວຍການຕັດສິນໂດຍຄະນະກໍາມະການຕັດສິນ[14] (ເນື້ອໃນລະອຽດໄດ້ອະທິບາຍໄວ້ໃນ ບົດທີ 5 ແລະ 6).

### 2.3 ຂອບເຂດການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ຂອບເຂດຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກການດໍາເນີນການຜະລິດ-ທຸລະກິດ ຕາມຄວາມສະໝັກໃຈຂອງຄູ່ກໍລະນີ ແລະ ຂໍ້ຂັດແຍ່ງດັ່ງກ່າວ ຕ້ອງບໍ່ແມ່ນຂໍ້ຂັດແຍ່ງທີ່ສານປະຊາຊົນ ພວມດໍາເນີນການແກ້ໄຂຢູ່ ຫຼື ມີຄໍາຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ແລະ ບໍ່ແມ່ນຂໍ້ຂັດແຍ່ງທີ່ລະເມີດລະບຽບກົດໝາຍ ກ່ຽວກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ[15].

## 3. ຜູ້ດໍາເນີນການແກ້ໄຂຂໍ້ຂັດແຍ່ງ

### 3.1 ຜູ້ໄກ່ເກ່ຍ ແລະ ຄະນະກໍາມະການຕັດສິນ

ຜູ້ໄກ່ເກ່ຍ ແມ່ນຜູ້ທີ່ຖືກເລືອກ ໂດຍຄູ່ກໍລະນີ ຫຼື ສກສ ຫຼື ຫກສ ຈາກບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ຄະນະກໍາມະການຕັດສິນ ໃຫ້ເປັນຄົນກາງ ເພື່ອອໍານວຍຄວາມສະດວກ, ຊ່ວຍເຫຼືອ, ໃຫ້ຄໍາປຶກສາ ໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດໃດໜຶ່ງ[16].

ຄະນະກໍາມະການຕັດສິນ ແມ່ນຜູ້ທີ່ຖືກເລືອກ ໂດຍຄູ່ກໍລະນີ ຫຼື ສກສ ຫຼື ຫກສ ຈາກບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ຄະນະກໍາມະການຕັດສິນ ໃຫ້ເປັນກໍາມະການຕັດສິນ ຂໍ້ຂັດແຍ່ງທາງດ້ານເສດຖະກິດໃດໜຶ່ງ[17].

ຜູ້ໄກ່ເກ່ຍ ແລະ ຄະນະກໍາມະການຕັດສິນ ປະກອບດ້ວຍຜູ້ປະຈໍາການ ແລະ ຜູ້ບໍ່ປະຈໍາການ.

ຜູ້ປະຈໍາການ ແມ່ນພະນັກງານຂອງ ສກສ ຫຼື ຫກສ ທີ່ຖືກແຕ່ງຕັ້ງຈາກ ລັດຖະມົນຕີກະຊວງຍຸຕິທໍາ.

ຜູ້ບໍ່ປະຈໍາການ ແມ່ນບຸກຄົນທີ່ມີຄວາມຮູ້ທາງດ້ານວິຊາການ ແລະ ມີປະສົບການໃດໜຶ່ງທີ່ແນ່ນອນ ເຊັ່ນ ຜູ້ທີ່ມີຄວາມຮູ້ ແລະ ປະສົບການທາງດ້ານວິສະວະກໍາກໍ່ສ້າງ, ການບັນຊີ ແລະ ອື່ນໆ ທີ່ມາຈາກສໍານັກງານ, ອົງການ, ຫົວໜ່ວຍທຸລະກິດທັງພາກລັດ ແລະ ເອກະຊົນ, ຄົນຕ່າງປະເທດ ຫຼື ຄົນຕ່າງດ້າວທີ່ມີຄວາມສະໝັກໃຈໂດຍໄດ້ຮັບການແຕ່ງຕັ້ງຈາກລັດຖະມົນຕີກະຊວງຍຸຕິທໍາ ຕາມການຄັດເລືອກ ແລະ ຕາມການສະເໜີຂອງ ສກສ[18].

---

[14] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 15

[15] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 16

[16] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 3 ຂໍ້ 2

[17] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 3 ຂໍ້ 3

[18] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 43

### 3.2 ມາດຕະຖານຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນ

ຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນ ທີ່ເປັນພົນລະເມືອງລາວ ຕ້ອງມີມາດຕະຖານ ດັ່ງນີ້:

- ມີຄຸນສົມບັດ, ຈັນຍາທຳ ແລະ ບໍລິສຸດສັດຊື່;
- ມີຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະໃດໜຶ່ງທີ່ແນ່ນອນ ໂດຍມີໃບຢັ້ງຢືນຢ່າງຖືກຕ້ອງ;
- ໄດ້ຜ່ານ ຫຼື ມີປະສົບປະການໃນວຽກງານຢ່າງໜ້ອຍ ຫ້າ ປີ;
- ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ;
- ໄດ້ຜ່ານການຝຶກອົບຮົມດ້ານວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ມີສຸຂະພາບດີ[19].

ສຳລັບມາດຕະຖານ ແລະ ເງື່ອນໄຂຂອງຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນຕ່າງປະເທດ ນັ້ນແມ່ນໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### 3.3 ສິດ ແລະ ໜ້າທີ່ຂອງຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນ

ສິດ ແລະ ໜ້າທີ່ຂອງຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນ ມີ ດັ່ງນີ້:

- ຮັບ ຫຼື ປະຕິເສດ ການແກ້ໄຂຂໍ້ຂັດແຍ່ງ;
- ເປັນເອກະລາດໃນການແກ້ໄຂຂໍ້ຂັດແຍ່ງ;
- ຮັບປະກັນການແກ້ໄຂຂໍ້ຂັດແຍ່ງ ໃຫ້ມີຄວາມຍຸຕິທຳ, ວ່ອງໄວ ແລະ ປອດໃສ;
- ປະຕິບັດຖືກຕ້ອງຕາມຫຼັກຈັນຍາທຳຂອງວິຊາຊີບ;
- ລົງເກັບກຳຂໍ້ມູນ, ຫຼັກຖານກັບທີ່;
- ໄດ້ຮັບຄ່າແຮງງານ ຕາມການຕົກລົງຂອງຄູ່ກໍລະນີ;
- ຮັກສາຄວາມລັບຂອງຂໍ້ຂັດແຍ່ງ ຍົກເວັ້ນຂໍ້ມູນທີ່ຕ້ອງສະໜອງໃຫ້ຂະແໜງການທີ່ກ່ຽວຂ້ອງ ຕາມລະບຽບກົດໝາຍ;
- ເສັຍພັນທະໃຫ້ລັດ ຕາມລະບຽບກົດໝາຍ[20].

### 3.4 ຂໍ້ຫ້າມສຳລັບຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນ

ຫ້າມຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນ ມີພຶດຕິກຳ ດັ່ງນີ້:

- ເປີດເຜີຍຂໍ້ມູນກ່ຽວກັບເນື້ອໃນຂອງຂໍ້ຂັດແຍ່ງ ທີ່ຕົນໄດ້ຮູ້ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ກົດໝາຍຫາກໄດ້ກຳນົດໄວ້ຢ່າງອື່ນ;
- ນຳໃຊ້ຂໍ້ມູນທີ່ຕົນໄດ້ຮູ້ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ເພື່ອທຳລາຍສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
- ກົດໜ່ວງ, ຖ່ວງດຶງ, ສ້າງຄວາມຫຍຸ້ງຍາກໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງ;
- ຮັບ, ທວງເອົາເງິນ ຫຼື ຜົນປະໂຫຍດອື່ນໃດໜຶ່ງ ຈາກຄູ່ກໍລະນີ;
- ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງທີ່ພົວພັນເຖິງຜົນປະໂຫຍດຂອງຕົນເອງ, ຜົວ ຫຼື ເມຍ ຫຼື ຍາດໃກ້ຊິດຂອງຕົນ;
- ລຳອຽງໃນການປະຕິບັດໜ້າທີ່;
- ບັງຄັບ, ນາບຂູ່ ຄູ່ກໍລະນີ;
- ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ[21].

---

[19] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 44

[20] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 46

ຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນ ທີ່ລະເມີດໂດຍເຈດຕະນາ ໃນການປະຕິບັດໜ້າທີ່ຂອງຕົນ ຈະຖືກສຶກສາອົບຮົມ ຫຼື ຖືກປົດອອກຈາກບັນຊີລາຍຊື່ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການຕັດສິນ ຕາມກໍລະນີເບົາ ຫຼື ໜັກ, ຖ້າຫາກເປັນການກະທຳຜິດທາງອາຍາ ກໍຈະຖືກດຳເນີນຄະດີຕາມກົດໝາຍ[22].

## 4. ຜູ້ເຂົ້າຮ່ວມການແກ້ໄຂທາງດ້ານເສດຖະກິດ

ຜູ້ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນຜູ້ທີ່ມີສາຍພົວພັນ ແລະ ມີສ່ວນກ່ຽວຂ້ອງໃນຂໍ້ຂັດແຍ່ງ ຊຶ່ງອາດມີຜູ້ເຂົ້າຮ່ວມຫຼາຍຄົນ ເຊັ່ນ ຄູ່ກໍລະນີ, ຜູ້ຕ່າງໜ້າ, ບຸກຄົນທີສາມ, ຜູ້ຊ່ຽວຊານ, ຜູ້ແປພາສາ ແລະ ພະຍານ.

### 4.1 ຄູ່ກໍລະນີ

ຄູ່ກໍລະນີ ແມ່ນຄູ່ຂັດແຍ່ງກັນທາງດ້ານເສດຖະກິດ ຊຶ່ງປະກອບດ້ວຍ ຝ່າຍຮ້ອງຂໍ ແລະ ຝ່າຍຖືກຮ້ອງຂໍ[23], ຊຶ່ງມີຄວາມສະໝັກໃຈໃຫ້ນຳເອົາຂໍ້ຂັດແຍ່ງມາແກ້ໄຂຢູ່ ສກສ ຫຼື ຫກສ.

ນອກຈາກບຸກຄົນແລ້ວ, ການຈັດຕັ້ງກໍສາມາດເປັນຄູ່ກໍລະນີໄດ້ ຖ້າຫາກການຈັດຕັ້ງນັ້ນ ໄດ້ຈົດທະບຽນເປັນນິຕິບຸກຄົນຢ່າງຖືກຕ້ອງ ຕາມກົດໝາຍຂອງ ສປປ ລາວ ຫຼື ກົດໝາຍຂອງປະເທດທີ່ກ່ຽວຂ້ອງ.

#### 4.1.1 ສິດຂອງຄູ່ກໍລະນີ

ຄູ່ກໍລະນີມີສິດ ດັ່ງນີ້:

- ຍື່ນຄຳຮ້ອງຕໍ່ ສກສ ຫຼື ຫກສ ເມື່ອສິດ ແລະ ຜົນປະໂຫຍດ ຂອງຕົນຖືກລະເມີດ ຫຼື ຖືກໂຕ້ແຍ່ງຈາກບຸກຄົນອື່ນ ລວມທັງສິດໃນການປ່ຽນແປງ, ເພີ່ມເຕີມ ຫຼື ຖອນຄຳຮ້ອງທັງໝົດ ຫຼື ບາງສ່ວນ;
- ຍື່ນຄຳແກ້ຄຳຮ້ອງຕໍ່ ສກສ ຫຼື ຫກສ ເມື່ອຕົນເອງຖືກຮ້ອງຂໍ ລວມທັງສິດຮັບຮູ້ ຫຼື ປະຕິເສດຄຳຮ້ອງ;
- ສະເໜີຄ້ານຕົວ ຜູ້ໄກ້ເກ່ຍ ຫຼື ກຳມະການຕັດສິນ ເມື່ອເຫັນວ່າບຸກຄົນດັ່ງກ່າວຫາກມີສ່ວນກ່ຽວຂ້ອງ ຫຼື ມີຜົນປະໂຫຍດ ໃນຂໍ້ຂັດແຍ່ງດັ່ງກ່າວ;
- ຊອກຫາ ແລະ ນຳຫຼັກຖານມາສະເໜີ ແລະ ປະກອບເຂົ້າໃນການຮ້ອງຂໍ ຫຼື ການແກ້ຄຳຮ້ອງ ເພື່ອໃຫ້ຂໍ້ຂັດແຍ່ງດັ່ງກ່າວແຈ້ງຂາວ ລວມທັງຂໍເບິ່ງເອກະສານໃນສຳນວນການແກ້ໄຂຂໍ້ຂັດແຍ່ງ ແລະ ຊັກຖາມບຸກຄົນທີ່ເຂົ້າຮ່ວມ ເມື່ອເຫັນວ່າບັນຫາໃດໜຶ່ງ ຫາກບໍ່ທັນຈະແຈ້ງ ຫຼື ມີຂໍ້ສົງໄສ;
- ຮ້ອງຂໍຕໍ່ສານ ເພື່ອໃຫ້ຍຶດ ຫຼື ອາຍັດຊັບ ເມື່ອມີຄວາມຈຳເປັນ ໂດຍຜ່ານ ສກສ ຫຼື ຫກສ;
- ເຂົ້າມາໃຫ້ການ, ຮ້ອງຂໍໃຫ້ມີການເກັບກຳຂໍ້ມູນຫຼັກຖານ, ສະເໜີໃຫ້ສອບຖາມພະຍານ, ແຕ່ງຕັ້ງຜູ້ຊ່ຽວຊານ, ລົງກວດກາບັນຫາທີ່ຂັດແຍ່ງ ແລະ ອື່ນໆ;
- ສະເໜີໃຫ້ເອົາບຸກຄົນທີສາມ ຫຼື ເອົາທະນາຍຄວາມເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງ;
- ທວງໃຫ້ປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

#### 4.1.2 ພັນທະຂອງຄູ່ກໍລະນີ

ຄູ່ກໍລະນີ ມີພັນທະ ດັ່ງນີ້:

- ສະເໜີຂໍ້ມູນ ຫຼັກຖານ ແລະ ໃຫ້ຄວາມກະຈ່າງແຈ້ງ ໃນການແກ້ໄຂຂໍ້ຂັດແຍ່ງ;
- ປະຕິບັດຕາມຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

---

[21] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 57

[22] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 70

[23] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 3

- ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ[24].

### 4.1.3 ຂໍ້ຫ້າມສຳລັບຄູ່ກໍລະນີ.

ຫ້າມຄູ່ກໍລະນີ ມີພຶດຕິກຳ ດັ່ງນີ້:

- ປອມແປງເອກະສານ ຫຼື ຂໍ້ມູນທີ່ກ່ຽວຂ້ອງ;
- ບັງຄັບ, ນາບຂູ່ ຫຼື ໃຊ້ຄວາມຮຸນແຮງ, ຕົວະຍົວະ, ຫຼອກລວງ ຜູ້ໄກ່ເກ່ຍ, ກຳມະການຕັດສິນ ແລະ ຜູ້ຊ່ຽວຊານ;
- ໃຫ້ສິນບົນ ຫຼື ຜົນປະໂຫຍດອື່ນແກ່ ຜູ້ໄກ່ເກ່ຍ, ຄະນະກຳມະການຕັດສິນ ແລະ ຜູ້ຊ່ຽວຊານ;
- ມີພຶດຕິກຳອື່ນທີ່ລະເມີດຕໍ່ລະບຽບກົດໝາຍ[25].

ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍໃຫ້ແກ່ລັດ, ສັງຄົມ ຫຼື ບຸກຄົນອື່ນ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ ຫຼື ຖືກດຳເນີນຄະດີ ຕາມລະບຽບກົດໝາຍ ຕາມກໍລະນີເບົາ ຫຼື ໜັກ ແລະ ໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ[26].

## 4.2 ຜູ້ຕາງໜ້າ

ຜູ້ຕາງໜ້າ ແມ່ນຜູ້ທີ່ປະຕິບັດສິດ ແລະ ໜ້າທີ່ແທນຄູ່ກໍລະນີໃນເວລາດຳເນີນການແກ້ໄຂຂໍ້ຂັດແຍ່ງ ຊຶ່ງປະກອບມີ ສອງ ປະເພດ ຄື ຜູ້ຕາງໜ້າຕາມກົດໝາຍ ແລະ ຜູ້ຕາງໜ້າຕາມການມອບໝາຍ.

### 4.2.1 ຜູ້ຕາງໜ້າຕາມກົດໝາຍ

ຜູ້ຕາງໜ້າຕາມກົດໝາຍ ແມ່ນບຸກຄົນທີ່ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍບໍ່ໄດ້ຮັບການແຕ່ງຕັ້ງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ກໍລະນີ. ຜູ້ຕາງໜ້າຕາມກົດໝາຍມີສິດໃນການເຂົ້າຮ່ວມໃນທຸກຂັ້ນຕອນຂອງການດຳເນີນການແກ້ໄຂຂໍ້ຂັດແຍ່ງ[27].

### 4.2.2 ຜູ້ຕາງໜ້າຕາມການມອບໝາຍ

ຜູ້ຕາງໜ້າຕາມການມອບໝາຍ ແມ່ນບຸກຄົນທີ່ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍມີການແຕ່ງຕັ້ງ ຫຼື ການມອບໝາຍຈາກຄູ່ກໍລະນີ ຕາມທີ່ໄດ້ກຳນົດໄວ້ໃນເນື້ອໃນຂອງສັນຍາມອບໝາຍ[28]. ຜູ້ຕາງໜ້າຕາມການມອບໝາຍ ມີສິດ ແລະ ພັນທະ ເຄື່ອນໄຫວ, ເຂົ້າຮ່ວມ ແລະ ລາຍງານຜົນຂອງການເຂົ້າຮ່ວມການແກ້ໄຂຂໍ້ຂັດແຍ່ງ ແຕ່ລະຄັ້ງ ໃຫ້ແກ່ຄູ່ກໍລະນີ.

## 4.3 ບຸກຄົນທີສາມ

ບຸກຄົນທີສາມ ແມ່ນບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດ ທີ່ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ ທີ່ພົວພັນກັບຂໍ້ຂັດແຍ່ງ ຊຶ່ງກຳລັງຖືກພິຈາລະນາຢູ່, ບຸກຄົນທີສາມ ບໍ່ແມ່ນ ຜູ້ຮ້ອງຂໍ ແລະ ຜູ້ຖືກຮ້ອງຂໍ ໂດຍກົງໃນໃນຂໍ້ຂັດແຍ່ງ ແຕ່ເຂົ້າຮ່ວມໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງ ໃນຖານະເປັນຝ່າຍ ຜູ້ຮ້ອງຂໍ ຫຼື ຜູ້ຖືກຮ້ອງຂໍ[29].

---

[24] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 72

[25] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 58

[26] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 70

[27] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 89

[28] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 91

[29] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 75

**ສິດ ແລະ ພັນທະ ຂອງບຸກຄົນທີສາມ**

ບຸກຄົນທີສາມ ປະກອບດ້ວຍ ບຸກຄົນທີສາມ ທີ່ຍື່ນຄໍາຮ້ອງດ້ວຍຕົນເອງ ແລະ ບຸກຄົນທີສາມທີ່ບໍ່ຍື່ນຄໍາຮ້ອງດ້ວຍຕົນເອງ.

ບຸກຄົນທີສາມທີ່ຍື່ນຄໍາຮ້ອງດ້ວຍຕົນເອງ ສາມາດນໍາໃຊ້ສິດ ແລະ ມີພັນທະ ດັ່ງດຽວກັນກັບ ຜູ້ຮ້ອງຂໍແກ້ໄຂຂໍ້ຂັດແຍ່ງ.

ບຸກຄົນທີສາມທີ່ບໍ່ໄດ້ຍື່ນຄໍາຮ້ອງດ້ວຍຕົນເອງມີສິດ ແລະ ພັນທະ ດັ່ງນີ້:

- ສາມາດເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງ ເປັນຝ່າຍຜູ້ຮ້ອງຂໍ ຫຼື ຜູ້ຖືກຮ້ອງຂໍ;
- ອາດຖືກນໍາເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງຕາມຄໍາຮ້ອງຂອງຄູ່ກໍລະນີ;
- ນໍາໃຊ້ສິດ ແລະ ພັນທະດັ່ງດຽວກັນກັບຄູ່ກໍລະນີ ເວັ້ນເສຍແຕ່ສິດໃນການປ່ຽນແປງເປົ້າໝາຍຄໍາຮ້ອງຂໍ, ສິດໃນການເພີ່ມ ຫຼື ຫຼຸດມູນຄ່າໃນຄໍາຮ້ອງຂໍ, ສິດໃນການຖອນຄໍາຮ້ອງ, ສິດໃນການຮັບຮູ້ຄໍາຮ້ອງ ຫຼື ການຕົກລົງໂດຍດີ ແລະ ສິດໃນການທວງໃຫ້ປະຕິບັດຄໍາຕົກລົງ ຫຼື ຄໍາຕັດສິນຂອງຄະນະກໍາມະການຕັດສິນ[30].

## 4.4 ຜູ້ຊ່ຽວຊານ

ຜູ້ຊ່ຽວຊານ ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນບຸກຄົນທີ່ມີຄວາມຮູ້, ຄວາມສາມາດ, ຄວາມຊໍານິຊໍານານ ແລະ ປະສົບການ ໃນວິຊາສະເພາະໃດໜຶ່ງ ທີ່ຖືກຮັບຮູ້ຈາກສະຖາບັນ ຫຼື ອົງການທີ່ກ່ຽວຂ້ອງ ຊຶ່ງສາມາດໃຫ້ຄວາມກະຈ່າງແຈ້ງຕໍ່ບັນຫາທີ່ພົວພັນກັບວິຊາສະເພາະຂອງຕົນ.

ຜູ້ຊ່ຽວຊານ ອາດເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມການສະເໜີຂອງຄູ່ກໍລະນີ ຫຼື ຄະນະກໍາມະການຕັດສິນ ໃນກໍລະນີທີ່ພົບຄວາມຫຍຸ້ງຍາກໃນການຊັ່ງຊາ ຕີລາຄາຂໍ້ມູນຫຼັກຖານ ໃດໜຶ່ງກ່ຽວກັບຂໍ້ຂັດແຍ່ງດັ່ງກ່າວ.

ຜູ້ຊ່ຽວຊານ ຕ້ອງດໍາເນີນການພິສູດຫຼັກຖານ ໃນຂອບເຂດທີ່ກໍານົດໄວ້. ພາຍຫຼັງທີ່ທໍາການພິສູດແລ້ວ ຜູ້ຊ່ຽວຊານ ຕ້ອງເຮັດບົດສະຫຼຸບ ໃຫ້ຄໍາເຫັນໃນນາມຂອງຕົນ ແລ້ວສົ່ງໃຫ້ຕາມກໍານົດເວລາ ແລະ ຕ້ອງຮັບຜິດຊອບຕໍ່ຄໍາເຫັນດັ່ງກ່າວ. ການພິສູດອາດຈະເຮັດ ໂດຍຜູ້ຊ່ຽວຊານຫຼາຍຄົນ ຫຼື ຫຼາຍເທື່ອກໍໄດ້, ຖ້າມີການພິສູດຄືນໃໝ່ ຕ້ອງໃຫ້ມີຜູ້ຊ່ຽວຊານຫຼາຍກວ່າເທື່ອຜ່ານມາ ແລະ ໃນກໍລະນີບໍ່ມີຜູ້ຊ່ຽວຊານອາດແຕ່ງຕັ້ງຜູ້ຊໍານານງານ ໃຫ້ດໍາເນີນແທນກໍໄດ້[31].

### 4.4.1 ສິດຂອງຜູ້ຊ່ຽວຊານ

ຜູ້ຊ່ຽວຊານ ມີສິດ ດັ່ງນີ້:

- ທວງເອົາຂໍ້ມູນ ຫຼັກຖານເພີ່ມເຕີມ ເພື່ອໃຫ້ການພິສູດມີຄວາມຖືກຕ້ອງ ແລະ ຊັດເຈນ;
- ໄດ້ຮັບຄ່າຕອບແທນ ແລະ ຄ່າໃຊ້ຈ່າຍເຂົ້າໃນການພິສູດຫຼັກຖານ;
- ໃຫ້ການຊີ້ແຈ້ງກ່ຽວກັບການພິສູດ, ເພີ່ມເຕີມ, ດັດແປງຜົນການພິສູດຫຼັກຖານ ຖ້າເຫັນວ່າມີຂໍ້ມູນໃໝ່ກ່ຽວກັບການພິສູດ;
- ໄດ້ຮັບການປົກປ້ອງຕາມກົດໝາຍ ແລະ ລະບຽບການ ຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ກຽດຊື່ສຽງ ແລະ ຊັບສິນ ທີ່ກ່ຽວຂ້ອງກັບການພິສູດຫຼັກຖານ ແລະ ໃນເວລາພິສູດຫຼັກຖານ.

---

[30] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 76

[31] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 82

#### 4.4.2 ພັນທະຂອງຜູ້ຊ່ຽວຊານ

ຜູ້ຊ່ຽວຊານ ມີພັນທະ ດັ່ງນີ້:

- ພິສູດຫຼັກຖານ ແລະ ໃຫ້ຄຳເຫັນຢ່າງຖືກຕ້ອງ ຕາມຫຼັກວິຊາສະເພາະ;
- ສົ່ງບົດສະຫຼຸບຜົນ ການພິສູດຫຼັກຖານ ຕາມກຳນົດເວລາ;
- ເຂົ້າມາຊີ້ແຈງຕາມໝາຍເຊີນ;
- ຮັບຜິດຊອບຕໍ່ການຊີ້ແຈງຂອງຕົນ ແລະ ຮັກສາຄວາມລັບຕໍ່ຜົນການພິສູດ[32].

### 4.5 ຜູ້ແປພາສາ

ຜູ້ແປພາສາ ແມ່ນບຸກຄົນທີ່ມີຄວາມຮູ້, ຄວາມສາມາດ ຫຼື ປະສົບການໃນການແປພາສາໃດໜຶ່ງ ຂອງຜູ້ເຂົ້າຮ່ວມໃນຂໍ້ຂັດແຍ່ງ ທີ່ບໍ່ຮູ້ພາສາລາວ ຫຼື ພາສາໃດໜຶ່ງຕາມທີ່ຄູ່ກໍລະນີໄດ້ຕົກລົງກັນ. ຜູ້ແປພາສາ ຕ້ອງຮັບຜິດຊອບຕໍ່ການແປຂອງຕົນ ແລະ ມີພັນທະໃນການຮັກສາຄວາມລັບ[33].

#### 4.5.1 ສິດຂອງຜູ້ແປພາສາ

ຜູ້ແປພາສາ ມີສິດ ດັ່ງນີ້:

- ຮັບຮູ້, ສຶກສາຄົ້ນຄວ້າຂໍ້ມູນທີ່ກ່ຽວຂອງກັບຂໍ້ຂັດແຍ່ງກ່ອນການແປພາສາ;
- ໄດ້ຮັບຄ່າຕອບແທນໃນການແປພາສາ ຕາມລະບຽບການ;
- ໄດ້ຮັບການປົກປ້ອງຕາມກົດໝາຍ ແລະ ລະບຽບການ ຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ກຽດຊື່ສຽງ ແລະ ຊັບສິນທີ່ກ່ຽວຂ້ອງກັບການແປພາສາ.

#### 4.5.2 ພັນທະຂອງຜູ້ແປພາສາ

ຜູ້ແປພາສາ ມີພັນທະ ດັ່ງນີ້:

- ແປພາສາໃຫ້ຖືກຕ້ອງຕາມເນື້ອໃນຂອງການເວົ້າ ແລະ ເອກະສານ;
- ເຂົ້າມາແປພາສາຕາມການແຕ່ງຕັ້ງ;
- ຮັບຜິດຊອບຕໍ່ການແປຂອງຕົນ ແລະ ຮັກສາຄວາມລັບ[34].

### 4.6 ພະຍານ

ພະຍານ ແມ່ນບຸກຄົນທີ່ຮູ້ເຫັນເຫດການຕົວຈິງ ຂອງຂໍ້ຂັດແຍ່ງ ຫຼື ສະພາບ. ຄົນຫູໜວກ, ປາກກືກ, ຄົນປັນຍາອ່ອນ, ເສຍຈິດ, ເດັກທີ່ຍັງບໍ່ທັນພົ້ນກະສຽນອາຍຸສິບແປດປີ, ຍາດພີ່ນ້ອງຂອງຄູ່ກໍລະນີຝ່າຍໃດໜຶ່ງ ອາດຈະນຳມາໃຫ້ການ ເພື່ອເອົາເປັນຂໍ້ມູນ ບໍ່ໃຫ້ຖືວ່າເປັນພະຍານ[35].

#### 4.6.1 ສິດຂອງພະຍານ

ພະຍານ ມີສິດ ດັ່ງນີ້:

- ໃຫ້ການ;
- ເບິ່ງບົດບັນທຶກຄຳໃຫ້ການຂອງຕົນທີ່ໄດ້ໃຫ້ການໄປແລ້ວ;
- ສະເໜີດັດແປງ, ເພີ່ມເຕີມບົດບັນທຶກຄຳໃຫ້ການຂອງຕົນ ຫຼື ໃຫ້ການເພີ່ມເຕີມ;

---

[32] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 83

[33] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 84

[34] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 85

[35] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 80

- ຮ້ອງທຸກຕໍ່ການກະທຳ ທີ່ບໍ່ຖືກຕ້ອງຂອງ ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການຕັດສິນ;
- ໄດ້ຮັບການປົກປ້ອງຕາມກົດໝາຍ ແລະ ລະບຽບການ ຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ກຽດຊື່ສຽງ ແລະ ຊັບສິນ ຍ້ອນການໃຫ້ການຂອງຕົນ.

#### 4.6.2 ພັນທະຂອງພະຍານ

ພະຍານ ມີພັນທະ ດັ່ງນີ້:

- ເຂົ້າມາສະເໜີຕົວຕາມໝາຍເຊີນ;
- ໃຫ້ການຢ່າງຖືກຕ້ອງກັບເຫດການຕົວຈິງ;
- ຮັບຜິດຊອບຕາມກົດໝາຍ ຕໍ່ການໃຫ້ການເທັດ ຫຼື ບໍ່ຍອມໃຫ້ການ;
- ເອົາຄຳໃຫ້ການຂອງພະຍານ ໃນບ່ອນຢູ່ຂອງຜູ້ກ່ຽວເອງກໍໄດ້ ໃນກໍລະນີຜູ້ກ່ຽວ ຫາກເຈັບເປັນ, ເຖົ້າແກ່, ເສຍອົງຄະ ຫຼື ບໍ່ສາມາດເຂົ້າມາໃຫ້ການ ຍ້ອນມີຄວາມຈຳເປັນ.

ບຸກຄົນທີ່ຮ້ອງຂໍໃຫ້ເອົາຕົວພະຍານເຂົ້າມານັ້ນ ຕ້ອງເລົ່າເຫດການທີ່ພົວພັນກັບພະຍານ ໂດຍບອກຊື່, ນາມສະກຸນ ແລະ ບ່ອນຢູ່ຂອງພະຍານນັ້ນ ຢ່າງຈະແຈ້ງ ພ້ອມທັງຮັບຜິດຊອບຕໍ່ຄ່າໃຊ້ຈ່າຍໃຫ້ແກ່ຜູ້ຖືກເຊີນເຂົ້າມາຮ່ວມໃນການແກ້ໄຂ ຕາມກົດໝາຍ ແລະ ລະບຽບການ[36].

## 5. ອົງການຮັບຜິດຊອບ, ອົງການຄຸ້ມຄອງ ແລະ ອົງການກວດກາ ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### 5.1 ອົງການຮັບຜິດຊອບແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ອົງການຮັບຜິດຊອບແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຊຶ່ງເປັນອົງການຈັດຕັ້ງທີ່ມີລັກສະນະວິຊາຊີບສັງຄົມ ແລະ ກົດໝາຍ ຢູ່ພາຍໃຕ້ການຄຸ້ມຄອງຂອງຂະແໜງການຍຸຕິທຳ, ມີພາລະບົດບາດສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ຄູ່ກໍລະນີ, ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ ໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ[37].

#### 5.1.1 ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນການຈັດຕັ້ງໜຶ່ງທີ່ຂຶ້ນກັບກະຊວງຍຸຕິທຳ ມີພາລະບົດບາດເປັນເສນາທິການ ໃຫ້ລັດຖະມົນຕີກະຊວງຍຸຕິທຳໃນການຄຸ້ມຄອງ ແລະ ດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດລະຫວ່າງການຈັດຕັ້ງ ກັບ ການຈັດຕັ້ງ, ການຈັດຕັ້ງ ກັບ ບຸກຄົນ, ບຸກຄົນ ກັບ ບຸກຄົນທັງພາຍໃນ ແລະ ຕ່າງປະເທດທີ່ສະເໜີໃຫ້ ສກສ ແກ້ໄຂ, ຄຸ້ມຄອງຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ ທີ່ປະຈຳການ ແລະ ບໍ່ປະຈຳການຂອງ ສກສ ແລະ ຫກສ, ຄຸ້ມຄອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດປະຈຳຢູ່ບັນດາແຂວງ, ພົວພັນ ກັບ ບັນດາອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດ ແລະ ຂອງສາກົນ, ຄົ້ນຄວ້າປັບປຸງລະບຽບການ ແລະ ກົດໝາຍ ກ່ຽວກັບວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອສະເໜີໃຫ້ຂັ້ນເທິງພິຈາລະນາ[38].

---

[36] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 81

[37] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 39

[38] ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງຍຸຕິທຳວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບ ປີ 2008 ມາດຕາ 2

**ກ. ສິດ ແລະ ໜ້າທີ່ ຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີສິດ ແລະ ໜ້າທີ່ ດັ່ງນີ້:

- ຄົ້ນຄວ້າ ແລະ ສະເໜີ, ປັບປຸງກົດໝາຍ ແລະ ລະບຽບການ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ຂັ້ນເທິງພິຈາລະນາ;
- ຄົ້ນຄວ້າ ແລະ ນຳສະເໜີຕໍ່ລັດຖະມົນຕີ ກະຊວງຍຸຕິທຳ ເພື່ອແຕ່ງຕັ້ງຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນເຂົ້າໃນບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນ ຫຼື ປົດບຸກຄົນດັ່ງກ່າວອອກຈາກບັນຊີ;
- ໂຄສະນາ, ສຶກສາອົບຮົມກົດໝາຍ ແລະ ລະບຽບການ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ພິຈາລະນາແຕ່ງຕັ້ງ, ປົດ ຫຼື ປ່ຽນຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນເຂົ້າໃນການແກ້ໄຂຂໍ້ຂັດແຍ່ງແຕ່ລະຄັ້ງຕາມລະບຽບກົດໝາຍ;
- ຄຸ້ມຄອງ ແລະ ອຳນວຍຄວາມສະດວກ ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃນຂອບເຂດ ທີ່ຕົນຮັບຜິດຊອບ;
- ຮັບຄຳຮ້ອງ, ເອກະສານ, ຂໍ້ມູນ, ຫຼັກຖານ ຈາກຄູ່ກໍລະນີ;
- ກໍ່ສ້າງ, ບຳລຸງ ແລະ ຍົກລະດັບທາງດ້ານວິຊາການໃຫ້ແກ່ພະນັກງານຂອງ ສກສ ຫຼື ຫກສ, ຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນ;
- ຕິດຕໍ່ພົວພັນ ກັບ ຄູ່ກໍລະນີ ແລະ ປະສານສົມທົບ ກັບ ພາກສ່ວນກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມການມອບໝາຍຂອງຂັ້ນເທິງ;
- ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ກະຊວງຍຸຕິທຳ;
- ນຳໃຊ້ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ[39].

### 5.1.2 ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີພາລະບົດບາດເປັນເສນາທິການໃຫ້ ສກສ, ພະແນກຍຸຕິທຳ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ໃນການຄຸ້ມຄອງ ແລະ ດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດລະຫວ່າງການຈັດຕັ້ງກັບການຈັດຕັ້ງ, ການຈັດຕັ້ງກັບບຸກຄົນ, ບຸກຄົນກັບບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ສະເໜີ ໃຫ້ ຫກສ ແກ້ໄຂ, ຄຸ້ມຄອງບັນດານັກໄກ່ເກ່ຍ ແລະ ກຳມະການຕັດສິນປະຈຳການ ແລະ ບໍ່ປະຈຳການຂອງ ຫກສ, ພົວພັນກັບບັນດາອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດ ແລະ ຂອງສາກົນ ຕາມການເຫັນດີ ຂອງ ສກສ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ[40].

[39] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 41

[40] ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງຍຸຕິທຳວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານ ເສດຖະກິດ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບ ປີ 2008 ມາດຕາ 2

**ກ. ໜ້າທີ່ຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີສິດ ແລະ ໜ້າທີ່ດຽວກັນກັບ ສກສ ຕາມທີ່ໄດ້ກ່າວມາຕາມຂໍ້ ກ ຂອງຂໍ້ 5.1.1. ສຳລັບ ສິດ ສະເໜີແຕ່ງຕັ້ງ, ປົດ ຜູ້ໄກ່ເກ່ຍ, ກຳມະການຕັດສິນ ເຂົ້າໃນບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນນັ້ນ ຕ້ອງສະເໜີຕໍ່ ສກສ ເພື່ອພິຈາລະນາ[41].

## 5.2 ອົງການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### 5.2.1 ກະຊວງ ຍຸຕິທຳ

ໃນການຄຸ້ມຄອງວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດກະຊວງຍຸຕິທຳມີສິດ ແລະ ໜ້າທີ່ ດັ່ງນີ້:

- ຄົ້ນຄວ້າສ້າງແຜນຍຸທະສາດ, ແຜນການ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ ;
- ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການກ່ຽວກັບວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຊີ້ນຳ ແລະ ຄຸ້ມຄອງດ້ານການຈັດຕັ້ງ, ງົບປະມານຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຊີ້ນຳ, ຕິດຕາມການເຄື່ອນໄຫວການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃນຂອບເຂດທົ່ວປະເທດ;
- ກໍ່ສ້າງບຳລຸງ ແລະ ຍົກລະດັບຄວາມຮູ້ຄວາມສາມາດ, ຈັນຍາທຳ ແລະ ວິຊາສະເພາະໃຫ້ພະນັກງານຂອງສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນ;
- ສະເໜີນາຍົກລັດຖະມົນຕີແຕ່ງຕັ້ງ, ປົດຕຳແໜງ ຫຼື ຍົກຍ້າຍ ຫົວໜ້າສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ແຕ່ງຕັ້ງ, ປົດຕຳແໜ່ງ ຫຼື ຍົກຍ້າຍ ຮອງຫົວໜ້າສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຫົວໜ້າ ແລະ ຮອງຫົວໜ້າຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ;
- ແຕ່ງຕັ້ງ ຫຼື ປົດຕຳແໜ່ງຄະນະກຳມະການຕັດສິນເຂົ້າໃນ ຫຼື ອອກຈາກບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ຄະນະກຳມະການຕັດສິນຕາມການສະເໜີຂອງ ສກສ ຫຼື ຫກສ;
- ປະສານກັບພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຮ່ວມກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

### 5.2.2 ພະແນກ ຍຸຕິທຳແຂວງ

ໃນການຄຸ້ມຄອງວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພະແນກຍຸຕິທຳ ມີສິດ ແລະ ໜ້າທີ່ ດັ່ງນີ້:

- ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດ, ແຜນການ, ກົດໝາຍ ແລະ ລະບຽບການກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

---

[41] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 42

- ໂຄສະນາ, ເຜີຍແຜ່, ສຶກສາອົບຮົມກົດໝາຍ ແລະ ລະບຽບການກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຊີ້ນໍາ ແລະ ຄຸ້ມຄອງດ້ານການຈັດຕັ້ງ ແລະ ງົບປະມານຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດຮັບຜິດຊອບຂອງຕົນ;
- ຊີ້ນໍາ, ຕິດຕາມການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
- ສະເໜີຕໍ່ກະຊວງຍຸຕິທໍາ ກ່ຽວກັບການສ້າງຕັ້ງ ແລະ ປັບປຸງຫ້ອງການ, ການແຕ່ງຕັ້ງ, ປົດຕໍາແໜ່ງ ຫຼື ຍົກຍ້າຍຫົວໜ້າ, ຮອງຫົວໜ້າຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍປະສານສົມທົບກັບຂະແໜງການ ທີ່ກ່ຽວຂ້ອງ;
- ຮັບ, ຄົ້ນຄວ້າ ແລະ ແກ້ໄຂຄໍາຮ້ອງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຊີ້ນໍາວຽກງານສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວຂອງ ຫ້ອງການແກ້ໄຂ້ຂັດແຍ່ງທາງເສດຖະກິດ ໃຫ້ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອລາຍງານກະຊວງຍຸຕິທໍາ;
- ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ[42].

## 5.3 ອົງການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ອົງການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ: ອົງການກວດກາພາຍໃນ ຊຶ່ງແມ່ນພາກສ່ວນໜຶ່ງຂອງອົງການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ ແລະ ອົງການໄອຍະການປະຊາຊົນ[43].

ການດໍາເນີນການກວດກາ ຂອງອົງການກວດກາ ດັ່ງກ່າວ ມີເປົ້າໝາຍ ຕິດຕາມ, ເກັບກໍາຂໍ້ມູນ, ຫຼັກຖານກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍ, ໜ້າທີ່, ຄວາມຮັບຜິດຊອບ ຂອງ ສກສ ຫຼື ຫກສ ເພື່ອຕີລາຄາ, ປະເມີນຜົນການຈັດຕັ້ງປະຕິບັດວຽກງານ ພ້ອມທັງສະເໜີວິທີປັບປຸງວຽກງານດັ່ງກ່າວ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

- ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຄໍາຮ້ອງຂອງບຸກຄົນ ຫຼື ນິຕິບຸກຄົນ ກ່ຽວກັບການແກ້ໄຂຂໍ້ແຍ່ງທາງດ້ານເສດຖະກິດ;
- ການເຄື່ອນໄຫວຂອງ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ການຄຸ້ມຄອງ ແລະ ການນໍາໃຊ້ ລາຍຮັບ-ລາຍຈ່າຍ ຂອງ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຄວາມຮັບຜິດຊອບ ແລະ ການປະພຶດ ຂອງພະນັກງານຢູ່ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຂອງ ຜູ້ໄກ່ເກ່ຍ ແລະ ກໍາມະການຕັດສິນ[44].

ສໍາລັບຮູບການກວດການັ້ນ ແມ່ນດໍາເນີນດ້ວຍຮູບການກວດກາຕາມລະບົບການກວດກາປົກກະຕິ, ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແລະ ກວດກາແບບກະທັນຫັນ ໂດຍອີງໃສ່ຄວາມຈໍາເປັນຂອງແຕ່ລະເຫດການ ຫຼື ກໍ

[42] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 62

[43] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 63

[44] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 64

ລະນີທີ່ເກີດຂຶ້ນ. ໂດຍອີງຕາມກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດແລ້ວ ອົງການກວດກາວຽກງານດັ່ງກ່າວ ແບ່ງອອກເປັນ ສອງ ປະເພດ ດັ່ງນີ້:

### 5.3.1 ອົງການກວດກາພາຍໃນ

ອົງການກວດກາພາຍໃນ ແມ່ນອົງການກວດກາຕາມສາຍຕັ້ງຂອງຂະແໜງການຍຸຕິທຳ ໃນນີ້ຂັ້ນສູນກາງ ແມ່ນກົມກວດກາຂອງກະຊວງຍຸຕິທຳ ແລະ ຂັ້ນທ້ອງຖິ່ນ ແມ່ນພະແນກຍຸຕິທຳແຂວງ, ນະຄອນຫຼວງ[45] ຊຶ່ງຕ້ອງໄດ້ດຳເນີນຕາມແຜນການປົກກະຕິ, ການກວດກາຕາມຄຳສັ່ງ ຫຼື ຄຳສະເໜີ ແລະ ແບບກະທັນຫັນ. ເນື້ອໃນ ແລະ ເປົ້າໝາຍຂອງການກວດກາພາຍໃນແມ່ນ[46] ແນໃສ່ກວດກາການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ແຜນການ, ສິດ ແລະ ໜ້າທີ່, ຄວາມຮັບຜິດຊອບໃນການຄຸ້ມຄອງບໍລິຫານວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແບບບໍລິຫານການປົກຄອງ ແລະ ລະບຽບການດ້ານວິຊາສະເພາະ, ເຕັກນິກ, ຫຼັກການຄຸ້ມຄອງຕາມຂະແໜງການຍຸຕິທຳ.

ການກວດກາພາຍໃນຕໍ່ວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຍັງແມ່ນການດຳເນີນການກວດກາພາຍໃນຂະແໜງຍຸຕິທຳຕາມສາຍຕັ້ງ ຂອງການຈັດຕັ້ງ ເພື່ອຕິດຕາມການຈັດຕັ້ງປະຕິບັດວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງ ສກສ ແລະ ຫກສ ເພື່ອຊອກໃຫ້ເຫັນພື້ນຖານຂອງຄວາມຫຍຸ້ງຍາກ, ຂໍ້ຄົງຄ້າງ ແລະ ອື່ນໆ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອຄົ້ນຄວ້າສະເໜີວິທີທາງອອກ, ການປັບປຸງກົນໄກການຈັດຕັ້ງ, ສັບຊ້ອນພະນັກງານພາຍໃນ ສກສ ແລະ ຫກສ, ຍົກລະດັບຄວາມສາມາດໃນການບໍລິການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ສັງຄົມຢ່າງທັນການ, ໂປ່ງໃສ ແລະ ຫຍັບເຂົ້າສູ່ລະບົບສາກົນເທື່ອລະກ້າວ.

### 5.3.2 ອົງການກວດກາພາຍນອກ

ອົງການກວດການພາຍນອກ ແມ່ນອົງການຈັດຕັ້ງຂອງລັດຕາມສາຍຂວາງ ຫຼື ເອີ້ນວ່າ ອົງການທີ່ມີສິດ ແລະ ໜ້າທີ່ຮັບຜິດຊອບວຽກງານກວດກາ ຊຶ່ງຈະດຳເນີນຕາມການສະເໜີຂອງບຸກຄົນ, ການຈັດຕັ້ງໃດໜຶ່ງ ຫຼື ລິເລີ່ມໂດຍອົງການກວດກາພາຍນອກເອງ ໃນກໍລະນີເຫັນວ່າ ມີບັນຫາທີ່ບໍ່ຈະແຈ້ງ ແລະ ບໍ່ໂປ່ງໃສ. ອົງການທີ່ມີສິດກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພາຍນອກ ມີ ສະພາແຫ່ງຊາດ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ ແລະ ອົງການໄອຍະການປະຊາຊົນ[47] .

ການກວດກາຈາກພາຍນອກ ແມ່ນເພື່ອຕິດຕາມກວດກາ, ສືບສວນ-ສອບສວນ, ເກັບກຳຂໍ້ມູນຫຼັກຖານ ເພື່ອຢັ້ງຢືນຄວາມຖືກຕ້ອງ ຫຼື ຄວາມຜິດພາດ ຂອງການຈັດຕັ້ງປະຕິບັດວຽກງານຂອງ ສກສ ແລະ ຫກສ ເນື່ອງຈາກວ່າ ພາກສ່ວນທາງນອກເຂົ້າມາກວດກາ ແມ່ນໃນກໍລະນີເກີດມີບັນຫາ, ເກີດມີຫາງສຽງ, ເກີດເປັນຄະດີ ຊຶ່ງພາລະບົດບາດຂອງການກວດກາບໍ່ນອນຢູ່ໃນຄວາມຮັບຜິດຊອບພາຍໃນ ຫຼື ສາຍຕັ້ງແລ້ວ.

[45] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 60

[46] ກົດໝາຍວ່າດ້ວຍການກວດກາລັດ ສະບັບ ປີ 2007 ມາດຕາ 14

[47] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 63 ຂໍ້ 2

# ບົດທີ 3
# ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

## 1. ຄວາມຮູ້ກ່ຽວກັບຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### 1.1 ຄວາມໝາຍ

ຄ່າໃຊ້ຈ່າຍໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນພັນທະຂອງຄູ່ກໍລະນີທີ່ຕ້ອງຮັບຜິດຊອບຈ່າຍ ເພື່ອນຳໃຊ້ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຊຶ່ງຄູ່ກໍລະນີຕ້ອງໄດ້ນຳມາວາງໄວ້ຢູ່ ສກສ ຫຼື ຫກສ ກ່ອນການດຳເນີນການແກ້ໄຂຂໍ້ຂັດແຍ່ງ.

ຄ່າທຳນຽມ ແລະ ຄ່າບໍລິການ ສກສ ຫຼື ຫກສ ຕ້ອງເກັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ການເກັບຕ້ອງປະຕິບັດຕາມລະບຽບການກ່ຽວກັບການເກັບຄ່າທຳນຽມ ແລະ ຄ່າບໍລິການ[48] ທີ່ປະກາດໃຊ້ໃນແຕ່ລະ ລະຍະ ແລະ ຕ້ອງເກັບຕາມອັດຕາເອກະພາບໃນຂອບເຂດທົ່ວປະເທດ ໂດຍສອດຄ່ອງກັບລະດັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະ ລະຍະ, ສ່ວນຄ່າແຮງງານນັ້ນ ເຖິງວ່າກົດໝາຍກຳນົດໄວ້ໃຫ້ເປັນການຕົກລົງລະຫວ່າງຄູ່ກໍລະນີ ກັບ ຜູ້ໄກ່ເກ່ຍ, ກຳມະການຕັດສິນ ຫຼື ຜູ້ຊ່ຽວຊານກໍຕາມ ແຕ່ກໍຕ້ອງຢູ່ໃນລະດັບທີ່ສົມເຫດສົມຜົນ ແລະ ຕ້ອງແຈ້ງໃຫ້ ສກສ ຫຼື ຫກສ ບ່ອນແກ້ໄຂຂໍ້ຂັດແຍ່ງນັ້ນຊາບນຳ. ການເກັບນີ້ແມ່ນເພື່ອເປັນຄ່າຕອບແທນໃຫ້ແກ່ຜູ້ທີ່ມາທຳການໄກ່ເກ່ຍ ຫຼື ຕັດສິນ ທີ່ໄດ້ເຄື່ອນໄຫວເປັນຜູ້ໄກ່ເກ່ຍ ຫຼື ເປັນກຳມະການຕັດສິນ ໃນການແກ້ໄຂຂໍ້ຂັດແຍ່ງທີ່ຄູ່ກໍລະນີໄດ້ເລືອກມານັ້ນ.

### 1.2 ຄວາມສຳຄັນ

ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຄວາມສຳຄັນຫຼາຍ ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ສາມາດອຳນວຍຄວາມສະດວກໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງຄູ່ກໍລະນີເອງ. ສະນັ້ນ, ຄູ່ກໍລະນີ ຕ້ອງມອບເຂົ້າງົບປະມານແຫ່ງລັດ ຫຼື ນຳມາວາງໄວ້ ຢູ່ ສກສ ຫຼື ຫກສ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ.

### 1.3 ຈຸດປະສົງ

ການເກັບຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດມີຈຸດປະສົງ ດັ່ງນີ້:

- ປະກອບສ່ວນສ້າງລາຍຮັບທາງດ້ານວິຊາການ ໃຫ້ແກ່ງົບປະມານແຫ່ງລັດ;
- ອຳນວຍຄວາມສະດວກໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຕອບແທນຄ່າແຮງງານໃຫ້ຜູ້ໄກ່ເກ່ຍ, ຄະນະກຳມະການຕັດສິນ ແລະ ຜູ້ຊ່ຽວຊານ ທີ່ດຳເນີນການແກ້ໄຂຂໍ້ຂັດແຍ່ງໃຫ້ຄູ່ກໍລະນີ.

## 2. ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າແຮງງານ[49].

---

[48] ລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍການເກັບຄ່າທຳນຽມ ແລະ ຄ່າບໍລິການ, ເລກທີ 003/ປປທ 26 ທັນວາ 2012

[49] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 53

### 2.1 ຄ່າທຳນຽມ

#### 2.1.1 ຄວາມໝາຍ

ຄ່າທຳນຽມໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນພັນທະຂອງຄູ່ກໍລະນີທີ່ຕ້ອງໄດ້ມອບເຂົ້າງົບປະມານແຫ່ງລັດ[50].

#### 2.1.2 ລະບຽບການເກັບ

ການເກັບຄ່າທຳນຽມໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນປະຕິບັດຕາມລະບຽບການເກັບຄ່າທຳນຽມ ທີ່ປະກາດໃຊ້ໃນແຕ່ລະ ລະຍະ ຊຶ່ງໃນປັດຈຸບັນ ແມ່ນໄດ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ວ່າດ້ວຍການເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມມູນຄ່າຂອງຂໍ້ຂັດແຍ່ງ ດັ່ງລຸ່ມນີ້[51].

| ລ/ດ | ເນື້ອໃນ | ກີບ/ຂໍ້ຂັດແຍ່ງ |
|---|---|---|
| 1 | ມູນຄ່າແຕ່ 50.000.000 ກີບລົງມາ | 200.000 |
| 2 | ຫຼາຍກວ່າ 50.000.000 - 100.000.000 ກີບ | 300.000 |
| 3 | ຫຼາຍກວ່າ 100.000.000 - 500.000.000 ກີບ | 500.000 |
| 4 | ຫຼາຍກວ່າ 500.000.000 - 1.000.000.000 ກີບ | 1.000.000 |
| 5 | ຫຼາຍກວ່າ 1.000.000.000 ກີບຂຶ້ນໄປ | 2.000.000 |

#### 2.1.3 ຄວາມຮັບຜິດຊອບໃນການເກັບ ແລະ ຈ່າຍຄ່າທຳນຽມ

ຄ່າທຳນຽມໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນ ສກສ ຫຼື ຫກສ ເປັນຜູ້ເກັບເອງໃນເວລາທີ່ຄູ່ກໍລະນີມີການຕົກລົງໃຫ້ ສກສ ຫຼື ຫກສ ແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ ໝາຍຄວາມວ່າ ຫຼັງຈາກຄູ່ກໍລະນີຕົກ ລົງກັນວ່າຈະນຳເອົາຂໍ້ຂັດແຍ່ງດັ່ງກ່າວນັ້ນ ມາແກ້ໄຂຢູ່ ສກສ ຫຼື ຫກສ ໂດຍມີຄຳຮ້ອງ ແລະ ຄຳແກ້ຄຳຮ້ອງຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ. ການເກັບຄ່າທຳນຽມຂອງການໄກ່ເກ່ຍ ແລະ ການຕັດສິນນັ້ນ ຕ້ອງມີການບັນທຶກ ແລະ ໃບຮັບເງິນ (ເອກະສານຊ້ອນທ້າຍ 2) ພ້ອມທັງລົງລາຍເຊັນຜູ້ຮັບ-ຜູ້ຈ່າຍໄວ້ຄັກແນ່ ເພື່ອເປັນການລາຍງານ, ການຄຸ້ມຄອງ ແລະ ກວດກາ ໃຫ້ຖືກຕ້ອງຄົບຖ້ວນ ແລ້ວມອບເຂົ້າງົບປະມານແຫ່ງລັດ.

ຄູ່ກໍລະນີເປັນຜູ້ຮັບຜິດຊອບຈ່າຍຄ່າທຳນຽມ ຫຼື ຄູ່ກໍລະນີທັງສອງຝ່າຍ ສາມາດຕົກລົງກັນຈ່າຍຜູ້ລະເຄິ່ງກ່ອນການດຳເນີນການແກ້ໄຂຂໍ້ຂັດແຍ່ງ[52] ຕາມມູນຄ່າຂອງຂໍ້ຂັດແຍ່ງທີ່ສະເໜີໃຫ້ ສກສ ຫຼື ຫກສ ແກ້ໄຂ ສຳລັບກໍລະນີການແກ້ໄຂດ້ວຍການໄກ່ເກ່ຍ, ສ່ວນກໍລະນີທີ່ຄູ່ກໍລະນີເລືອກນຳໃຊ້ຮູບການຕັດສິນ ໂດຍທົ່ວໄປແລ້ວ ແມ່ນຄູ່ກໍລະນີຝ່າຍທີ່ຍື່ນຄຳຮ້ອງ ຈະເປັນຜູ້ຈ່າຍຄ່າທຳນຽມກ່ອນ ຕາມຈຳນວນທີ່ໄດ້ກຳນົດໄວ້ຕາມລະບຽບການ ຫຼັງຈາກມີຜົນການຕັດສິນຂອງຄະນະກຳມະການຕັດສິນ ແມ່ນໃຫ້ປະຕິບັດຕາມຄວາມຮັບຜິດຊອບໃນການຈ່າຍຄ່າທຳນຽມ ທີ່ໄດ້ລະບຸໄວ້ຕາມຄຳຕັດສິນຂອງຄະນະກຳມະການຕັດສິນ[53].

---

[50] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 54 ວັກ 1

[51] ລັດຖະບັນຍັດຂອງປະທານປະເທດວ່າດ້ວຍການເກັບຄ່າທຳນຽມ ແລະ ຄ່າບໍລິການ (ສະບັບ ປີ 2012) ມາດຕາ 88

[52] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 54 ວັກ 3

[53] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 54 ວັກ 4

### 2.2 ຄ່າບໍລິການ

#### 2.2.1 ຄວາມໝາຍ

ຄ່າບໍລິການໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນຄ່າໃຊ້ຈ່າຍທີ່ຄູ່ກໍລະນີຝ່າຍຮ້ອງຂໍ ຕ້ອງໄດ້ນຳມາວາງໄວ້ຢູ່ ສກສ ຫຼື ຫສກ ໃນເວລາຍື່ນຄຳຮ້ອງ ເພື່ອໃຊ້ຈ່າຍເຂົ້າໃນການໄກ່ເກ່ຍຂອງຜູ້ໄກ່ເກ່ຍ ຫຼື ການຕັດສິນຂອງຄະນະກຳມະການຕັດສິນ ເຊັ່ນ ສົ່ງໜາຍເຊີນ, ສຳເນົາເອກະສານ, ຈັດປະຊຸມ ແລະ ອື່ນໆ[54].

#### 2.2.2 ລະບຽບການເກັບ

ຄ່າບໍລິການໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທັງດ້ວຍວິທີການໄກ່ເກ່ຍ ຫຼື ດ້ວຍການຕັດສິນແມ່ນເກັບຕາມລະບຽບການກ່ຽວກັບຄ່າບໍລິການທີ່ປະກາດໃຊ້ໃນແຕ່ລະ ລະຍະ, ສ່ວນອັດຕາຄ່າບໍລິການໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃນປັດຈຸບັນ ເກັບໃນອັດຕາ 150.000 ກີບ ຕໍ່ 1 ຂໍ້ຂັດແຍ່ງ[55].

ໃນກໍລະນີມີການໃຊ້ຈ່າຍຕົວຈິງທີ່ເກີນຄ່າບໍລິການ ທີ່ໄດ້ເກັບຕາມອັດຕາທີ່ລະບຽບການກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການທີ່ໄດ້ປະກາດໃຊ້ແຕ່ລະ ລະຍະ ທີ່ໄດ້ກຳນົດໄວ້ນັ້ນ ສກສ ຫຼື ຫກສ ຕ້ອງໄດ້ແຈ້ງໃຫ້ຝ່າຍຮ້ອງຂໍຊາບ ເພື່ອຮັບຜິດຊອບຄ່າໃຊ້ຈ່າຍທີ່ເກີນນັ້ນ.

#### 2.2.3 ຄວາມຮັບຜິດຊອບໃນການເກັບ ແລະ ຈ່າຍຄ່າບໍລິການ

ການເກັບຄ່າບໍລິການໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນຄວາມຮັບຜິດຊອບຂອງ ສກສ ຫຼື ຫກສ ເປັນຜູ້ເກັບນຳຄູ່ກໍລະນີຝ່າຍທີ່ຮ້ອງຂໍໃນເວລາທີ່ມາຍື່ນຄຳຮ້ອງຢູ່ ສກສ ຫຼື ຫກສ[56]. ຫຼັງຈາກນັ້ນກໍມີການບັນທຶກ ແລະ ອອກໃບຮັບເງິນ (ເອກະສານຊ້ອນທ້າຍ 2) ພ້ອມທັງລົງລາຍເຊັນ ຜູ້ຮັບ-ຜູ້ຈ່າຍ ເພື່ອເປັນຫຼັກຖານທີ່ນຳໃຊ້ເຂົ້າໃນການລາຍງານ, ການຄຸ້ມຄອງ ແລະ ກວດກາໃຫ້ຖືກຕ້ອງຄົບຖ້ວນ.

ຄ່າບໍລິການໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດແມ່ນ ຜູ້ຮ້ອງຂໍ ຈ່າຍກ່ອນໃນເວລາຍື່ນຄຳຮ້ອງ. ພາຍຫຼັງຄະນະກຳມະການຕັດສິນໄດ້ມີຄຳຕັດສິນອອກມາແລ້ວ ການຈ່າຍຄ່າບໍລິການ ແມ່ນໃຫ້ປະຕິບັດຕາມຄຳຕັດສິນ, ສ່ວນການໄກ່ເກ່ຍ ແມ່ນອີງຕາມຜົນຂອງການໄກ່ເກ່ຍ.

### 2.3 ຄ່າແຮງງານ

#### 2.3.1 ຄວາມໝາຍ

ຄ່າແຮງງານໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນຄ່າຕອບແທນໃຫ້ແກ່ຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ, ຜູ້ຊ່ຽວຊານ ແລະ ຄ່າໃຊ້ຈ່າຍອື່ນໆ ເປັນຕົ້ນ ຄ່າແຮງງານຂອງ ຜູ້ແປພາສາ ແລະ ພະຍານ ຕາມການຕົກລົງຂອງຄູ່ກໍລະນີ ໂດຍນຳມາວາງໄວ້ຢູ່ ສກສ ຫຼື ຫກສ ເພື່ອຈ່າຍໃຫ້ບຸກຄົນດັ່ງກ່າວ ພາຍຫຼັງແກ້ໄຂຂໍ້ຂັດແຍ່ງສຳເລັດ.

#### 2.3.2 ລະບຽບການເກັບ

ການເກັບຄ່າແຮງງານໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບໍ່ໄດ້ມີການກຳນົດໄວ້ໃນກົດໝາຍ ຫຼື ລະບຽບການສະເພາະ ແຕ່ການກຳນົດຄ່າແຮງງານດັ່ງກ່າວ ແມ່ນຄູ່ກໍລະນີເປັນຜູ້ຕົກລົງກັບຜູ້ໄກ່ເກ່ຍ, ກຳມະການຕັດສິນ ຫຼື ຜູ້ຊ່ຽວຊານ ແລ້ວແຈ້ງໃຫ້ ສກສ ຫຼື ຫກສ ບ່ອນດຳເນີນການແກ້ໄຂຂໍ້ຂັດແຍ່ງນັ້ນ ຊາບ[57].

ການເກັບຄ່າແຮງງານໃນພາກປະຕິບັດຕົວຈິງແລ້ວ ແມ່ນປະຕິບັດ ດັ່ງນີ້:

---

[54] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 55 ວັກ 1

[55] ລັດຖະບັນຍັດຂອງປະທານປະເທດວ່າດ້ວຍການເກັບຄ່າທຳນຽມ ແລະ ຄ່າບໍລິການ (ສະບັບ ປີ 2012) ມາດຕາ 92

[56] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 55 ວັກ 2

[57] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 56 ວັກ 2

- ໃນກໍລະນີເລືອກຜູ້ໄກ່ເກ່ຍ ໜຶ່ງ ຄົນ, ຄູ່ກໍລະນີຕົກລົງກັບຜູ້ໄກ່ເກ່ຍ ກ່ຽວກັບຄ່າແຮງງານແລ້ວແຈ້ງໃຫ້ ສກສ ຫຼື ຫກສ ບ່ອນແກ້ໄຂຂໍ້ຂັດແຍ່ງຊາບ ຫຼັງຈາກນັ້ນ ຄູ່ກໍລະນີຕ້ອງຕົກລົງກັນຈ່າຍ ຫຼື ຈ່າຍຝ່າຍລະເຄິ່ງ ແລະ ໄດ້ນຳເງິນທີ່ໄດ້ຕົກລົງກັນຈ່າຍນັ້ນໄປວາງໄວ້ນຳ ສກສ ຫຼື ຫກສ ເກັບຮັກສາໄວ້ ຫຼັງຈາກທີ່ໄດ້ສຳເລັດການໄກ່ເກ່ຍແລ້ວ ຜູ້ໄກ່ເກ່ຍ ຈຶ່ງຈະໄດ້ຮັບເງິນດັ່ງກ່າວ;

- ໃນກໍລະນີເລືອກເອົາຜູ້ໄກ່ເກ່ຍ ຫຼື ຄະນະກຳມະການ ສາມ ຄົນ, ຄູ່ກໍລະນີແຕ່ລະຝ່າຍ ເປັນຜູ້ຕົກລົງຄ່າແຮງງານກັບຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນ ທີ່ຕົນເອງໄດ້ເລືອກ (ໝາຍຄວາມວ່າ ຕ່າງຝ່າຍຕ່າງຮັບຜິດຊອບຕໍ່ບຸກຄົນທີ່ຕົນເລືອກ) ເພື່ອໃຫ້ມາແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕົນ ແລະ ໃຫ້ຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນທີ່ຄູ່ກໍລະນີໄດ້ເລືອກໄວ້ນັ້ນ ແຕ່ລະຝ່າຍຈະຕົກລົງກ່ຽວກັບຄ່າແຮງງານກັບຄະນະກຳມະການຜູ້ທີ່ສາມ ຫຼື ປະທານໄກ່ເກ່ຍ ຫຼື ຕັດສິນນັ້ນອີກຕ່າງຫາກ ແລະ ສກສ ຫຼື ຫກສ ຈະເກັບຮັກສາເງິນທີ່ໄດ້ຕົກລົງຈ່າຍກັນນັ້ນ ພ້ອມທັງຫັກ 10% ຂອງຄ່າແຮງງານນັ້ນ ແລະ ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການຕັດສິນ ຈະໄດ້ຮັບຄ່າແຮງງານ ກໍຕໍ່ເມື່ອໄດ້ສຳເລັດການໄກ່ເກ່ຍ ຫຼື ການຕັດສິນແລ້ວ ເທົ່ານັ້ນ.

### 2.3.3 ຄວາມຮັບຜິດຊອບໃນການເກັບ ແລະ ຈ່າຍຄ່າແຮງງານ

ສກສ ຫຼື ຫກສ ບ່ອນດຳເນີນການແກ້ໄຂຂໍ້ຂັດແຍ່ງ ເປັນຜູ້ຮັບຜິດຊອບເກັບຄ່າແຮງງານ ພາຍໃນກຳນົດ ສິບຫ້າວັນ ພາຍຫຼັງທີ່ມີການແຕ່ງຕັ້ງຜູ້ໄກ່ເກ່ຍ, ຄະນະກຳມະການຕັດສິນ ຫຼື ຜູ້ຊ່ຽວຊານ. ຈາກນັ້ນ ສກສ ຫຼື ຫກສ ກໍຈະອອກເອກະສານຢັ້ງຢືນດ້ວຍການອອກໃບຮັບເງິນ (ເອກະສານຊ້ອນທ້າຍ 2) ໃຫ້ຄູ່ກໍລະນີ ແລະ ເມື່ອການໄກ່ເກ່ຍ ຫຼື ຕັດສິນສຳເລັດແລ້ວ ສກສ ຫຼື ຫກສ ຈຶ່ງຈະມອບຄ່າແຮງງານດັ່ງກ່າວ ໃຫ້ຜູ້ໄກ່ເກ່ຍ, ກຳມະການຕັດສິນ ຫຼື ຜູ້ຊ່ຽວຊານ ດ້ວຍການອອກໃບມອບເງິນ (ເອກະສານຊ້ອນທ້າຍ 3).

ຄູ່ກໍລະນີຕ້ອງຮັບຜິດຊອບຈ່າຍຄ່າແຮງງານຕາມການຕົກລົງ ໃຫ້ຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນເອງ ແລະ ນຳເອົາຄ່າແຮງງານດັ່ງກ່າວ ໄປມອບໃຫ້ ສກສ ຫຼື ຫກສ ບ່ອນແກ້ໄຂຂໍ້ຂັດແຍ່ງນັ້ນໄວ້ກ່ອນການດຳເນີນການແກ້ໄຂຂໍ້ຂັດແຍ່ງ ພາຍໃນກຳນົດ ສິບຫ້າວັນ ຫຼື ພາຍຫຼັງທີ່ມີການແຕ່ງຕັ້ງ ເພື່ອເປັນການຮັບປະກັນໃນການຈ່າຍຄ່າແຮງງານດັ່ງກ່າວ.

**ຕາຕະລາງກ່ຽວກັບຄ່າໃຊ້ຈ່າຍໃນການດຳເນີນການໄກ່ເກ່ຍ ແລະ ການຕັດສິນ**

| ລ/ດ | ການຈ່າຍ | ປະກອບຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ | | | | | |
|---|---|---|---|---|---|---|---|
| | | ຄ່າທຳນຽມ | | ຄ່າບໍລິການ | | ຄ່າແຮງງານ | |
| | | ການໄກ່ເກ່ຍ | ການຕັດສິນ | ການໄກ່ເກ່ຍ | ການຕັດສິນ | ການໄກ່ເກ່ຍ | ການຕັດສິນ |
| 1 | ຜູ້ຈ່າຍ | ຜູ້ຍື່ນຄຳຮ້ອງ | ຜູ້ຍື່ນຄຳຮ້ອງ | ຜູ້ຍື່ນຄຳຮ້ອງ | ຜູ້ຍື່ນຄຳຮ້ອງ | ຕາມການຕົກລົງກັນ ຫຼື ຝ່າຍລະເຄິ່ງ | ຄູ່ກໍລະນີແຕ່ລະຝ່າຍຕົກລົງກັບກຳມະການທີ່ຕົນເອງເລືອກ |
| 2 | ເວລາ | ກ່ອນການດຳເນີນ | ກ່ອນການດຳເນີນ | ເວລາຍື່ນຄຳຮ້ອງ | ເວລາຍື່ນຄຳຮ້ອງ | ກ່ອນການດຳເນີນການໄກ່ເກ່ຍ 15 ວັນ ພາຍ ຫຼັງ ແຕ່ງຕັ້ງ | ກ່ອນການດຳເນີນການຕັດສິນ 15 ວັນພາຍຫຼັງແຕ່ງ ຕັ້ງ |
| 3 | ສະຖານທີ່ | ຢູ່ ສກສ ຫຼື ຫກສ ບ່ອນແກ້ໄຂຂໍ້ຂັດແຍ່ງ | ຢູ່ ສກສ ຫຼື ຫກສ ບ່ອນແກ້ໄຂຂໍ້ຂັດແຍ່ງ | ຢູ່ ສກສ ຫຼື ຫກສ ບ່ອນແກ້ໄຂຂໍ້ຂັດແຍ່ງ | ຢູ່ ສກສ ຫຼື ຫກສ ບ່ອນແກ້ໄຂຂໍ້ຂັດແຍ່ງ | ຢູ່ ສກສ ຫຼື ຫກສ ບ່ອນແກ້ໄຂຂໍ້ຂັດແຍ່ງ | ຢູ່ ສກສ ຫຼື ຫກສ ບ່ອນແກ້ໄຂຂໍ້ຂັດແຍ່ງ |

| | | | | | | | |
|---|---|---|---|---|---|---|---|
| 4 | ມູນຄ່າ | ຕາມອັດຕາສ່ວນ ທີ່ກຳນົດໄວ້ໃນລະບຽບການ | ຕາມອັດຕາສ່ວນທີ່ກຳນົດໄວ້ໃນລະບຽບການ | 150.000 ກີບ | 150.000 ກີບ | ຕາມການຕົກລົງກັນຂອງຄູ່ກໍລະນີ ແລະ ຜູ້ໄກ່ເກ່ຍ | ຕາມການຕົກລົງກັນຂອງຄູ່ກໍລະນີ ແລະ ກຳມະການຕັດສິນ |
| 5 | ຜູ້ຮັບຜິດຊອບ | ຈ່າຍຝ່າຍລະເຄິ່ງ ຫຼື ຕາມຜົນການໄກ່ເກ່ຍ | ຕາມຄຳຕັດສິນ | ຕາມການຕົກລົງ | ຕາມຄຳຕັດສິນ | ແຕ່ລະຝ່າຍຮັບຜິດຊອບເອງ | ແຕ່ລະຝ່າຍຮັບຜິດຊອບເອງ |
| 6 | ຂໍ້ມູນອ້າງອີງ | ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາດຕາ 54 ແລະ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 003/ປປທ ລົງວັນທີ 26/12/2012 ມາດຕາ 92 | ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາດຕາ 54 ແລະ ລັດຖະບັນຍັດຂອງປະທານປະເທດ ສະບັບ ເລກທີ 003/ປປທ ລົງວັນທີ 26/12/2012 ມາດຕາ 92 | ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາດຕາ 55 ແລະ ລັດຖະບັນຍັດຂອງປະທານປະເທດສະບັບເລກທີ 003/ປປທ ລົງວັນທີ 26/12/2012 ມາດຕາ 92 | ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາດຕາ 55 ແລະ ລັດຖະບັນຍັດຂອງປະທານປະເທດ ສະບັບ ເລກທີ 003/ປປທ ລົງວັນທີ 26/12/2012 ມາດຕາ 92 | ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາດຕາ 56 | ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາດຕາ 56 |

ໝາຍເຫດ: ສຳລັບ ກໍລະນີທີ່ມີການຕົກລົງກັນມາກ່ອນ ກໍໃຫ້ປະຕິບັດຕາມການຕົກລົງກັນ ຊຶ່ງອາດຈະບໍ່ເປັນໄປຕາມຕາຕະລາງໃນ ຂໍ້ 1 ແລະ ຂໍ້ 5.

## 3. ການຄຸ້ມຄອງ ແລະ ກວດກາຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### 3.1 ການຄຸ້ມຄອງ

ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າແຮງງານ ມີການຄຸ້ມຄອງທີ່ແຕກຕ່າງກັນ ເຊັ່ນ ຄ່າທຳນຽມ ຢູ່ ສກສ ແມ່ນຫ້ອງການກະຊວງຍຸຕິທຳ ເປັນຜູ້ຄຸ້ມຄອງຕາມລະບຽບການ ໝາຍຄວາມວ່າການຈ່າຍຄ່າທຳນຽມນັ້ນ ໃຫ້ຜູ້ຮ້ອງຂໍ ໄປຈ່າຍຢູ່ຫ້ອງການກະຊວງ ຕາມລະບົບປະຕູດຽວ, ແຕ່ໃນພາກປະຕິບັດຕົວຈິງພົບຄວາມຫຍຸ້ງຍາກເພາະຜູ້ຮ້ອງຂໍ ບໍ່ຢາກໄປຈ່າຍຢູ່ຫ້ອງການກະຊວງ. ສະນັ້ນ, ຫ້ອງການກະຊວງ ຈຶ່ງໄດ້ເອົາໃບບິນເກັບເງິນມອບໃຫ້ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນຜູ້ເກັບ ແລະ ຄຸ້ມຄອງໄວ້ ແລ້ວຈຶ່ງໄປຖອກໃຫ້ຫ້ອງການກະຊວງໃນແຕ່ລະເດືອນ, ສ່ວນ ຢູ່ ຫກສ ແມ່ນພະແນກຍຸຕິທຳບ່ອນ ຫກສ ຂຶ້ນກັບນັ້ນ ເປັນຜູ້ຄຸ້ມຄອງຕາມລະບຽບການ.

ສຳລັບຄ່າບໍລິການ ແລະ ຄ່າແຮງງານ ແມ່ນ ສກສ ຫຼື ຫກສ ເປັນຜູ້ຄຸ້ມຄອງ, ເກັບຮັກສາ ແລະ ນຳໃຊ້ຕາມລະບຽບການ ໝາຍຄວາມວ່າ ພາຍຫຼັງເກັບຄ່າບໍລິການ ແລະ ຄ່າແຮງງານແລ້ວ ສກສ ຫຼື ຫກສ ເປັນຜູ້ຄຸ້ມຄອງ ແລະ

ນຳໃຊ້ ເຊັ່ນ ຄ່າໃຊ້ຈ່າຍເຂົ້າໃນການສົ່ງໝາຍເຊີນ, ສຳເນົາເອກະສານ, ຈັດກອງປະຊຸມ[58]. ຄ່າແຮງງານໃຫ້ຜູ້ໄກ່ເກ່ຍ, ຄະນະກຳມະການຕັດສິນ, ຜູ້ຊ່ຽວຊານ ແລະ ຄ່າໃຊ້ຈ່າຍອື່ນໆ ແມ່ນ ສກສ ຫຼື ຫກສ ຈະເປັນຜູ້ຈ່າຍໃຫ້ ພາຍຫຼັງທີ່ປະຕິບັດໜ້າທີ່ສຳເລັດ.

### 3.2 ການກວດກາ

ການກວດກາການເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າແຮງງານ ປະກອບມີ ສາມ ຮູບການ ຄື: ການກວດກາຕາມປົກກະຕິ, ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແລະ ການກວດກາແບບກະທັນຫັນ.

ການກວດກາຕາມປົກກະຕິ ແມ່ນການດຳເນີນການກວດກາຢ່າງມີແຜນການທີ່ມີກຳນົດເວລາທີ່ແນ່ນອນ ຊຶ່ງອາດຈະເປັນແຜນປະຈຳເດືອນ, ສາມເດືອນ, ຫົກເດືອນ ແລະ ຕ້ອງດຳເນີນການກວດກາຕາມແຜນການດັ່ງກ່າວ ຫຼື ຢ່າງໜ້ອຍຕ້ອງດຳເນີນການກວດກາ ໜຶ່ງ ຄັ້ງຕໍ່ປີ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດກາໂດຍບໍ່ມີແຜນການຕາມປົກກະຕິ ແຕ່ກ່ອນຈະດຳເນີນການໄດ້ນັ້ນ ຕ້ອງໄດ້ແຈ້ງໃຫ້ ສກສ ຫຼື ຫກສ ຮັບຊາບກ່ອນ ຊາວສີ່ ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນການກວດກາແບບບໍ່ມີແຜນການ ແລະ ບໍ່ໄດ້ແຈ້ງໃຫ້ຮູ້ລ່ວງໜ້າກ່ອນ ແຕ່ແມ່ນການກວດກາທີ່ດຳເນີນການຢ່າງຮີບດ່ວນ ເມື່ອເຫັນວ່າມີຄວາມຈຳເປັນ[59].

---

[58] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 55 ວັກ 1

[59] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 65

# ບົດທີ 4
# ການຍື່ນຄຳຮ້ອງ, ການພິຈາລະນາ ແລະ ການເລືອກຮູບການ

## 1. ຄວາມຮູ້ກ່ຽວກັບຄຳຮ້ອງ

### 1.1 ຄວາມໝາຍ

ຄຳຮ້ອງຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນເອກະສານຂອງບຸກຄົນ ຫຼື ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີເຈດຈຳນົງໃຫ້ ສກສ ຫຼື ຫກສ ດຳເນີນການແກ້ໄຂຂໍ້ພິພາດທາງດ້ານຜົນປະໂຫຍດທີ່ເກີດຂຶ້ນຈາກການລະເມີດສັນຍາ, ການດຳເນີນການຜະລິດ-ທຸລະກິດ ດ້ວຍການໄກ່ເກ່ຍ ຫຼື ການຕັດສີນ ບົນພື້ນຖານການຕົກລົງກັນຂອງຄູ່ກໍລະນີ[60].

### 1.2 ຄວາມສຳຄັນ

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄຳຮ້ອງ ແມ່ນເອກະສານທີ່ມີຄວາມສຳຄັນຫຼາຍ ເນື່ອງຈາກວ່າຄຳຮ້ອງ ແມ່ນເອກະສານທີ່ສະແດງເຈດຈຳນົງຂອງຄູ່ກໍລະນີທີ່ສະໝັກໃຈນຳເອົາຂໍ້ຂັດທາງດ້ານເສດຖະກິດທີ່ເກີດຂຶ້ນນັ້ນມາແກ້ໄຂຢູ່ ສກສ ຫຼື ຫກສ ຊຶ່ງຖືວ່າເປັນຈຸດເລີ່ມຕົ້ນທາງດ້ານກົດໝາຍທີ່ສຳຄັນ ໃນຂະບວນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ສຳລັບຄູ່ກໍລະນີ ຄຳຮ້ອງຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນເອກະສານທີ່ສະແດງເຖິງການປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ, ຖ້າບໍ່ມີຄຳຮ້ອງຂໍແກ້ໄຂ ສກສ ຫຼື ຫກສ ຈະບໍ່ສາມາດນຳເອົາຂໍ້ຂັດແຍ່ງດັ່ງກ່າວມາພິຈາລະນາແກ້ໄຂໄດ້.

ສຳລັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄຳຮ້ອງ ແມ່ນເອກະສານພື້ນຖານ ທີ່ນຳໄປສູ່ການພິຈາລະນາກ່ຽວກັບການແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍ ຫຼື ການຕັດສີນ ແລະ ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການຕັດສີນກໍຈະພິຈາລະນາແກ້ໄຂແຕ່ບັນຫາທີ່ໄດ້ກຳນົດໄວ້ໃນຄຳຮ້ອງເທົ່ານັ້ນ.

### 1.3 ຈຸດປະສົງ

ຈຸດປະສົງຂອງຄຳຮ້ອງຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນການສະແດງເຈດຈຳນົງຂອງຄູ່ກໍລະນີ ເພື່ອໃຫ້ ສກສ ຫຼື ຫກສ ພິຈາລະນາແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ ໂດຍສັນຕິວິທີ, ເປັນທຳ ແລະ ວ່ອງໄວ ຕາມກົດໝາຍ ແລະ ລະບຽບການ.

### 1.4 ເນື້ອໃນ

ເນື້ອໃນຂອງຄຳຮ້ອງ ແມ່ນໃຫ້ ຄູ່ກໍລະນີ ຂຽນຕາມແບບພິມຄຳຮ້ອງສະເພາະ (ເອກະສານຊ້ອນທ້າຍ 4) ຂອງ ສກສ ຫຼື ຫກສ ຫຼື ຄູ່ກໍລະນີສາມາດຂຽນຄຳຮ້ອງດ້ວຍຕົນເອງ.

ໂດຍພື້ນຖານແລ້ວ ເນື້ອໃນຄຳຮ້ອງ ຕ້ອງປະກອບດ້ວຍເນື້ອໃນຕົ້ນຕໍ ຕາມທີ່ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາດຕາ 19 ກຳນົດດັ່ງນີ້:

- ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດຈະການ ຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ;
- ບັນຫາທີ່ເກີດຂໍ້ຂັດແຍ່ງ;
- ມູນຄ່າຂອງຂໍ້ຂັດແຍ່ງ;

---

[60] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 2

- ຂໍ້ສະເໜີຂອງຄູ່ກໍລະນີ[61].

ໃນພາກປະຕິບັດຕົວຈິງແລ້ວ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ກໍານົດແບບພິມຄໍາຮ້ອງ ສະເພາະສໍາລັບການຮ້ອງຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຊຶ່ງນອກຈາກເນື້ອໃນຕົ້ນຕໍເຫົ່ງນີ້ແລ້ວ ຍັງຕ້ອງມີເນື້ອໃນກ່ຽວກັບ ປະຫວັດ ແລະ ຄວາມເປັນມາ ຂອງການແກ້ໄຂຂໍ້ຂັດແຍ່ງ ໃນລະຍະຜ່ານມາ ແລະ ການເລືອກຮູບການແກ້ໄຂຂໍ້ຂັດແຍ່ງນໍາອີກ.

### 1.4.1 ຂໍ້ມູນທົ່ວໄປຂອງຄູ່ກໍລະນີ

ຂໍ້ມູນທົ່ວໄປຂອງຄູ່ກໍລະນີ ແມ່ນ ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດຈະການຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ ຊຶ່ງຄູ່ກໍລະນີຕ້ອງໄດ້ຂຽນລົງໃນຄໍາຮ້ອງ ເພື່ອໃຫ້ພະນັກງານທີ່ກ່ຽວຂ້ອງຂອງ ສກສ ຫຼື ຫກສ ສາມາດຕິດຕໍ່ພົວພັນ ແລະ ນໍາໃຊ້ເປັນຂໍ້ມູນໃນການປະກອບສໍານວນຄໍາຮ້ອງ, ສໍານວນຄໍາແກ້ຄໍາຮ້ອງ, ສໍານວນຂໍ້ຂັດແຍ່ງທາງດ້ານເສດຖະກິດ ພ້ອມທັງເປັນຂໍ້ມູນໃຫ້ແກ່ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງ.

### 1.4.2 ບັນຫາທີ່ເກີດຂໍ້ຂັດແຍ່ງ

ບັນຫາທີ່ເກີດຂໍ້ຂັດແຍ່ງ ແມ່ນເນື້ອໃນທີ່ຄູ່ກໍລະນີຂຽນອະທິບາຍຫຍໍ້ກ່ຽວກັບສາເຫດ ຫຼື ເຫດການທີ່ພາໃຫ້ມີຂໍ້ຂັດແຍ່ງທາງດ້ານເສດຖະກິດ ຊຶ່ງລວມທັງບັນຫາທີ່ເປັນຂໍ້ຂັດແຍ່ງກັນລະຫວ່າງຄູ່ກໍລະນີກ່ຽວກັບການປະຕິບັດສັນຍາ, ການດໍາເນີນການຜະລິດ-ທຸລະກິດ ລວມມີການຄ້າ, ການລົງທຶນ, ການບໍລິການ ແລະ ອື່ນໆ.

### 1.4.3 ມູນຄ່າຂອງຂໍ້ຂັດແຍ່ງ

ມູນຄ່າຂອງຂໍ້ຂັດແຍ່ງ ແມ່ນເນື້ອໃນທີ່ຄູ່ກໍລະນີຂຽນເປັນຈໍານວນເງິນ. ໃນກໍລະນີຄູ່ກໍລະນີ ຫາກບໍ່ເປັນເອກະພາບກັນ ກ່ຽວກັບມູນຄ່າຂອງຂໍ້ຂັດແຍ່ງແລ້ວ ຜູ້ໄກ່ເກ່ຍ ຫຼື ຄະນະກໍາມະການຕັດສິນ ແລະ ຄູ່ກໍລະນີ ທັງສອງຝ່າຍຕ້ອງໄດ້ຮ່ວມກັນປະເມີນມູນຄ່າຂໍ້ຂັດແຍ່ງດັ່ງກ່າວ ໃນເວລາດໍາເນີນການແກ້ໄຂຂໍ້ຂັດແຍ່ງ ດ້ວຍການໄກ່ເກ່ຍ ຫຼື ດ້ວຍການຕັດສິນ ຕາມແຕ່ລະກໍລະນີ.

### 1.4.4 ການແກ້ໄຂຂໍ້ຂັດແຍ່ງໃນລະຍະຜ່ານມາ

ການແກ້ໄຂຂໍ້ຂັດແຍ່ງໃນລະຍະຜ່ານມາ ແມ່ນສະພາບຕົວຈິງກ່ຽວກັບການແກ້ຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ໄດ້ດໍາເນີນ ໃນລະຍະກ່ອນການຍື່ນຄໍາຮ້ອງຂອງຄູ່ກໍລະນີ ຊຶ່ງຄູ່ກໍລະນີຝ່າຍຍື່ນຄໍາຮ້ອງ ຕ້ອງໄດ້ຂຽນໂດຍຫຍໍ້ກ່ຽວກັບວິທີການ, ຂັ້ນຕອນ ແລະ ອົງການທີ່ໄດ້ດໍາເນີນການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ເຂົ້າໃນເນື້ອໃນຂອງຄໍາຮ້ອງຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

### 1.4.5 ຂໍ້ສະເໜີຂອງຄູ່ກໍລະນີ

ຂໍ້ສະເໜີຂອງຄູ່ກໍລະນີ ແມ່ນເນື້ອໃນທີ່ຄູ່ກໍລະນີຂຽນກ່ຽວກັບຂອບເຂດ, ຂະບວນການ, ວິທີການ ທີ່ຕົນເຫັນວ່າ ເໝາະສົມສໍາລັບການດໍາເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ເກີດຂຶ້ນ ເພື່ອຮ້ອງຂໍໃຫ້ ສກສ ຫຼື ຫກສ ນໍາໃຊ້ເປັນພື້ນຖານໃນການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ເປັນຕົ້ນ ຂັ້ນຕອນ ແລະ ລັກສະນະຂອງການແກ້ໄຂຂໍ້ຂັດແຍ່ງ, ວິທີການໃຊ້ແທນໜີ້ສິນ, ການຄໍ້າປະກັນການໃຊ້ແທນໜີ້ສິນ ແລະ ບ່ອນດໍາເນີນການໃຊ້ແທນໜີ້ສິນ. ເວົ້າລວມແລ້ວ ຂໍ້ສະເໜີຂອງຄູ່ກໍລະນີ ແມ່ນບັນຫາຕ່າງໆທີ່ຕ້ອງການໃຫ້ ສກສ ຫຼື ຫກສ ພິຈາລະນາແກ້ໄຂໃຫ້.

---

[61] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 19

### 1.4.6 ວິທີເລືອກຮູບການແກ້ໄຂຂໍ້ຂັດແຍ່ງ

ຄູ່ກໍລະນີທີ່ຍື່ນຄໍາຮ້ອງຕໍ່ ສກສ ຫຼື ຫກສ ສາມາດເລືອກຮູບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ເກີດຂຶ້ນດ້ວຍການໄກ່ເກ່ຍ ຫຼື ການຕັດສິນ ໂດຍເລືອກໝາຍ ຫຼື ຂຽນຕາມແບບພິມຄໍາຮ້ອງຂອງ ສກສ ຫຼື ຫກສ ລວມທັງຮ່າງແບບພິມສໍາລັບການສະເໜີແຕ່ງຕັ້ງຜູ້ໄກ່ເກ່ຍ ຫຼື ກໍາມະການຕັດສິນ ຕາມແຕ່ລະກໍລະນີຂອງການເລືອກຮູບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ  ໃນເວລາຍື່ນຄໍາຮ້ອງ ແລະ ຄໍາແກ້ຄໍາຮ້ອງຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

## 2. ການຕົກລົງກັນຂອງຄູ່ກໍລະນີ

ການຕົກລົງກັນຂອງຄູ່ກໍລະນີ ແມ່ນການສະແດງເຈດຈໍານົງຂອງຄູ່ກໍລະນີ ດ້ວຍຄວາມສະໝັກໃຈ[62] ໂດຍບໍ່ມີການບັງຄັບນາບຂູ່ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງ ບໍ່ວ່າຈະໃນທາງກົງ ຫຼື ທາງອ້ອມ ເພື່ອນໍາເອົາຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ເກີດຂຶ້ນນັ້ນ ມາແກ້ໄຂ ຢູ່ ສກສ ຫຼື ຫກສ.

ການຕົກລົງກັນ ດ້ວຍຄວາມສະໝັກໃຈຂອງຄູ່ກໍລະນີ ສະແດງອອກໃນສອງກໍລະນີ ຄື: ການຕົກລົງກັນ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ ແລະ ການຕົກລົງກັນ ພາຍຫຼັງທີ່ມີຂໍ້ຂັດແຍ່ງທາງດ້ານເສດຖະກິດ.

### 2.1 ການຕົກລົງກັນ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ

ການຕົກລົງກັນ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ ແມ່ນການສະແດງເຈດຈໍານົງຂອງຄູ່ກໍລະນີ ທີ່ມີການຕົກລົງເປັນເອກະພາບກັນ ກ່ຽວກັບການນໍາເອົາຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ເກີດຂຶ້ນ ຊຶ່ງລວມທັງຮູບການແກ້ໄຂ ເພື່ອໄປດໍາເນີນການແກ້ໄຂ ຢູ່ ສກສ ຫຼື ຫກສ ໂດຍໄດ້ບົ່ງໄວ້ຢ່າງຈະແຈ້ງ ໃນສັນຍາກ່ຽວກັບການດໍາເນີນການຜະລິດ-ທຸລະກິດ, ການຄ້າ.

ໂດຍທົ່ວໄປແລ້ວ, ໃນການຕົກລົງກັນໄວ້ໃນສັນຍາກ່ຽວກັບການດໍາເນີນການຜະລິດ-ທຸລະກິດ, ການຄ້ານັ້ນ ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງບໍ່ສາມາດປ່ຽນແປງຮູບການແກ້ໄຂຂໍ້ຂັດແຍ່ງ ໃນເວລາຍື່ນຄໍາຮ້ອງໄດ້ ເວັ້ນເສຍແຕ່ຄູ່ກໍລະນີຫາກຕົກລົງເປັນເອກະພາບກັນກ່ຽວກັບການປ່ຽນຮູບການແກ້ໄຂຂໍ້ຂັດແຍ່ງ ໂດຍມີບົດບັນທຶກກ່ຽວກັບການຕົກລົງຕ່າງຫາກ.

### 2.2 ການຕົກລົງກັນ ພາຍຫຼັງທີ່ມີຂໍ້ຂັດແຍ່ງທາງດ້ານເສດຖະກິດ

ການຕົກລົງກັນພາຍຫຼັງທີ່ມີຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນການສະແດງເຈດຈໍານົງຂອງຄູ່ກໍລະນີກ່ຽວກັບການນໍາເອົາຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ເກີດຂຶ້ນຈາກການລະເມີດສັນຍາກ່ຽວກັບການຜະລິດ-ທຸລະກິດ, ການຄ້າໄປແກ້ໄຂຢູ່ ສກສ ຫຼື ຫກສ ບົນພື້ນຖານການຕົກລົງເປັນເອກະພາບກັນຂອງຄູ່ກໍລະນີ ເຖິງວ່າຄູ່ກໍລະນີ ບໍ່ໄດ້ບົ່ງໄວ້ໃນສັນຍາດັ່ງກ່າວກໍຕາມ. ການຕົກລົງກັນພາຍຫຼັງທີ່ມີຂໍ້ຂັດແຍ່ງເກີດຂຶ້ນ ສະແດງອອກໃນສອງລັກສະນະ ຄື: ການຕົກລົງກັນກ່ອນການຍື່ນຄໍາຮ້ອງ ແລະ ການຕົກລົງກັນໃນເວລາຍື່ນຄໍາຮ້ອງ.

#### 2.2.1 ການຕົກລົງກັນກ່ອນການຍື່ນຄໍາຮ້ອງ

ການຕົກລົງກັນກ່ອນການຍື່ນຄໍາຮ້ອງ ແມ່ນການຕົກລົງກັນຂອງຄູ່ກໍລະນີ ດ້ວຍຄວາມສະໝັກໃຈ ນໍາເອົາຂໍ້ຂັດແຍ່ງທີ່ເກີດຂຶ້ນນັ້ນໄປແກ້ໄຂຢູ່ ສກສ ຫຼື ຫກສ ພາຍຫຼັງທີ່ມີຂໍ້ຂັດແຍ່ງເກີດຂຶ້ນ ໂດຍມີບົດບັນທຶກກ່ຽວກັບການຕົກລົງດັ່ງກ່າວຄັດຕິດໄປນໍາໃນເວລາຍື່ນຄໍາຮ້ອງ.

---

[62]ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 8 ຂໍ້ 2 ແລະ ມາດຕາ 10

ໃນການຕົກລົງກັນກ່ອນການຍື່ນຄຳຮ້ອງນັ້ນ ຄູ່ກໍລະນີຍັງສາມາດຕົກລົງເປັນເອກະພາບກັນກ່ຽວກັບ ຮູບການໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ເກີດຂຶ້ນ ດ້ວຍການໄກ່ເກ່ຍ ຫຼື ການຕັດສິນ.

### 2.2.2 ການຕົກລົງກັນໃນເວລາຍື່ນຄຳຮ້ອງ

ການຕົກລົງກັນໃນເວລາຍື່ນຄຳຮ້ອງ ແມ່ນການຕົກລົງກັນຂອງຄູ່ກໍລະນີ ດ້ວຍຄວາມສະໝັກໃຈ ເພື່ອນຳເອົາຂໍ້ຂັດແຍ່ງທີ່ເກີດຂຶ້ນນັ້ນໄປແກ້ໄຂຢູ່ ສກສ ຫຼື ຫກສ ຫຼັງຈາກມີຂໍ້ຂັດແຍ່ງເກີດຂຶ້ນ ຊຶ່ງສະແດງອອກດ້ວຍການຍື່ນຄຳຮ້ອງຂອງຝ່າຍຮ້ອງຂໍ, ການຮັບຊາບຄຳຮ້ອງຂອງຝ່າຍຖືກຮ້ອງຂໍ ແລະ ການຍື່ນຄຳແກ້ຄຳຮ້ອງ ຫຼື ຄຳຮ້ອງແຍ່ງຂອງຝ່າຍຮ້ອງຂໍ ທີ່ເຫັນດີໃຫ້ ສກສ ຫຼື ຫກສ ພິຈາລະນາແກ້ໄຂໃຫ້, ພ້ອມທັງຄູ່ກໍລະນີທັງສອງຝ່າຍໄດ້ບົ່ງຮູບການແກ້ໄຂໃນຄຳຮ້ອງ ແລະ ຄຳແກ້ຄຳຮ້ອງທີ່ເປັນເອກະພາບກັນ ເຊັ່ນ ການໄກ່ເກ່ຍ ຫຼື ການຕັດສິນ.

ການຕົກລົງກັນໃນເວລາຍື່ນຄຳຮ້ອງ ຍັງສະແດງອອກດ້ວຍການຕົກລົງກັນຂອງຄູ່ກໍລະນີໃນແບບພິມສະເພາະທີ່ ສກສ ຫຼື ຫກສ ໄດ້ກະກຽມໄວ້ໃຫ້ ຊຶ່ງເອີ້ນວ່າ “ຄຳຕົກລົງຂອງຄູ່ກໍລະນີ” ໃນກໍລະນີທີ່ຄູ່ກໍລະນີທັງສອງຝ່າຍ ຫາກເລືອກຮູບການແກ້ໄຂໃນຄຳຮ້ອງ ແລະ ຄຳແກ້ຄຳຮ້ອງ ຫຼື ຄຳຮ້ອງແຍ່ງ ບໍ່ເປັນເອກະພາບກັນ.

**ແຜນວາດການຕົກລົງກັນຂອງຄູ່ກໍລະນີ**



## 3. ການປະກອບເອກະສານ

ການປະກອບເອກະສານຂອງຄູ່ກໍລະນີທີ່ຍື່ນຕໍ່ ສກສ ຫຼື ຫກສ ເພື່ອພິຈາລະນາມີຄວາມໝາຍ ແລະ ຄວາມສໍາຄັນຫຼາຍຕໍ່ການດໍາເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເນື່ອງຈາກວ່າເອກະສານເຫຼົ່ານັ້ນ ເປັນບ່ອນອີງພື້ນຖານທີ່ພາໃຫ້ ສກສ ຫຼື ຫກສ ກໍຄືຜູ້ໄກ່ເກ່ຍ ຫຼື ຄະນະກໍາມະການຕັດສິນ ນໍາເອົາຂໍ້ຂັດແຍ່ງນັ້ນມາພິຈາລະນາແກ້ໄຂຕາມຂັ້ນຕອນ ທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ໂດຍທົ່ວໄປແລ້ວ ເອກະສານທີ່ຍື່ນຕໍ່ ສກສ ຫຼື ຫກສ ມີ ດັ່ງນີ້:

1. ຄໍາຮ້ອງ;
2. ສັນຍາທີ່ກ່ຽວຂ້ອງ;
3. ຄໍາຕົກລົງເປັນລາຍລັກອັກສອນຂອງຄູ່ກໍລະນີທີ່ໃຫ້ນໍາເອົາຂໍ້ຂັດແຍ່ງມາແກ້ໄຂຢູ່ ສກສ ຫຼື ຫກສ, ຖ້າມີ;
4. ຂໍ້ມູນ ຫຼື ເອກະສານອື່ນທີ່ເປັນຫຼັກຖານ[63].

### 3.1 ຄໍາຮ້ອງ

ຄໍາຮ້ອງ ແມ່ນເອກະສານພື້ນຖານທີ່ພາໃຫ້ ສກສ ຫຼື ຫກສ ນໍາເອົາຂໍ້ຂັດແຍ່ງມາພິຈາລະນາ ຊຶ່ງລາຍລະອຽດຂອງຄໍາຮ້ອງໄດ້ບົ່ງໄວ້ໃນຂໍ້ 1 ທີ່ກ່າວມາເທິງນີ້.

### 3.2 ສັນຍາທີ່ກ່ຽວຂ້ອງ

ສັນຍາທີ່ກ່ຽວຂ້ອງ ແມ່ນສັນຍາທີ່ຄູ່ກໍລະນີທັງສອງຝ່າຍໄດ້ຕົກລົງກັນ ກ່ຽວກັບການຜະລິດ-ທຸລະກິດ ເປັນຕົ້ນການລົງທຶນ, ການຄ້າ, ການບໍລິການ ແລະ ອື່ນໆທີ່ກ່ຽວຂ້ອງກັບດ້ານເສດຖະກິດ ຊຶ່ງພາຍຫຼັງທີ່ໄດ້ປະຕິບັດສັນຍານັ້ນໄດ້ມີຂໍ້ຂັດແຍ່ງເກີດຂຶ້ນຈາກການລະເມີດ ຫຼື ກ່ຽວພັນກັບສັນຍາດັ່ງກ່າວ.

### 3.3 ຄໍາຕົກລົງຂອງຄູ່ກໍລະນີ

ຄໍາຕົກລົງຂອງຄູ່ກໍລະນີ ແມ່ນເອກະສານກ່ຽວກັບການຕົກລົງກັນຂອງຄູ່ກໍລະນີ ທີ່ເຫັນດີໃຫ້ ສກສ ຫຼື ຫກສ ພິຈາລະນາແກ້ໄຂຂໍ້ຂັດແຍ່ງໃຫ້ ຊຶ່ງລາຍລະອຽດຂອງຄໍາຕົກລົງໄດ້ລະບຸໄວ້ໃນຂໍ້ 2 ທີ່ກ່າວມາເທິງນີ້.

### 3.4 ຂໍ້ມູນ ຫຼື ເອກະສານອື່ນ ທີ່ເປັນຫຼັກຖານ

ຂໍ້ມູນ ຫຼື ເອກະສານອື່ນ ທີ່ເປັນຫຼັກຖານ ແມ່ນບັນດາເອກະສານທີ່ພົວພັນກັບສັນຍາກ່ຽວກັບການລົງທຶນ, ການຄ້າ, ການບໍລິການ ແລະ ອື່ນໆທີ່ກ່ຽວຂ້ອງກັບດ້ານເສດຖະກິດ ເຊັ່ນ ປຶ້ມບັນທຶກ, ໃບມອບສິດ, ໃບຮັບເງິນ, ໃບແຈ້ງລາຄາ, ເອກະສານກ່ຽວກັບສະຖານະຂອງຄູ່ກໍລະນີ ແລະ ອື່ນໆ.

## 4. ການຍື່ນຄໍາຮ້ອງ ແລະ ຂັ້ນຕອນການພິຈາລະນາຄໍາຮ້ອງ

### 4.1 ການຍື່ນຄໍາຮ້ອງ

ການຍື່ນຄໍາຮ້ອງ ມີຄວາມໝາຍສໍາຄັນຫຼາຍ ຕໍ່ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເນື່ອງຈາກວ່າ ມັນເປັນຈຸດເລີ່ມຕົ້ນ ໃນການຮ້ອງຂໍໃຫ້ ສກສ ຫຼື ຫກສ ພິຈາລະນາແກ້ໄຂ.

ການຍື່ນຄໍາຮ້ອງ ແມ່ນການນໍາເອົາຄໍາຮ້ອງ ຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພ້ອມດ້ວຍເອກະສານປະກອບ ມາຍື່ນຕໍ່ ສກສ ຫຼື ຫກສ ເພື່ອຮ້ອງຂໍໃຫ້ແກ້ຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ເກີດຂຶ້ນ ດ້ວຍການໄກ່ເກ່ຍ ຫຼື ການຕັດສິນ.

ການຍື່ນຄໍາຮ້ອງ ຕໍ່ ສກສ ຫຼື ຫກສ ນັ້ນ ສາມາດຍື່ນໄດ້ດ້ວຍສອງວິທີ ຄື:

---

[63] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 18

### 4.1.1 ການຍື່ນດ້ວຍຕົນເອງ

ການຍື່ນຄໍາຮ້ອງດ້ວຍຕົນເອງ ແມ່ນຄູ່ກໍລະນີຝ່າຍໃດ ຝ່າຍໜຶ່ງ ຫຼື ທັງສອງຝ່າຍ ເປັນຜູ້ນໍາເອົາຄໍາຮ້ອງ ໄປຍື່ນຕໍ່ ສກສ ຫຼື ຫກສ ດ້ວຍຕົນເອງ.

### 4.1.2 ການຍື່ນຄໍາຮ້ອງໂດຍຜູ້ຕາງໜ້າ

ການຍື່ນຄໍາຮ້ອງໂດຍຜູ້ຕາງໜ້າ ແມ່ນການນໍາເອົາຄໍາຮ້ອງ ໄປຍື່ນຕໍ່ ສກສ ຫຼື ຫກສ ໂດຍຜູ້ຕາງໜ້າຕາມກົດໝາຍ ຫຼື ຜູ້ຕາງໜ້າຕາມການມອບໝາຍ.

#### ກ. ການຍື່ນຄໍາຮ້ອງໂດຍຜູ້ຕາງໜ້າຕາມກົດໝາຍ

ການຍື່ນຄໍາຮ້ອງໂດຍຜູ້ຕາງໜ້າຕາມກົດໝາຍ ແມ່ນການນໍາເອົາຄໍາຮ້ອງ ແລະ ເອກະສານປະກອບ ໄປຍື່ນຕໍ່ ສກສ ຫຼື ຫກສ ຂອງຜູ້ທີ່ມີສິດໃນການຮ້ອງຂໍແກ້ໄຂຂໍ້ຂັດແຍ່ງ ໂດຍບໍ່ມີການແຕ່ງຕັ້ງ ຫຼື ການມອບໝາຍ ຈາກຄູ່ກໍລະນີຝ່າຍໃດ ຝ່າຍໜຶ່ງ ໃນກໍລະນີ ດັ່ງນີ້:

- ຄູ່ກໍລະນີຝ່າຍໃດ ຝ່າຍໜຶ່ງ ເປັນບ້າ, ເສຍຈິດ, ປັນຍາອ່ອນ, ຫູໜວກ, ປາກກືກ ຫຼື ເສຍຊີວິດ ຊຶ່ງແມ່ນ ຜົວ ຫຼື ເມຍ ຫຼື ລູກ ຂອງຜູ້ກ່ຽວ ທີ່ເປັນຜູ້ສືບທອດມູນມໍຣະດົກ;
- ຄູ່ກໍລະນີຝ່າຍໃດ ຝ່າຍໜຶ່ງ ຫາຍສາບສູນ ຊຶ່ງແມ່ນຜູ້ທີ່ໄດ້ຮັບການແຕ່ງຕັ້ງໃຫ້ຮັກສາ ແລະ ຄຸ້ມຄອງ ຊັບສິນຂອງຜູ້ຫາຍສາບສູນ;
- ຜູ້ຕາງໜ້າຂອງຜູ້ສືບທອດ ຊຶ່ງແມ່ນຜູ້ປົກຄອງທີ່ຖືກແຕ່ງຕັ້ງໃຫ້ຮັກສາ ແລະ ຄຸ້ມຄອງ ມູນມໍຣະດົກຂອງຜູ້ສືບທອດມູນມໍຣະດົກ ທີ່ໄດ້ເສຍຊີວິດ ຫຼື ຖືກສານຕັດສິນວ່າ ເປັນຜູ້ເສັຍຊີວິດ ຖ້າວ່າມູນມໍຣະດົກນັ້ນຫາກຍັງບໍ່ທັນມີບຸກຄົນໃດຮັບເອົາ;
- ຜົວ ຫຼື ເມຍ ທີ່ເປັນຜູ້ຕາງໜ້າກັນ ກ່ຽວກັບສິນສົມສ້າງ ແລະ ໜີ້ສິນ.

#### ຂ. ການຍື່ນຄໍາຮ້ອງໂດຍຜູ້ຕາງໜ້າຕາມການມອບໝາຍ

ການຍື່ນຄໍາຮ້ອງໂດຍຜູ້ຕາງໜ້າຕາມການມອບໝາຍ ແມ່ນການນໍາເອົາຄໍາຮ້ອງ ແລະ ເອກະສານປະກອບ ໄປຍື່ນຕໍ່ ສກສ ຫຼື ຫກສ ຂອງຜູ້ທີ່ມີສິດໃນການຮ້ອງຂໍແກ້ໄຂຂໍ້ຂັດແຍ່ງ ໂດຍມີການແຕ່ງຕັ້ງ ຫຼື ການມອບໝາຍ ຈາກຄູ່ກໍລະນີ ຝ່າຍໃດ ຝ່າຍໜຶ່ງ ດັ່ງນີ້:

- ທະນາຍຄວາມ;
- ພະນັກງານ ຫຼື ກໍາມະກອນຂອງອົງການຈັດຕັ້ງ ຫຼື ວິສາຫະກິດ ທີ່ຖືກມອບໝາຍ ໃນຂໍ້ຂັດແຍ່ງທີ່ກ່ຽວຂ້ອງກັບອົງການຈັດຕັ້ງ ຫຼື ວິສາຫະກິດນັ້ນ;
- ບຸກຄົນທີ່ຖືກມອບໝາຍຈາກບັນດາຄູ່ກໍລະນີໃນຂໍ້ຂັດແຍ່ງທາງດ້ານເສດຖະກິດ ຝ່າຍດຽວກັນ;
- ບຸກຄົນທີ່ໄດ້ຮັບການແຕ່ງຕັ້ງໂດຍຄູ່ກໍລະນີ ໃຫ້ເປັນຜູ້ຕາງໜ້າ ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ກ່ຽວຂ້ອງ;
- ຍາດພີ່ນ້ອງຂອງຄູ່ກໍລະນີ ຫຼື ບຸກຄົນທີສາມ ທີ່ໄດ້ຮັບມອບໝາຍ.

### 4.1.3 ສະຖານທີ່ຍື່ນຄໍາຮ້ອງ

ສະຖານທີ່ຍື່ນຄໍາຮ້ອງ ແມ່ນບ່ອນທີ່ຄູ່ກໍລະນີ ນໍາເອົາຄໍາຮ້ອງຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພ້ອມດ້ວຍເອກະສານປະກອບ ໄປຍື່ນ ຢູ່ ສກສ ຫຼື ຫກສ[64] ບ່ອນທີ່ຄູ່ກໍລະນີເຫັນວ່າມີຄວາມສະດວກ ແລະ ເປັນເອກະພາບກັນ.

[64] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 17

ໃນກໍລະນີຄູ່ກໍລະນີ ຫາກບໍ່ເຫັນດີ ຫຼື ບໍ່ສາມາດຕົກລົງກັນໄດ້ນັ້ນ ຄູ່ກໍລະນີອີກຝ່າຍໜຶ່ງ ກໍສາມາດນໍາເອົາຄໍາຮ້ອງ ພ້ອມດ້ວຍເອກະສານປະກອບ ໄປຍື່ນຕໍ່ ສກສ ຫຼື ຫກສ ທີ່ຕັ້ງຢູ່ບ່ອນຂໍ້ຂັດແຍ່ງເກີດຂຶ້ນ.

### 4.2 ຂັ້ນຕອນການພິຈາລະນາຄໍາຮ້ອງ

#### 4.2.1 ການຮັບຄໍາຮ້ອງ

ການຮັບຄໍາຮ້ອງ ແມ່ນຂະບວນການຮັບເອົາຄໍາຮ້ອງ ແລະ ເອກະສານປະກອບ ຂອງ ພະແນກ ຫຼື ໜ່ວຍງານບໍລິຫານຂອງ ສກສ ຫຼື ຫກສ ໂດຍມີການບັນທຶກຂໍ້ມູນກ່ຽວກັບ ຜູ້ຍື່ນຄໍາຮ້ອງ, ວັນ, ເດືອນ, ປີຍື່ນຄໍາຮ້ອງ, ເນື້ອໃນຄໍາຮ້ອງໂດຍຫຍໍ້ ແລະ ລາຍການເອກະສານປະກອບ ພ້ອມທັງເຂົ້າເລກທີສໍານວນຄໍາຮ້ອງ ແລ້ວປະກອບສໍານວນຄໍາຮ້ອງເບື້ອງຕົ້ນ.

ການຮັບຄໍາຮ້ອງ ແລະ ເອກະສານປະກອບດັ່ງກ່າວ ມີຄວາມໝາຍ ແລະ ຄວາມສໍາຄັນ ໃນຂະບວນການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຍ້ອນວ່າມັນເປັນບາດກ້າວເລີ່ມຕົ້ນ ໃນຂັ້ນຕອນການນໍາເອົາຂໍ້ຂັດແຍ່ງດັ່ງກ່າວ ເຂົ້າມາສູ່ຂະບວນການແກ້ໄຂຢູ່ ສກສ ຫຼື ຫກສ.

#### 4.2.2 ການພິຈາລະນາຄໍາຮ້ອງ

ພາຍຫຼັງໄດ້ຮັບຄໍາຮ້ອງຂໍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພ້ອມດ້ວຍເອກະສານປະກອບແລ້ວ ພະແນກ ຫຼື ໜ່ວຍງານບໍລິຫານຂອງ ສກສ ຫຼື ຫກສ ນອກຈາກກວດກາເບື້ອງຕົ້ນຄໍາຮ້ອງ ແລະ ເອກະສານປະກອບດັ່ງກ່າວແລ້ວ ມີໜ້າທີ່ປະກອບເປັນສໍານວນຄໍາຮ້ອງຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອນໍາສະເໜີຕໍ່ຫົວໜ້າ ສກສ ຫຼື ຫກສ ເພື່ອພິຈາລະນາ ດັ່ງນີ້:

1) ມອບສໍານວນຄໍາຮ້ອງ ໃຫ້ພະແນກ ຫຼື ໜ່ວຍງານຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄົ້ນຄວ້າເບື້ອງຕົ້ນ ແລ້ວລາຍງານຜົນການຄົ້ນຄວ້າ ຕໍ່ຫົວໜ້າສກສ ຫຼື ຫກສ ເພື່ອເຊີນຄູ່ກໍລະນີອີກຝ່າຍໜຶ່ງເຂົ້າມາຮັບຊາບ (ເອກະສານຊ້ອນທ້າຍ 5) ແລະ ປະກອບສໍານວນແກ້ຄໍາຮ້ອງ ໃນກໍລະນີສໍານວນຄໍາຮ້ອງຫາກຖືກຕ້ອງ, ຄົບຖ້ວນ ແລະ ສາມາດນໍາເອົາຂໍ້ຂັດແຍ່ງດັ່ງກ່າວ ມາແກ້ໄຂຢູ່ ສກສ ຫຼື ຫກສ [65] ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2) ມອບສໍານວນຄໍາຮ້ອງ ໃຫ້ພະແນກ ຫຼື ໜ່ວຍງານບໍລິຫານ ເພື່ອແຈ້ງໃຫ້ຜູ້ຮ້ອງຂໍເຂົ້າມາປັບປຸງເນື້ອໃນຄໍາຮ້ອງ ໃນກໍລະນີຄໍາຮ້ອງມີເນື້ອໃນບໍ່ຄົບຖ້ວນ ຫຼື ນໍາເອົາຂໍ້ມູນຫຼັກຖານທີ່ຈໍາເປັນມາປະກອບເຂົ້າໃນສໍານວນຄໍາຮ້ອງ ລວມທັງການອະທິບາຍ ຫຼື ໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບບັນຫາທີ່ຈໍາເປັນ ໃນກໍລະນີທີ່ເຫັນວ່າ ຕ້ອງການຂໍ້ມູນ ຫຼັກຖານເພີ່ມເຕີມ ລວມທັງການເຂົ້າມາຕົກລົງກັນຂອງຄູ່ກໍລະນີກ່ຽວກັບ ການນໍາເອົາຂໍ້ຂັດແຍ່ງມາແກ້ໄຂຢູ່ ສກສ ຫຼື ຫກສ, ການເລືອກຮູບການ, ການເລືອກຜູ້ໄກ່ເກ່ຍ ຫຼື ຄະນະກໍາມະການຕັດສິນ;
3) ມອບສໍານວນຄໍາຮ້ອງ ໃຫ້ພະແນກບໍລິຫານ ຫຼື ໜ່ວຍງານ ເພື່ອສົ່ງສໍານວນຄໍາຮ້ອງພ້ອມດ້ວຍເຫດຜົນເປັນລາຍລັກອັກສອນໃຫ້ແກ່ຜູ້ຮ້ອງຂໍ ໃນກໍລະນີທີ່ເຫັນວ່າຂໍ້ຂັດແຍ່ງທາງດ້ານເສດຖະກິດບໍ່ຢູ່ໃນຂອບເຂດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ສກສ ຫຼື ຫກສ ບົນພື້ນຖານການຄົ້ນຄວ້າ ແລະ ລາຍງານຂອງພະ

[65] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 16 ໄດ້ກໍານົດກ່ຽວກັບຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ນໍາມາພິຈາລະນາຢູ່ ສູນ ຫຼື ຫ້ອງການ ແກ້ໄຂ້ຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄື: 1) ເປັນຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ການຄ້າ; 2) ຄູ່ກໍລະນີໄດ້ຕົກລົງກັນໄວ້ໃນສັນຍາ; 3) ຄູ່ກໍລະນີໄດ້ສະໝັກໃຈໃຫ້ແກ້ໄຂຂໍ້ຂັດແຍ່ງ; 4) ບໍ່ແມ່ນຂໍ້ຂັດແຍ່ງທີ່ສານປະຊາຊົນພວມດໍາເນີນການແກ້ໄຂຢູ່ ຫຼື ມີຄໍາຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ; 5) ບໍ່ແມ່ນຂໍ້ຂັດແຍ່ງທີ່ລະເມີດລະບຽບກົດໝາຍກ່ຽວກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງ ສັງຄົມ ແລະ ສິ່ງແວດລ້ອມ.

ແນກຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຊຶ່ງຕ້ອງໄດ້ພິຈາລະນາແຈ້ງໃຫ້ຜູ້ຮ້ອງຂໍຊາບພາຍໃນກຳນົດເວລາ ເຈັດ ວັນລັດຖະການ[66].

## ແຜນວາດການພິຈາລະນາຄຳຮ້ອງ




[66] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 20

## 5. ການເຊີນຄູ່ກໍລະນີ

ການເຊີນຄູ່ກໍລະນີ ແມ່ນການອອກເອກະສານທາງການ ໂດຍ ສກສ ຫຼື ຫກສ ຊຶ່ງເອີ້ນວ່າ “ໝາຍເຊີນ” ເພື່ອເຊີນຄູ່ກໍລະນີຝ່າຍໃດ ຝ່າຍໜຶ່ງ ຫຼື ທັງສອງຝ່າຍ ໃຫ້ເຂົ້າມາຮ່ວມການດໍາເນີນການແກ້ໄຂຂໍ້ຂັດແຍ່ງ.

ໝາຍເຊີນ ແມ່ນເອກະສານທາງການໜຶ່ງ ທີ່ມີຄວາມສໍາຄັນໃນຂະບວນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເນື່ອງຈາກວ່າໝາຍເຊີນ ແມ່ນເອກະສານທີ່ເປັນພື້ນຖານພາໃຫ້ຄູ່ກໍລະນີຝ່າຍໃດຝ່າຍໃດໜຶ່ງ ຫຼື ທັງສອງຝ່າຍມາປາກົດຕົວຕໍ່ໜ້າພະນັກງານທີ່ກ່ຽວຂ້ອງຂອງ ສກສ ຫຼື ຫກສ ເພື່ອການແກ້ໄຂຂໍ້ຂັດແຍ່ງ ເປັນຕົ້ນ ແມ່ນການຮັບຊາບກ່ຽວກັບການຮ້ອງຂໍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຄູ່ກໍລະນີອີກຝ່າຍໜຶ່ງ, ການຍື່ນຄໍາແກ້ຄໍາຮ້ອງຂໍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ມີຄໍາເຫັນ, ອະທິບາຍກ່ຽວກັບການຍື່ນຄໍາຮ້ອງຂອງຄູ່ກໍລະນີອີກຝ່າຍໜຶ່ງ ຫຼື ເພື່ອໃຫ້ຄູ່ກໍລະນີທີ່ຮ້ອງຂໍແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼື ຄູ່ກໍລະນີອີກຝ່າຍໜຶ່ງ ເຂົ້າມາຊີ້ແຈງ, ອະທິບາຍ ຫຼື ນໍາເອົາຂໍ້ມູນຫຼັກຖານ ຫຼື ເອກະສານເພີ່ມເຕີມ ທີ່ກ່ຽວຂ້ອງມາປະກອບໃສ່ສໍານວນແກ້ໄຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ໃນກໍລະນີທີ່ຄູ່ກໍລະນີທີ່ຖືກເຊີນນັ້ນ ຫາກບໍ່ເຂົ້າມາຕາມໝາຍເຊີນຄັ້ງທີໜຶ່ງແລ້ວ ສກສ ຫຼື ຫກສ ກໍຈະອອກໝາຍເຊີນເປັນຄັ້ງທີສອງ ແລະ ຖ້າວ່າຄູ່ກໍລະນີທີຖືກເຊີນນັ້ນ ຫາກຍັງບໍ່ເຂົ້າມາຕາມໝາຍເຊີນຄັ້ງທີສອງແລ້ວ ສກສ ຫຼື ຫກສ ກໍຈະອອກໝາຍເຊີນເປັນຄັ້ງທີສາມ ຊຶ່ງເປັນຄັ້ງສຸດທ້າຍ. ສໍາລັບການອອກໝາຍເຊີນແຕ່ລະຄັ້ງນັ້ນ ສກສ ຫຼື ຫກສ ບ່ອນທີ່ພິຈາລະນາແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນຜູ້ພິຈາລະນາ ໂດຍອີງຕາມລັກສະນະ ແລະ ຈຸດພິເສດຂອງຂໍ້ຂັດແຍ່ງ ແລະ ຄູ່ກໍລະນີ. ຖ້າຄູ່ກໍລະນີ ທີ່ຖືກເຊີນນັ້ນ ຫາກຍັງບໍ່ເຂົ້າມາ ພະນັກງານທີ່ກ່ຽວຂ້ອງ ຂອງ ສກສ ຫຼື ຫກສ ຕ້ອງໄດ້ສະຫຼຸບລາຍງານ ກ່ຽວກັບການບໍ່ເຂົ້າມາດັ່ງກ່າວ ຕໍ່ຫົວໜ້າ ສກສ ຫຼື ຫກສ ເພື່ອພິຈາລະນາຕົກລົງ ຕາມແຕ່ລະກໍລະນີ.

ການສົ່ງໝາຍເຊີນຕາມສະຖານທີ່ ທີ່ຄູ່ກໍລະນີສະໜອງໃຫ້ນັ້ນ ສາມາດເຮັດໄດ້ຕາມແຕ່ລະກໍລະນີ ດັ່ງນີ້:

- ສົ່ງໂດຍພະນັກງານ ຂອງ ສກສ ຫຼື ຫກສ;
- ສົ່ງຜ່ານທາງຫ້ອງການບ້ານບ່ອນຄູ່ກໍລະນີອາໄສຢູ່;
- ສົ່ງຜ່ານທາງໄປສະນີ ຫຼື ໂທລະຄົມມະນາຄົມ;
- ສົ່ງທາງເອເລັກໂທຣນິກ ເປັນຕົ້ນແມ່ນທາງອີເມວ.

## 6. ການແກ້ຄໍາຮ້ອງ ແລະ ຂັ້ນຕອນການພິຈາລະນາ

### 6.1 ການແກ້ຄໍາຮ້ອງ

ການແກ້ຄໍາຮ້ອງ ແມ່ນການໃຊ້ສິດໃນການໂຕ້ແຍ່ງເປັນລາຍລັກອັກສອນ ຂອງຄູ່ກໍລະນີອີກຝ່າຍໜຶ່ງ ພາຍຫຼັງທີ່ໄດ້ເຂົ້າມາ ສກສ ຫຼື ຫກສ ຕາມໝາຍເຊີນ.

ການແກ້ຄໍາຮ້ອງ ມີຄວາມໝາຍ ແລະ ຄວາມສໍາຄັນ ຍ້ອນວ່າ ມັນແມ່ນເຄື່ອງໝາຍສໍາຄັນທາງດ້ານກົດໝາຍ ທີ່ສະແດງໃຫ້ເຫັນວ່າ ຄູ່ກໍລະນີອີກຝ່າຍໜຶ່ງໄດ້ຮັບຮູ້ວ່າ ຕົນໄດ້ມີຂໍ້ຂັດແຍ່ງກ່ຽວກັບຜົນປະໂຫຍດທີ່ເກີດຂຶ້ນຈາກການລະເມີດສັນຍາ, ການດໍາເນີນການຜະລິດ-ທຸລະກິດ ກັບຄູ່ກໍລະນີ ທີ່ໄດ້ຍື່ນຄໍາຮ້ອງຂໍ.

ຄູ່ກໍລະນີອີກຝ່າຍທີ່ຖືກຮ້ອງຂໍຕ້ອງໄດ້ຂຽນຄໍາແກ້ຄໍາຮ້ອງ ຕາມແບບພິມ ຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ເອກະສານຊ້ອນທ້າຍ 8) ແລ້ວສົ່ງມາຍັງ ພະແນກ ຫຼື ໜ່ວຍງານບໍລິຫານ ຂອງ ສກສ ຫຼື ຫກສ.

ຄູ່ກໍລະນີຝ່າຍທີ່ຖືກຮ້ອງຂໍ ສາມາດຍື່ນຄໍາຮ້ອງແຍ່ງ ໃນກໍລະນີທີ່ເຫັນວ່າຝ່າຍທີ່ຮ້ອງຂໍ ກໍມີພັນທະທີ່ຕ້ອງໄດ້ປະຕິບັດຕໍ່ຕົນ ເພື່ອໃຫ້ ສກສ ຫຼື ຫກສ ພິຈາລະນາແກ້ໄຂໄປພ້ອມກັນ (ເອກະສານຊ້ອນທ້າຍ 9).

### 6.2 ການຮັບຄໍາແກ້ຄໍາຮ້ອງ

ການຮັບຄໍາແກ້ຄໍາຮ້ອງ ແມ່ນການຮັບເອົາຄໍາແກ້ຄໍາຮ້ອງ ແລະ ເອກະສານປະກອບ ຂອງ ສກສ ຫຼື ຫກສ ໂດຍມີການຈົດບັນທຶກຂໍ້ມູນກ່ຽວກັບ ຜູ້ຍື່ນຄໍາແກ້ຄໍາຮ້ອງ, ວັນ, ເດືອນ, ປີ ຍື່ນຄໍາແກ້ຄໍາຮ້ອງ, ເນື້ອໃນຄໍາແກ້ຄໍາຮ້ອງ ໂດຍຫຍໍ້ ແລະ ລາຍການເອກະສານປະກອບ ພ້ອມທັງເຂົ້າເລກທີ ສໍານວນຄໍາແກ້ຄໍາຮ້ອງ ແລ້ວປະກອບສໍານວນຄໍາແກ້ຄໍາຮ້ອງເບື້ອງຕົ້ນ.

ການຮັບຄໍາແກ້ຄໍາຮ້ອງ ແລະ ເອກະສານປະກອບດັ່ງກ່າວ ມີຄວາມໝາຍ ແລະ ຄວາມສໍາຄັນ ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຍ້ອນວ່າມັນແມ່ນບາດກ້າວເລີ່ມຕົ້ນ ໃນຂັ້ນຕອນການນໍາເອົາຂໍ້ຂັດແຍ່ງດັ່ງກ່າວເຂົ້າມາສູ່ຂະບວນການແກ້ໄຂຢູ່ ສກສ ຫຼື ຫກສ.

### 6.3 ການພິຈາລະນາ

ເມື່ອໄດ້ຮັບຄໍາແກ້ຮ້ອງ ພ້ອມດ້ວຍເອກະສານປະກອບແລ້ວ ພະແນກ ຫຼື ໜ່ວຍງານບໍລິຫານຂອງ ສກສ ຫຼື ຫກສ ນອກຈາກກວດກາ ເບື້ອງຕົ້ນຄໍາແກ້ຄໍາຮ້ອງ ແລະ ເອກະສານປະກອບດັ່ງກ່າວແລ້ວ ຍັງມີໜ້າທີ່ປະກອບເປັນສໍານວນຄໍາແກ້ຄໍາຮ້ອງ ເພື່ອນໍາສະເໜີຕໍ່ຫົວໜ້າ ສກສ ຫຼື ຫກສ ເພື່ອພິຈາລະນາ ດັ່ງນີ້:

1) ມອບສໍານວນຄໍາແກ້ຄໍາຮ້ອງ ໃຫ້ ພະແນກ ຫຼື ໜ່ວຍງານ ຄຸ້ມຄອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄົ້ນຄວ້າເບື້ອງຕົ້ນ ແລ້ວລາຍງານຜົນການຄົ້ນຄວ້າ ຕໍ່ຫົວໜ້າ ສກສ ຫຼື ຫກສ ເພື່ອເຊີນຄູ່ກໍລະນີທີ່ຍື່ນຄໍາແກ້ຄໍາຮ້ອງເຂົ້າມາຮັບຊາບ ໃນກໍລະນີສໍານວນຄໍາຮ້ອງຫາກຖືກຕ້ອງ, ຄົບຖ້ວນ ແລະ ສາມາດນໍາເອົາຂໍ້ຂັດແຍ່ງດັ່ງກ່າວ ມາແກ້ໄຂຢູ່ ສກສ ຫຼື ຫກສ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
2) ມອບສໍານວນຄໍາແກ້ຄໍາຮ້ອງ ໃຫ້ໜ່ວຍງານ ຫຼື ພະແນກບໍລິຫານ ເພື່ອແຈ້ງໃຫ້ຄູ່ກໍລະນີທີ່ຍື່ນຄໍາແກ້ຄໍາຮ້ອງ ເຂົ້າມາປັບປຸງເນື້ອໃນຄໍາແກ້ຄໍາຮ້ອງ ໃນກໍລະນີຄໍາແກ້ຄໍາຮ້ອງ ຫາກມີເນື້ອໃນບໍ່ທັນຄົບຖ້ວນ ຫຼື ນໍາເອົາຂໍ້ມູນ ຫຼັກຖານ ທີ່ຈໍາເປັນມາປະກອບເຂົ້າໃນສໍານວນຄໍາແກ້ຄໍາຮ້ອງ ລວມທັງການອະທິບາຍ ຫຼື ໃຫ້ຄວາມກະຈ່າງແຈ້ງກ່ຽວກັບບັນຫາທີ່ຈໍາເປັນໃນກໍລະນີ ເຫັນວ່າ ຕ້ອງການຂໍ້ມູນ ຫຼັກຖານເພີ່ມເຕີມ.

## 7. ການປະກອບສໍານວນຂໍ້ຂັດແຍ່ງທາງດ້ານເສດຖະກິດ

ການປະກອບສໍານວນຂໍ້ຂັດແຍ່ງ ມີຄວາມໝາຍ ແລະ ຄວາມສໍາຄັນຫຼາຍ ເນື່ອງຈາກວ່າ ມັນແມ່ນຂັ້ນຕອນເລີ່ມຕົ້ນກ້າວເຂົ້າສູ່ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການໄກ່ເກ່ຍ ຫຼື ການຕັດສິນ ຕາມການຕົກລົງກັນຂອງຄູ່ກໍລະນີ.

ສໍານວນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຍັງແມ່ນເຄື່ອງໝາຍທາງດ້ານເອກະສານ ທີ່ລວບລວມເອົາເອກະສານ, ຂໍ້ມູນ ແລະ ຫຼັກຖານທີ່ກ່ຽວຂ້ອງ ຂອງຄູ່ກໍລະນີ ທີ່ຊີ້ໃຫ້ເຫັນໄດ້ເຖິງການນໍາໃຊ້ສິດໃນການໂຕ້ແຍ່ງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນທີ່ຖືກລະເມີດ ເພື່ອຮ້ອງຂໍໃຫ້ ສກສ ຫຼື ຫກສ ພິຈາລະນາແກ້ໄຂ.

ສໍານວນຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ:

1) ສໍານວນຄໍາຮ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

2) ສໍານວນຄໍາແກ້ຄໍາຮ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພ້ອມດ້ວຍເອກະສານ, ຂໍ້ມູນ ແລະ ຫຼັກຖານທີ່ກ່ຽວຂ້ອງຂອງຄູ່ກໍລະນີ.

ໃນພາກປະຕິບັດຕົວຈິງແລ້ວ ການປະກອບສໍານວນແກ້ໄຂຂໍ້ຂັດແຍ່ງ ແມ່ນການນໍາເອົາສໍານວນຄໍາຮ້ອງ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ສໍານວນແກ້ຄໍາຮ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາໂຮມເຂົ້າກັນໃນເສື້ອປົກສໍານວນເອກະສານດຽວກັນ (ເອກະສານຊ້ອນທ້າຍ 10).

## 8. ການເລືອກຮູບການແກ້ໄຂ

ການເລືອກຮູບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນຂັ້ນຕອນໜຶ່ງ ທີ່ຄູ່ກໍລະນີໄດ້ນໍາໃຊ້ສິດຂອງຕົນໃນການເລືອກເອົາຮູບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການໄກ່ເກ່ຍ ຫຼື ການຕັດສິນ[67] ບົນພື້ນຖານການຕົກລົງເຫັນດີຂອງຄູ່ກໍລະນີທີ່ເປັນເອກະພາບກັນກ່ຽວກັບການເລືອກເອົາຮູບການ.

ການເລືອກຮູບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໂດຍຄູ່ກໍລະນີນັ້ນ ມີຄວາມໝາຍ ແລະ ຄວາມສໍາຄັນຫຼາຍ ເພາະວ່າມັນເປັນເຄື່ອງໝາຍທີ່ຊີ້ໃຫ້ເຫັນກ່ຽວກັບການນໍາໃຊ້ສິດໃນການຕົກລົງກັນເພື່ອ ເລືອກເອົາຮູບການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ ບົນພື້ນຖານຄວາມສະເໝີພາບຂອງຄູ່ກໍລະນີ. ອີກດ້ານໜຶ່ງ, ການເລືອກຮູບການນີ້ ກໍມີຄວາມສໍາຄັນໃນດ້ານການປະຕິບັດຕາມຂັ້ນຕອນການແກ້ໄຂ.

ໂດຍທົ່ວໄປແລ້ວ ຄູ່ກໍລະນີສາມາດຕົກລົງກັນກ່ຽວກັບການເລືອກຮູບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍບົ່ງໄວ້ໃນສັນຍາກ່ຽວກັບການຜະລິດ-ທຸລະກິດ, ສັນຍາການຄ້າ ຊຶ່ງບໍ່ຈໍາເປັນຕ້ອງໄດ້ຜ່ານຂັ້ນຕອນການເລືອກຮູບການ ໃນເວລາຍື່ນຄໍາຮ້ອງ ຫຼື ສາມາດເລືອກຮູບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນເວລາຍື່ນຄໍາຮ້ອງ (ເອກະສານຊ້ອນທ້າຍ 11).

ໃນກໍລະນີບໍ່ສາມາດຕົກລົງກັນໄດ້ ກ່ຽວກັບການເລືອກເອົາຮູບການແກ້ໄຂຂໍ້ຂັດແຍ່ງນັ້ນ ພະນັກງານທີ່ກ່ຽວຂ້ອງຂອງ ສກສ ຫຼື ຫກສ ມີໜ້າທີ່ ແລະ ຄວາມຮັບຜິດຊອບໃນການອໍານວຍຄວາມສະດວກ ແລະ ສະໜອງຂໍ້ມູນຂ່າວສານ ທາງດ້ານວິຊາການທີ່ເໝາະສົມສໍາລັບຄູ່ກໍລະນີ ເພື່ອຕົກລົງເປັນເອກະພາບກັນກ່ຽວກັບບັນຫາດັ່ງກ່າວ. ຖ້າຄູ່ກໍລະນີ ຫາກຍັງບໍ່ສາມາດຕົກລົງເປັນເອກະພາບກັນໄດ້ນັ້ນ ພະນັກງານທີ່ກ່ຽວຂ້ອງ ຂອງ ສກສ ຫຼື ຫກສ ຕ້ອງໄດ້ສະຫຼຸບລາຍງານ ກ່ຽວກັບບັນຫາດັ່ງກ່າວ ຕໍ່ຫົວໜ້າ ສກສ ຫຼື ຫກສ ເພື່ອພິຈາລະນາຕົກລົງກ່ຽວກັບການສົ່ງສໍານວນຄໍາຮ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ສໍານວນແກ້ຄໍາຮ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ແກ່ຄູ່ກໍລະນີ.

[67] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 21

# ບົດທີ 5
# ການແກ້ໄຂຂໍ້ຂັດແຍ່ງ ດ້ວຍການໄກ່ເກ່ຍ

## 1. ຄວາມຮູ້ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ ດ້ວຍການໄກ່ເກ່ຍ

### 1.1 ຄວາມໝາຍ

ການແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍ ແມ່ນການເຄື່ອນໄຫວຂອງ ຜູ້ໄກ່ເກ່ຍ ແລະ ຄູ່ກໍລະນີ ເພື່ອເຮັດໃຫ້ຄູ່ກໍລະນີ ສາມາດປະນີປະນອມ, ເຂົ້າໃຈກັນໂດຍມີຜູ້ໄກ່ເກ່ຍເປັນຄົນກາງ ດ້ວຍການອໍານວຍຄວາມສະດວກ, ຊ່ວຍເຫຼືອ, ໃຫ້ຄໍາປຶກສາ ແລະ ຊອກຫາທາງອອກ ພາໃຫ້ຂໍ້ຂັດແຍ່ງຢຸດຕິລົງ ບົນພື້ນຖານຄວາມສະໝັກໃຈຂອງພວກກ່ຽວ ແລະ ສາມາດປະຕິບັດໄດ້ໂດຍຄູ່ກໍລະນີເອງ. ສະນັ້ນ, ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈຶ່ງໄດ້ກໍານົດຄວາມໝາຍຂອງການໄກ່ເກ່ຍວ່າ ແມ່ນການແກ້ໄຂຂໍ້ຂັດແຍ່ງໂດຍຄູ່ກໍລະນີເອງ ດ້ວຍການປະນີປະນອມ, ເຈລະຈາ ແລະ ປຶກສາຫາລື ຊຶ່ງມີຜູ້ໄກ່ເກ່ຍຜູ້ໜຶ່ງ ຫຼື ຫຼາຍຄົນເປັນຄົນກາງ[68].

### 1.2 ຄວາມສໍາຄັນ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍວິທີການໄກ່ເກ່ຍ ມີຄວາມສໍາຄັນຫຼາຍຢ່າງແກ່ຄູ່ກໍລະນີເນື່ອງຈາກວ່າ ການແກ້ໄຂຂໍ້ຂັດແຍ່ງດ້ວຍວິທີນີ້ ສາມາດຮັກສາຄວາມລັບ, ຮັກສາຄວາມສາມັກຄີ, ມີຄວາມວ່ອງໄວ ແລະ ປະຢັດຄ່າໃຊ້ຈ່າຍໃຫ້ແກ່ຄູ່ກໍລະນີ. ນອກນັ້ນ, ການແກ້ໄຂດ້ວຍຮູບການນີ້ ຍັງມີຄວາມສໍາຄັນແກ່ຂະບວນການແກ້ໄຂຂໍ້ຂັດແຍ່ງໃນສັງຄົມ ເພື່ອປະກອບສ່ວນເຂົ້າໃນການເພີ່ມທະວີນິຕິທໍາ ແລະ ເຮັດໃຫ້ສັງຄົມມີຄວາມສະຫງົບ.

ການຮັກສາຄວາມລັບ ມີຄວາມສໍາຄັນແກ່ຄູ່ກໍລະນີ ເພາະໃນການດໍາເນີນທຸລະກິດຂອງພວກກ່ຽວນັ້ນ ອາດມີຄວາມລັບ ຊຶ່ງພວກກ່ຽວບໍ່ຕ້ອງການໃຫ້ຂໍ້ຂັດແຍ່ງນັ້ນ ຖືກເຜີຍແຜ່ສູ່ສັງຄົມ ອັນຈະພາໃຫ້ມີຜົນກະທົບຕໍ່ການດໍາເນີນທຸລະກິດ, ທັງເປັນການຂາດຄວາມເຊື່ອຖື ຫຼື ເຊື່ອໝັ້ນທາງດ້ານທຸລະກິດ. ສະນັ້ນ, ຄູ່ກໍລະນີ ຈຶ່ງສາມາດເລືອກຮູບແບບການໄກ່ເກ່ຍ ເພື່ອຕົກລົງບັນຫາພາໃຫ້ຂໍ້ຂັດແຍ່ງຈົບລົງ ໂດຍບໍ່ເປີດເຜີຍຕໍ່ສັງຄົມ ແລະ ໃນຂະບວນການດໍາເນີນການໄກ່ເກ່ຍ ມີແຕ່ຄູ່ກໍລະນີເຂົ້າຮ່ວມດ້ວຍຕົນເອງ ໂດຍອາໄສຜູ້ໄກ່ເກ່ຍເປັນຜູ້ໃຫ້ຄໍາປຶກສາ ແລະ ຊ່ວຍເຫຼືອແນະນໍາທາງອອກທີ່ເປັນຜົນປະໂຫຍດແກ່ທັງສອງຝ່າຍ. ນອກນັ້ນ, ໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂໍ້ມູນ ແລະ ເອກະສານຕ່າງໆ ທີ່ໄດ້ນໍາສະເໜີໃນເວລາໄກ່ເກ່ຍຕ້ອງຮັກສາເປັນຄວາມລັບ[69] ຜູ້ໄກ່ເກ່ຍ, ຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມອື່ນ ບໍ່ມີສິດເປີດເຜີຍຄວາມລັບຕໍ່ບຸກຄົນພາຍນອກ, ເວັ້ນເສຍແຕ່ ໄດ້ຮັບອະນຸຍາດຈາກຄູ່ກໍລະນີເທົ່ານັ້ນ. ບັນດາຂໍ້ມູນທີ່ໄດ້ຈາກການໄກ່ເກ່ຍຈະຮັກສາໄວ້ເປັນຄວາມລັບ ແລະ ບໍ່ມາສາດນໍາໄປເປັນຫຼັກຖານໃນການແກ້ໄຂໃນຮູບການຕັດສິນໄດ້ ຫຼື ການດໍາເນີນຄະດີຂອງສານ ແລະ ຜູ້ໄກ່ເກ່ຍ ກໍບໍ່ມີສິດເປີດເຜີຍບັນດາຂໍ້ມູນທີ່ໄດ້ຈາກການໄກ່ເກ່ຍນັ້ນ ສູ່ບຸກຄົນອື່ນ.

ການຮັກສາຄວາມສາມັກຄີ ກໍມີຄວາມສໍາຄັນແກ່ຄູ່ກໍລະນີ ເພາະພວກກ່ຽວມີຄວາມເພິ່ງພໍໃຈ ຕໍ່ການເຮັດໃຫ້ຂໍ້ຂັດແຍ່ງຈົບລົງ ດ້ວຍຄວາມສະໝັກໃຈ ຊຶ່ງເຮັດໃຫ້ທັງສອງຍັງຮັກສາຄວາມສາມັກຄີກັນໄວ້ຄືເກົ່າ ພ້ອມທັງສາມາດພົວພັນຮ່ວມມືດໍາເນີນທຸລະກິດນໍາກັນ. ອີກຢ່າງໜຶ່ງ ເມື່ອຂໍ້ຂັດແຍ່ງໄດ້ຈົບລົງດ້ວຍວິທີການໄກ່ເກ່ຍ ບົນພື້ນຖານຄວາມສະໝັກໃຈແລ້ວ ກໍປຽບເໝືອນກັບວ່າ ຄູ່ກໍລະນີ ບໍ່ໄດ້ມີການຂັດແຍ່ງຫຍັງນໍາກັນມາກ່ອນເຮັດໃຫ້ທັງສອງຝ່າຍມີໂອກາດດໍາເນີນທຸລະກິດຮ່ວມກັນໄດ້ອີກ.

---

[68] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 22

[69] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 14

ການດຳເນີນການແກ້ໄຂຂໍ້ຂັດແຍ່ງ ດ້ວຍວິທີການໄກ່ເກ່ຍ ຄູ່ກໍລະນີມີເສລີພາບເປັນເຈົ້າການໃນການຊອກຫາທາງອອກ ເພື່ອຢຸດຕິຂໍ້ຂັດແຍ່ງ ໂດຍອາໄສຜູ້ໄກ່ເກ່ຍເປັນຄົນກາງ. ເມື່ອໄດ້ຕົກລົງກັນຢຸດຕິຂໍ້ຂັດແຍ່ງແລ້ວ ຄູ່ກໍລະນີ ກໍຕ້ອງປະຕິບັດຕາມຜົນຂອງການຕົກລົງກັນຢ່າງເຂັ້ມງວດໃນທັນໃດ. ຄູ່ກໍລະນີບໍ່ມີສິດຂໍອຸທອນ ຫຼື ຂໍລົບລ້າງ ບົດບັນທຶກຜົນການໄກ່ເກ່ຍ. ສະນັ້ນ, ຈະເຫັນໄດ້ວ່າ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍວິທີການໄກ່ເກ່ຍ ມີຄວາມວ່ອງໄວ ແລະ ປະຢັດເວລາ.

ໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງ ດ້ວຍວິທີການໄກ່ເກ່ຍ ຈະບໍ່ເຮັດແບບພິທີພິຖັນຕາມຂັ້ນຕອນຂອງລະບຽບຫຼັກການ, ບໍ່ຜ່ານຫຼາຍຂັ້ນຕອນ. ນອກນັ້ນ, ໃນລະຍະການດຳເນີນການໄກ່ເກ່ຍ ຫາກ ສກສ ຫຼື ຫກສ ໄດ້ຮຽກເອົາຄູ່ກໍລະນີເຂົ້າມາທຳການໄກ່ເກ່ຍ ແຕ່ ພວກກ່ຽວບໍ່ເຂົ້າມາເຖິງສາມຄັ້ງແລ້ວ ການໄກ່ເກ່ຍກໍຈະສິ້ນສຸດ ແລະ ມີຄວາມແຕກຕ່າງກັບການດຳເນີນຄະດີຢູ່ສານ ຊຶ່ງມີຫຼາຍຂັ້ນຕອນ ຄື: ຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລົບລ້າງ ຈຶ່ງສາມາດນຳຄຳພິພາກສາມາຈັດຕັ້ງປະຕິບັດໄດ້ (ຖ້າມີການຂໍອຸທອນ ຫຼື ຂໍລົບລ້າງຈາກຄູ່ຄວາມ[70]) ໂດຍລວມຍະລະເວລາໃນການພິຈາລະນາຢ່າງໜ້ອຍ ສິບຫ້າ ເດືອນ[71]. ສະນັ້ນ, ຈະເຫັນໄດ້ວ່າ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍວິທີການໄກ່ເກ່ຍ ມີຄວາມວ່ອງໄວ ແລະ ປະຢັດຄ່າໃຊ້ຈ່າຍ.

ໃນການແກ້ໄຂຂໍ້ຂັດແຍ່ງ ດ້ວຍການໄກ່ເກ່ຍນີ້ ຄູ່ກໍລະນີ ບໍ່ຈຳເປັນຕ້ອງໄດ້ພິສູດຂໍ້ມູນ ຫຼັກຖານ ເພື່ອຕົກລົງໃຫ້ຂໍ້ຂັດແຍ່ງຈົບລົງ ແມ່ນຂຶ້ນກັບຄູ່ກໍລະນີທີ່ກຳນົດດ້ວຍຕົນເອງ. ຄູ່ກໍລະນີຈະຕ້ອງໄດ້ໃຊ້ຈ່າຍຄ່າທຳນຽມ, ຄ່າບໍລິການ ແລະ ຄ່າແຮງງານຂອງຜູ້ໄກ່ເກ່ຍ[72]. ສຳລັບຄ່າແຮງງານຂອງຜູ້ໄກ່ເກ່ຍ ແມ່ນຂຶ້ນກັບແຕ່ລະຂໍ້ຂັດແຍ່ງ ຊຶ່ງຄູ່ກໍລະນີສາມາດຕົກລົງກັບຜູ້ໄກ່ເກ່ຍ ເພື່ອກຳນົດ ແຕ່ຖ້າເປັນການດຳເນີນຄະດີຢູ່ສານ ຄູ່ຄວາມຕ້ອງໄດ້ຈ່າຍເງິນວາງສານເທື່ອລະບໍ່ເກີນ 200.000 ກີບ[73]. ຄ່າທຳນຽມສານ ລວມມີ ອາກອນຂອງລັດ, ຄ່າໃຊ້ຈ່າຍໃນການດຳເນີນຄະດີໃຫ້ຄະນະກຳມະການ ຕາມການລົງກວດກາ ບ່ອນເກີດຂໍ້ຂັດແຍ່ງຕົວຈິງ, ຄ່າເອກະສານ ແລະ ຄ່າສຳເນົາເອກະສານຕ່າງໆ[74]. ໃນນີ້ ການເສຍອາກອນຂອງລັດ ສອງສ່ວນຮ້ອຍ ຂອງມູນຄ່າການຮ້ອງຟ້ອງກໍບໍ່ມີເພດານຈຳກັດໄວ້ ໝາຍຄວາມວ່າ ຂຶ້ນກັບມູນຄ່າການຮ້ອງຟ້ອງ ມູນຄ່າສູງກໍຈະຕ້ອງເສຍຫຼາຍ ມູນຄ່າຕ່ຳກໍຈະໄດ້ເສຍໜ້ອຍ ແຕ່ຕ້ອງຄຳນຶງວ່າ ການດຳເນີນຄະດີຂອງສານນັ້ນ ມີຫຼາຍຂັ້ນ ແລະ ທຸກໆຂັ້ນ ອາດມີຄ່າໃຊ້ຈ່າຍເກີດຂຶ້ນ ໂດຍຂຶ້ນກັບຂໍ້ມູນ ຫຼັກຖານໃນຄະດີນັ້ນຈະຄົບຖ້ວນ ຫຼື ບໍ່ຄົບຖ້ວນ ແລະ ຜູ້ພິພາກສາ ມີຄວາມຈຳເປັນຕ້ອງລົງເກັບກຳຂໍ້ມູນ ຫຼັກຖານຕື່ມອີກ. ເມື່ອສົມທຽບແລ້ວ ການດຳເນີນການແກ້ໄຂຂໍຂັດແຍ່ງ ດ້ວຍວິທີການໄກ່ເກ່ຍ ອາດມີຄ່າໃຊ້ຈ່າຍໜ້ອຍກວ່າ ການນຳເອົາຂໍ້ຂັດແຍ່ງໄປແກ້ໄຂຢູ່ສານ.

ນອກຈາກນີ້ ການໄກ່ເກ່ຍ ຍັງມີຄວາມສຳຄັນແກ່ຄູ່ກໍລະນີ ຊຶ່ງມີເສລີພາບໃນການເຈລະຈາຕໍ່ລອງ, ຊອກຫາທາງອອກດ້ວຍຕົນເອງ, ບໍ່ມີຄວາມຕາຍຕົວ ສາມາດຜ່ອນຜັນ, ຜ່ອນສັ້ນຜ່ອນຍາວໃຫ້ແກ່ກັນ ໂດຍຜູ້ໄກ່ເກ່ຍເປັນຜູ້ຊ່ວຍເຫຼືອປຶກສາຫາລື ນຳແຕ່ລະຝ່າຍ ເພື່ອອຳນວຍຄວາມສະດວກໃຫ້ທັງສອງຝ່າຍ ຕົກລົງກັນໂດຍດີ ແລະ ການໄກ່ເກ່ຍ ນີ້ມີລັກສະນະຄວາມເປັນວິຊາການ ເພາະຜູ້ໄກ່ເກ່ຍ ສ່ວນຫຼາຍແມ່ນໄດ້ຄັດເລືອກມາຈາກຫຼາຍສາຂາອາຊີບ ຊຶ່ງອາດຈະແມ່ນນັກເສດຖະສາດ, ນັກອອກແບບ, ນັກກົດໝາຍ ຫຼື ນັກບັນຊີ ແລະ ອື່ນໆ ອັນເປັນການສ້າງຄວາມໝັ້ນໃຈແກ່ ຄູ່ກໍລະນີໃນການຄັດເລືອກເອົາຜູ້ມີຄວາມຮູ້ເໝາະສົມ ເພື່ອມາແກ້ຂໍ້ຂັດແຍ່ງແກ່ຕົນ.

---

[70] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 262 ແລະ 290

[71] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 30

[72] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 53

[73] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 156

[74] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 155

### 1.3 ຈຸດປະສົງ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການໄກ່ເກ່ຍ ມີຈຸດປະສົງ ເພື່ອເຮັດໃຫ້ຄູ່ກໍລະນີຕົກລົງຢຸດຕິຂໍ້ຂັດແຍ່ງ ດ້ວຍຄວາມສະໝັກໃຈ ໂດຍມີຜູ້ໄກ່ເກ່ຍເປັນຄົນກາງ.

### 1.4 ຄວາມຄ້າຍຄື ແລະ ຄວາມແຕກຕ່າງ ລະຫວ່າງ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍວິທີການໄກ່ເກ່ຍ ຢູ່ ສກສ ຫຼື ຫກສ ແລະ ການໄກ່ເກ່ຍ ຢູ່ສານປະຊາຊົນ

ໃນການເຄື່ອນໄຫວແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນັ້ນ ອາດຈະນໍາໃຊ້ໃນລະບົບການແກ້ໄຂຂອງ ສກສ ຫຼື ຫກສ ຫຼື ໃນລະບົບຂອງສານກໍໄດ້ ແລ້ວແຕ່ຄວາມສະໝັກໃຈຂອງຄູ່ກໍລະນີ ແລະ ສອດຄ່ອງກັບສັນຍາ. ສະນັ້ນ, ການແກ້ໄຂໃນສອງລະບົບນີ້ ກໍມີຄວາມຄ້າຍຄື ແລະ ແຕກຕ່າງກັນ ດັ່ງນີ້:

**ຈຸດຄ້າຍຄືກັນ**

| | **ການໄກ່ເກ່ຍຂໍ້ຂັດແຍ່ງ ໂດຍ ສກສ ຫຼື ຫກສ ແລະ ການໄກ່ເກ່ຍຂໍ້ຂັດແຍ່ງ ໂດຍສານປະຊາຊົນ** |
|---|---|
| ບໍ່ເຄັ່ງຂືມຈົນເກີນໄປ | ວິທີການແກ້ໄຂມີລັກສະນະເປັນກັນເອງໂດຍ ຄູ່ກໍລະນີສາມາດເຈລະຈາ ແລະ ຊອກຫາທາງອອກຮ່ວມກັນ ຊຶ່ງມີຜູ້ໄກ່ເກ່ຍ ຫຼື ຜູ້ພິພາກສາ ເປັນຄົນກາງ ໃນການອະທິບາຍ ເພື່ອໃຫ້ຄູ່ກໍລະນີສາມາດຍອມຮັບເອົາເງື່ອນໄຂຂອງກັນ ແລະ ກັນ. |
| ຮັກສາຄວາມສາມັກຄີ | ເມື່ອມີການຕົກລົງທາງອອກຮ່ວມກັນແລ້ວ ຄູ່ກໍລະນີທັງສອງຝ່າຍກໍຍັງສາມາດຮັກສາສາຍພົວພັນອັນດີງາມ ຊຶ່ງກັນ ແລະ ກັນໄວ້ໄດ້ຄືເກົ່າ ແລະ ສາມາດສືບຕໍ່ພົວພັນຮ່ວມມືກັນດໍາເນີນທຸລະກິດໄດ້ຕໍ່ໄປອີກ. |
| ປະຢັດເວລາ | ການໄກ່ເກ່ຍ ຂຶ້ນກັບຄູ່ກໍລະນີ ທັງສອງຝ່າຍ ທີ່ຕົກລົງຢຸດຕິຂໍ້ຂັດແຍ່ງນໍາກັນແລ້ວ ກໍນໍາເອົາຜົນຂອງການໄກ່ເກ່ຍນັ້ນ ໄປຈັດຕັ້ງປະຕິບັດທັນທີ. |
| ບົດບັນທຶກຜົນຂອງການໄກ່ເກ່ຍ | ບໍ່ສາມາດຂໍອຸທອນ ບົດບັນທຶກຜົນຂອງການໄກ່ເກ່ຍໄດ້. |

**ຈຸດແຕກຕ່າງກັນ**

| | **ການໄກ່ເກ່ຍຂໍ້ຂັດແຍ່ງ ໂດຍ ສກສ ຫຼື ຫກສ** | **ການໄກ່ເກ່ຍຂໍ້ຂັດແຍ່ງ ໂດຍສານປະຊາຊົນ** |
|---|---|---|
| **ຜູ້ໄກ່ເກ່ຍ** | ນັກໄກ່ເກ່ຍ ແມ່ນຜູ້ໄດ້ຮັບການຄັດເລືອກຈາກບັນຊີລາຍຊື່ ທີ່ມາຈາກຫຼາຍພາກສ່ວນ ໂດຍໄດ້ຮັບການແຕ່ງຕັ້ງຈາກລັດຖະມົນຕີກະຊວງຍຸຕິທຳ ແລະ ໂດຍທົ່ວໄປແລ້ວ ກໍແມ່ນຄູ່ກໍລະນີເອງເປັນ ຜູ້ເລືອກເອົາດ້ວຍຄວາມສະໝັກໃຈຂອງທັງສອງຝ່າຍ. | ຜູ້ພິພາກສາ ແມ່ນຜູ້ທີ່ຮັບການແຕ່ງຕັ້ງຈາກຄະນະປະຈຳສະພາແຫ່ງຊາດ ຊຶ່ງມີສິດພິຈາລະນາຕັດສິນຄະດີ[75]. |
| **ການນຳເອົາຂໍ້ຂັດແຍ່ງເຂົ້າສູ່ຂະບວນການໄກ່ເກ່ຍ** | ບົນພື້ນຖານຄວາມສະໝັກໃຈຂອງຄູ່ກໍລະນີ. | ຜູ້ພິພາກສາ ມີສິດນຳເອົາຂໍ້ຂັດແຍ່ງເຂົ້າສູ່ຂະບວນການໄກ່ເກ່ຍ ໃນທຸກຂັ້ນຕອນຂອງການດຳເນີນຄະດີ ແລະ ສານທຸກຂັ້ນ. |
| **ການປະຕິບັດຜົນຂອງການໄກ່ເກ່ຍ** | ຄູ່ກໍລະນີປະຕິບັດກັນເອງ, ຖ້າປະຕິບັດບໍ່ໄດ້ ຝ່າຍທີ່ອັບປະໂຫຍດ ມີສິດຮ້ອງຂໍຕໍ່ສານ ເພື່ອໃຫ້ສານອອກຄຳຊີ້ຂາດຮັບຮອງເອົາຜົນຂອງການໄກ່ເກ່ຍ ແລ້ວສົ່ງໃຫ້ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເປັນຜູ້ຈັດຕັ້ງປະຕິບັດ[76]. | ສານ ອອກຄຳສັ່ງໃຫ້ປະຕິບັດຜົນຂອງການໄກ່ເກ່ຍ ແລ້ວສົ່ງສຳນວນຄະດີໄປຍັງ ຫ້ອງການ ຫຼື ໜ່ວຍງານ ຈັດຕັ້ງປະຕິບັດຄຳຕັດສິນ ເປັນຜູ້ຈັດຕັ້ງປະຕິບັດ[77]. |
| **ການຮັກສາຄວາມລັບ** | ຂໍ້ມູນ ແລະ ເອກະສານຕ່າງໆ ທີ່ໄດ້ນຳສະເໜີໃນເວລາໄກ່ເກ່ຍ ຕ້ອງຮັກສາເປັນຄວາມລັບ, ຜູ້ໄກ່ເກ່ຍ, ຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມອື່ນ ບໍ່ມີສິດເປີດເຜີຍຄວາມລັບຕໍ່ບຸກຄົນພາຍນອກ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກຄູ່ລະນີເທົ່ານັ້ນ[78]. | ການໄກ່ເກ່ຍ ສາມາດນຳໄປເປັນຂໍ້ມູນໃນການພິຈາລະນາຄະດີ ແຕ່ບໍ່ສາມາດນຳເປັນຫຼັກຖານໄດ້. |

---

[75] ກົດໝາຍວ່າດ້ວຍສານປະຊາຊົນ (ສະບັບປັບປຸງ ປີ 2009) ມາດຕາ 45

[76] ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 51 (ການອອກຄຳຊີ້ຂາດຂອງສານເພື່ອຮັບຮອງເອົາຜົນຂອງການໄກ່ເກ່ຍນັ້ນ ສານຈະກວດກາເບິ່ງການດຳເນີນການໄກ່ເກ່ຍ ຂອງສກສ ຫຼື ຫກສ ເຮັດຂຶ້ນໂດຍຖືກຕ້ອງຕາມກົດໝາຍ ບໍ່ຂັດກັບສົນທິສັນຍາທີ່ ສປປລາວ ເຂົ້າເປັນພາຄີແລ້ວບໍ່ ບໍ່ແຕະຕ້ອງເຖິງຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ຫຼື ສິ່ງແວດລ້ອມ ບໍ່ແລ້ວຈຶ່ງຮັບຮອງເອົາ ຊຶ່ງກວດກາແຕ່ຮູບການຈະບໍ່ໄດ້ລົງເລິກເຖິງເນື້ອໃນ)

[77] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 201

[78] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 14

## 2. ການເລືອກ, ການແຕ່ງຕັ້ງ, ການຖອນຕົວ ແລະ ການຄ້ານຕົວຜູ້ໄກ່ເກ່ຍ

### 2.1 ການເລືອກຜູ້ໄກ່ເກ່ຍ

ການເລືອກຜູ້ໄກ່ເກ່ຍມີ ສອງ ວິທີ ຄື: ການເລືອກຜູ້ໄກ່ເກ່ຍ ໂດຍຄູ່ກໍລະນີໄດ້ຕົກລົງກັນໃນສັນຍາ ແລະ ຄູ່ກໍລະນີບໍ່ໄດ້ຕົກລົງກັນໃນສັນຍາ.

ໃນກໍລະນີທີ່ຄູ່ກໍລະນີທັງສອງຝ່າຍຫາກໄດ້ຕົກລົງກັນກໍານົດໄວ້ໃນສັນຍາວ່າ ຖ້າວ່າການດໍາເນີນທຸລະກິດຂອງພວກຕົນ ຫາກມີຂໍ້ຂັດແຍ່ງເກີດຂຶ້ນ ຈະນໍາໃຊ້ການແກ້ໄຂຂໍ້ຂັດແຍ່ງ ໂດຍ ສກສ ຫຼື ຫກສ, ໃນນັ້ນ ຄູ່ກໍລະນີ ອາດຕົກລົງກັນກໍານົດກ່ຽວກັບການເລືອກຮູບການແກ້ໄຂຂໍ້ຂັດແຍ່ງ ດ້ວຍການໄກ່ເກ່ຍ, ໄດ້ເລືອກຈໍານວນຜູ້ໄກ່ເກ່ຍ ຫຼື ບາງຄັ້ງຄູ່ກໍລະນີ ໄດ້ບົ່ງຊື່ຜູ້ໄກ່ເກ່ຍໄວ້ໃນສັນຍາແລ້ວ. ສະນັ້ນ, ເມື່ອຂໍ້ຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ເກີດຂຶ້ນໃນເວລາຕໍ່ມາ, ຄູ່ກໍລະນີ ໄດ້ເຂົ້າມາ ສກສ ຫຼື ຫກສ ເພື່ອແຈ້ງຈຸດປະສົງທີ່ພວກຕົນໄດ້ຕົກລົງກັນນັ້ນຕໍ່ ສກສ ຫຼື ຫກສ. ສກສ ຫຼື ຫກສ ຈະຖາມຄູ່ກໍລະນີຄືນກ່ຽວການເລືອກຮູບການ, ເລືອກຈໍານວນຜູ້ໄກ່ເກ່ຍ ແລະ ບຸກຄົນທີ່ຄູ່ກໍລະນີໄດ້ບົ່ງໄວ້ໃຫ້ເປັນຜູ້ໄກ່ເກ່ຍນັ້ນຄືນ ຖ້າວ່າຄູ່ກໍລະນີຫາກໄດ້ຢັ້ງຢືນເອົາຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ, ສກສ ຫຼື ຫກສ ຈະປະຕິບັດຕາມເຈດຈໍານົງ ແລະ ເນື້ອໃນທີ່ໄດ້ກໍານົດໄວ້ໃນສັນຍານັ້ນ ແລະ ສະເໜີໃຫ້ຄູ່ກໍລະນີ ປະກອບເອກະສານຕາມແບບພິມທີ່ ສກສ ກໍານົດອອກ. ຫຼັງຈາກນັ້ນ ສກສ ຫຼື ຫກສ ຈະປະສານໄປຫາຜູ້ໄກ່ເກ່ຍທີ່ຄູ່ກໍລະນີໄດ້ເລືອກແລ້ວມອບສໍານວນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ແກ່ຜູ້ໄກ່ເກ່ຍ ເພື່ອດໍາເນີນການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ.

ໃນກໍລະນີທີ່ຄູ່ກໍລະນີໄດ້ກໍານົດໄວ້ໃນສັນຍາວ່າ ຖ້າມີຂໍ້ຂໍ້ຂັດແຍ່ງທາງດ້ານເສດຖະກິດເກີດຂຶ້ນໃນເວລາດໍາເນີນທຸລະກິດຮ່ວມກັນ ຄູ່ກໍລະນີ ຈະນໍາເອົາຂໍ້ຂັດແຍ່ງນັ້ນໄປແກ້ໄຂຢູ່ ສກສ ຫຼື ຫກສ ຫຼື ບໍ່ໄດ້ກໍານົດໄວ້ໃນສັນຍາກໍຕາມ. ເມື່ອຄູ່ກໍລະນີ ເຂົ້າມາ ສກສ ຫຼື ຫກສ ແລະ ໄດ້ແຈ້ງຈຸດປະສົງ ເພື່ອນໍາໃຊ້ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການໄກ່ເກ່ຍ ຊຶ່ງການຮ້ອງຂໍດັ່ງກ່າວ ບາງຄັ້ງກໍເກີດມາຈາກເຈດຈໍານົງຂອງຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ເປັນຜູ້ຍື່ນຄໍາຮ້ອງ, ບາງຄັ້ງກໍເກີດມາຈາກເຈດຈໍານົງຂອງທັງສອງຝ່າຍ. ພາຍຫຼັງທີ່ ສກສ ຫຼື ຫກສ ໄດ້ຮັບຄໍາຮ້ອງ ແລະ ປະກອບເອກະສານຈາກຜູ້ຮ້ອງຂໍແລ້ວ ສກສ ຫຼື ຫກສ ຈະເຊີນຝ່າຍຖືກຮ້ອງຂໍ ເພື່ອເຂົ້າມາຮັບຊາບ ແລະ ແນະນໍາການຂຽນແກ້ຄໍາຮ້ອງ ແລະ ປະກອບເອກະສານຕາມແບບພິມຂອງ ສກສ ຫຼື ຫກສ. ການເຊີນຄູ່ກໍລະນີເຂົ້າມາ ສກສ ຫຼື ຫກສ ສາມາດເຊີນໄດ້ຫຼາຍຄັ້ງ ເພື່ອໃຫ້ທັງສອງຝ່າຍສາມາດຕົກລົງກັນໄດ້ກ່ຽວກັບຮູບການແກ້ໄຂ, ຈໍານວນຜູ້ໄກ່ເກ່ຍ ແລະ ການເລືອກຜູ້ໄກ່ເກ່ຍ.

ໃນກໍລະນີທີ່ຄູ່ກໍລະນີທັງສອງຝ່າຍບໍ່ເປັນເອກະພາບກັນກ່ຽວກັບຮູບການແກ້ໄຂ ແລະ ຈໍານວນຜູ້ໄກ່ເກ່ຍ, ສກສ ຫຼື ຫກສ ຈະອອກໝາຍເຊີນຄູ່ກໍລະນີທັງສອງຝ່າຍເພື່ອເຂົ້າມາປຶກສາຫາລື ເພື່ອຕົກລົງເປັນເອກະພາບກັນກ່ຽວກັບຮູບການແກ້ໄຂ ແລະ ຈໍານວນຜູ້ໄກ່ເກ່ຍ ເພື່ອມາດໍາເນີນການໄກ່ເກ່ຍຂໍ້ຂັດແຍ່ງທີ່ເກີດຂຶ້ນ ຊຶ່ງຄູ່ກໍລະນີສອງຝ່າຍໄດ້ເລືອກຮູບການແກ້ໄຂ ແລະ ເລືອກຈໍານວນຜູ້ໄກ່ເກ່ຍບໍ່ກົງກັນ ເຊັ່ນ ຝ່າຍໜຶ່ງເລືອກຮູບການໄກ່ເກ່ຍ, ຝ່າຍໜຶ່ງເລືອກຮູບການຕັດສິນ, ຝ່າຍໜຶ່ງເລືອກເອົາຜູ້ໄກ່ເກ່ຍ ໜຶ່ງຄົນ ແຕ່ອີກຝ່າຍໜຶ່ງ ເລືອກຜູ້ໄກ່ເກ່ຍສາມຄົນ. ສະນັ້ນ, ໃນກໍລະນີນີ້ ສກສ ຫຼື ຫກສ ຈະອອກໝາຍເຊີນຫຼາຍຄັ້ງ ເພື່ອໃຫ້ຄູ່ກໍລະນີໄດ້ຕົກລົງເປັນເອກະພາບກັນ.

ຜ່ານການເຊີນຫຼາຍຄັ້ງ ຄູ່ຖ້າກໍລະນີ ຝ່າຍໃດໜຶ່ງ ຫຼື ທັງສອງຝ່າຍ ຫາກບໍ່ເຂົ້າມາຕາມການເຊີນໂດຍບໍ່ມີເຫດຜົນພຽງພໍ ຫຼື ຄູ່ກໍລະນີທັງສອງຝ່າຍໄດ້ເຂົ້າມາຕາມໝາຍເຊີນແລ້ວ ຜ່ານການປຶກສາຫາລື ຄູ່ກໍລະນີບໍ່ສາມາດຕົກລົງກັນໄດ້ກ່ຽວກັບຮູບການແກ້ໄຂ ຫຼື ຈໍານວນຜູ້ໄກ່ເກ່ຍ ສກສ ຫຼື ຫກສ ຈະບໍ່ສາມາດດໍາເນີນການແກ້ໄຂຕໍ່ໄປໄດ້ ແລະ ຈະສົ່ງສໍານວນຄໍາຮ້ອງ, ຄໍາແກ້ຄໍາຮ້ອງ ພ້ອມທັງເອກະສານຕ່າງໆທີ່ປະກອບມານໍາສໍານວນນັ້ນຄືນໃຫ້ຄູ່ກໍລະນີ.

ໃນກໍລະນີທີ່ຄູ່ກໍລະນີທັງສອງຝ່າຍ ເຫັນດີເປັນເອກະພາບກັນກ່ຽວກັບຮູບການແກ້ໄຂ ແລະ ຈຳນວນຜູ້ໄກ່ເກ່ຍໄດ້ແລ້ວ, ສກສ ຫຼື ຫກສ ກໍຈະອອກຂໍ້ຕົກລົງຮັບເອົາສຳນວນຄຳຮ້ອງຂໍມາພິຈາລະນາແກ້ໄຂ ພ້ອມທັງຂຶ້ນເລກທີເປັນສຳນວນຂໍ້ຂັດແຍ່ງ.

ອີງຕາມ ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ການຄັດເລືອກຜູ້ໄກ່ເກ່ຍ ແລະ ກຳມະການໄກ່ເກ່ຍ ມີວິທີການປະຕິບັດ ດັ່ງນີ້:

#### 2.1.1 ກໍລະນີເລືອກຜູ້ໄກ່ເກ່ຍ ໜຶ່ງ ຄົນ

ສກສ ຫຼື ຫກສ ໃຫ້ຄູ່ກໍລະນີຕົກລົງເປັນເອກະພາບເລືອກເອົາຜູ້ໄກ່ເກ່ຍ ໜຶ່ງຄົນ ຈາກປຶ້ມບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ ຂອງ ສກສ, ພາຍຫຼັງຄູ່ກໍລະນີເລືອກໄດ້ແລ້ວ ຕ້ອງເຮັດໜັງສືສະເໜີພ້ອມທັງສົ່ງລາຍຊື່ຜູ້ໄກ່ເກ່ຍທີ່ພວກຕົນເຫັນດີນັ້ນ ໃຫ້ ສກສ ຫຼື ຫກສ ພາຍໃນກຳນົດ ສິບຫ້າ ວັນ ນັບແຕ່ວັນໄດ້ຕົກລົງເຫັນດີແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍເປັນຕົ້ນໄປ[79] (ເອກະສານຊ້ອນທ້າຍ 13) ເພື່ອໃຫ້ ສກສ ຫຼື ຫກສ ແຕ່ງຕັ້ງເປັນຜູ້ໄກ່ເກ່ຍໃນຂັ້ນຕໍ່ໄປ.

ຖ້າວ່າຄູ່ກໍລະນີຫາກເລືອກເອົາຜູ້ໄກ່ເກ່ຍບໍ່ໄດ້ ພາຍໃນກຳນົດເວລາ ສິບຫ້າ ວັນ ນັ້ນ, ສກສ ຫຼື ຫກສ ຈະເປັນຜູ້ເລືອກໃຫ້ ພາຍໃນກຳນົດເວລາ ສິບ ວັນ ນັບແຕ່ວັນໄດ້ຮັບແຈ້ງຈາກຄູ່ກໍລະນີ ຫຼື ຫຼັງຈາກວັນສຸດທ້າຍຂອງກຳນົດເວລາທີ່ກຳນົດໄວ້ເທິງນີ້.

#### 2.1.2 ກໍລະນີເລືອກຜູ້ໄກ່ເກ່ຍ ສາມ ຄົນຂຶ້ນໄປ

ເມື່ອຄູ່ກໍລະນີຫາກເຫັນດີເປັນເອກະພາບກັນເລືອກເອົາຜູ້ໄກ່ເກ່ຍ ສາມຄົນ. ສກສ ຫຼື ຫກສ ຈະສະເໜີໃຫ້ຄູ່ກໍລະນີເລືອກເອົາຜູ້ໄກ່ເກ່ຍຝ່າຍລະໜຶ່ງຄົນ ຈາກປຶ້ມບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ ພາຍໃນກຳນົດສິບຫ້າ ວັນ ນັບແຕ່ວັນທີ່ຄູ່ກໍລະນີເຫັນດີແກ້ໄຂດ້ວຍ ຮູບການໄກ່ເກ່ຍເປັນຕົ້ນໄປ. ຫຼັງຈາກນັ້ນໃຫ້ຜູ້ໄກ່ເກ່ຍ ສອງ ຄົນທີ່ຖືກເລືອກຈາກຄູ່ກໍລະນີແຕ່ລະຝ່າຍນັ້ນ ເລືອກເອົາ ຜູ້ໄກ່ເກ່ຍອີກ ໜຶ່ງຄົນ ຈາກປຶ້ມບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ກຳມະການຕັດສິນ ຂອງ ສກສ ຫຼື ຫກສ ເພື່ອມາເປັນປະທານກຳມະການໄກ່ເກ່ຍ ພາຍໃນກຳນົດ ສິບຫ້າ ວັນ ນັບແຕ່ວັນທີ່ກຳນົດເວລາ ສິບຫ້າ ວັນດັ່ງກ່າວໄດ້ສິ້ນສຸດ[80].

ພາຍຫຼັງເລືອກປະທານໄດ້ແລ້ວ ຕ້ອງເຮັດໜັງສືສະເໜີພ້ອມທັງສົ່ງລາຍຊື່ຜູ້ໄກ່ເກ່ຍທີ່ພວກຕົນເຫັນດີນັ້ນໃຫ້ ສກສ ຫຼື ຫກສ ເພື່ອແຕ່ງຕັ້ງຄະນະໄກ່ເກ່ຍໃນຂັ້ນຕໍ່ໄປຕາມໃບສະເໜີຂອງຄູ່ກໍລະນີ (ເອກະສານຊ້ອນທ້າຍ 14).

ຖ້າວ່າຄູ່ກໍລະນີທັງສອງຝ່າຍ ມີຄວາມຕ້ອງການແກ້ໄຂ ດ້ວຍຜູ້ໄກ່ເກ່ຍ ຫຼາຍກວ່າ ສາມ ຄົນ ເຊັ່ນ ຫ້າ ຄົນ ຫຼື ເຈັດ ຄົນ ວິທີການເລືອກຜູ້ໄກ່ເກ່ຍຈຳນວນດັ່ງກ່າວ ກໍໃຫ້ປະຕິບັດຄືກັນກັບການເລືອກເອົາຜູ້ໄກ່ເກ່ຍ ສາມ ຄົນ.

ຖ້າວ່າຄູ່ກໍລະນີຫາກເລືອກເອົາຜູ້ໄກ່ເກ່ຍບໍ່ໄດ້ ຫຼື ຄະນະໄກ່ເກ່ຍເລືອກປະທານບໍ່ໄດ້ ພາຍໃນກຳນົດເວລາ ສິບຫ້າ ວັນ ນັ້ນ, ສກສ ຫຼື ຫກສ ຈະເປັນຜູ້ເລືອກໃຫ້ ພາຍໃນກຳນົດເວລາ ສິບ ວັນ ນັບແຕ່ວັນທີ່ໄດ້ຮັບແຈ້ງຈາກຄູ່ກໍລະນີ ຫຼື ຫຼັງຈາກວັນສຸດທ້າຍຂອງກຳນົດເວລາທີ່ກ່າວໄວ້ເທິງນີ້.

### 2.2 ການແຕ່ງຕັ້ງຜູ້ໄກ່ເກ່ຍ

#### 2.2.1 ສິດໃນການແຕ່ງຕັ້ງຜູ້ໄກ່ເກ່ຍ

ການແຕ່ງຕັ້ງຜູ້ໄກ່ເກ່ຍ ແມ່ນສິດ ແລະ ໜ້າທີ່ຂອງ ສກສ ຫຼື ຫກສ. ພາຍຫຼັງທີ່ຄູ່ກໍລະນີ ເລືອກໄດ້ຜູ້ໄກ່ເກ່ຍໜຶ່ງຄົນ ຫຼື ສາມຄົນ ຫຼື ຫຼາຍຄົນ ຫຼື ພາຍຫຼັງທີ່ ສກສ ຫຼື ຫກສ ເລືອກໃຫ້ແລ້ວ, ສກສ ຫຼື ຫກສ ຕ້ອງອອກຂໍ້ຕົກລົງ

---

[79] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 23 ວັກ 2

[80] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 23 ວັກ 3

ແຕ່ງຕັ້ງຜູ້ໄກ່ເກ່ຍ, ຄະນະໄກ່ເກ່ຍ ພາຍໃນກຳນົດ ເຈັດ ວັນ ນັບແຕ່ມື້ໄດ້ຮັບລາຍຊື່ຜູ້ໄກ່ເກ່ຍ ຫຼື ຄະນະໄກ່ເກ່ຍເປັນຕົ້ນໄປ (ເອກະສານຊ້ອນທ້າຍ 15 ແລະ 16). ໃນພາກປະຕິບັດຕົວຈິງກ່ອນການແຕ່ງຕັ້ງຜູ້ໄກ່ເກ່ຍ, ສກສ ຫຼື ຫກສ ຈະຖາມເຈດຈຳນົງຂອງເປົ້າໝາຍຜູ້ທີ່ຈະແຕ່ງຕັ້ງເປັນຜູ້ໄກ່ເກ່ຍກ່ອນວ່າ ຜູ້ກ່ຽວສາມາດຮັບເປັນຜູ້ໄກ່ເກ່ຍຂໍ້ຂັດແຍ່ງດັ່ງກ່າວໄດ້ ຫຼື ບໍ່ ແລະ ຜູ້ກ່ຽວສາມາດຮັບເອົາຄ່າແຮງງານທີ່ໄດ້ຕົກລົງກັນກັບຄູ່ກໍລະນີ ໄດ້ ຫຼື ບໍ. ຖ້າຜູ້ໄກ່ເກ່ຍຕອບຮັບແລ້ວ ສກສ ຫຼື ຫກສ ກໍຈະດຳເນີນການແຕ່ງຕັ້ງຜູ້ໄກ່ເກ່ຍໄດ້. ກົງກັນຂ້າມ ຖ້າຜູ້ໄກ່ເກ່ຍ ບໍ່ສາມາດຮັບເອົາຄ່າແຮງງານໄດ້ຕາມທີ່ໄດ້ຕົກລົງກັນ ກໍຖືວ່າເປົ້າໝາຍໄດ້ປະຕິເສດບໍ່ຮັບເປັນຜູ້ໄກ່ເກ່ຍ, ໃນພາກປະຕິບັດຕົວຈິງ ກໍລະນີຜູ້ທີ່ເປັນເປົ້າໝາຍນັ້ນ ສາມາດປະຕິເສດຮັບເປັນຜູ້ໄກ່ເກ່ຍໃນກໍລະນີ ດັ່ງນີ້:

1) ບໍ່ມີຄວາມໝັ້ນໃຈທາງດ້ານວິຊາສະເພາະດ້ານໃດໜຶ່ງຂອງຕົນ;
2) ບໍ່ສາມາດຕົກລົງຄ່າແຮງງານກັບຄູ່ກໍລະນີໄດ້;
3) ຖືກຊັບຊ້ອນໄປປະຕິບັດໜ້າທີ່ຢູ່ແຂວງອື່ນ ຫຼື ຢູ່ຕ່າງປະເທດ;
4) ເສຍຊີວິດກະທັນຫັນ.

ການປະຕິເສດເປັນຜູ້ໄກ່ເກ່ຍ ທີ່ກຳນົດໄວ້ໃນຂໍ້ 1) ຫາ 4) ຂ້າງເທິງນັ້ນ, ສກສ ຫຼື ຫກສ ຈະແຈ້ງຄືນຫາຄູ່ກໍລະນີ ເພື່ອເຂົ້າສູ່ຂະບວນການເລືອກຜູ້ໄກ່ເກ່ຍຄືນໃໝ່ ຕາມມາດຕາ 23 ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍງທາງດ້ານເສດຖະກິດ.

#### 2.2.2 ການມອບສຳນວນໃຫ້ຜູ້ຖືກແຕ່ງຕັ້ງ

ພາຍຫຼັງ ສກສ ຫຼື ຫກສ ໄດ້ແຕ່ງຕັ້ງຜູ້ໄກ່ເກ່ຍ ຫຼື ຄະນະໄກ່ເກ່ຍແລ້ວ ສກສ ຫຼື ຫກສ ຈະມອບສຳນວນຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ຜູ້ໄກ່ເກ່ຍ ຫຼື ຄະນະໄກ່ເກ່ຍ ໂດຍການປະຕິບັດຕາມແບບພິມຂອງ ສກສ (ເອກະສານຊ້ອນທ້າຍ 17) ເພື່ອໃຫ້ຜູ້ໄກ່ເກ່ຍ ຫຼື ຄະນະໄກ່ເກ່ຍ ໄດ້ດຳເນີນການແກ້ໄຂຂໍ້ຂັດແຍ່ງໃນຂັ້ນຕໍ່ໄປ.

### 2.3 ການຖອນຕົວ ແລະ ການຄ້ານຕົວ

ການຖອນຕົວ ແລະ ການຄ້ານຕົວ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເນື່ອງຈາກວ່າ ຜູ້ໄກ່ເກ່ຍ ແມ່ນຜູ້ທີ່ມີບົດບາດໃຫ້ຄວາມເປັນທຳ ແລະ ເປັນຄົນກາງໃນການແກ້ໄຂຂໍ້ຂັດແຍ່ງໃຫ້ແກ່ຄູ່ກໍລະນີ. ສະນັ້ນ, ໃນເວລາຜູ້ໄກ່ເກ່ຍປະຕິບັດບົດບາດດັ່ງກ່າວ ຫາກເຫັນວ່າຕົນຍັງມີຂໍ້ສົງໄສຕໍ່ກັບການໃຫ້ຄວາມເປັນທຳ ແລະ ຄວາມເປັນກາງແກ່ຄູ່ກໍລະນີ ກໍສາມາດຖອນຕົວ. ໃນກໍລະນີທີ່ຜູ້ໄກ່ເກ່ຍບໍ່ຍອມຖອນຕົວອອກຈາກການເປັນຜູ້ໄກ່ເກ່ຍແລ້ວ, ຄູ່ກໍລະນີອີກຝ່າຍໜຶ່ງກໍສາມາດຄ້ານຕົວບຸກຄົນດັ່ງກ່າວອອກຈາກການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ຜູ້ໄກ່ເກ່ຍ ຫຼື ຄະນະໄກ່ເກ່ຍຜູ້ໃດໜຶ່ງ ສາມາດຂໍຖອນຕົວ ຫຼື ຖືກຄ້ານຕົວໄດ້ ນັບແຕ່ວັນໄດ້ຮັບການແຕ່ງຕັ້ງຈົນເຖິງຂັ້ນຕອນຂອງການດຳເນີນການໄກ່ເກ່ຍ.

#### 2.3.1 ການຖອນຕົວ

ຜູ້ໄກ່ເກ່ຍ ມີສິດຖອນຕົວຈາກການໄກ່ເກ່ຍ ຖ້າຫາກເຫັນວ່າຕົນເປັນຍາດພີ່ນ້ອງ ຫຼື ມີສ່ວນພົວພັນກັບຜົນປະໂຫຍດ ຫຼື ມີຂໍ້ຂັດແຍ່ງກັບຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫຼື ຕົນບໍ່ສາມາດປະຕິບັດໜ້າທີ່ໄດ້.[81] ເຖິງວ່າກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາດຕາ 24 ວັກ 1 ຈະກຳນົດເປັນສິດຂອງຜູ້ໄກ່ເກ່ຍໃນການຖອນຕົວທີ່ຈະປະຕິບັດ ຫຼື ບໍ່ປະຕິບັດກໍຕາມ ແຕ່ຜູ້ໄກ່ເກ່ຍ ແມ່ນບຸກຄົນທີ່ມີບົດບາດໃຫ້ຄວາມເປັນກາງ ແລະ ຄວາມເປັນທຳແກ່ຄູ່ກໍລະນີ. ສະນັ້ນ, ຜູ້ໄກ່ເກ່ຍ ຈຶ່ງຕ້ອງຖອນຕົວອອກຈາກການໄກ່ເກ່ຍ ຫາກເຫັນວ່າຕົນຍັງມີຂໍ້ສົງໄສຕໍ່ກັບການໃຫ້

[81] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 24 ວັກ 1

ຄວາມເປັນທຳ ແລະ ຄວາມເປັນກາງແກ່ຄູ່ກໍລະນີ ເຊັ່ນ ມີສ່ວນກ່ຽວຂ້ອງພົວພັນກັບຜົນປະໂຫຍດລວມ ເຖິງຜົນປະໂຫຍດຂອງຕົນເອງ, ຜົວ ຫຼື ເມຍ ຫຼື ຍາດໃກ້ຊິດຂອງຕົນ[82].

ກົດໝາຍໄດ້ກຳນົດໃຫ້ມີການຖອນຕົວ ກໍເພື່ອຮັບປະກັນໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງ ໄດ້ດຳເນີນໄປດ້ວຍຄວາມຍຸຕິທຳ, ໂປ່ງໃສ ແລະ ທ່ຽງທຳ. ຫຼີກເວັ້ນການແກ້ໄຂຂໍ້ຂັດແຍ່ງດ້ວຍຄວາມລຳອຽງ ແລະ ທັງເປັນການຍົກສູງຈັນຍາບັນຂອງຜູ້ໄກ່ເກ່ຍ.

ໃນກໍລະນີທີ່ມີການຂໍຖອນຕົວຈາກການໄກ່ເກ່ຍ, ຜູ້ໄກ່ເກ່ຍຜູ້ນັ້ນ ຕ້ອງເຮັດໜັງສືສະເໜີແຈ້ງເຈດຈຳນົງຂອງຕົນພ້ອມດ້ວຍເຫດຜົນເປັນລາຍລັກອັກສອນ ແລ້ວຍື່ນມາຍັງ ສກສ ຫຼື ຫກສ ເພື່ອພິຈາລະນາ. ພາຍຫຼັງ ສກສ ຫຼື ຫກສ ໄດ້ຄົ້ນຄວ້າ ແລະ ພິຈາລະນາແລ້ວ ເຫັນວ່າການຂໍຖອນຕົວມີເຫດຜົນພຽງພໍ, ສກສ ຫຼື ຫກສ ຈະແຈ້ງເຈດຈຳນົງດັ່ງກ່າວໃຫ້ຜູ້ໄກ່ເກ່ຍທີ່ຍັງເຫຼືອ (ກໍລະນີມີຜູ້ໄກ່ເກ່ຍສາມຄົນ) ແລະ ຄູ່ກໍລະນີທັງສອງຝ່າຍຮັບຊາບ ເພື່ອດຳເນີນການເລືອກ ແລະ ແຕ່ງຕັ້ງຜູ້ໄກ່ເກ່ຍຜູ້ໃໝ່ປ່ຽນແທນ. ໃນພາກປະຕິບັດຕົວຈິງ ການຂໍຖອນຕົວບົນພື້ນຖານການຍື່ນໜັງສືສະເໜີ ເພື່ອສະແດງເຈດຈຳນົງຂອງຜູ້ໄກ່ເກ່ຍນັ້ນ ເປັນເງື່ອນໄຂທີ່ເຮັດໃຫ້ ສກສ ສາມາດດຳເນີນການເລືອກ ແລະ ແຕ່ງຕັ້ງຜູ້ໄກ່ເກ່ຍໃໝ່ມາປ່ຽນແທນ ຫຼື ສກສ ຫຼື ຫກສ ອອກຂໍ້ຕົກລົງປ່ຽນແທນຜູ້ໄກ່ເກ່ຍກໍໄດ້ ໂດຍບໍ່ຕ້ອງອອກໜັງສືລົບລ້າງການແຕ່ງຕັ້ງຜູ້ໄກ່ເກ່ຍທີ່ຂໍຖອນຕົວນັ້ນກໍໄດ້. ສ່ວນວິທີການເລືອກ ແລະ ແຕ່ງຕັ້ງຜູ້ໄກ່ເກ່ຍໃໝ່ນັ້ນ ໃຫ້ປະຕິບັດຕາມມາດຕາ 23 ຂອງກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

### 2.3.2 ການຄ້ານຕົວ

ຄຽງຄູ່ກັບການຖອນຕົວຂອງຜູ້ໄກ່ເກ່ຍນັ້ນ ຄູ່ກໍລະນີກໍມີສິດສະເໜີຂໍຄ້ານຕົວຜູ້ໄກ່ເກ່ຍ ຖ້າຫາກເຫັນວ່າຜູ້ໄກ່ເກ່ຍຜູ້ນັ້ນ ເປັນຍາດພີ່ນ້ອງຂອງຄູ່ກໍລະນີຝ່າຍກົງຂ້າມ ຫຼື ມີສ່ວນພົວພັນກັບຜົນປະໂຫຍດ ຫຼື ມີຂໍ້ຂັດແຍ່ງກັບຄູ່ກໍລະນີອີກຝ່າຍໜຶ່ງ ຫຼື ຜູ້ໄກ່ເກ່ຍເອງບໍ່ສາມາດປະຕິບັດໜ້າທີ່ຂອງຕົນໄດ້.[83] ຊຶ່ງຈະເປັນສາເຫດເຮັດໃຫ້ຄູ່ກໍລະນີ ຝ່າຍໃດຝ່າຍໜຶ່ງເກີດມີຄວາມລະແວງສົງໄສຜູ້ໄກ່ເກ່ຍໃນການການແກ້ໄຂຂໍ້ຂັດແຍ່ງນັ້ນ ຈະບໍ່ໃຫ້ຄວາມເປັນທຳແກ່ຕົນໄດ້.

ໃນກໍລະນີທີ່ມີການຄ້ານຕົວຜູ້ໄກ່ເກ່ຍ ຈາກຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ, ຝ່າຍທີ່ຂໍຄ້ານຕົວນັ້ນ ຕ້ອງເຮັດໜັງສືສະເໜີແຈ້ງເຈດຈຳນົງ ພ້ອມດ້ວຍບອກເຫດຜົນຂອງການຄ້ານຕົວເປັນລາຍລັກອັກສອນແລ້ວຍື່ນມາຍັງ ສກສ ຫຼື ຫກສ ເພື່ອພິຈາລະນາ (ເອກະສານຊ້ອນທ້າຍ 18). ພາຍຫຼັງ ສກສ ຫຼື ຫກສ ໄດ້ຄົ້ນຄວ້າ ແລະ ພິຈາລະນາແລ້ວ ຫາກເຫັນວ່າການຄ້ານຕົວນັ້ນບໍ່ມີເຫດຜົນພຽງພໍ ເຊັ່ນ ຄູ່ກໍລະນີຢາກໄດ້ຜູ້ໄກ່ເກ່ຍທີ່ເປັນເພດຍິງທັງໝົດ ຫຼື ເປັນຊາຍທັງໝົດ ຫຼື ບໍ່ມັກບຸກຄະລິກກະພາບ, ຮູບຮ່າງໜ້າຕາຂອງຜູ້ໄກ່ເກ່ຍ ຫຼື ປະທານຄະນະໄກ່ເກ່ຍ, ສກສ ຫຼື ຫກສ ຕ້ອງຢັ້ງຢືນເອົາຜູ້ໄກ່ເກ່ຍຜູ້ເກົ່າ ຫຼື ຄະນະໄກ່ເກ່ຍຄະນະເກົ່າ ພ້ອມທັງແຈ້ງເຫດຜົນທີ່ບໍ່ອະນຸຍາດໃຫ້ມີການຄ້ານຕົວ ແລ້ວໃຫ້ຜູ້ໄກ່ເກ່ຍ ຫຼື ຄະນະໄກ່ເກ່ຍ ດຳເນີນການໄກ່ເກ່ຍຕໍ່ໄປ.

ຖ້າ ສກສ ຫຼື ຫກສ ຫາກເຫັນວ່າການຄ້ານຕົວນັ້ນມີເຫດຜົນພຽງພໍ ແລະ ຖືກຕ້ອງຕາມມາດຕາ 24 ວັກ 2 ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ສກສ ຫຼື ຫກສ ຈະແຈ້ງເຈດຈຳນົງດັ່ງກ່າວນັ້ນ ຕໍ່ຜູ້ໄກ່ເກ່ຍທີ່ຖືກຄ້ານຕົວ ຫຼື ຜູ້ໄກ່ເກ່ຍທີ່ຍັງເຫຼືອ (ກໍລະນີມີຜູ້ໄກ່ເກ່ຍສາມຄົນ) ພ້ອມດ້ວຍຄູ່ກໍລະນີອີກຝ່າຍໜຶ່ງຊາບ ເພື່ອດຳເນີນການເລືອກ ແລະ ແຕ່ງຕັ້ງຜູ້ໄກ່ເກ່ຍໃໝ່ປ່ຽນແທນ ຫຼື ສກສ ຫຼື ຫກສ ອອກຂໍ້ຕົກລົງປ່ຽນແທນຜູ້ໄກ່ເກ່ຍກໍໄດ້ ໂດຍບໍ່ຕ້ອງອອກໜັງສືລົບລ້າງການແຕ່ງຕັ້ງຜູ້ໄກ່ເກ່ຍທີ່ຖືກຄ້ານຕົວນັ້ນກໍໄດ້. ສ່ວນວິທີການເລືອກ ແລະ ແຕ່ງຕັ້ງຜູ້ໄກ່ເກ່ຍຜູ້ໃໝ່ນັ້ນ ໃຫ້ປະຕິບັດຕາມມາດຕາ 23 ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

---

[82] ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 57 ຂໍ້ 5

[83] ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 24 ວັກ 2

## 3. ຂັ້ນຕອນການດຳເນີນການໄກ່ເກ່ຍ

ຜູ້ໄກ່ເກ່ຍ ຫຼື ຄະນະໄກ່ເກ່ຍ ຕ້ອງດຳເນີນການໄກ່ເກ່ຍພາຍໃນກຳນົດ ສິບຫ້າ ວັນ ນັບແຕ່ ວັນໄດ້ຮັບການແຕ່ງຕັ້ງເປັນຕົ້ນໄປ.[84] ການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງດຳເນີນໂດຍຊ້ອງໜ້າຄູ່ກໍລະນີ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍທີ່ຖືກຕ້ອງຕາມກົດໝາຍເທົ່ານັ້ນ. ສະນັ້ນ, ໂດຍທົ່ວໄປ ສູນ ຫຼື ຫກສ ດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການໄກ່ເກ່ຍ ດັ່ງນີ້:

### 3.1 ການກະກຽມການໄກ່ເກ່ຍ

#### 3.1.1 ການກະກຽມເບື້ອງຕົ້ນ

ພາຍຫຼັງ ໄດ້ຮັບສຳນວນຂໍ້ຂັດແຍ່ງທາງດ້ານເສດຖະກິດຈາກ ສກສ ຫຼື ຫກສ ແລ້ວ ຜູ້ໄກ່ເກ່ຍ ຫຼື ຄະນະໄກ່ເກ່ຍ ຈະຄົ້ນຄວ້າສຳນວນຂໍ້ຂັດແຍ່ງ ເພື່ອຊຸກຍູ້ ແລະ ສ້າງເງື່ອນໄຂໃຫ້ຄູ່ກໍລະນີສາມາດຕົກລົງກັນໄດ້ ດັ່ງນີ້:

1) ຜູ້ໄກ່ເກ່ຍ ຫຼື ຄະນະໄກ່ເກ່ຍ ຈະຄົ້ນຄວ້າຂໍ້ຂັດແຍ່ງທີ່ຕົນຮັບຜິດຊອບວ່າ ກ່ຽວກັບບັນຫາໃດ, ຄູ່ກໍລະນີແມ່ນໃຜ, ຮູບການດຳເນີນທຸລະກິດ, ຂໍ້ຂັດແຍ່ງທີ່ເກີດຂຶ້ນຍ້ອນສາເຫດໃດ, ຜູ້ຮ້ອງຂໍສະເໜີໃຫ້ແກ້ໄຂບັນຫາໃດແດ່ ແລະ ອື່ນໆ;
2) ເຊີນຄູ່ກໍລະນີແຕ່ລະຝ່າຍເຂົ້າໃຫ້ການເພີ່ມ ໃນກໍລະນີທີ່ເຫັນວ່າ ຂໍ້ຂັດແຍ່ງຍັງມີປະເດັນໃດໜຶ່ງທີ່ຍັງບໍ່ຈະແຈ້ງ ຜູ້ໄກ່ເກ່ຍຈະປະສານສົມທົບກັບພະນັກງານຂອງ ສກສ ຫຼື ຫກສ ເພື່ອອອກບັດເຊີນ ເຊີນຄູ່ກໍລະນີແຕ່ລະຝ່າຍ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງເພື່ອເຂົ້າມາໃຫ້ການເພີ່ມກໍໄດ້ ຫຼື ຖ້າຫາກເຫັນວ່າ ມີຄວາມຈຳເປັນຕ້ອງພົບປະເພື່ອປຶກສາຫາລື ຫຼື ພົບປະເປັນການສ່ວນຕົວກັບຄູ່ກໍລະນີແຕ່ລະຝ່າຍກໍສາມາດເຮັດໄດ້ ເພື່ອຢັ່ງເບິ່ງເຖິງຄວາມຕ້ອງການຂອງທັງສອງຝ່າຍ ແລະ ເປັນຂໍ້ມູນໃນການກຳນົດວິທີທາງອອກຊ່ວຍຄູ່ກໍລະນີ. ຄູ່ກໍລະນີແຕ່ລະຝ່າຍ ມີພັນທະໃຫ້ຄວາມຮ່ວມມື ແລະ ເປັນເຈົ້າການໃນການຊອກ ຫຼື ສະໜອງຂໍ້ມູນຫຼັກຖານຕ່າງໆ ທີ່ກ່ຽວຂ້ອງ.

ຖ້າເຫັນວ່າ ຍັງມີປະເດັນໃດໜຶ່ງບໍ່ຈະແຈ້ງຕ້ອງການລົງເກັບກຳຂໍ້ມູນເພີ່ມຕື່ມ ຜູ້ໄກ່ເກ່ຍຕ້ອງໄດ້ປຶກສາຫາລື ແລະ ສະເໜີຕໍ່ຄູ່ກໍລະນີກ່ຽວກັບບັນຫາດັ່ງກ່າວ ຄູ່ກໍລະນີຜູ້ໄກ່ເກ່ຍ ຈະສາມາດລົງເກັບກຳຂໍ້ມູນ ຫຼັກຖານເພີ່ມຕື່ມໄດ້ກໍຕໍ່ເມື່ອໄດ້ມີຄຳເຫັນຂອງຄູ່ກໍລະນີ;

3) ກຳນົດວັນ, ເວລາ, ສະຖານທີ່ ເພື່ອນຳເອົາຂໍ້ຂັດແຍ່ງມາແກ້ໄຂ ຖ້າວ່າຜູ້ໄກ່ເກ່ຍຫາກເຫັນວ່າ ເນື້ອໃນແຕ່ລະປະເດັນທີ່ປະກອບໃນສຳນວນຂໍ້ຂັດແຍ່ງຫາກຄົບຖ້ວນ, ພຽງພໍ ແລະ ພ້ອມຈະດຳເນີນການໄກ່ເກ່ຍແລ້ວ ຈາກນັ້ນຜູ້ໄກ່ເກ່ຍ ກໍແຈ້ງ ແລະ ປະສານມາຍັງພະນັກງານຂອງ ສກສ ຫຼື ຫກສ ເພື່ອກະກຽມເຊີນຄູ່ກໍລະນີ ຫຼື ຜູ້ຕ່າງໜ້າ ເພື່ອດຳເນີນການໄກ່ເກ່ຍ;
4) ປະສານສົມທົບກັບ ສກສ ຫຼື ຫກສ ເພື່ອເຊີນຄູ່ກໍລະນີ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ ຫຼື ຜູ້ເຂົ້າຮ່ວມອື່ນຖ້າມີຕ້ອງເຊີນຄູ່ກໍລະນີ ກ່ອນວັນເປີດກອງປະຊຸມໄກ່ເກ່ຍ ສາມ ວັນລັດຖະການ.

#### 3.1.2 ການກະກຽມກອງປະຊຸມໄກ່ເກ່ຍ

ການກະກຽມກອງປະຊຸມໄກ່ເກ່ຍ ແມ່ນໜ້າທີ່ ແລະ ພາລະບົດບາດຂອງຜູ້ບັນທຶກ ທີ່ຈະຕ້ອງໄດ້ກວດກາວຽກງານລະອຽດ ຄື:

- ກວດກາຄວາມເປັນລະບຽບຮຽບຮ້ອຍຂອງຫ້ອງປະຊຸມໄກ່ເກ່ຍ;

[84] ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 25 ວັກ 1

- ກວດກາການເຂົ້າຮ່ວມຂອງຄູ່ກໍລະນີ ຫຼື ບຸກຄົນທີ່ກ່ຽວຂ້ອງວ່າເຂົ້າມາຄົບຕາມການເຊີນ ດ້ວຍການໃຫ້ລົງທະບຽນການເຂົ້າຮ່ວມໄວ້;
- ເຊີນຄູ່ກໍລະນີ, ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ ແລະ ຜູ້ເຂົ້າຮ່ວມອື່ນ (ຖ້າມີ);
- ເຊີນຜູ້ໄກ່ເກ່ຍ, ຄະນະໄກ່ເກ່ຍ ເຂົ້ານັ່ງປະຈຳທີ່. ຜູ້ບັນທຶກຈະປະກາດລະບຽບໃນຫ້ອງປະຊຸມ[85] ໃຫ້ທຸກຄົນໄດ້ຮັບຊາບ;
- ກະກຽມການບັນທຶກກອງປະຊຸມ.

## 3.2 ການດຳເນີນກອງປະຊຸມໄກ່ເກ່ຍ

ການດຳເນີນກອງປະຊຸມໄກ່ເກ່ຍ ປະກອບດ້ວຍ ສອງ ຂັ້ນຕອນ ດັ່ງນີ້:

### 3.2.1 ການເປີດກອງປະຊຸມ, ແຈ້ງລາຍຊື່ ແລະ ເນື້ອໃນ

ປະທານ ເປັນຜູ້ເປີດກອງປະຊຸມໄກ່ເກ່ຍແລ້ວ

- ແຈ້ງ ຊື່ ແລະ ນາມສະກຸນຂອງຜູ້ໄກ່ເກ່ຍ ຫຼື ຊື່ ແລະ ນາມສະກຸນຂອງປະທານ ແລະ ຄະນະໄກ່ເກ່ຍ (ກໍລະນີຜູ້ໄກ່ເກ່ຍສາມຄົນ) ຕາມຂໍ້ຕົກລົງຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ວ່າດ້ວຍການແຕ່ງຕັ້ງຜູ້ໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ແຈ້ງ ຊື່ ແລະ ນາມສະກຸນຂອງຜູ້ບັນທຶກ;
- ແຈ້ງຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ...../ສກສ.ຂຍສ, ລົງວັນທີ.....ຂໍ້ຂັດແຍ່ງເລື່ອງຫຍັງ......, ແຈ້ງວັນເວລາ, ສະຖານທີ່ດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ແຈ້ງ ຊື່ ແລະ ນາມສະກຸນຂອງຜູ້ຮ້ອງຂໍ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດຈະການ ຂອງຜູ້ຮ້ອງຂໍ;
- ແຈ້ງຊື່ ແລະ ນາມສະກຸນຂອງຜູ້ຖືກຮ້ອງຂໍ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດຈະການ ຂອງຜູ້ຖືກຮ້ອງຂໍ;
- ແຈ້ງສິດໃນການຖອນຕົວ ແລະ ການຄ້ານຕົວຜູ້ໄກ່ເກ່ຍ ໃຫ້ຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມທັງໝົດຮັບຊາບ, ຖ້າມີການຖອນຕົວ ກອງປະຊຸມໄກ່ເກ່ຍ ຈະຖືກເລື່ອນ ແລະ ໂຈະໄປໃສ່ມື້ໃໝ່[86]. ຖ້າບໍ່ມີການຖອນຕົວ ຫຼື ຄ້ານຕົວແລ້ວ, ຜູ້ໄກ່ເກ່ຍ ຫຼື ຄະນະໄກ່ເກ່ຍ ຈະດຳເນີນການໄກ່ເກ່ຍເລີຍ.

### 3.2.2 ການໄກ່ເກ່ຍ

ກ) ຜູ້ໄກ່ເກ່ຍ ຫຼື ປະທານຄະນະໄກ່ເກ່ຍ ປະຕິບັດ ດັ່ງນີ້:

- ໃຫ້ຝ່າຍຮ້ອງຂໍ ໄດ້ສະເໜີກ່ອນ;
- ເລົ່າສະພາບການດຳເນີນທຸລະກິດ, ເຫດການທີ່ເກີດຂຶ້ນ;
- ບັນຫາທີ່ຂັດແຍ່ງກັນທາງດ້ານທຸລະກິດ;

---

[85] ໝາຍເຫດ: ຜູ້ເຂົ້າຮ່ວມຕ້ອງປະຕິບັດຄື: ຫ້າມຜູ້ເຂົ້າຮ່ວມໃຊ້ໂທລະສັບມືຖື, ຫ້າມການເວົ້າຈາບໍ່ສຸພາບ, ຫຍາບຊ້າ, ໃຫ້ຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມສະເໜີບັນຫາດ້ວຍເຫດ ແລະ ຜົນ.

[86] ກໍລະນີ ມີເຫດຈຳເປັນ ຫຼື ເຫດສຸດວິໄສເກີດຂຶ້ນ ເຮັດໃຫ້ການໄກ່ເກ່ຍບໍ່ສາມາດດຳເນີນຕໍ່ໄປໄດ້ ເຊັ່ນ ມີການຖອນຕົວຂອງຜູ້ໄກ່ເກ່ຍ ຫຼື ການຄ້ານຕົວຜູ້ໄກ່ເກ່ຍຂອງຄູ່ກໍລະນີ ຫຼື ຜູ້ເຂົ້າຮ່ວມອື່ນ, ການເຈັບເປັນກະທັນຫັນຂອງຜູ້ໄກ່ເກ່ຍ ຫຼື ຜູ້ເຂົ້າຮ່ວມອື່ນ, ການພົບເຫັນຂໍ້ມູນ ຫຼັກຖານໃໝ່ຂອງຝ່າຍໃດຝ່າຍໜຶ່ງ ທີ່ບໍ່ສາມາດນຳມາສະແດງໃນກອງປະຊຸມໄກ່ເກ່ຍ, ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ໄດ້ດຳເນີນທຸລະກິດຢູ່ຕ່າງປະເທດບໍ່ສາມາດເຂົ້າຮ່ວມໄດ້ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຕາມກົດໝາຍບໍ່ສາມາດຕັດສິນບັນຫາໄດ້, ທັງໝົດນັ້ນ ເປັນສາເຫດເຮັດໃຫ້ໂຈະ ຫຼື ເລື່ອນ ກອງປະຊຸມໄກ່ເກ່ຍໄປໃສ່ວັນໃໝ່ໄດ້. ນອກຈາກນີ້, ການໂຈະ ຫຼື ການເລື່ອນ ກໍຍັງອີງໃສ່ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ສະບັບປັບປຸງ ປີ 2012 ມາດຕາ 215 ແລະ 216

- ໃຫ້ຜູ້ຮ້ອງຂໍ ສະແດງຂໍ້ມູນ ຫຼັກຖານຕ່າງໆ ທີ່ມີ;
- ສະເໜີວິທີການແກ້ໄຂຂອງຕົນ.

ເມື່ອຮັບຟັງຝ່າຍຮ້ອງຂໍແລ້ວ ຜູ້ໄກ່ເກ່ຍ ຈະໃຫ້ຜູ້ທີ່ຖືກຮ້ອງຂໍໄດ້ສະເໜີ:

- ແກ້ຄຳຮ້ອງ;
- ອະທິບາຍ, ຊີ້ແຈງ ກ່ຽວກັບບັນຫາທີ່ເກີດຂຶ້ນ;
- ສະເໜີຂໍ້ມູນ ຫຼັກຖານຕ່າງ ຕາມລຳດັບ (ຖ້າມີ);
- ສະເໜີວິທີການແກ້ໄຂຂອງຕົນຕໍ່ຝ່າຍຮ້ອງຂໍ.

ຖ້າມີການເຂົ້າຮ່ວມຂອງບຸກຄົນທີສາມ, ພະຍານ, ທະນາຍຄວາມ. ຜູ້ໄກ່ເກ່ຍ ກໍຈະໃຫ້ບຸກຄົນດັ່ງກ່າວມີຄຳເຫັນຕາມລຳດັບ. ສຳລັບ ຜູ້ແປພາສາ ສ່ວນຫຼາຍແມ່ນຄູ່ກໍລະນີນຳມາ.

ພາຍຫຼັງຜູ້ໄກ່ເກ່ຍ ໄດ້ຮັບຟັງການເລົ່າເຫດການ, ຂໍ້ສະເໜີ ແລະ ວິທີການແກ້ໄຂຂອງຄູ່ກໍລະນີແລ້ວ, ຜູ້ໄກ່ເກ່ຍ ຫຼື ຄະນະໄກ່ເກ່ຍ ຈະເຮັດບົດບາດເປັນຄົນກາງໄກ່ເກ່ຍ, ປະນີປະນອມໃຫ້ທັງສອງຝ່າຍເພື່ອໃຫ້ຕົກລົງກັນໂດຍດີ.

ໃນເວລາໄກ່ເກ່ຍຢູ່ນັ້ນ ຖ້າຜູ້ໄກ່ເກ່ຍ ຫຼື ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງຫາກເຫັນວ່າ ຍັງມີປະເດັນ ຫຼື ຂໍ້ສົງໄສໃດໜຶ່ງທີ່ບໍ່ຈະແຈ້ງຕ້ອງໄດ້ລົງເກັບກຳຂໍ້ມູນເພີ່ມຕື່ມ, ຜູ້ໄກ່ເກ່ຍ ແລະ ຄູ່ກໍລະນີ ຕ້ອງໄດ້ປຶກສາຫາລື ແລະ ຕົກລົງກັນຕື່ມເພາະບັນຫາດັ່ງກ່າວພົວພັນເຖິງຄ່າໃຊ້ຈ່າຍ ນອກຈາກຄ່າໃຊ້ຈ່າຍຄ່າແຮງງານທີ່ຜູ້ໄກ່ເກ່ຍ ແລະ ຄູ່ກໍລະນີໄດ້ຕົກລົງກັນກ່ອນໜ້ານັ້ນແລ້ວ. ສະນັ້ນ, ບົນພື້ນຖານການຕົກລົງເຫັນດີຂອງຄູ່ກໍລະນີ, ຜູ້ໄກ່ເກ່ຍ ຈຶ່ງສາມາດລົງເກັບກຳຂໍ້ມູນຫຼັກຖານ ເພີ່ມຕື່ມໄດ້; ການລົງເກັບກຳຂໍ້ມູນຫຼັກຖານດັ່ງກ່າວ ເປັນສາເຫດເຮັດໃຫ້ການໄກ່ເກ່ຍທີ່ດຳເນີນຢູ່ນັ້ນຖືກໂຈະ ແລະ ເລື່ອນໄປໃສ່ມື້ໃໝ່. ກົງກັນຂ້າມ ຖ້າວ່າແຕ່ລະປະເດັນຂໍ້ຂັດແຍ່ງນັ້ນ ມີຄວາມຈະແຈ້ງແລ້ວ ຜູ້ໄກ່ເກ່ຍ ຈະມີຄຳເຫັນ ແລະ ສະເໜີວິທີທາງອອກເພື່ອໃຫ້ຂໍ້ສະເໜີຂອງທັງສອງຝ່າຍສາມາດຫຍັບມໍ່ເຂົ້າຫາກັນ ແລະ ຕົກລົງກັນໄດ້ (ແຕ່ວ່າຜູ້ໄກ່ເກ່ຍ ຫຼື ຄະນະໄກ່ເກ່ຍ ບໍ່ມີສິດຕັດສິນບັນຫາທີ່ຂັດແຍ່ງກັນນັ້ນ). ໃນກໍລະນີທີ່ທັງສອງຝ່າຍບໍ່ສາມາດຕົກລົງກັນໄດ້ໃນທີ່ປະຊຸມ, ແຕ່ຄູ່ກໍລະນີທັງສອງຝ່າຍ ຍັງມີຕ້ອງການຂໍໃຫ້ ສກສ ຫຼື ຫກສ ດຳເນີນການໄກ່ເກ່ຍ, ຜູ້ໄກ່ເກ່ຍ ຫຼື ຄະນະໄກ່ເກ່ຍ ກໍສາມາດດຳເນີນການໄກ່ເກ່ຍໄດ້ອີກຫຼາຍຄັ້ງ ເພື່ອເຮັດໃຫ້ຄູ່ກໍລະນີສາມາດຕົກລົງກັນໄດ້, ແຕ່ການດຳເນີນການໄກ່ເກ່ຍ ສູງສຸດບໍ່ໃຫ້ກາຍ ສາມ ຄັ້ງ.

ຂ) ຖ້າສາມາດຕົກລົງກັນໄດ້ ຜູ້ໄກ່ເກ່ຍຈະອອກຄຳຕົກລົງໄກ່ເກ່ຍ ພ້ອມທັງກຳນົດວິທີການ ຈັດຕັ້ງປະຕິບັດບັດ.

ຄ) ຖ້າບໍ່ສາມາດຕົກລົງກັນໄດ້ ກໍຖືວ່າເປັນສາເຫດໜຶ່ງທີ່ພາໃຫ້ການໄກ່ເກ່ຍກໍຈະສິ້ນສຸດລົງ ຕາມມາດຕາ 26 ກົດ ໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດັ່ງນີ້:

- ກໍລະນີທີ່ທັງສອງຝ່າຍບໍ່ສາມາດຕົກລົງກັນໄດ້ໃນເວລາດຳເນີນການໄກ່ເກ່ຍ ແລະ ສະໝັກໃຈປ່ຽນຮູບການແກ້ໄຂຈາກການໄກ່ເກ່ຍມາເປັນການແກ້ໄຂຂໍ້ຂັດແຍ່ງໂດຍກຳມະການຕັດສິນ ຕາມມາດຕາ 27 ວັກ 1 ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ຜູ້ໄກ່ເກ່ຍ ຈະເຮັດບົດບັນທຶກການໄກ່ເກ່ຍໄວ້ຖືວ່າການໄກ່ເກ່ຍໄດ້ສິ້ນສຸດລົງ. (ເນື້ອໃນລະອຽດຂອງການສະເໜີ, ວິທີການປ່ຽນຮູບການຈາກການໄກ່ເກ່ຍ ເປັນການແກ້ໄຂຂໍ້ຂັດແຍ່ງໂດຍກຳມະການຕັດສິນ ໄດ້ກຳນົດໄວ້ໃນ ຂໍ້ 5.3.1).

- ໃນກໍລະນີ ທັງສອງຝ່າຍຕົກລົງເຫັນດີເປັນເອກະພາບກັນຂໍຖອນຄຳຮ້ອງການດຳເນີນການໄກ່ເກ່ຍກໍຈະສິ້ນສຸດລົງ ໝາຍຄວາມວ່າ ຄູ່ກໍລະນີມີເຈດຈຳນົງບໍ່ຕ້ອງການໃຫ້ດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງ ໂດຍຜູ້ໄກ່ເກ່ຍອີກຕໍ່ໄປ.

ງ) ພາຍຫຼັງການໄກ່ເກ່ຍໄດ້ສິ້ນສຸດລົງ ເຖິງວ່າການໄກ່ເກ່ຍຈະສຳເລັດ ຫຼື ບໍ່ສຳເລັດກໍຕາມ ຜູ້ບັນທຶກຕ້ອງໄດ້ເຮັດບົດບັນທຶກໄວ້ສະເໜີ ແລະ ຜູ້ໄກ່ເກ່ຍ ຈະອ່ານເນື້ອໃນຂອງບົດບັນທຶກນັ້ນ ສູ່ຜູ້ເຂົ້າຮ່ວມທັງໝົດຟັງ ແລ້ວພ້ອມກັນລົງລາຍເຊັນໄວ້ເພື່ອເປັນຫຼັກຖານ.

## ຮູບພາບຈຳລອງຫ້ອງປະຊຸມໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ

### ການໄກ່ເກ່ຍດ້ວຍຜູ້ໄກ່ເກ່ຍ ໜຶ່ງຄົນ




ຜູ້ເຂົ້າຮ່ວມ ປະກອບມີ:

1. ຜູ້ໄກ່ເກ່ຍ
2. ຜູ້ບັນທຶກ
3. ຜູ້ຮ້ອງຂໍ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ
4. ຜູ້ຖືກຮ້ອງຂໍ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ
5. ຜູ້ແປພາສາ (ຖ້າມີ)
6. ບຸກຄົນທີສາມ (ຖ້າມີ)
7. ທະນາຍຄວາມ (ຖ້າມີ)

### ການໄກ່ເກ່ຍດ້ວຍຜູ້ໄກ່ເກ່ຍ ສາມຄົນ



ຜູ້ເຂົ້າຮ່ວມ ປະກອບມີ:

1. ປະທານໄກ່ເກ່ຍ
2. ຄະນະໄກ່ເກ່ຍ
3. ຄະນະໄກ່ເກ່ຍ
4. ຜູ້ບັນທຶກ
5. ຜູ້ຮ້ອງຂໍ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ
6. ຜູ້ຖືກຮ້ອງຂໍ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ
7. ຜູ້ແປພາສາ (ຖ້າມີ)
8. ບຸກຄົນທີສາມ (ຖ້າມີ)
9. ທະນາຍຄວາມ (ຖ້າມີ)

***ໝາຍເຫດ:*** **ການຈັດຫ້ອງປະຊຸມໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສກສ ຫຼື ຫກສ ບາງບ່ອນກໍຈັດເປັນຮູບໂຕະມົນ (O) ດັ່ງເຫັນໃນພາບ, ແຕ່ບາງບ່ອນກໍຈັດເປັນໂຕຢູ (U) ແລ້ວແຕ່ຄວາມສະດວກ ແລະ ຄວາມເໝາະສົມຂອງແຕ່ລະທ້ອງຖິ່ນ.**

## 4. ບົດບັນທຶກການໄກ່ເກ່ຍ

ການເຮັດບົດບັນທຶກການໄກ່ເກ່ຍ ເປັນວຽກງານໜຶ່ງທີ່ສຳຄັນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ການໄກ່ເກ່ຍແຕ່ລະຄັ້ງ ຕ້ອງໄດ້ເຮັດບົດບັນທຶກ ແລະ ມີຜູ້ບັນທຶກເຂົ້າຮ່ວມນຳ ເພື່ອເຮັດບົດບັນທຶກເປັນລາຍລັກອັກສອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ຕາມແບບພິມຂອງບົດບັນທຶກການໄກ່ເກ່ຍຂອງ ສກສ ຫຼື ຫກສ (ເອກະສານຊ້ອນທ້າຍ 19 ແລະ 20) ເອີ້ນວ່າ: "ບົດບັນທຶກການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ" ເຖິງວ່າການໄກ່ເກ່ຍຂໍ້ຂັດແຍ່ງນັ້ນຈະບັນລຸບັນຜົນສຳເລັດ ຫຼື ບໍ່ກໍຕາມຕ້ອງໄດ້ເຮັດບົດບັນທຶກໄວ້ ຊຶ່ງຜູ້ບັນທຶກ ຕ້ອງໄດ້ເອົາໃຈໃສ່ບັນຫາຕົ້ນຕໍ ດັ່ງນີ້:

1) ຜູ້ບັນທຶກຕ້ອງກະກຽມຮ່າງບົດບັນທຶກການໄກ່ເກ່ຍ;
2) ຜູ້ບັນທຶກຕ້ອງຕັ້ງໃຈຟັງ ແລະ ບັນທຶກໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມປະເດັນການສະເໜີຂອງຄູ່ກໍລະນີ;
3) ຕ້ອງຂຽນໃຫ້ສະອາດ, ຈົບງາມ, ຊັດເຈນ ແລະ ກະທັດຮັດ ຖືກຕ້ອງຕາມຫຼັກໄວຍາກອນພາສາລາວ;
4) ພາຍຫຼັງສຳເລັດແລ້ວ ຜູ້ບັນທຶກ ຕ້ອງອ່ານບົດບັນທຶກສູ່ຜູ້ເຂົ້າຮ່ວມທັງໝົດຟັງ ແລ້ວໃຫ້ລົງລາຍເຊັນ;
5) ບັນທຶກໄກ່ເກ່ຍ ເຮັດເປັນ 4 ສະບັບ, ມອບໃຫ້ຄູ່ກໍລະນີຝ່າຍລະ 1 ສະບັບ, ຮັກສາໄວ້ສຳນວນ 1 ສະບັບ, ແຟ້ມເອກະສານ 1 ສະບັບ (ຍົກເວັ້ນຄູ່ກໍລະນີມີຫຼາຍຄົນ).

**ບົດບັນທຶກການໄກ່ເກ່ຍ ປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:**

ການສິ້ນສຸດການໄກ່ເກ່ຍຕາມມາດຕາ 26 ຂໍ້ 2, ຂໍ້ 3, ຂໍ້ 4 ການເຮັດບົດບັນທຶກຕ້ອງຂຽນລາຍລະອຽດໄດ້ແຕ່ ຂໍ້ 1 ຫາ ຂໍ້ 5 ແລະ 8

1) ເວລາ, ວັນ, ເດືອນ, ປີ, ເລື່ອງ ແລະ ເລກທີຂອງຂໍ້ຂັດແຍ່ງ ແລະ ສະຖານທີ່ໄກ່ເກ່ຍ;
2) ຊື່ ແລະ ນາມສະກຸນ ຂອງຜູ້ໄກ່ເກ່ຍ ແລະ ຜູ້ບັນທຶກ;
3) ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ ແລະ ທີ່ຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດຈະການຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ;
4) ເນື້ອໃນຕົ້ນຕໍຂອງຂໍ້ຂັດແຍ່ງ;
5) ຜົນຂອງການໄກ່ເກ່ຍ;
6) ວິທີການຈັດຕັ້ງປະຕິບັດຄຳຕົກລົງໄກ່ເກ່ຍ;
7) ຄວາມຮັບຜິດຊອບໃນການຈ່າຍຄ່າທຳນຽມ, ຄ່າບໍລິການ, ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງຂອງຄູ່ກໍລະນີແຕ່ລະຝ່າຍ;
8) ເວລາ, ວັນ, ເດືອນ, ປີ ສິ້ນສຸດການໄກ່ເກ່ຍ, ລາຍເຊັນຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ, ຜູ້ໄກ່ເກ່ຍ, ຜູ້ບັນທຶກ ແລະ ຂອງຫົວໜ້າ ສກສ ຫຼື ຫກສ ບ່ອນດຳເນີນ ການໄກ່ເກ່ຍນັ້ນ[25].

ການສິ້ນສຸດການໄກ່ເກ່ຍຕາມມາດຕາ 26 ຂໍ້ 1 ແມ່ນການການໄກ່ເກ່ຍສຳເລັດຜົນ ທີ່ຕົກລົງກັນໄດ້. ບົດບັນທຶກການໄກ່ເກ່ຍຈະຂຽນເນື້ອໃນເຕັມແຕ່ ຂໍ້ 1 ຫາ ຂໍ້ 8

ການເຮັດບົດບັນທຶກ ຕ້ອງອີງໃສ່ແຕ່ລະກໍລະນີການສິ້ນສຸດການໄກ່ເກ່ຍ. ສະນັ້ນ, ການບັນທຶກການໄກ່ເກ່ຍສາມາດແບ່ງອອກເປັນ 2 ປະເພດຄື: ບົດບັນທຶກການຕົກລົງກັນໄດ້ ແລະ ການເຮັດບົດບັນທຶກໄກ່ເກ່ຍກັນບໍ່ໄດ້.

ການໄກ່ເກ່ຍກັນໄດ້ ຕາມມາດຕາ 26 ຂໍ້ 1 ແມ່ນເປັນການໄກ່ເກ່ຍທີ່ບັນລຸສຳເລັດຜົນ. ສະນັ້ນ, ການເຮັດບົດບັນທຶກການໄກ່ເກ່ຍ ຜູ້ບັນທຶກຕ້ອງຂຽນເນື້ອໃນເຕັມ ແຕ່ຂໍ້ 1 ຫາ ຂໍ້ 8 ຂອງມາດຕາ 28 ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ດັ່ງ ຮູບແບບຂອງເນື້ອໃນບົດບັນທຶກເທິງນັ້ນ). ບາງຄັ້ງການໄກ່ເກ່ຍຕ້ອງໄດ້ດຳເນີນຫຼາຍຄັ້ງ ຈຶ່ງບັນລຸຜົນສຳເລັດ ເພາະການດຳເນີນການໄກ່ເກ່ຍຄັ້ງທຳອິດອາດຈະບໍ່ບັນລຸຜົນສຳເລັດສະເໝີໄປ. ຖ້າວ່າຄູ່ກໍລະນີທັງສອງຝ່າຍຍັງມີເຈດຈຳນົງໃຫ້ ສກສ ຫຼື ຫກສ ດຳເນີນການໄກ່ເກ່ຍ ເປັນຄັ້ງທີສອງ ຫຼື ຄັ້ງທີສາມ ສກສ ຫຼື ຫກສ ກໍສາມາດດຳເນີນການໄກ່ເກ່ຍຕໍ່ໄປໄດ້. ໃນກໍລະນີທີ່ດຳເນີນການໄກ່ເກ່ຍຫຼາຍຄັ້ງຈຶ່ງບັນລຸຜົນສຳເລັດນັ້ນ ຜູ້ບັນທຶກ ຈະຕ້ອງເຮັດບົດບັນທຶກແຕ່ລະຄັ້ງໄວ້ ໂດຍອີງໃສ່ເນື້ອໃນມາດຕາ 28 ແລະ ນຳໃຊ້ແບບພິມຂອງ ສກສ. ໃນການໄກ່ເກ່ຍຫຼາຍຄັ້ງທີ່ບໍ່ບັນລຸຜົນສຳເລັດ ເຮັດໃຫ້ການເຮັດບົດບັນທຶກ ສາມາດຂຽນລາຍລະອຽດໄດ້ແຕ່ຂໍ້ 1 ຫາ ຂໍ້ 5 ແລະ ຂໍ້ 8, ສ່ວນຂໍ້ 6 ແລະ ຂໍ້ 7 ສາມາດຂຽນເພີ່ມຕື່ມໃສ່ໄດ້ ພາຍຫຼັງການໄກ່ເກ່ຍຂໍ້ຂັດແຍ່ງນັ້ນ ສາມາດຕົກລົງກັນໄດ້ (ເນື້ອໃນລາຍລະອຽດ ໄດ້ກຳນົດໄວ້ໃນຂໍ້ 5.1)

ສ່ວນການເຮັດບົດບັນທຶກເມື່ອຕົກລົງກັນບໍ່ໄດ້ ແມ່ນເຮັດບົດບັນທຶກການໄກ່ເກ່ຍທີ່ໄດ້ສິ້ນສຸດລົງ ຕາມມາດຕາ 26 ຂໍ້ 2, ຂໍ້ 3, ຂໍ້ 4 ເຊັ່ນ ຄູ່ກໍລະນີຝ່າຍໜຶ່ງ ຫຼື ທັງສອງຝ່າຍບໍ່ເຂົ້າຮ່ວມການໄກ່ເກ່ຍໂດຍບໍ່ມີເຫດຜົນພຽງພໍ; ຄູ່ກໍລະນີບໍ່ສາມາດຕົກລົງກັນໄດ້; ແລະ ຄູ່ກໍລະນີຝ່າຍ ໃດຝ່າຍໜຶ່ງເສຍຊີວິດໂດຍບໍ່ມີຜູ້ສືບທອດ ລວມທັງກໍລະນີການຂໍຖອນຄຳຮ້ອງຂອງຄູ່ກໍລະນີ ທີ່ບໍ່ໄດ້ກຳນົດໄວ້ໃນມາດຕາ 26. ການເຮັດບົດບັນທຶກດັ່ງກ່າວ ຜູ້ບັນທຶກ ສາມາດບັນທຶກເລີ່ມແຕ່ຂໍ້ 1 ຫາ ຂໍ້ 5 ແລະ ຂໍ້ 8. ສ່ວນ ຂໍ້ 6 ແລະ ຂໍ້ 7 ຈະປະວ່າງໄວ້ໂດຍບໍ່ໄດ້ຂຽນຂໍ້ມູນໃສ່ (ເນື້ອໃນລາຍລະອຽດໄດ້ກຳນົດໄວ້ໃນຂໍ້ 5.3).

ພາຍຫຼັງເຮັດບົດບັນທຶກແລ້ວຕ້ອງອ່ານສູ່ຜູ້ເຂົ້າຮ່ວມຟັງ ແລະ ໃຫ້ຄູ່ກໍລະນີທັງສອງຝ່າຍ, ຜູ້ໄກ່ເກ່ຍ ຫຼື ຄະນະໄກ່ເກ່ຍ, ຜູ້ບັນທຶກ ພ້ອມກັນລົງລາຍເຊັນໄວ້ ພ້ອມທັງ ມີລາຍເຊັນຢັ້ງຢືນຈາກຫົວໜ້າ ສກສ ຫຼື ຫົວໜ້າ ຫກສ ບ່ອນດຳເນີນການໄກ່ເກ່ຍນັ້ນ.

## 5. ການສິ້ນສຸດການໄກ່ເກ່ຍ

ການສິ້ນສຸດການໄກ່ເກ່ຍປະກອບມີ ສີ່ ປະເພດລຸ່ມນີ້:

1) ການຕົກລົງກັນໄດ້ຂອງຄູ່ກໍລະນີ;
2) ການບໍ່ເຂົ້າຮ່ວມໂດຍບໍ່ມີເຫດຜົນຂອງຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ;
3) ຄູ່ກໍລະນີບໍ່ສາມາດຕົກລົງກັນໄດ້;
4) ຄູ່ກໍລະນີເສຍຊີວິດໂດຍບໍ່ມີຜູ້ສືບທອດ.

### 5.1 ການຕົກລົງກັນໄດ້ຂອງຄູ່ກໍລະນີ

ການດຳເນີນການໄກ່ເກ່ຍ ເປັນຂັ້ນຕອນໜຶ່ງທີ່ມີຄວາມໝາຍ ແລະ ຄວາມສຳຄັນໃນການແກ້ໄຂບັນຫາໃນລະບົບຍຸຕິທຳ ກໍຄືການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຖ້າຄູ່ກໍລະນີຕົກລົງກັນໄດ້ເອງດ້ວຍການປະນີປະນອມ ຄະນະກຳມະການໄກ່ເກ່ຍຕ້ອງເຮັດບົດບັນທຶກເປັນລາຍລັກອັກສອນ ແລະ ມີລາຍເຊັນຂອງຄູ່ກໍລະນີພ້ອມດ້ວຍພະຍານທີ່ເຂົ້າຮ່ວມ, ຜູ້ໄກ່ເກ່ຍ, ຜູ້ບັນທຶກ ແລະ ລາຍເຊັນຂອງຫົວໜ້າສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍາງທາງດ້ານເສດທະກິດ ບ່ອນດຳເນີນການແກ້ໄຂນັ້ນ.

ເມື່ອຄູ່ກໍລະນີສາມາດຕົກລົງກັນໄດ້ ແລະ ມີບົດບັນທຶກຊຶ່ງເຊັນໂດຍຫົວໜ້າ ສກສ ຫຼື ຫກສ ເປັນທີ່ຮຽບຮ້ອຍແລ້ວ ຄູ່ກໍລະນີອາດຈະເລືອກເອົາຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໄປປະຕິບັດດ້ວຍຕົນເອງ ຫຼື ຈັດຕັ້ງປະຕິບັດໂດຍອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

ຖ້າວ່າຄູ່ກໍລະນີຫາກເລືອກນຳໄປປະຕິບັດກັນເອງ ຄູ່ກໍລະນີກໍມີພັນທະໃນການຈັດຕັ້ງປະຕິບັດຜົນຂອງການແກ້ໄຂທາງດ້ານເສດຖະກິດດ້ວຍການໄກ່ເກ່ຍພາຍໃນກຳນົດ ສິບຫ້າວັນ ນັບແຕ່ວັນໄດ້ມີການຕົກລົງເປັນຕົ້ນໄປ.

ຖ້າຄູ່ກໍລະນີຝ່າຍໃດໜຶ່ງຫາກບໍ່ປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍແລ້ວ ຄູ່ກໍລະນີຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດຈາກການບໍ່ປະຕິບັດ ມີສິດຮ້ອງຂໍຕໍ່ສານປະຊາຊົນພິຈາລະນາອອກຄຳຊີ້ຂາດເພື່ອບັງຄັບປະຕິບັດ, ເມື່ອສານປະຊາຊົນອອກຄຳຊີ້ຂາດຢັ້ງຢືນແລ້ວ ສານປະຊາຊົນທີ່ອອກຄຳຊີ້ຂາດນັ້ນ ຕ້ອງສົ່ງຄຳຊີ້ຂາດພ້ອມດ້ວຍຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການໄກ່ເກ່ຍ ໃຫ້ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ພະແນກຍຸຕິທຳນະຄອນຫຼວງ ແລະ ບັນດາແຂວງເປັນຜູ້ຈັດຕັ້ງປະຕິບັດ.

**ເນື້ອໃນຂອງບົດບັນທຶກມີ ດັ່ງນີ້:**

1) ເວລາ, ວັນ, ເດືອນ, ປີ, ເລື່ອງ ແລະ ເລກທີ ຂອງຂໍ້ຂັດແຍ່ງ ແລະ ສະຖານທີ່ໄກ່ເກ່ຍ;
2) ຊື່ ແລະ ນາມສະກຸນຂອງຜູ້ໄກ່ເກ່ຍ ຫຼື ຄະນະກຳມະການຕັດສິນ ແລະ ຜູ້ບັນທຶກ;
3) ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປະຈຸບັນ ແລະ ສະຖານທີ່ຕັ້ງກິດຈະການຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ;
4) ເນື້ອໃນຕົ້ນຕໍຂອງຂໍ້ຂັດແຍ່ງ;
5) ຜົນຂອງການໄກ່ເກ່ຍ;
6) ວິທີການຈັດຕັ້ງປະຕິບັດຄຳຕົກລົງຂອງການໄກ່ເກ່ຍ;

7) ຄວາມຮັບຜິດຊອບໃນການຈ່າຍຄ່າທຳນຽມ, ຄ່າບໍລິການ, ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງຂອງຄູ່ກໍລະນີແຕ່ລະຝ່າຍ;
8) ເວລາ, ວັນ, ເດືອນ, ປີ ສິ້ນສຸດການໄກ່ເກ່ຍ, ລາຍເຊັນຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າຂອງຄູ່ກໍລະນີ, ຜູ້ໄກ່ເກ່ຍ, ຜູ້ບັນທຶກ ແລະ ລາຍເຊັນຂອງຫົວໜ້າສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດບ່ອນດຳເນີນການໄກ່ເກ່ຍ.

### 5.2 ການບໍ່ເຂົ້າຮ່ວມໂດຍບໍ່ມີເຫດຜົນຂອງຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ

ສກສ ຫຼື ຫກສ ຕ້ອງສາມາດຮູ້ແຈ້ງວ່າຄູ່ກໍລະນີທີ່ບໍ່ເຂົ້າມານັ້ນມີເຫດຜົນ ຫຼື ບໍ່ມີແທ້ ຫຼື ກໍລະນີຄູ່ກໍລະນີບໍ່ສາມາດຮູ້ກ່ຽວກັບການຮ້ອງຂໍ ຫຼື ໄປຕ່າງປະເທດນັ້ນ ສກສ ຫຼື ຫກສ ກໍຕ້ອງໃຫ້ໂອກາດຄູ່ກໍລະນີເຂົ້າມາຮັບຊາບຖ້າຮູ້ຕາມພາຍຫຼັງ ຫຼື ຄູ່ກໍລະນີອາດຈະໃຫ້ຜູ້ຕາງໜ້າບຸກຄົນ ຫຼື ນິຕິບຸກຄົນເຂົ້າຮ່ວມແທນກໍໄດ້ ຊຶ່ງການຕ່າງໜ້ານີ້ກໍຖືວ່າເປັນການມອບສິດຕາມກົດໝາຍ ແລະ ຜູ້ຖືກມອບສິດກໍສາມາດເຄື່ອນໄຫວວຽກງານຕ່າງໆໄດ້ຄືກັນກັບຜູ້ກ່ຽວໄດ້ເຄື່ອນໄຫວເອງ.

### 5.3 ຄູ່ກໍລະນີບໍ່ສາມາດຕົກລົງກັນໄດ້

ຜ່ານການດຳເນີນການໄກ່ເກ່ຍຫຼາຍຄັ້ງແລ້ວ ຄູ່ກໍລະນີກໍບໍ່ສາມາດຕົກລົງກັນໄດ້ການໄກ່ເກ່ຍກໍສິ້ນສຸດ. ໃນກໍລະນີທີ່ການໄກ່ເກ່ຍຫາກບໍ່ສາມາດຕົກລົງກັນໄດ້ ຖ້າຄູ່ກໍລະນີຕ້ອງການຕໍ່ການແກ້ໄຂ ກໍສາມາດສືບຕໍ່ໄດ້ ດ້ວຍການປ່ຽນຮູບການແກ້ໄຂຈາກຮູບການໄກ່ເກ່ຍ ມາເປັນຮູບການແກ້ໄຂດ້ວຍຮູບການມຕັດສິນໂດຍຄະນະກຳມະການຕັດສິນ ຫຼື ຮ້ອງຟ້ອງຕໍ່ສານກໍໄດ້.

ຖ້າວ່າຄູ່ກໍລະນີຫາກໄດ້ເລືອກເອົາການແກ້ໄຂດ້ວຍຮູບການຕັດສິນ ໂດຍຄະນະກຳມະການຕັດສິນແລ້ວ ຜູ້ໄກ່ເກ່ຍ ຫຼື ຄະນະໄກ່ເກ່ຍ ທີ່ເຮັດໜ້າທີ່ໃນການດຳເນີນການໄກ່ເກ່ຍນັ້ນ ຈະບໍ່ສາມາດປະກອບເຂົ້າໃນຄະນະກຳມະການຕັດສິນອີກ.

#### 5.3.1 ສິດປ່ຽນຮູບການແກ້ໄຂ.

ເມື່ອ ສກສ ຫຼື ຫກສ ໄດ້ຕົກລົງຮັບເອົາຄຳຮ້ອງມາພິຈາລະນາແລ້ວ ໃນເວລາດຳເນີນການແກ້ໄຂຂໍ້ຂັດແຍ່ງນັ້ນ ຄູ່ກໍລະນີເອງກໍມີສິດສະເໜີປ່ຽນຮູບການແກ້ໄຂດ້ວຍການໄກ່ເກ່ຍໄປເປັນຮູບການຕັດສິນ ໂດຍຄະນະກຳມະການຕັດສິນກໍໄດ້.

ຖ້າຄູ່ກໍລະນີຫາກມີຈຸດປະສົງສະເໜີໃຫ້ ສກສ ຫຼື ຫກສ ທຳການປ່ຽນຮູບການແກ້ໄຂໄປເປັນຮູບການອື່ນຕາມຂັ້ນຕອນຂອງການຕັດສິນດ້ວຍຄະນະກຳມະການຕັດສິນ ຫຼື ສະເໜີຕໍ່ສານນັ້ນ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເອງກໍຕ້ອງເຮັດບົດບັກທຶກໄວ້ເຊັນກັນ ເພື່ອຢັ້ງຢືນຄວາມຕ້ອງການຂອງຄູ່ກໍລະນີ ພ້ອມທັງການກະກຽມເຂົ້າສູ່ຂະບວນການຂອງການຄັດເລືອກຄະນະກຳມະການຕັດສິນ.

#### 5.3.2 ການປ່ຽນຮູບການແກ້ໄຂ.

ການປ່ຽນຮູບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເກີດຂຶ້ນພາຍຫຼັງຄູ່ກໍລະນີບໍ່ສາມາດຕົກລົງກັນໄດ້ໃນເວລາໄກ່ເກ່ຍ ແລະ ສະເໜີໃຫ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດຳເນີນການແກ້ໄຂດ້ວຍຮູບການຕັດສິນ ໂດຍຄະນະກຳມະການຕັດສິນ.

ນອກຈາກນັ້ນຖ້າຄູ່ກໍລະນີ ຫາກບໍ່ເຫັນດີໃຫ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດຳເນີນການແກ້ໄຂດ້ວຍຮູບການຕັດສິນ ຄູ່ກໍລະນີກໍມີສິດຮ້ອງຟ້ອງຕໍ່ສານປະຊາຊົນພິຈາລະນາ.

## 5.4 ຄູ່ກໍລະນີເສຍຊີວິດໂດຍບໍ່ມີຜູ້ສືບທອດ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍຮູບການການໄກ່ເກ່ຍ ແຕ່ລະຄັ້ງຕ້ອງມີການເຂົ້າຮ່ວມຂອງຄູ່ກໍລະນີທັງສອງຝ່າຍ ລວມທັງພະຍານ ແຕ່ຖ້າວ່າໃນການດໍາເນີນການໄກ່ເກ່ຍຢູ່ນັ້ນຫາກມີຄູ່ກໍລະນີຝ່າຍໃດໜຶ່ງຫາກເສຍຊີວິດໂດຍບໍ່ມີຜູ້ສືບທອດແລ້ວ ການໄກ່ເກ່ຍຈະສິ້ນສຸດລົງ

ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງເສຍຊີວິດໂດຍບໍ່ມີຜູ້ສືບທອດ ຖືວ່າສິ້ນສຸດ;

- ຖ້າຄູ່ກໍລະນີຝ່າຍໃດຝ່າຍໜຶ່ງເສຍຊີວິດແຕ່ມີຜູ້ສືບທອດຢູ່ ຖ້າຜູ້ສືບທອດນັ້ນຫາກສະແດງເຈດຈໍານົງຂອງຕົນທີ່ຈະສືບຕໍ່ແກ້ໄຂ ກໍສາມາດດໍາເນີນໄດ້, ແຕ່ຖ້າຜູ້ກ່ຽວຫາກປະຕິເສດການດໍາເນີນການໄກ່ເກ່ຍກໍຈະສິ້ນສຸດ.

ຕົວຢ່າງ : ທ້າວ ກ ແລະ ທ້າວ ຂ ໄດ້ຕົກລົງຊື້-ຂາຍສິນຄ້ານໍາກັນ ໃນການຊໍາລະເງິນນັ້ນແມ່ນ ທ້າວ ກ ຕ້ອງຈ່າຍກ່ອນເຄິ່ງໜຶ່ງຂອງມູນຄ່າສິນຄ້າທີ່ຊື້ ພາຍຫຼັງເຮັດສັນຍາແລ້ວ ທ້າວ ຂ ກໍມອບສິນຄ້າໃຫ້ ທ້າວ ກ ໃນເວລາຕໍ່ມາ ທ້າວ ກ ໄດ້ເສຍຊີວິດກະທັນຫັນ ທ້າວ ຂ ກໍເລີຍໄປທວງເອົາເງິນທີ່ຍັງເຫຼືອນໍາລູກຂອງ ທ້າວ ກ ແລະ ກໍໄດ້ຮ້ອງຂໍມາຍັງ ສກສ ຫຼື ຫກສ ທໍາການໄກ່ເກ່ຍໃຫ້ ໃນກໍລະນີນີ້ ຖ້າລູກຂອງທ້າວ ກ ຫາກປະຕິເສດໃນການສືບທອດໂດຍບໍ່ປະຕິບັດຕໍ່ໜີ້ສິນ ຫຼື ບໍ່ສະແດງເຈດຈໍານົງເຂົ້າຮ່ວມໃນການໄກ່ເກ່ຍກໍຈະສິ້ນສຸດ.

ຖ້າຜູ້ເສຍຊີວິດຫາກໄດ້ມອບໝາຍ ຫຼື ມອບສິດໃຫ້ແກ່ບຸກຄົນອື່ນ ຫຼື ຜູ້ຕາງໜ້າອື່ນນັ້ນການດໍາເນີນການໄກ່ເກ່ຍ ກໍສາມາດປະຕິບັດໄປຕໍ່ຕາມຂັ້ນຕອນປົກກະຕິໄດ້ ເພາະການໄກ່ເກ່ຍແຕ່ລະຄັ້ງແມ່ນຕ້ອງຊ້ອງໜ້າຄູ່ກໍລະນີ.

ຕາມກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປັບປຸງປີ 2010 ບໍ່ໄດ້ກໍານົດກ່ຽວກັບການຖອນຄໍາຮ້ອງຂອງຄູ່ກໍລະນີ ໂດຍອີງຕາມຫຼັກການຄວາມສະມັກໃຈຂອງຄູ່ກໍລະນີ ຊຶ່ງໃນກໍລະນີທີ່ທັງສອງຝ່າຍຕົກລົງເຫັນດີເປັນເອກະພາບກັນຂໍຖອນຄໍາຮ້ອງ ການໄກ່ເກ່ຍກໍຈະສິ້ນສຸດລົງ.

ການຖອນຄໍາຮ້ອງຂອງຄູ່ກໍລະນີ ສາມາດເຮັດໄດ້ໃນທຸກເວລາຂອງການດໍາເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດທະກິດ ໃນເມື່ອຄູ່ກໍລະນີໄດ້ສະແດງເຈດຈໍານົງບໍ່ຢາກໃຫ້ມີການແກ້ໄຂຕໍ່ໄປ ສກສ ຫຼື ຫກສ ກໍບໍ່ມີອໍານາດໃນການໄກ່ເກ່ຍ ຫຼື ຕັດສິນຕໍ່ໄປ.

ສກສ ຫຼື ຫກສ ຕ້ອງເຮັດບົດບັນທຶກການຕົກລົງຂອງທັງສອງຝ່າຍ ທີ່ຈະມີການດໍາເນີນຕາມຂັ້ນຕອນອື່ນຕາມຄວາມຕ້ອງການຂອງຄູ່ກໍລະນີ.

# ບົດທີ 6
# ການແກ້ໄຂຂໍ້ຂັດແຍ່ງດ້ວຍການຕັດສິນ

## 1. ຄວາມຮູ້ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງດ້ວຍການຕັດສິນ

### 1.1 ຄວາມໝາຍ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການຕັດສິນ ແມ່ນການດຳເນີນການແກ້ໄຂຂໍ້ພິພາດທາງດ້ານຜົນປະໂຫຍດ ຊຶ່ງຄູ່ກໍລະນີໄດ້ສະໝັກໃຈເລືອກເອົາວິທີການ ກໍຄືຮູບການຕັດສິນ ແລະ ທັງເປັນຜູ້ເລືອກເອົາຄະນະກຳມະການຕັດສິນ ຫຼື ຖ້າຄູ່ກໍລະນີບໍ່ສາມາດເລືອກຄະນະກຳມະການຕັດສິນ ສກສ ຫຼື ຫກສ ກໍຈະເປັນຜູ້ໃຫ້ ເພື່ອພິຈາລະນາຕັດສິນ.

ການແກ້ໄຂຂໍ້ຂັດແຍ່ງດ້ວຍຄະນະກຳມະການຕັດສິນ ແມ່ນການຕົກລົງຂອງຄະນະກຳມະການຕັດສິນ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ[87] ຕໍ່ຂໍ້ພິພາດທາງດ້ານຜົນປະໂຫຍດ ລະຫວ່າງນິຕິບຸກຄົນດ້ວຍກັນ, ນິຕິບຸກຄົນກັບບຸກຄົນ, ບຸກຄົນກັບບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເກີດຂຶ້ນຈາກການລະເມີດສັນຍາ, ການດຳເນີນການຜະລິດ-ທຸລະກິດ[88] ຊຶ່ງຄູ່ກໍລະນີໄດ້ເລືອກເອົາຮູບການຕັດສິນໃນເວລາທີ່ຄູ່ກໍລະນີ ໄດ້ເຊັນສັນຍານຳກັນຕາມທີ່ໄດ້ບົ່ງໄວ້ໃນສັນຍາ ຫຼື ພາຍຫຼັງມີຂໍ້ຂັດແຍ່ງແລ້ວ ທັງສອງໄດ້ພ້ອມໃຈກັນເລືອກເອົາຮູບການນີ້ແລ້ວມາຫາ ສກສ ຫຼື ຫກສ ຫຼື ພາຍຫຼັງໄດ້ຍື່ນຄຳຮ້ອງ ແລະ ຄຳແກ້ຄຳຮ້ອງ ແລ້ວທັງສອງພ້ອມໃຈກັນເລືອກເອົາວິທີການຕັດສິນ.

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການຕັດສິນຂອງຄະນະກຳມະການຕັດສິນ ແມ່ນເຮັດຕາມສິດອຳນາດທີ່ຄູ່ກໍລະນີມອບໃຫ້ ແລະ ຕາມກົດໝາຍ ຊຶ່ງສະແດງອອກ ໃນການທີ່ ສກສ ແລະ ຫກສ ໄດ້ຮັບຄຳຮ້ອງຂອງຄູ່ກໍລະນີແລ້ວ ກໍບໍ່ສາມາດແກ້ໄຂໄດ້ ຖ້າບໍ່ໄດ້ຮັບການເຫັນດີ ຫຼື ບໍ່ມີການເລືອກຮູບການແກ້ໄຂ ແລະ ເລືອກຄະນະກຳມະການ ຈາກຄູ່ກໍລະນີ. ຄຳຕັດສິນຂອງຄະນະກຳມະການຕັດສິນ ມີລັກສະນະເດັດຂາດ ເຖິງວ່າບໍ່ພໍໃຈຕໍ່ຄຳຕັດສິນນັ້ນ ກໍບໍ່ສາມາດຂໍອຸທອນໄດ້ ຊຶ່ງຕ້ອງໄດ້ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

### 1.2 ຄວາມສຳຄັນ

ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຂອງປະເທດເຮົາ ເປັນໄປຕາມກົນໄກເສດຖະກິດຕະຫຼາດ ຊຶ່ງມີການແຂ່ງຂັນກັນໃນດ້ານດຳເນີນການຜະລິດ-ທຸລະກິດ ເປັນຕົ້ນ ດ້ານການຕະຫຼາດ, ຄຸນນະພາບຂອງສິນຄ້າ, ລິຂະສິດ, ການບໍ່ປະຕິບັດສັນຍາ, ການສົ່ງສິນຄ້າບໍ່ທັນຕາມການກຳນົດເວລາ, ການຂັດແຍ່ງທາງດ້ານຜົນປະໂຫຍດ. ຕໍ່ກັບການດຳເນີນການຜະລິດ-ທຸລະກິດດັ່ງກ່າວ ໃນຕົວຈິງແມ່ນບໍ່ສາມາດຫຼີກລ່ຽງຂໍ້ຂັດແຍ່ງ. ແຕ່ຖ້າມີການແກ້ໄຂຂໍ້ຂັດແຍ່ງທີ່ດີ ແລະ ຖືກຕ້ອງກັບຄວາມຮຽກຮ້ອງຕ້ອງການຂອງຜູ້ດຳເນີນທຸລະກິດ ກໍຄືນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ກໍຈະເຮັດໃຫ້ນັກລົງທຶນດັ່ງກ່າວຢາກມາລົງທຶນຢູ່ ສປປ ລາວ ເພີ່ມຂຶ້ນ. ຖ້າມີຂໍ້ຂັດແຍ່ງກັນເກີດຂຶ້ນ ທຸກພາກສ່ວນເສດຖະກິດ ແມ່ນມີຄວາມຕ້ອງການ ໃນການແກ້ໄຂຂໍ້ຂັດແຍ່ງທີ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ສອດຄ່ອງກັບເງື່ອນໄຂຂອງການແກ້ໄຂຂໍ້ຂັດແຍ່ງ ຂອງຕ່າງປະເທດກໍຄືສາກົນ ຊຶ່ງໃນປັດຈຸບັນ ສປປ ລາວ ກໍໄດ້ເຂົ້າເປັນສະມາຊິກຂອງອົງການການຄ້າໂລກ (World Trade Organization ຫຼື WTO) ແລະ ໄດ້ເຂົ້າເປັນສະມາຊິກປະຊາຄົມເສດຖະກິດອາຊຽນ ຊຶ່ງເຮັດໃຫ້ນັກທຸລະກິດທັງພາຍໃນ ແລະ ຕ່າງປະເທດ ມີຄວາມສົນໃຈຕໍ່ການລົງທຶນໃສ່ຂະ ແໜງການຕ່າງໆ ໃນ ສປປ ລາວ. ສະນັ້ນ, ຖ້າມີຂໍ້ຂັດແຍ່ງເກີດຂຶ້ນ ກໍຕ້ອງໄດ້ຮັບການແກ້ໄຂ ໃຫ້ທັນກັບກຳນົດເວລາ ແລະ ສອດຄ່ອງກັບກົດໝາຍ. ຕໍ່ຂໍ້ຂັດແຍ່ງທີ່ເກີດຂຶ້ນ ກໍມີຫຼາຍພາກສ່ວນຂອງລັດ ທີ່ພະຍາຍາມຫາວິທີການແກ້ໄຂໃຫ້ຄູ່

[87] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 29

[88] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 2

ກໍລະນີ ສາມາດຍຸດຕິລົງບົນພື້ນຖານຂໍ້ມູນຫຼັກຖານ ແລະ ກົດໝາຍ ຊຶ່ງການແກ້ໄຂຂໍ້ຂັດແຍ່ງດ້ວຍກຳມະການຕັດສິນ ຂອງ ສກສ ຫຼື ຫກສ ກໍມີຄວາມສຳຄັນ ຄື:

- ປົກປ້ອງສິດ, ຜົນປະໂຫຍດອັນຊອບທຳ ແລະ ສິດເສລີພາບ ຂອງຄູ່ກໍລະນີທີ່ເຂົ້າຮ່ວມໃນການດຳເນີນການຕັດສິນ;
- ສກສ ຫຼື ຫກສ ຕ້ອງຮັບປະກັນໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກໍຄືພົນລະເມືອງທຸກຄົນ ໄດ້ປະຕິບັດຕາມກົດໝາຍຢ່າງຖືກຕ້ອງ, ວ່ອງໄວ, ຮັກສາຄວາມລັບ, ປະຢັດຄ່າໃຊ້ຈ່າຍ, ມີລັກສະນະວິຊາການ ແລະ ບໍ່ຕາຍຕົວ; ການແກ້ໄຂຂໍ້ຂັດແຍ່ງ ດ້ວຍຮູບການຕັດສິນ ຖືເອົາການຕົກລົງເຫັນດີ ຫຼື ຄວາມສະໝັກໃຈຂອງຄູ່ກໍລະນີເປັນພື້ນຖານໃນການດຳເນີນ ຊຶ່ງການແກ້ໄຂດັ່ງກ່າວ ໄດ້ຮັບຄວາມນິຍົມຫຼາຍໃນບັນດາປະເທດທີ່ມີພື້ນຖານເສດຖະກິດພັດທະນາແລ້ວ ແລະ ປະເທດກຳລັງພັດທະນາ, ພ້ອມກັນນີ້ກໍເປັນການບໍ່ແກ່ຍາວເວລາ ໃນການແກ້ໄຂຂໍ້ຂັດແຍ່ງ ຫຼີກລ່ຽງການນຳໄປຟ້ອງຮ້ອງຕໍ່ສານ ຊຶ່ງອາດແກ່ຍາວເວລາ, ສິ້ນເປືອງຄ່າໃຊ້ຈ່າຍ ແລະ ກະທົບກະເທືອນເຖິງຊື່ສຽງກຽດສັກສີຂອງຄູ່ກໍລະນີ;
- ເຮັດໃຫ້ການແກ້ໄຂຂໍ້ຂັດແຍ່ງ ໄດ້ຢ່າງສັນຕິວິທີ ແລະ ເປັນທຳ, ທັງເປັນການຊຸກຍູ້ການດຳເນີນການຜະລິດ-ທຸລະກິດ ໃຫ້ຂະຫຍາຍຕົວສາມາດມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ທັງເປັນການສ້າງສະພາບແວດລ້ອມເອື້ອອຳນວຍ ໃຫ້ແກ່ນັກລົງທຶນທັງພາຍໃນ, ຕ່າງປະເທດ ແລະ ເປັນການປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### 1.3 ຈຸດປະສົງ

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການຕັດສິນ ເພື່ອແກ້ໄຂຂໍ້ພິພາດທາງດ້ານຜົນປະໂຫຍດ ທີ່ເກີດຂຶ້ນຈາກການລະເມີດສັນຍາ, ການຜະລິດ-ທຸລະກິດ ລະຫວ່າງຄູ່ກໍລະນີ ແນໃສ່ເຮັດໃຫ້ຂໍ້ຂັດແຍ່ງໄດ້ຮັບການແກ້ໄຂຢ່າງຖືກຕ້ອງ, ວ່ອງໄວ ແລະ ເປັນທຳ.

## 2. ການເລືອກ, ການແຕ່ງຕັ້ງ, ການມອບສຳນວນຂໍ້ຂັດແຍ່ງ, ການຖອນຕົວ ແລະ ການຄ້ານຕົວ ຄະນະກຳມະການຕັດສິນ

### 2.1 ການເລືອກ, ການແຕ່ງຕັ້ງ ແລະ ການມອບສຳນວນຂໍ້ຂັດແຍ່ງ

#### 2.1.1 ການເລືອກຄະນະກຳມະການຕັດສິນ

ໃນການແກ້ໄຂຂໍ້ຂັດແຍ່ງ ດ້ວຍການຕັດສິນ ຄະນະກຳມະການຕັດສິນ ຕ້ອງປະກອບຄະນະກຳມະການຕັດສິນແຕ່ສາມຄົນຂຶ້ນໄປ ຕາມການຕົກລົງຂອງຄູ່ກໍລະນີ ແຕ່ຕ້ອງເປັນຈຳນວນຄີກສະເໝີ[89].

ການເລືອກຄະນະກຳມະການຕັດສິນ ຂອງຄູ່ກໍລະນີ ຈະມີຂຶ້ນໄດ້ກໍຕໍ່ເມື່ອ ຄູ່ກໍລະນີໄດ້ເຫັນດີເອກະພາບກັນໃນການເລືອກເອົາຮູບການແກ້ໄຂຂໍ້ຂັດແຍ່ງ ດ້ວຍການຕັດສິນ ໃນນີ້ຄູ່ກໍລະນີມີສິດເລືອກເອົາຜູ້ຕັດສິນ ເປັນຈຳນວນຫຼາຍຄົນໄດ້ ແຕ່ຕ້ອງເປັນຈຳນວນຄີກສະເໝີ ຊຶ່ງໜ້ອຍສຸດບໍ່ໃຫ້ຫຼຸດສາມຄົນ.

ຖ້າຄູ່ກໍລະນີຫາກຕົກລົງເລືອກເອົາຄະນະກຳມະການຕັດສິນ ສາມຄົນ ແມ່ນໃຫ້ແຕ່ລະຝ່າຍເລືອກເອົາໜຶ່ງຄົນພາຍໃນກຳນົດ ສິບຫ້າວັນນັບແຕ່ວັນຕົກລົງເປັນຕົ້ນໄປ, ພາຍຫຼັງຖືກເລືອກແລ້ວ ຜູ້ຕັດສິນທັງສອງຄົນ ທີ່ຖືກເລືອກນັ້ນ ຕ້ອງເລືອກເອົາຜູ້ຕັດສິນທີສາມ ມາເປັນປະທານ ພາຍໃນກຳນົດ ສິບຫ້າວັນ. ໃນກໍລະນີ ຜູ້ຕັດສິນທັງສອງຄົນທີຖືກເລືອກ ຫາກບໍ່ສາມາດເລືອກເອົາຜູ້ຕັດສິນທີສາມ ມາເປັນປະທານຕາມກຳນົດເວລາດັ່ງກ່າວ ສກສ ຫຼື ຫກສ ຕ້ອງເລືອກໃຫ້ພາຍໃນກຳນົດ ສິບວັນ. ຖ້າວ່າຄູ່ກໍລະນີຫາກເລືອກເອົາກຳມະການຕັດສິນບໍ່ໄດ້ ຫຼື ຄະນະກຳມະການຕັດສິນ

[89] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 30

ເລືອກປະທານບໍ່ໄດ້ ພາຍໃນກຳນົດເວລາ ສິບຫ້າ ວັນ ນັ້ນ, ສກສ ຫຼື ຫກສ ຈະເປັນຜູ້ເລືອກໃຫ້ ພາຍໃນກຳນົດເວລາ ສິບວັນ ນັບແຕ່ວັນໄດ້ຮັບແຈ້ງຈາກຄູ່ກໍລະນີ ຫຼື ຫຼັງຈາກວັນສຸດທ້າຍຂອງກຳນົດເວລາທີ່ກຳນົດໄວ້ເທິງນີ້.

ໃນກໍລະນີ ເລືອກຜູ້ຕັດສິນຫຼາຍກວ່າ ສາມຄົນຂຶ້ນໄປ ກໍໃຫ້ປະຕິບັດຕາມຫຼັກການດຽວກັນກັບການເລືອກຜູ້ຕັດສິນສາມຄົນ[90].

ກຳມະການຕັດສິນ ກໍເຊັ່ນດຽວກັບຜູ້ໄກ່ເກ່ຍ ປະກອບມີ ຜູ້ປະຈຳການ ແລະ ຜູ້ບໍ່ປະຈຳການ. ຜູ້ປະຈຳການ ແມ່ນພະນັກງານຂອງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ຖືກແຕ່ງຕັ້ງຈາກ ລັດຖະມົນຕີກະຊວງຍຸຕິທຳ; ຜູ້ບໍ່ປະຈຳການ ແມ່ນບຸກຄົນທີ່ມາຈາກສຳນັກງານ, ອົງການ, ຫົວໜ່ວຍທຸລະກິດ ທັງພາກລັດ, ເອກະຊົນ, ຄົນຕ່າງປະເທດ ແລະ ຄົນຕ່າງດ້າວ ທີ່ສະໝັກໃຈ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກລັດຖະມົນຕີກະຊວງຍຸຕິທຳ ຕາມການຄັດເລືອກ ແລະ ການສະເໜີຂອງ ສກສ[91].

ກຳມະການຕັດສິນ ແມ່ນຜູ້ທີ່ມີຄຸນສົມບັດ, ຈັນຍາທຳ ແລະ ບໍລິສຸດສັດຊື່, ຄວາມຮູ້ຄວາມສາມາດໃນດ້ານວິຊາສະເພາະໃດໜຶ່ງທີ່ແນ່ນອນ ໂດຍມີໃບຢັ້ງຢືນຢ່າງຖືກຕ້ອງ, ໄດ້ຜ່ານ ແລະ ເປັນຜູ້ທີ່ມີປະສົບປະການຢ່າງໜ້ອຍ ຫ້າປີ, ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ, ໄດ້ຜ່ານການຝຶກອົບຮົມ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ມີສຸຂະພາບດີ[92]. ບັນດາກຳມະການດັ່ງກ່າວ ສກສ ຫຼື ຫກສ ຈະມີປຶ້ມບັນຊີລາຍຊື່ ແລະ ຊີວະປະຫວັດຫຍໍ້ ໄວ້ໃຫ້ຄູ່ກໍລະນີເລືອກເອົາຕາມກົດໝາຍ ແລະ ລະບຽບການ, ບັນດາກຳມະການຕັດສິນດັ່ງກ່າວ ແມ່ນຖືກຮັບຮອງໂດຍກະຊວງຍຸຕິທຳ.

ການເລືອກຄະນະກຳມະການຕັດສິນ ໃຫ້ປະຕິບັດຕາມຫຼັກການດຽວກັນກັບການເລືອກຄະນະໄກ່ເກ່ຍ ຕາມທີ່ໄດ້ກຳນົດໄວ້ໃນບົດທີ 5 ຂໍ້ 2.1.2.

### 2.1.2 ການແຕ່ງຕັ້ງຄະນະກຳມະການຕັດສິນ

ການແຕ່ງຕັ້ງຄະນະກຳມະການຕັດສິນ ແມ່ນອີງຕາມການສະເໜີຂອງຄະນະກຳມະການທີ່ຖືກເລືອກຈາກຄູ່ກໍລະນີ (ເອກະສານຊ້ອນທ້າຍ 14), ນັບແຕ່ວັນທີ່ໄດ້ຮັບການສະເໜີ ສກສ ຫຼື ຫກສ ຕ້ອງແຕ່ງຕັ້ງຄະນະກຳມະການຕັດສິນ ພາຍໃນກຳນົດ ເຈັດວັນ (ເອກະສານຊ້ອນທ້າຍ 22).

ການແຕ່ງຕັ້ງຄະນະກຳມະການຕັດສິນ ບໍ່ວ່າຈະຢູ່ໃນກໍລະນີໃດກໍຕາມຕ້ອງໄດ້ຮັບຄວາມເຫັນດີເປັນລາຍລັກອັກສອນຈາກຄະນະກຳມະການຕັດສິນ ແລະ ຄູ່ກໍລະນີເສຍກ່ອນແລ້ວສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈິ່ງແຕ່ງຕັ້ງຄະນະກຳມະການຕັດສິນພາຍໃນກຳນົດ ເຈັດວັນ ນັບແຕ່ວັນໄດ້ຮັບບັນຊີລາຍຊື່ຄະນະກຳມະການຕັດສິນ ທີ່ຄູ່ກໍລະນີສະເໜີໃຫ້ແຕ່ງຕັ້ງເປັນຕົ້ນໄປ[93].

ການແຕ່ງຕັ້ງຄະນະກຳມະການຕັດສິນ ໃຫ້ປະຕິບັດຕາມຫຼັກການດຽວກັນກັບການເລືອກຜູ້ໄກ່ເກ່ຍ ຕາມທີ່ໄດ້ກຳນົດໄວ້ໃນບົດທີ 5 ຂໍ້ 2.2.1.

### 2.1.3 ການມອບສຳນວນຂໍ້ຂັດແຍ່ງ

ສກສ ຫຼື ຫກສ ຕ້ອງມອບສຳນວນຂໍ້ຂັດແຍ່ງທາງດ້ານເສດຖະກິດໃຫ້ແກ່ ຄະນະກຳມະການຕັດສິນ ທີ່ຖືກເລືອກ ແລະ ແຕ່ງຕັ້ງຂຶ້ນມານັ້ນ ໂດຍມີການມອບຮັບເປັນລາຍລັກອັກສອນ ເພື່ອເນີນດຳການແກ້ໄຂຂໍ້ຂັດແຍ່ງຕາມກົດໝາຍ (ເອກະສານຊ້ອນທ້າຍ 23).

---

[90] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 23 ວັກ 3 ແລະ 4, ມາດຕາ 31

[91] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 43

[92] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 44

[93] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 23 ວັກ 5

ສຳນວນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ ສຳນວນຄຳຮ້ອງ ແລະ ສຳນວນຄຳແກ້ຄຳຮ້ອງ ຊຶ່ງມີດັ່ງນີ້:

- ສຳນວນຄຳຮ້ອງ ປະກອບດ້ວຍມີ ຄຳຮ້ອງ, ໃບສະເໜີແຕ່ງຕັ້ງຄະນະກຳມະການຕັດສິນ ແລະ ເອກະສານປະກອບ;
- ສຳນວນແກ້ຄຳຮ້ອງຟ້ອງ ປະກອບມີ ຄຳແກ້ຄຳຮ້ອງ, ໃບສະເໜີແຕ່ງຕັ້ງຄະນະກຳມະການຕັດສິນ ແລະ ເອກະສານປະກອບ.

## 2.2 ການຖອນຕົວ ແລະ ການຄ້ານຕົວ ຄະນະກຳມະການຕັດສິນ

### 2.2.1 ການຖອນຕົວ

ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ມີສິດຖອນຕົວອອກຈາກການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການຕັດສິນ ຖ້າຫາກເຫັນວ່າ ຕົນເປັນຍາດພີ່ນ້ອງ ຫຼື ມີສ່ວນພົວພັນກັບຜົນປະໂຫຍດ ຫຼື ມີຂໍ້ຂັດແຍ່ງກັບຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້[94]. ເຖິງກົດໝາຍຈະໄດ້ກຳນົດວ່າ ການຖອນຕົວເປັນສິດຂອງຄະນະກຳມະການຕັດສິນກໍຕາມ ແຕ່ກົດໝາຍກໍໄດ້ມີຂໍ້ຫ້າມຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງທີ່ພົວພັນເຖິງຜົນປະໂຫຍດຂອງຕົນເອງ, ຜົວ ຫຼື ເມຍ ຫຼື ຍາດໃກ້ຊິດຂອງຕົນ[95].

ການຖອນຕົວຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຖ້າເບິ່ງໃນທິດທາງທີ່ກົງກັນຂ້າມກັບການກຳນົດຂອງກົດໝາຍແລ້ວ ຖືວ່າການຖອນຕົວເປັນພັນທະຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ທີ່ຕ້ອງໄດ້ປະຕິບັດ. ໃນກໍລະນີທີ່ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນບໍ່ຍອມຖອນຕົວ ແລະ ຄູ່ກໍລະນີໃດໜຶ່ງກໍບໍ່ສາມາດຮູ້ໄດ້ເຖິງບັນຫາດັ່ງກ່າວ ຊຶ່ງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ໄດ້ດຳເນີນການຕັດສິນຈົນສິ້ນສຸດດ້ວຍການລົງຄຳຕັດສິນ, ໃນກໍລະນີດັ່ງກ່າວ ຖືວ່າການປະກອບກຳມະການຕັດສິນບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ຊຶ່ງສົ່ງຜົນກະທົບຕໍ່ຄວາມທ່ຽງທຳໃນການຕັດສິນ. ສະນັ້ນ, ເຖິງຈະມີການລົງຄຳຕັດສິນແລ້ວກໍຕາມ ຄູ່ກໍລະນີຝ່າຍທີ່ເສັຍປະໂຫຍດ ມີສິດສະເໜີຕໍ່ສານປະຊາຊົນ ເພື່ອຄັດຄ້ານຄຳຕັດສິນຂອງຄະນະກຳມະການດັ່ງກ່າວ ພາຍໃນກຳນົດ ສີ່ສິບຫ້າວັນ[96]. ດັ່ງນັ້ນຈຶ່ງສາມາດເວົ້າໄດ້ວ່າ ການຖອນຕົວຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ເປັນພັນທະອັນໜຶ່ງທີ່ຕ້ອງໄດ້ປະຕິບັດຢ່າງເຂັ້ມງວດ.

ການຖອນຕົວໃຫ້ປະຕິບັດຕາມຫຼັກການດຽວກັນກັບການເລືອກຜູ້ໄກ່ເກ່ຍ ຕາມທີ່ໄດ້ກຳນົດໄວ້ໃນບົດທີ 5 ຂໍ້ 2.3.1.

### 2.2.2 ການຄ້ານຕົວ

ການຄ້ານຕົວຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ແມ່ນສິດຂອງຄູ່ກໍລະນີ ຊຶ່ງເຫັນໄດ້ວ່າ ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນເປັນຍາດພີ່ນ້ອງ ຫຼື ມີສ່ວນພົວພັນກັບຜົນປະໂຫຍດ ຫຼື ມີຂໍ້ຂັດແຍ່ງກັບຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ ແຕ່ບໍ່ມີຄວາມສະໝັກໃຈໃນການຖອນຕົວ ຄູ່ກໍລະນີຝ່າຍໃດໜຶ່ງກໍມີສິດຄ້ານຕົວ ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ.

ການຄ້ານຕົວ ໃຫ້ປະຕິບັດຕາມຫຼັກການດຽວກັນກັບການເລືອກຜູ້ໄກ່ເກ່ຍ ຕາມທີ່ໄດ້ກຳນົດໄວ້ໃນບົດທີ 5 ຂໍ້ 2.3.2.

---

[94] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 23

[95] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 31, ມາດຕາ 57 ຂໍ້ 5

[96] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 38

ກໍລະນີທີ່ມີການຖອນຕົວ ຫຼື ຄ້ານຕົວຄະນະກຳມະການຕັດສິນ ນັ້ນໃຫ້ດຳເນີນການເລືອກ ແລະ ການແຕ່ງຕັ້ງຄະນະກຳມະການຕັດສິນຂຶ້ນໃໝ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

# 3. ການດຳເນີນການຕັດສິນ

## 3.1 ການກະກຽມການຄົ້ນຄວ້າສຳນວນຂໍ້ຂັດແຍ່ງ

ການກະກຽມການຄົ້ນຄວ້າສຳນວນຂໍ້ຂັດແຍ່ງ ແມ່ນການກວດກາເບິ່ງສຳນວນຄຳຮ້ອງ ແລະ ຄຳແກ້ຄຳຮ້ອງວ່າມີເນື້ອໃນທີ່ຄົບຖ້ວນ, ມີເປົ້າໝາຍທີ່ຊັດເຈນ ຫຼື ຈຸດປະສົງໃນການຮຽກຮ້ອງທີ່ແນ່ນອນ, ລະອຽດຈະແຈ້ງ ຕາມທີ່ກຳນົດໄວ້ໃນກົດໝາຍ, ນອກຈາກນີ້ກໍຕ້ອງໃຫ້ມີເອກະສານທີ່ຈຳເປັນ ຊຶ່ງພົວພັນກັບຂໍ້ຂັດແຍ່ງທີ່ກ່ຽວຂ້ອງຄັດຕິດມາພ້ອມ. ພ້ອມກັນນີ້, ກໍຕ້ອງໄດ້ກວດກາເບິ່ງວ່າ ແມ່ນຂໍ້ຂັດແຍ່ງທີ່ມີເງື່ອນໄຂທີ່ຈະນຳມາພິຈາລະນາ ຢູ່ ສກສ ຫຼື ຫກສ ຫຼື ບໍ່[97], ພາຍຫຼັງກວດກາແລ້ວ ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນຕ້ອງເຄື່ອນໄຫວຢ່າງໃດຢ່າງໜຶ່ງ ເຊັ່ນ ອອກໝາຍຮຽກ ຫຼື ໝາຍເຊີນ ຄູ່ກໍລະນີ, ກະກຽມປະເດັນສອບຖາມ, ສະເໜີໃຫ້ຄູ່ກໍລະນີປະກອບຫຼັກຖານ, ເອກະສານເພີ່ມເຕີມ ແລະ ອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍ.

## 3.2 ການຄົ້ນຄວ້າສຳນວນຂໍ້ຂັດແຍ່ງ

ການຄົ້ນຄວ້າສຳນວນຂໍ້ຂັດແຍ່ງ ແມ່ນການພິຈາລະນາບັນດາເອກະສານ, ຂໍ້ມູນຫຼັກຖານຕ່າງໆ ທີ່ປະກອບຢູ່ໃນສຳນວນຂໍ້ຂັດແຍ່ງ (ສຳນວນຄຳຮ້ອງຂໍ ແລະ ສຳນວນຄຳແກ້ຄຳຮ້ອງຂໍ) ຢ່າງລະອຽດຖີ່ຖ້ວນ, ຮອບດ້ານ ແລະ ພາວະວິໄສຂອງຄະນະກຳມະການຕັດສິນ ເພື່ອໃຫ້ການແກ້ໄຂຂໍ້ຂັດແຍ່ງ ດ້ວຍຮູບການຕັດສິນນັ້ນ ມີຄວາມແຈ້ງຂາວ, ສາມາດສະຫຼຸບເຫດການທັງໝົດຂອງຂໍ້ຂັດແຍ່ງນັ້ນໄດ້ ແລະ ເພື່ອນຳອອກມາພິຈາລະນາຕັດສິນໃນທີ່ປະຊຸມຂອງ ສກສ ຫຼື ຫກສ ຕາມກຳນົດເວລາ ແລະ ກົດໝາຍ.

ການຄົ້ນຄວ້າສຳນວນແກ້ໄຂຂໍ້ຂັດແຍ່ງ ຄະນະກຳມະການຕັດສິນ ຈະຕ້ອງໄດ້ເລີ່ມຕົ້ນດຳເນີນນັບແຕ່ວັນໄດ້ຮັບສຳນວນຂໍ້ຂັດແຍ່ງ ເພື່ອຊອກຫາຂໍ້ມູນຫຼັກຖານຖານຕ່າງໆ ໃຫ້ຄົບຖ້ວນ, ຮອບດ້ານ, ພາວະວິໄສ ແລະ ຮັດກຸມ ເພື່ອຮັບປະກັນໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງ ດ້ວຍຄະນະກຳມະການຕັດສິນໃຫ້ມີຄວາມຍຸຕິທຳ. ສະນັ້ນ, ການຄົ້ນຄວ້າສຳນວນແກ້ໄຂຂໍ້ຂັດແຍ່ງ ຕ້ອງມີວິທີການທີ່ລະອຽດຮັດກຸມ ໂດຍຕ້ອງໄດ້ກວດກາທຸກຂໍ້ມູນຫຼັກຖານ ທີ່ປະກອບຢູ່ໃນສຳນວນແກ້ໄຂຂໍ້ຂັດແຍ່ງ, ເຖິງຢ່າງໃດກໍຕາມ ບັນດາຂໍ້ມູນຫຼັກຖານຕ່າງໆນັ້ນ ແມ່ນບົນພື້ນຖານທີ່ຄູ່ກໍລະນີ ເປັນຜູ້ປະກອບໃຫ້ ຢ່າງຄົບຖ້ວນ ເພື່ອສະເໜີຕໍ່ກຳມະການຕັດສິນ. ແຕ່ອີງໃສ່ສະພາບຄວາມເປັນຈິງ ການປະກອບສຳນວນຄຳຮ້ອງຂໍ ແລະ ຄຳແກ້ຄຳຮ້ອງຂໍ ຕໍ່ຄະນະກຳມະການຕັດສິນ ຍັງບໍ່ທັນໄດ້ດີ ເນື່ອງຈາກ ຄູ່ກໍລະນີ ບໍ່ມີຄວາມຮູ້ພື້ນຖານທາງດ້ານກົດໝາຍ ແລະ ຍັງຂາດທະນາຍຄວາມ ຫຼື ທີ່ປຶກສາທາງດ້ານກົດໝາຍ ເພື່ອຊ່ວຍເຫຼືອແກ່ຄູ່ກໍລະນີໃນການກະກຽມຂໍ້ມູນຫຼັກຖານ ເພື່ອປະກອບໃສ່ສຳນວນຄຳຮ້ອງຂໍ ແລະ ຄຳແກ້ຄຳຮ້ອງຂໍ ຍື່ນຕໍ່ຄະນະກຳມະການຕັດສິນ ຈຶ່ງເຮັດໃຫ້ການປະກອບຂໍ້ມູນຫຼັກຖານດັ່ງກ່າວບໍ່ຄົບຖ້ວນ. ສະນັ້ນ, ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ທີ່ເຮັດໜ້າທີ່ໂດຍກົງ ໃນການຄົ້ນຄວ້າສຳນວນຂໍ້ຂັດແຍ່ງ ຈະຕ້ອງຮັບພາລະເປັນຄົນກາງ ເພື່ອອຳນວຍຄວາມສະດວກ, ຊ່ວຍເຫຼືອ ແລະ ໃຫ້ຄຳປຶກສາ ໃນການແກ້ໄຂຂໍ້ຂັດແຍ່ງ.

ໃນກົດໝາຍໄດ້ກຳນົດ ໃຫ້ຄະນະກຳມະການຕັດສິນອະທິບາຍ, ອ້າງເຫດຜົນ, ພະຍານ ແລະ ຫຼັກຖານຕ່າງໆກ່ອນຈະລົງຄຳສິນ. ເພາະວ່າການໄຕ່ສວນ, ການອ້າງເຫດຜົນ ແລະ ການສະເໜີພະຍານຫຼັກຖານຕ່າງໆຂອງຄູ່ກໍລະນີນັ້ນເປັນການເປີດໂອກາດໃຫ້ຄູ່ກໍລະນີ ໄດ້ສະແດງຂໍ້ມູນຫຼັກຖານຕ່າງໆພ້ອມທັງເຫດຜົນ ເພື່ອສະໜັບສະໜູນການ

[97] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 16

ຮຽກຮ້ອງ ຫຼື ການຄັດຄ້ານຕ່າງໆ ຂອງຕົນການລົງຄໍາຕັດສິນໂດຍບໍ່ມີການອະທິບາຍ, ອ້າງເຫດຜົນ ແລະ ການສະເໜີພະຍານ, ຫຼັກຖານຕ່າງໆກ່ອນກໍເທົ່າກັບວ່າເປັນການປະຕິເສດຄວາມຍຸຕິທໍານັ້ນເອງ. ເມື່ອມີການອະທິບາຍ ແລະ ໄດ້ຮັບຟັງການອ້າງເຫດຜົນ, ພະຍານຫຼັກຖານຕ່າງໆ ຈາກຄູ່ກໍລະນີຢ່າງຄົບຖ້ວນແລ້ວ, ຄະນະກໍາມະການຕັດສິນອາດຈະສອບຖາມຄູ່ກໍລະນີວ່າມີພະຍານ, ຫຼັກຖານອື່ນໆອີກ ຫຼື ບໍ່, ຖ້າບໍ່ມີຄະນະກໍາມະການຕັດສິນກໍຈະກ່າວປິດການພິຈາລະນາຂໍ້ຂັດແຍ່ງນັ້ນ.

### 3.3 ການປະກອບຂໍ້ມູນຫຼັກຖານຂອງຄູ່ກໍລະນີ, ການລົງເກັບກໍາ ແລະ ການພິສູດຂໍ້ມູນຫຼັກຖານ

#### 3.3.1 ການປະກອບຫຼັກຖານຂອງຄູ່ກໍລະນີ

ໃນເວລາຄູ່ກໍລະນີ ຍື່ນຄໍາຮ້ອງຂໍ ແລະ ຄໍາແກ້ຄໍາຮ້ອງຂໍ ນັ້ນຕ້ອງໄດ້ປະກອບຂໍ້ມູນຫຼັກຖານໃຫ້ຄົບຖ້ວນ ເພື່ອສະເໜີຕໍ່ຄະນະກໍາມະການຕັດສິນ[98]. ພາຍຫຼັງ ຄະນະກໍາມະການຕັດສິນໄດ້ຮັບສໍານວນຄໍາຮ້ອງແລ້ວ ຕ້ອງໄດ້ກວດກາ ການປະກອບຫຼັກຖານຂອງຄູ່ກໍລະນີ ໂດຍຄະນະກໍາມະການ ຕ້ອງເກັບກໍາ, ຮິບໂຮມ ຫຼັກຖານທັງໝົດທີ່ຄູ່ກໍລະນີປະກອບໃຫ້ ແລ້ວນໍາມາຄົ້ນຄວ້າ, ໄຈ້ແຍກ ແລະ ຊັ່ງຊາ ຕີລາຄາຫຼັກຖານດັ່ງກ່າວ ຕ້ອງບົນພື້ນຖານຫຼັກຖານ ສາມປະເພດ ຄື: ທາງດ້ານວັດຖຸ, ທາງດ້ານເອກະສານ ແລະ ທາງດ້ານບຸກຄົນ. ຖ້າຫາກເຫັນວ່າ ຂໍ້ມູນ, ຫຼັກຖານ ຂອງຄູ່ກໍລະນີທັງສອງຝ່າຍ ຫຼື ຝ່າຍໃດຝ່າຍໜຶ່ງບໍ່ທັນຄົບຖ້ວນພຽງພໍ ແລະ ຈະແຈ້ງ ຄະນະກໍາມະການຕັດສິນ ກໍຈະສະເໜີຕໍ່ຄູ່ກໍລະນີ ໃຫ້ເອົາຂໍ້ມູນ, ຫຼັກຖານມາປະກອບໃຫ້ຄົບຖ້ວນ ຫຼື ຊີ້ແຈງປະເດັນທີ່ບໍ່ທັນຈະແຈ້ງຕໍ່ຄະນະກໍາມະການຕັດສິນ ໂດຍການເຊີນ (ເອກະສານຊ້ອນທ້າຍ 7) ເອົາຄູ່ກໍລະນີເຂົ້າມາ ເພື່ອເອົາຄໍາໃຫ້ການ ຫຼື ເອົາຄໍາໃຫ້ການຊ້ອງໜ້າ (ເອກະສານຊ້ອນທ້າຍ ແບບພິມເອົາຄໍາໃຫ້ການ 24 ແລະ ຄໍາໃຫ້ການຊ້ອງໜ້າ). ນອກຈາກນີ້ກໍສາມາດເອົາຄໍາໃຫ້ການບຸກຄົນທີ່ສາມ ແລະ ພະຍານ (ຖ້າມີ). ຖ້າຄູ່ກໍລະນີ ບໍ່ມີຂໍ້ມູນ, ຫຼັກຖານ ຫຼື ຂໍ້ມູນ, ຫຼັກຖານໝົດເທົ່າທີ່ປະກອບໃຫ້ຄະນະກໍາມະການຕັດ ກໍຕ້ອງໃຫ້ຄູ່ກໍລະນີ ຢັ້ງຢືນເປັນລາຍລັກອັກສອນວ່າ ຂໍ້ມູນຫຼັກຖານໄດ້ສະເໜີຕໍ່ຄະນະກໍາມະການແລ້ວ.

ໃນກໍລະນີ ຂໍ້ມູນຫຼັກຖານຄົບຖ້ວນ ຄະນະກໍາມະການຕັດສິນ ທີ່ຮັບຜິດຊອບ ຕ້ອງຄົ້ນຄວ້າ, ກວດກາລະອຽດທັງສໍານວນຄໍາຮ້ອງຂໍ ແລະ ສໍານວນຄໍາແກ້ຄໍາຮ້ອງຂໍ ພ້ອມທັງຂໍ້ມູນ, ຫຼັກຖານຕ່າງໆ ຂອງຄູ່ກໍລະນີແຕ່ລະຝ່າຍຢ່າງລະອຽດແລ້ວ ຄະນະກໍາມະການຕັດສິນ ເຫັນວ່າ ຫຼັກຖານແຕ່ລະຝ່າຍຄົບຖ້ວນ, ພຽງພໍ ແລະ ແຈ້ງຂາວແລ້ວ ຄະນະກໍາມະການຕັດສິນ ຕ້ອງນໍາອອກພິຈາລະນາຕັດສິນຕາມກົດໝາຍ ແລະ ລະບຽບ.

#### 3.3.2 ການລົງເກັບກໍາຂໍ້ມູນຫຼັກຖານ ຂອງຄະນະກໍາມະການຕັດສິນ

ການລົງເກັບກໍາຂໍ້ມູນຫຼັກຖານ ຍັງບໍ່ແມ່ນສິດໂດຍກົງຂອງຄະນະກໍາມະການຕັດສິນ ເນື່ອງຈາກວ່າ ການລົງເກັບກໍາຂໍ້ມູນ, ຫຼັກຖານນັ້ນຄະນະກໍາມະການຕັດສິນອາດຈະລົງເກັບກໍາກັບທີ່ຕາມການສະເໜີ ຫຼື ເຫັນດີຂອງຄູ່ລະນີ[99]. ໃນກໍລະນີລົງເກັບກໍາຂໍ້ມູນ, ຫຼັກຖານ ຂອງຄະນະກໍາມະການຕັດສິນນັ້ນ ກໍບໍ່ໝາຍວ່າ ຈະໃຫ້ແຕ່ຄູ່ກໍລະນີເປັນຜູ້ເຫັນດີ ຫຼື ສະເໜີພຽງຝ່າຍດຽວ ຄະນະກໍາມະການຕັດສິນ ສາມາດສະເໜີຂໍ້ມູນຫຼັກຖານທີ່ບໍ່ທັນຈະແຈ້ງນັ້ນ ຖ້າຄູ່ຄວາມເຫັນດີຕາມການສະເໜີ.

ການເກັບກໍາຂໍ້ມູນຫຼັກຖານ ຂອງຄະນະກໍາມະການນັ້ນ ແມ່ນການຮຽກເຊີນບຸກຄົນທີ່ກ່ຽວຂ້ອງມາໃຫ້ການ ຊຶ່ງໃນນັ້ນມີທັງຄູ່ກໍລະນີ, ບຸກຄົນທີສາມ, ພະຍານ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ ບຸກຄົນຈະຕ້ອງໄດ້ເຂົ້າມາໃຫ້ການຕໍ່ຄະນະກໍາມະການຕັດສິນ ເພື່ອໃຫ້ຄວາມກະຈ່າຍແຈ້ງກ່ຽວກັບເປົ້າໝາຍຂອງຄໍາຮ້ອງຂໍ, ຄໍາແກ້ຄໍາຮ້ອງຂໍ. ບຸກຄົນທີ່ກ່ຽວ

---

[98] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 32 ວັກ 1

[99] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 32 ວັກ2

ຂ້ອງຕ້ອງຕອບຄຳຖາມຕາມປະເດັນສອບສວນທີ່ຄະນະກຳມະການຕັດສິນໄດ້ກະກຽມໄວ້; ບຸກຄົນທີ່ເຂົ້າມາໃຫ້ການນັ້ນມີສິດໃຫ້ຄຳຊີ້ແຈງເພີ່ມເຕີມເປັນລາຍລັກອັກສອນມາຍື່ນຕໍ່ຄະນະກຳມະການຕັດສິນ, ຖ້າຄູ່ຄວາມບໍ່ສາມາດຂຽນ ຫຼື ບໍ່ຕ້ອງການຂຽນກໍສາມາດມາໃຫ້ການຕໍ່ຄະນະກຳມະການຕັດສິນໂດຍກົງກໍໄດ້, ພາຍຫຼັງເອົາຄຳໃຫ້ການແລ້ວ ກຳມະການຕັດສິນ ຕ້ອງອ່ານໃຫ້ບຸກຄົນທີ່ມາໃຫ້ການຟັງ, ຈາກນັ້ນ ຈຶ່ງພ້ອມກັນລົງລາຍເຊັນ ແລະ ແປະໂປ້ມືໃສ່.

ນອກຈາກການເກັບກຳຂໍ້ມູນຫຼັກຖານ ຈາກບຸກຄົນທີ່ກ່ຽວຂ້ອງແລ້ວ ຄະນະນກຳມະການຕັດສິນ ສາມາດສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສຳເນົາເອົາເອກະສານທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງ, ສາມາດລົງກວດກາບັນຫາຂັດແຍ່ງຢູ່ສະຖານທີ່ທີ່ເປົ້າໝາຍຂອງຂໍ້ຂັດແຍ່ງ ຈະເຫັນໄດ້ຈຸດຂັດແຍ່ງຕົວຈິງ ເຊັ່ນ ສິ່ງກໍ່ສ້າງ, ໂຮງຈັກໂຮງງານ. ເວລາຄະນະກຳມະການຕັດສິນຈະລົງເກັບກຳຂໍ້ມູນຫຼັກຖານ ຫຼື ລົງກວດກາສະຖານທີ່ຄັດແຍ່ງ ກໍຕ້ອງມີການຂຶ້ນແຜນຄັກແນ່ຄື: ກຳນົດຜູ້ເຂົ້າຮ່ວມ, ງົບປະມານ, ເນື້ອໃນການລົງກວດກາ ແລະ ກຳນົດວັນເວລາ ໂດຍມີການແບ່ງວຽກກັນຢ່າງຊັດເຈນ. ການລົງກວດກາສະຖານທີ່ຂັດແຍ່ງ ຕ້ອງມີການເຂົ້າຮ່ວມຂອງຄູ່ກໍລະນີ, ອົງການປົກຄອງບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ; ຄູ່ກໍລະນີຈະຕ້ອງໄດ້ຮັບຜິດຊອບຕໍ່ຄ່າໃຊ້ຈ່າຍດັ່ງກ່າວ ແລະ ຄະນະກຳມະການຕັດສິນ ຈະຕ້ອງໄດ້ສະຫຼຸບຄ່າໃຊ້ຈ່າຍເປັນລາຍລັກອັກສອນ ແລະ ໃຫ້ວິນິດໄສລົງໃນຄຳຕັດສິນຂອງຄະນະກຳມະການຕັດສິນ.

### 3.3.3 ການພິສູດຫຼັກຖານ

ໃນກໍລະນີຈຳເປັນທີ່ຕ້ອງການພິສູດຫຼັກຖານໃດໜຶ່ງຄະນະກຳມະການຕັດສິນ ມີສິດສະເໜີເອົາຜູ້ຊ່ຽວຊານເພື່ອພິສູດຂໍ້ມູນຫຼັກຖານນັ້ນ[100]. ຫຼັກຖານໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງດ້ວຍຄະນະກຳມະການຕັດສິນ ແມ່ນມາຈາກຫຼາຍແຫຼ່ງ ເຊັ່ນ ອາດໄດ້ມາຈາກຄູ່ກໍລະນີ, ບາງຫຼັກຖານກໍມີລັກສະນະເຕັກນິກສະເພາະ ຊຶ່ງຄະນະກຳມະການຕັດສິນບໍ່ສາມາດເຂົ້າໃຈໄດ້ຢ່າງຊັດເຈນ, ຄູ່ກໍລະນີຕ່າງຝ່າຍກໍຕ່າງອ້າງໄປຄົນລະຢ່າງດັ່ງນັ້ນ ຄະນະກຳມະການຕັດສິນຢາກເຂົ້າໃຈ ກ່ຽວກັບຫຼັກຖານຢ່າງຊັດເຈນນັ້ນ ຈຶ່ງມີຄວາມຈຳເປັນຕ້ອງໄດ້ສະເໜີຜູ້ຊ່ຽວຊານສະເພາະດ້ານ ທຳການພິສູດຫຼັກຖານໃຫ້ມີຄວາມຊັດເຈນ ແລະ ແຈ້ງຂາວຂຶ້ນຕື່ມ.

ສະນັ້ນ, ຕ້ອງມີການສະເໜີຜູ້ຊ່ຽວຊານທຳການພິສູດຫຼັກຖານນີ້ ເນື່ອງຈາກວ່າຫຼັກຖານທີ່ໄດ້ມານັ້ນຍັງບໍ່ທັນຈະແຈ້ງ, ມີອັນສົງໄສ ເຊັ່ນ ຕົວໜັງສື, ລາຍເຊັນ, ຕາປະທັບ ຊັບສິ່ງຂອງ ຫຼື ສະຖານທີ່ຕ່າງໆຕາມການສະເໜີຂອງຄູ່ກໍລະນີ ຫຼື ຕາມຄຳເຫັນຂອງຄະນະກຳມະການຕັດສິນ ຄະນະກຳມະການຕັດສິນຕ້ອງໄດ້ສະເໜີຕໍ່ຂະແໜງການກ່ຽວຂ້ອງ ຫຼື ຕໍ່ຜູ້ຊ່ຽວຊານເພື່ອທຳການພິສູດ ຫຼື ຢັ້ງຢືນ; ເນື້ອໃນການສະເໜີພິສູດ ຫຼື ຢັ້ງຢືນ ຕ້ອງກຳນົດໃຫ້ເຫັນເປົ້າໝາຍການພິສູດ ຫຼື ການຢັ້ງຢືນນັ້ນໃຫ້ລະອຽດ, ກຳນົດເວລາພິສູດ ພ້ອມທັງຄັດຕິດຂໍ້ມູນເອກະສານທີ່ຈະພິສູດນັ້ນ ແລະ ຕ້ອງແຈ້ງໃຫ້ຄູ່ຄວາມ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງຊາບ.

ຜູ້ຊ່ຽວຊານທີ່ໄດ້ທຳການພິສູດຫຼັກຖານ ຕ້ອງດຳເນີນການພິສູດຫຼັກຖານຕາມຫຼັກວິຊາການຢ່າງເຄັ່ງຄັດພິຈາລະນາຢ່າງຮອບຄອບສອດຄ່ອງ ກັບຫຼັກວິທະຍາສາດ, ພາຍຫຼັງສຳເລັດແລ້ວ ກໍຕ້ອງເຮັດບົດສະຫຼຸບຜົນຂອງການພິສູດ ສົ່ງໄປຍັງກຳມະການຕັດສິນ ທີ່ສະເໜີໃຫ້ທຳການພິສູດຕາມກຳນົດເວລາ.

ພາຍຫຼັງຄູ່ກໍລະນີໄດ້ປະກອບຫຼັກຖານ ແລະ ຄະນະກຳມະການຕັດສິນໄດ້ເກັບກຳ ແລະ ພິສູດຫຼັກຖານສຳເລັດແລ້ວ ຕາມຂໍ້ 5.2.1, 5.2.2 ແລະ 5.2.3 ຂອງບົດທີ 6 ນີ້ແລ້ວ ຄະນະກຳມະການຕັດສິນ ຕ້ອງໄດ້ທຳການກວດກາ, ໄຈ້ແຍກ ແລະ ຄັດຈ້ອນຫຼັກຖານ ຂອງຄູ່ກໍລະນີທັງໝົດ, ທຸກໆຫຼັກຖານ ທີ່ແຕ່ລະຝ່າຍ ສະເໜີຂຶ້ນມານັ້ນ ຕ້ອງໃຫ້ຝ່າຍກົງກັນຂ້າມ ຊີ້ແຈງ ຫຼື ໂຕ້ແຍ້ງ ແລະ ມີຄຳເຫັນ ເພື່ອເປັນພື້ນຖານໃຫ້ແກ່ຄະນະກຳມະການ ກຳນົດເຫດການຂອງຂໍ້ຂັດແຍ່ງຢ່າງຖືກຕ້ອງກັບຄວາມເປັນຈິງ. ຄະນະກຳມະການຕັດສິນ ຕ້ອງຄັດຈ້ອນເອົາແຕ່ຫຼັກຖານ ທີ່ເປັນຜົນປະໂຫຍດ ແລະ ກ່ຽວຂ້ອງກັບເຫດການຂອງຂໍ້ຂັດແຍ່ງເທົ່ານັ້ນ ຂຽນລົງໃນພາກວິນິດໄສ ຂອງຄະນະກຳມະການຕັດສິນ,

---

[100] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 32 ວັກ3

ແຕ່ເຖິງຢ່າງໃດກໍຕາມ ຫຼັກຖານອັນໃດທີ່ບໍ່ເປັນພື້ນຖານໃນການລົງຄໍາຕັດສິນຂອງຄະນະກໍາມະການຕັດສິນນັ້ນນັ້ນ ກໍ ຕ້ອງໄດ້ລົງຄໍາວິນິດໄສ ໃຫ້ເຫດຜົນທາງດ້ານກົດໝາຍ ທີ່ບໍ່ສາມາດນໍາເອົາຫຼັກຖານ ທີ່ຄູ່ກໍລະນີສະເໜີມານັ້ນ ມາເປັນ ບ່ອນອີງໃນການລົງຄໍາຕັດສິນຂອງຄະນະກໍາມະການຕັດສິນ.

### 3.4 ກໍານົດເວລາຕັດສິນ

ການແກ້ໄຂຂໍ້ຂັດແຍ່ງ ດ້ວຍການຕັດສິນ ຕ້ອງໃຫ້ສໍາເລັດພາຍໃນກໍານົດ ສາມເດືອນ ນັບແຕ່ວັນໄດ້ແຕ່ງຕັ້ງ ຄະນະກໍາມະການຕັດສິນເປັນຕົ້ນໄປ ເວັ້ນເສຍແຕ່ກໍລະນີມີຄວາມຫຍຸ້ງຍາກ ຍ້ອນການປະກອບຫຼັກຖານ ຫຼື ຍ້ອນ ເຫດຜົນອື່ນແຕ່ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງດ້ານເສດຖະກິດ ຕ້ອງແຈ້ງເຫດຜົນຂອງການບໍ່ສໍາເລັດໃຫ້ຄູ່ກໍລະນີ ຊາບ[101].

### 3.5 ການນໍາໃຊ້ມາດຕະການປົກປ້ອງຜົນປະໂຫຍດ

ໃນລະຍະເວລາພິຈາລະນາຂໍ້ຂັດແຍ່ງນັ້ນ ຖ້າຫາກຄູ່ກໍລະນີ ສະເໜີໃຫ້ອອກຄໍາສັ່ງຍຶດ, ອາຍັດຊັບ ຫຼື ນໍາໃຊ້ ມາດຕະການໃດໜຶ່ງ ເພື່ອປົກປ້ອງສິດຜົນປະໂຫຍດຂອງຕົນແລ້ວ ຖ້າວ່າມີຄວາມຈໍາເປັນ ຄະນະກໍາມະການຕັດສິນ ຈະສົ່ງ ຄໍາສະເໜີ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງໄປຍັງສານປະຊາຊົນ ເພື່ອພິຈາລະນາອອກຄໍາສັ່ງພາຍໃນກໍານົດ ເຈັດວັນລັດຖະການນັບແຕ່ວັນໄດ້ຮັບຄໍາສະເໜີເປັນຕົ້ນໄປ[102];

ແຕ່ວ່າກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບໍ່ໄດ້ກໍານົດໃຫ້ອໍານາດແກ່ຄະນະກໍາມະ ການຕັດສິນ ໃນການອອກຄໍາສັ່ງ ກ່ຽວກັບການນໍາໃຊ້ມາດຕະການດັ່ງກ່າວໄດ້ໂດຍກົງ ແຕ່ກໍໄດ້ໃຫ້ສິດໃນການສະເໜີ ໃຫ້ສານປະຊາຊົນທີ່ກ່ຽວຂ້ອງເປັນຜູ້ອອກຄໍາສັ່ງ ກ່ຽວກັບມາດຕະການດັ່ງກ່າວ ຄະນະສານການຄ້າທີ່ຢູ່ໃນສານປະຊາ ຊົນ ເປັນຜູ້ອອກຄໍາສັ່ງໃຫ້ບົນພື້ນຖານກົດໝາຍ[103].

ການທີ່ ສກສ ຫຼື ຫກສ ນໍາໃຊ້ມາດຕະການປົກປ້ອງຜົນປະໂຫຍດດັ່ງກ່າວນີ້ ຍ້ອນວ່າສ່ວນຫຼາຍຄູ່ກໍລະນີຝ່າຍທີ່ ມີພັນທະ ມັກຈະນໍາຊັບຂອງຕົນໄປຂາຍ, ມອບໃຫ້ຜູ້ອື່ນ, ຊຸກເຊື່ອງ, ນໍາໃຊ້ເປັນຫຼັກຊັບຄໍ້າປະກັນ ຫຼື ທໍາລາຍຖິ້ມ ແລະ ອື່ນໆ ເພື່ອເປັນການຫຼົບຫຼີກການໃຊ້ແທນໜີ້ສິນແກ່ຄູ່ກໍລະນີຝ່າຍທີ່ເປັນເຈົ້າໜີ້. ພ້ອມກັນນີ້, ການນໍາໃຊ້ມາດ ຕະການດັ່ງກ່າວ ກໍເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດຄໍາຕັດສິນຂອງຄະນະກໍາມະການຕັດສິນ ມີປະສິດທິຜົນ ສາມາດຈັດຕັ້ງປະຕິບັດໄດ້ ແລະ ທັງສາມາດຮັບປະກັນການໃຊ້ແທນໜີ້ສິນໃຫ້ແກ່ຄູ່ກໍລະນີທີ່ເປັນເຈົ້າໜີ້ໄດ້.

## 4. ການຕົກລົງກ່ອນການຕັດສິນ

ການຕົກລົງກັນກ່ອນ ການຕັດສິນ ມີ ສອງກໍລະນີ ຄື: ການຕົກລົງກັນຂອງຄູ່ກໍລະນີ ຢູ່ນອກ ສກສ ຫຼື ຫກສ ແລະ ການຕົກລົງກັນຂອງຄູ່ກໍລະນີ ລະຍະການດໍາເນີນຂອງຄະນະກໍາມະການຕັດສິນ.

### 4.1 ການຕົກກັນຂອງຄູ່ກໍລະນີໃນລະຍະການດໍາເນີນຂອງຄະນະກໍາມະການ

ໃນລະຍະຄະນະກໍາມະການຕັດສິນ ພິຈາລະນາຂໍ້ຂັດແຍ່ງຢູ່ນັ້ນ ຄູ່ກໍລະນີ ຍັງມີສິດຕົກລົງແກ້ໄຂນໍາກັນກ່ອນ ການຕັດສິນກໍໄດ້. ຄໍາຕົກລົງຂອງຄູ່ກໍລະນີນັ້ນ ຕ້ອງເຮັດເປັນລາຍລັກອັກສອນ ໂດຍມີລາຍເຊັນຂອງຄູ່ກໍລະນີ, ຄະນະ ກໍາມະການຕັດສິນ ແລະ ຫົວໜ້າສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນດໍາເນີນການນັ້ນ

---

[101] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 33

[102] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 34

[103] ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 38 ຂໍ້ 3

(ເອກະສານຊ້ອນທ້າຍ 25). ຄຳຕົກລົງ ຂອງຄູ່ກໍລະນີກ່ອນການຕັດສິນ ມີຜົນສັກສິດ ຄືກັນກັບຄຳຕັດສິນຂອງຄະນະກຳມະການຕັດສິນ[104].

### 4.2 ການຕົກລົງກັນຂອງຄູ່ກໍລະນີ ຢູ່ ນອກ ສກສ ຫຼື ຫກສ

ການຕົກລົງກັນຂອງຄູ່ກໍລະນີ ຢູ່ນອກ ສກສ ຫຼື ສກສ ແມ່ນການທີ່ຄູ່ກໍລະນີໄປຕົກລົງກັນ ພ້ອມໃຈກັນຖອນສຳນວນແກ້ໄຂຂໍ້ຂັດແຍ່ງ ອອກຈາກຄະນະກຳມະການຕັດສິນ ຂອງ ສກສ ຫຼື ຫກສ ໂດຍບໍ່ໃຫ້ຄະນະກຳມະການຕັດສິນດັ່ງກ່າວ ດຳເນີນການຕັດສິນ.

ການຕົກລົງກັນຂອງຄູ່ກໍລະນີຢູ່ນອກ ສກສ ຫຼື ສກສ ແມ່ນການທີ່ຄູ່ກໍລະນີໄປຕົກລົງປະນີປະນອມກັນເອງຢູ່ນອກ ສກສ ຫຼື ຫກສ ໂດຍບໍ່ໄດ້ມີການຊ້ອງໜ້າຄະນະກຳມະການຕັດສິນ ແລະ ບໍ່ໄດ້ແຈ້ງຜົນຂອງການຕົກລົງໃຫ້ຄະນະກຳມະການຕັດສິນ ວ່າຄູ່ກໍລະນີຕົກລົງກັນແນວໃດ.

## 5. ການລົງຄຳຕັດສິນ ແລະ ເນື້ອໃນຄຳຕັດສິນ

### 5.1 ການລົງຄຳຕັດສິນ

ພາຍຫຼັງຄະນະກຳມະການຕັດສິນ ໄດ້ເກັບກຳຂໍ້ມູນຫຼັກຖານແລ້ວ ແລະ ຄູ່ກໍລະນີ ໄດ້ສະເໜີຂໍ້ມູນຫຼັກຖານຄົບຖ້ວນ, ຈະແຈ້ງເປັນທີ່ຮຽບຮ້ອຍແລ້ວ ຄະນະກຳມະການຕັດສິນກໍໃຫ້ ຄູ່ກໍລະນີ ລວມທັງບຸກຄົນທີສາມ ຖ້າມີ ສັງລວມຄືນກ່ຽວກັບສຳນວນຄຳຮ້ອງ ແລະ ຄຳແກ້ຄຳຮ້ອງ ຫຼື ຄຳຮ້ອງແຍ່ງຂອງຕົນ ພ້ອມທັງມີຄຳເຫັນສຸດທ້າຍກ່ຽວກັບຂໍ້ມູນຫຼັກຖານທີ່ໄດ້ສະເໜີຕໍ່ຄະນະກຳມະການຕັດສິນນັ້ນ ວ່າມາຮອດນີ້ຄົບຖ້ວນ ແລະ ບໍ່ມີເອກະສານໃດຕື່ມອີກແລ້ວທີ່ຈະມາປະກອບໃຫ້ແກ່ຄະນະກຳມະການຕັດສິນ ຫຼື ຍັງມີຫຼັກຖານໃດທີ່ຍັງບໍ່ທັນໄດ້ປະກອບ ຫຼື ບໍ່ສາມາດນຳມາສະເໜີ ແລະ ປະກອບໃຫ້ໄດ້ ທັງນີ້ກໍເພື່ອຮັບປະກັນໃຫ້ການພິຈາລະນາຕັດສິນຂອງຄະນະກຳມະການຕັດສິນຖືກຕ້ອງ ແລະ ໄດ້ຮັບຄວາມຍຸຕິທຳ ທັງເປັນການສະກັດກັ້ນ ແລະ ປ້ອງກັນບໍ່ໃຫ້ຄູ່ກໍລະນີນຳເອົາຂໍ້ມູນຫຼັກຖານໃໝ່ໄປສະເໜີ ຫຼື ປະກອບ ເພື່ອຄັດຄ້ານຄຳຕັດສິນຂອງຄະນະກຳມະການຕັດສິນ ໄປຫາສານປະຊາຊົນ, ຖ້າຄະນະກຳມະການຕັດສິນຮັບໂຮມຂໍ້ມູນຫຼັກຖານ ແລະ ຄູ່ກໍລະນີ, ບຸກຄົນທີສາມ ຖ້າສະເໜີຫຼັກຖານໝົດແລ້ວ ຄະນະກຳມະການຕັດສິນ ກໍສາມາດລົງຄຳຕັດສິນໄດ້ ຕາມລະບຽບກົດໝາຍ.

ການລົງຄຳຕັດສິນ ຂອງຄະນະກຳມະການຕັດສິນ ເປັນການຊີ້ຂາດກ່ຽວກັບສິດ ແລະ ພັນທະຂອງຄູ່ກໍລະນີ. ສະນັ້ນ, ຄຳຕັດສິນຂອງຄະນະກຳມະການຕັດສິນ ຕ້ອງຢູ່ໃນຂອບເຂດຄຳຮ້ອງຂໍ ແລະ ຄຳຮ້ອງແຍ່ງຂອງຄູ່ກໍລະນີ. ໃນກໍລະນີທີ່ຄະນະກຳມະ ການຕັດສິນ ຫາກບໍ່ເປັນເອກະສັນກັນການຕັດສິນ ໃຫ້ຖືເອົາຕາມສຽງສ່ວນຫຼາຍ. ຄຳຕັດສິນຂອງຄະນະກຳມະການຕັດສິນ ຕ້ອງອ່ານຊ້ອງໜ້າຄູ່ກໍລະນີ ຫຼື ຜູ້ຕາງໜ້າ ແລະ ມີຜົນສັກສິດນັບແຕ່ລົງຄຳຕັດສິນນັ້ນເປັນຕົ້ນໄປ[105].

ຖ້າຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫາກບໍ່ເຂົ້າຮ່ວມຟັງຄຳຕັດສິນຕາມໝາຍເຊີນໂດຍບໍ່ມີເຫດຜົນ ຄະນະກຳມະການມີສິດອ່ານຄຳຕັດສິນລັບຫຼັງ. ເມື່ອຄະນະກຳມະການຕັດສິນອ່ານຄຳຕັດສິນແລ້ວ ກໍໃຫ້ເອົາຄຳຕັດສິນນັ້ນໄປແຈ້ງໃຫ້ຄູ່ກໍລະນີຊາບ ແລະ ຖືວ່າຄຳຕັດສິນຂອງຄະນະກຳມະການຕັດສິນນັ້ນ ມີຜົນບັງຄັບນັບແຕ່ວັນທີ່ຄູ່ກໍລະນີໄດ້ຮັບຊາບຄຳຕັດສິນນັ້ນເປັນຕົ້ນໄປ.

ເມື່ອຄະນະກຳມະການໄດ້ລົງຄຳຕັດສິນ ແລະ ໄດ້ອ່ານໃຫ້ຄູ່ກໍລະນີໄດ້ຟັງແລ້ວຄະນະກຳມະການຕັດສິນ ກໍຕ້ອງຈັດສົ່ງສຳເນົາຄຳຕັດສິນນັ້ນໃຫ້ຄູ່ກໍລະນີຊາບແຕ່ກົງກັນຂ້າມຄຳຕັດສິນຂອງຄະນະກຳມະການຕັດສິນເວລາໃດຫາກບໍ່

[104] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 35

[105] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 36

ທັນໄດ້ສົ່ງສຳເນົາຄຳຕັດສິນເຖິງຄູ່ກໍລະນີຄຳຕັດສິນດັ່ງກ່າວກໍຍັງບໍ່ມີຜົນແຕ່ຢ່າງໃດ. ສະນັ້ນ, ຄຳຕັດສິນຂອງຄະນະກຳມະການຈະມີຜົນສັກສິດ ນັບແຕ່ວັນຄູ່ກໍລະນີທັງໝົດໄດ້ຮັບຊາບເປັນຕົ້ນໄປ.

ນອກຈາກນີ້, ຖ້າຫາກວ່າຂໍ້ມູນຫຼັກຖານຄົບຖ້ວນແລ້ວ ຄະນະກຳມະການຕັດສິນ ສາມາດລົງຄຳຕັດສິນລັບຫຼັງຄູ່ກໍລະນີທັງ ສອງຝ່າຍໄດ້ ໃນກໍລະນີໃດໜຶ່ງ ດັ່ງນີ້:

- ຄູ່ກໍລະນີທັງສອງຝ່າຍ ໄດ້ມີເອກະສານແຈ້ງໃຫ້ຄະນະກຳມະການຕັດສິນ ໃຫ້ລົງຄຳຕັດສິນລັບຫຼັງ;
- ຄູ່ກໍລະນີຝ່າຍໜຶ່ງ ໄດ້ແຈ້ງໃຫ້ກຳມະການຕັດສິນແຕ່ຝ່າຍໜຶ່ງເຊີນເຂົ້າມາແຕ່ບໍ່ຍອມເຂົ້າມາໂດຍບໍ່ຮູ້ເຫດຜົນ;
- ຄູ່ກໍລະນີທັງສອງຝ່າຍບໍ່ເຂົ້າມາຟັງການອ່ານຄຳຕັດສິນ ໂດຍບໍ່ຮູ້ເຫດຜົນ.

ພາຍຫຼັງຄະນະກຳມະການຕັດສິນ ໄດ້ລົງຄຳຕັດສິນລັບຫຼັງຄູ່ກໍລະນີ ທັງສອງຝ່າຍແລ້ວ ຄະນະກຳມະການຕັດສິນຕ້ອງແຈ້ງຄຳຕັດສິນໃຫ້ຄູ່ກໍລະນີທັງສອງຝ່າຍຊາບ ພ້ອມທັງສຳເນົາຄຳຕັດສິນໃຫ້ຄູ່ກໍລະນີ ແລະ ຄຳຕັດສິນຂອງຄະນະກຳມະການຈະມີຜົນສັກສິດ ນັບແຕ່ວັນຄູ່ກໍລະນີທັງໝົດໄດ້ຮັບຊາບເປັນຕົ້ນໄປ.

### 5.2 ເນື້ອໃນຄຳຕັດສິນ

ຄຳຕັດສິນ ປະກອບດ້ວຍ:

1) ເວລາ, ວັນ, ເດືອນ, ປີ, ເລື່ອງ ແລະ ເລກທີ ຂອງຂໍ້ຂັດແຍ່ງ ແລະ ສະຖານທີ່ອອກຄຳຕັດສິນ;
2) ຊື່ ແລະ ນາມສະກຸນ ຂອງຄະນະກຳມະການຕັດສິນ ແລະ ຜູ້ບັນທຶກ;
3) ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດຈະການຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ;
4) ເນື້ອໃນຕົ້ນຕໍຂອງຂໍ້ຂັດແຍ່ງ, ຄຳວິນິດໄສ ແລະ ບ່ອນອີງຂອງຄຳຕັດສິນ;
5) ການຕັດສິນ;
6) ຄວາມຮັບຜິດຊອບໃນການໃຊ້ຈ່າຍຄ່າທຳນຽມ, ຄ່າແຮງງານ ແລະ ຄ່າບໍລິການຕ່າງໆ ຂອງຄູ່ກໍລະນີແຕ່ລະຝ່າຍ;
7) ລາຍເຊັນ ຂອງຄະນະກຳມະການຕັດສິນ, ຜູ້ບັນທຶກ ແລະ ລາຍເຊັນ ຂອງຫົວໜ້າສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດບ່ອນດຳເນີນນັ້ນ.

ຄຳຕັດສິນ (ເອກະສານຊ້ອນທ້າຍ 26) ຕ້ອງເຮັດເປັນ ສີ່ສະບັບ ຄື: ໄວ້ໃນສຳເນົາ, ໄວ້ໃນສຳນວນແກ້ໄຂຂໍ້ຂັດແຍ່ງທາວດ້ານເສດຖະກິດ, ໃຫ້ຄູ່ກໍລະນີ ຜູ້ລະສະບັບ.

## 6. ການຄັດຄ້ານຄຳຕັດສິນ

ຄຳຕັດສິນຂອງຄະນະກຳມະການຕັດສິນ ມີຜົນສັກສິດນັບແຕ່ຄະນະກຳມະການຕັດສິນໄດ້ລົງ ຫຼື ວັນ ຄູ່ກໍລະນີໄດ້ຮັບຊາບຄຳຕັດສິນນັ້ນເປັນຕົ້ນໄປ ເມື່ອຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫຼື ທັງສອງຝ່າຍ ຫາກບໍ່ເຂົ້າມາຟັງຄຳຕັດສິນຕາມໝາຍເຊີນ. ກົດໝາຍ ຈຶ່ງໃຫ້ສິດໃນການຄັດຄ້ານຄຳຕັດສິນຂອງຄະນະກຳມະການຕັດສິນແກ່ຄູ່ກໍລະນີ ໃນການຄັດຄ້ານຄຳຕັດສິນ ຂອງຄະນະກຳມະການຕັດສິນທີ່ເຫັນວ່າ ບໍ່ຖືກຕ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕາມກົດໝາຍ.

ຄູ່ກໍລະນີມີສິດສະເໜີຕໍ່ສານປະຊາຊົນ ເພື່ອຄັດຄ້ານຄຳຕັດສິນຂອງຄະນະກຳມະການຕັດສິນ ພາຍໃນກຳນົດສີ່ສິບຫ້າວັນ ນັບແຕ່ວັນໄດ້ຮັບຊາບຄຳຕັດສິນເປັນຕົ້ນໄປ ໃນກໍລະນີໃດໜຶ່ງ ດັ່ງນີ້:

1) ຄູ່ກໍລະນີບໍ່ໄດ້ຕົກລົງໃຫ້ມີການຕັດສິນດ້ວຍຄະນະກຳມະການຕັດສິນ ຫຼື ຄຳຕົກລົງນັ້ນເປັນໂມຄະ;
2) ການປະກອບຄະນະກຳມະການຕັດສິນ ບໍ່ສອດຄ່ອງກັບການຕົກລົງຂອງຄູ່ກໍລະນີ, ກົດໝາຍ ແລະ ລະບຽບການ;

3) ການດຳເນີນການຕັດສິນ ບໍ່ສອດຄ່ອງກັບລະບຽບກົດໝາຍ ແລະ ລະບຽບການ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທີ່ຄູ່ກໍລະນີຕົກລົງກັນໃນສັນຍາ;
4) ຂໍ້ມູນຫຼັກຖານ ທີ່ຄະນະກຳມະການຕັດສິນ ຖືເປັນພື້ນຖານໃນການຕັດສິນນັ້ນມີການປອມແປງ ຫຼື ກຳມະການຕັດສິນຮັບເງິນ, ຊັບສິນ ຫຼື ຜົນປະໂຫຍດອື່ນ ຊຶ່ງສ້າງຜົນກະທົບຕໍ່ຄວາມທ່ຽງທຳໃນການຕັດສິນ;
5) ຂໍ້ຂັດແຍ່ງບໍ່ຢູ່ໃນຂອບເຂດສິດແກ້ໄຂຕາມທີ່ກຳນົດໄວ້ໃນກົດໝາຍ;
6) ຄຳຕັດສິນເກີນ ຫຼື ບໍ່ຄົບຖ້ວນ ຕາມຄຳຮ້ອງຂໍຂອງຄູ່ກໍລະນີ[106].

ພາຍຫຼັງ ຄະນະສານການຄ້າ ຂອງສານປະຊາຊົນແຂວງ, ນະຄອນຫຼວງ ໄດ້ຮັບຄຳຮ້ອງຂອງຄູ່ກໍລະນີ ເພື່ອຄັດຄ້ານຄຳຕັດສິນຂອງຄະນະກຳມະການຕັດສິນ ຂອງ ສກສ ຫຼື ຫກສ ຕ້ອງພິຈາລະນາພາຍໃນກຳນົດ ສິບຫ້າວັນ ແລະ ຕ້ອງກວດກາການດຳເນີນການແກ້ໄຂຂໍ້ຂັດແຍ່ງນັ້ນ ໄດ້ປະຕິບັດຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ, ບໍ່ແຕ່ຕ້ອງເຖິງຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດ ລ້ອມ. ຖ້າເຫັນວ່າຖືກຕ້ອງແລ້ວ ສານຕ້ອງອອກຄຳຊີ້ຂາດ ເພື່ອບັງຄັບປະຕິບັດ. ຄຳຊີ້ຂາດຂອງສານ ມີຜົນບັງຄັບໃນທັນໃດ ແລະ ບໍ່ມີສິດຂໍອຸທອນໄດ້. ຖ້າເຫັນວ່າ ຄຳຕັດສິນຂອງ ສກສ ຫຼື ຫກສ ລະເມີດກົດໝາຍ ສານກໍຈະບໍ່ລົງຄຳຊີ້ຂາດຢັ້ງຢືນເອົາ ແລະ ຄູ່ກໍລະນີ ມີສິດໃຫ້ ສກສ ຫຼື ຫກສ ແກ້ໄຂຄືນໃໝ່ ຫຼື ຮ້ອງຟ້ອງຕໍ່ສານ ເພື່ອພິຈາລະນາຕັດສິນຕາມກົດໝາຍ[107].

[106] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 38

[107] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 42

# ພາກທີ 7
# ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

## 1. ຄວາມຮູ້ກ່ຽວກັບການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### 1.1 ຄວາມໝາຍ

ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໝາຍເຖິງການນຳເອົາຄຳຕົກລົງຂອງການໄກ່ເກ່ຍ, ຄຳຕົກລົງຂອງຄູ່ກໍລະນີກ່ອນການຕັດສິນ, ຄຳຕັດສິນຂອງຄະນະກຳມະການຕັດສິນ ເພື່ອປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອຢັ້ງຢືນ ຫຼື ຮັບຮູ້ຄຳຕັດສິນຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດມາຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ສຳເລັດຜົນເປັນຈິງ ດ້ວຍຄວາມສະໝັກໃຈຂອງຄູ່ກໍລະນີ ແລະ ດ້ວຍການບັງຄັບປະຕິບັດ ຕາມທີ່ກຳນົດໄວ້ໃນຄຳຕົກລົງຂອງຄູ່ກໍລະນີ ຫຼື ຕາມຄຳຊີ້ຂາດ ແລະ ຄຳຕັດສິນຂອງຄະນະກຳມະການ ດ້ວຍການໃຊ້ແທນເງິນ, ວັດຖຸ ແລະ ຊັບສິນອື່ນ ຄືນໃຫ້ແກ່ຄູ່ກໍລະນີທີ່ຖືກລະເມີດ.

### 1.2 ຄວາມສຳຄັນ

ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຄວາມສຳຄັນຫຼາຍຢູ່ໃນຂະບວນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ກໍຄືການພັດທະນາເສດຖະກິດ-ສັງຄົມ ໃຫ້ມີຄວາມສີວິໄລ ແລະ ຍຸຕິທຳ. ພ້ອມນັ້ນ ກໍມີຄວາມສຳຄັນໃນການສ້າງຄວາມເຊື່ອໝັ້ນ ແລະ ເຊື່ອຖືຂອງບຸກຄົນຕໍ່ການບັງຄັບໃຊ້ກົດໝາຍ ຢູ່ໃນສັງຄົມ.

ກົນໄກສ້າງຄວາມຍຸຕິທຳໃຫ້ເຂັ້ມແຂງ ແລະ ການບັງຄັບໃຊ້ກົດໝາຍໃຫ້ມີຄວາມສັກສິດ ແມ່ນຄວາມຈຳເປັນພາວະວິໄສ ຢູ່ໃນຂະບວນການສ້າງລັດທີ່ປົກຄອງດ້ວຍກົດໝາຍ ເນື່ອງຈາກວ່າສັງຄົມຈະມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ ຕ້ອງມີກົດໝາຍທີ່ຄົບຖ້ວນ ແລະ ມີກົນໄກແກ້ໄຂການລະເມີດກົດໝາຍທີ່ເຂັ້ມແຂງ ໂດຍສະເພາະແມ່ນການມີກົນໄກ, ມາດຕະການບັງຄັບປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ສ້າງຄວາມເຊື່ອໝັ້ນ, ເຊື່ອຖື ແລະ ສັດທາຈາກສັງຄົມ. ຖ້າຫາກຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບໍ່ໄດ້ຮັບການຈັດຕັ້ງປະຕິບັດຈະເຮັດໃຫ້ຄູ່ກໍລະນີບໍ່ໄດ້ຮັບການໃຊ້ແທນຄວາມເສຍຫາຍ, ບໍ່ໄດ້ຮັບຊັບສິນທີ່ສູນເສຍຄືນມາ ແລະ ອື່ນໆ ພາໃຫ້ບຸກຄົນບໍ່ສາມາດນຳໃຊ້ຊັບສິນເງິນຄຳຂອງຕົນເອງເຫຼົ່ານັ້ນ ໄປທຳການຜະລິດ-ທຸລະກິດ ຄ້າຂາຍ ແລະ ອາດມີທາງສ່ຽງຈົ່ມວ່າຕໍ່ການປະຕິບັດກົດໝາຍບໍ່ເຂັ້ມງວດ ແລະ ບໍ່ສັກສິດ, ມີການຮ້ອງທຸກ, ຮ້ອງຂໍ ຕໍ່ອົງການຈັດຕັ້ງຕ່າງໆ ເພື່ອໃຫ້ໄດ້ຜົນປະໂຫຍດທີ່ສູນເສຍໄປນັ້ນກັບມາ ຊຶ່ງຈະສົ່ງຜົນກະທົບຕໍ່ຄວາມເປັນລະບຽບຮຽບຮ້ອຍຢູ່ໃນສັງຄົມ, ເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ.

### 1.3 ຈຸດປະສົງ

ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຈຸດປະສົງຄື :

- ເພີ່ມທະວີຄວາມສັກສິດຂອງ ກົດໝາຍ;
- ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຄູ່ກໍລະນີ, ເຮັດໃຫ້ຜູ້ໄດ້ຮັບຄວາມອັບປະໂຫຍດໄດ້ຮັບການທົດແທນ ຄວາມເສຍຫາຍ;
- ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳ;
- ບັນລຸໄດ້ຕາມຈຸດປະສົງຂອງຄູ່ກໍລະນີທີ່ສະເໜີໃຫ້ມີການແກ້ໄຂຂໍ້ຂັດແຍ່ງ.

## 2. ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງ ສປປ ລາວ

ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນການປະຕິຜົນຂອງການແກ້ໄຂຂໍ້ພິພາດທາງດ້ານຜົນປະໂຫຍດລະຫວ່າງນິຕິບຸກຄົນດ້ວຍກັນ, ນິຕິບຸກຄົນກັບບຸກຄົນ, ບຸກຄົນກັບບຸກຄົນທັງສັນຊາດລາວ ແລະ ສັນຊາດຕ່າງປະເທດທີ່ເກີດຂຶ້ນຈາກການລະເມີດສັນຍາ, ການດໍາເນີນທຸລະກິດ ຊຶ່ງໄດ້ຮັບການແກ້ໄຂຢູ່ ສກສ ຫຼື ຫກສ.

ພາຍຫຼັງມີການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຈາກ ສກສ ຫຼື ຫກສ ແລ້ວຄູ່ກໍລະນີມີພັນທະໃນການປະຕິບັດຜົນການໄກ່ເກ່ຍ ຫຼື ຕາມຄໍາຕັດສິນຂອງຄະນະກໍາມະການ ຊຶ່ງໃນການປະຕິບັດນີ້ແມ່ນຈະມີສອງວິທີ ຄື: ການຈັດຕັ້ງປະຕິບັດໂດຍຄູ່ກໍລະນີ ແລະ ການຈັດຕັ້ງປະຕິບັດໂດຍອີງການປະຕິບັດຄໍາຕັດສິນຂອງສານ[108].

### 2.1 ການຈັດຕັ້ງປະຕິບັດໂດຍຄູ່ກໍລະນີ

ນີ້ແມ່ນການນໍາເອົາຜົນຂອງການໄກ່ເກ່ຍ, ຄໍາຕົກລົງຂອງຄູ່ກໍລະນີກ່ອນການຕັດສິນ ຫຼື ການຕັດສິນຂອງຄະນະກໍາມະການຕັດສິນ ມາຈັດຕັ້ງປະຕິບັດບັດໃຫ້ປາກົດຜົນເປັນຈິງຕາມຄວາມສະໝັກໃຈຂອງຄູ່ກໍລະນີ.

ຄູ່ກໍລະນີມີພັນທະປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍຕົນເອງດ້ວຍຄວາມສະໝັກໃຈພາຍໃນກໍານົດ 15 ວັນ ນັບແຕ່ວັນໄດ້ຮັບຜົນຂອງການແກ້ໄຂຂໍ້ຂັດແຍ່ງ ຫຼື ມີຄໍາຕົກລົງ ຫຼື ຄໍາຕັດສິນເປັນຕົ້ນໄປ[109]. ໃນການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງນັ້ນຄູ່ກໍລະນີຈະຈັດຕັ້ງປະຕິບັດຢູ່ທີ່ ສກສ ຫຼື ຫກສ ໂດຍຊ້ອງໜ້າພະນັກງານຂອງ ສກສ ຫລື ຫກສ ກໍໄດ້ ຫຼືວ່າຄູ່ກໍລະນີຈະຕິບັດຕໍ່ກັນເອງຢູ່ນອກ ສກສ ຫຼື ຫກສ ກໍໄດ້ ແຕ່ຕ້ອງໄດ້ນໍາເອົາເອກະສານໃນການປະຕິບັດມາຍື່ນຕໍ່ ສກສ ຫຼື ຫກສ ເພື່ອປິດສໍານວນຂໍ້ຂັດແຍ່ງ.

#### 2.1.1 ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ

ການຈັດຕັ້ງປະຕິບັດ ແມ່ນໜ້າທີຂອງພະແນກ ຫຼື ໜ່ວຍງານຕິດຕາມການປະຕິບັດຜົນ ຂອງການແກ້ໄຂຂໍ້ຂັດແຍ່ງ. ພະນັກງານພາຍໃນພະແນກ ຫຼື ໜ່ວຍງານທີ່ຮັບຜິດຊອບນັ້ນຕ້ອງໄດ້ອອກໝາຍເຊີນຄູ່ກໍລະນີ ເພື່ອເຂົ້າມາປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຄົ້ນຄວ້າ, ຕິດຕາມຜົນຂອງການແກ້ໄຂຂໍ້ຂັດແຍ່ງ ເຊັ່ນ ບົດບັນທຶກ, ຄໍາຕົກລົງຂອງຄູ່ກໍລະນີກ່ອນການຕັດສິນ ແລະ ຄໍາຕັດສິນຂອງຄະນະກໍາມະການກ່ຽວກັບວັນເວລາ, ຊັບສິນ, ວັດຖຸໃນການໃຊ້ແທນຄືນຂອງຄູ່ກໍລະນີ ແລະ ເປັນຜູ້ຕິດຕາມ, ຊຸກຍູ້ຄູ່ກໍລະນີໃນການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ຄູ່ກໍລະນີຕົກລົງເຫັນດີມາປະຕິບັດຢູ່ທີ່ ສກສ, ຫກສ ຫຼື ຄູ່ກໍລະນີປະຕິບັດນໍາກັນເອງຢູ່ນອກ ສກສ ຫຼື ຫກສ.

#### 2.1.2 ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງ

ຜົນຂອງການແກ້ໄຂຂໍ້ຂັດແຍ່ງທີ່ອອກມານັ້ນ ຈະຖືກສົ່ງໄປຫາພະແນກ ຫຼື ໜ່ວຍງານຕິດຕາມການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງຢູ່ ສກສ ຫຼື ຫກສ ເພື່ອນໍາເອົາຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດມາຈັດຕັ້ງປະຕິບັດ.

ເມື່ອຄູ່ກໍລະນີໄດ້ຍິນຍອມປະຕິບັດຕາມຜົນຂອງການແກ້ໄຂຂໍ້ຂັດແຍ່ງແລ້ວ, ພະນັກງານຂອງພະແນກ ຫຼື ໜ່ວຍງານ ຕ້ອງເຮັດບົດບັນທຶກໄວ້ເພື່ອເປັນການຮັບຮູ້ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງຂອງພວກ

---

[108] ຄໍາແນະນໍາຂອງລັດຖະມົນຕີວ່າການກະຊວງຍຸຕິທໍາ ກ່ຽວກັບການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ສະບັບເລກທີ 226/ກຍ ລົງວັນທີ 26 ມີນາ 2014, ຂໍ້III

[109] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 49

ເຂົາເຈົ້າ. ເນື້ອໃນຂອງບົດບັນທຶກ (ເອກະສານຊ້ອນທ້າຍ 28) ຕ້ອງໄດ້ກຳນົດລະອຽດກ່ຽວກັບວິທີຂອງການປະຕິບັດສິດ ແລະ ພັນທະຂອງຄູ່ກໍລະນີຕາມຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ພ້ອມທັງຕ້ອງໄດ້ລົງລາຍເຊັນຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ, ລາຍເຊັນຜູ້ບັນທຶກ ແລ້ວຕ້ອງສຳເນົາບົດບັນທຶກນັ້ນໃຫ້ຄູ່ກໍລະນີຜູ້ລະສະບັບ ແລະ ເກັບໄວ້ນຳ ສກສ ຫຼື ຫກສ ໜຶ່ງສະບັບ ເພື່ອເປັນຫຼັກຖານ. ເມື່ອຄູ່ກໍລະນີໄດ້ມີການຍິນຍອມປະຕິບັດສິດ ແລະ ພັນທະຕາມຜົນຂອງການແກ້ໄຂຂໍ້ຂັດແຍ່ງດ້ວຍຄວາມຈິງໃຈ ແລະ ຄົບຖ້ວນແລ້ວ ສກສ ຫຼື ຫກສ ຕ້ອງອອກຄຳສັ່ງປິດສຳນວນຂໍ້ຂັດແຍ່ງແລ້ວມອບໃຫ້ຄູ່ກໍລະນີຜູ້ລະສະບັບ ແລະ ເກັບໄວ້ນຳ ສກສ ຫຼື ຫກສ ໜຶ່ງສະບັບ ເພື່ອເປັນຫຼັກຖານ (ເອກະສານຊ້ອນທ້າຍ 29).

ໃນກໍລະນີຄູ່ກໍລະນີ ຫາກບໍ່ສາມາດປະຕິບັດຕາມຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນັ້ນ ພະນັກງານຂອງພະແນກ ຫຼື ໜ່ວຍງານ ຕິດຕາມການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງ ກໍຕ້ອງໄດ້ເຮັດບົດບັນທຶກ ແລະ ເຊັນຢັ້ງຢືນຮັບຮູ້ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທີ່ບໍ່ສຳເລັດນັ້ນ ໄວ້ເປັນຫຼັກຖານໃຫ້ແກ່ຄູ່ກໍລະນີເພື່ອໃຊ້ໃນເວລາຮ້ອງຂໍຕໍ່ສານປະຊາຊົນ.

## 2.2 ການຈັດຕັ້ງປະຕິບັດໂດຍອີງການປະຕິບັດຄຳຕັດສິນຂອງສານ

### 2.2.1 ການຍື່ນຄຳຮ້ອງຂໍຕໍ່ສານ

ເມື່ອຕົນເອງຫາກເປັນຝ່າຍເສັຍປະໂຫຍດຈາກການບໍ່ປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກໍສາມາດຮ້ອງຂໍຕໍ່ສານປະຊາຊົນແຂວງ, ນະຄອນຫຼວງ ບ່ອນ ສກສ ຫຼື ຫກສ ຕັ້ງຢູ່ເພື່ອພິຈາລະນາອອກຄຳຊີ້ຂາດບັງຄັບປະຕິບັດຜົນຂອງການແກ້ໄຂຂັດແຍ່ງດັ່ງກ່າວ[110].

ໃນການຍື່ນຄຳຮ້ອງຂໍຕໍ່ສານປະຊາຊົນເພື່ອພິຈາລະນາອອກຄຳຊີ້ຂາດໃຫ້ບັງຄັບປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນັ້ນ ໃຫ້ປະຕິບັດຕາມແບບພິມຄຳຮ້ອງຂອງສານ ເມື່ອປະກອບເອກະສານຄົບຖ້ວນແລ້ວຈິ່ງນຳໄປຍື່ນຕໍ່ສານປະຊາຊົນແຂວງ, ນະຄອນຫຼວງ ທີ່ ຫກສ ຫຼື ສກສ ບ່ອນແກ້ໄຂຂໍ້ຂັດແຍ່ງຕັ້ງຢູ່.

### 2.2.2 ຂັ້ນຕອນການພິຈາລະນາຂອງສານ

ການຊີ້ຂາດຂອງສານປະຊາຊົນຕໍ່ຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນັ້ນແມ່ນຕ້ອງໄດ້ພິຈາລະນາໂດຍໄວ, ພາຍຫຼັງທີ່ໄດ້ຮັບຄຳຮ້ອງຂໍຈາກຄູ່ກໍລະນີແລ້ວ ສານປະຊາຊົນຕ້ອງໄດ້ພິຈາລະນາອອກຄຳຊີ້ຂາດພາຍໃນກຳເວລາ ສິບຫ້າ ວັນ.

ໃນການພິຈາລະນາອອກຄຳຊີ້ຂາດນັ້ນ ສານປະຊາຊົນຕ້ອງໄດ້ກວດກາເບິ່ງວ່າການດຳເນີນການແກ້ໄຂຂໍ້ຂັດແຍ່ງນັ້ນໄດ້ປະຕິບັດຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ, ບໍ່ແຕະຕ້ອງເຖິງຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ. ຖ້າເຫັນວ່າຖືກຕ້ອງແລ້ວສານປະຊາຊົນຕ້ອງອອກຄຳຊີ້ຂາດເພື່ອບັງຄັບປະຕິບັດ. ຄຳຊີ້ຂາດຂອງສານນັ້ນຈະມີຜົນບັງຄັບປະຕິບັດໃນທັນໃດ ແລະ ບໍ່ສາມາດຂໍອຸທອນໄດ້.

ຖ້າສານປະຊາຊົນຫາກເຫັນວ່າຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດລະເມີດກົດໝາຍ ແລະ ລະບຽບການ ສານປະຊາຊົນກໍຈະບໍ່ລົງຄຳຊີ້ຂາດຢັ້ງຢືນເອົາເປັນຕົ້ນໃນກໍລະນີ ດັ່ງນີ້:

- ຄູ່ກໍລະນີໃດໜຶ່ງ ບໍ່ມີຄວາມສາມາດທາງດ້ານການປະພຶດ;
- ຜົນຂອງການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ຂັດກັບກົດໝາຍ ທີ່ໃຊ້ເປັນບ່ອນອີງໃນການແກ້ໄຂ ຫຼື ບໍ່ສອດຄ່ອງກັບກົດໝາຍຂອງ ສປປ ລາວ;

[110] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ ປີ 2010) ມາດຕາ 50

- ຄູ່ກໍລະນີມີການຄັດຄ້ານຄຳຕັດສິນ ຂອງຄະນະກຳມະການຕັດສິນ ຕາມທີ່ໄດ້ກຳນົດໄວ້ໃນກົດ ໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
- ຄຳຕັດສິນດັ່ງກ່າວນັ້ນຍັງບໍ່ມີຜົນບັງຄັບຄູ່ກໍລະນີ ຫຼື ຖືກຍົກເລີກ, ຖືກໂຈະໂດຍສານ ຫຼື ບໍ່ສອດຄ່ອງກັບກົດໝາຍຂອງປະເທດທີ່ໄດ້ອອກຄຳຕົກລົງນັ້ນ;
- ຂໍ້ຂັດແຍ່ງດັ່ງກ່າວບໍ່ສາມາດແກ້ໄຂໄດ້ ດ້ວຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃຕ້ກົດໝາຍຂອງ ສປປ ລາວ[111].

ຜ່ານການກວດກາຂອງສານປະຊາຊົນແລ້ວຫາກເຫັນວ່າຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນັ້ນໄດ້ລະເມີດກົດໝາຍ, ສານກໍຈະບໍ່ລົງຄຳຊີ້ຂາດຢັ້ງຢືນເອົາ, ໃນກໍລະນີດັ່ງກ່າວນີ້ຄູ່ກໍລະນີ ມີສິດຕົກລົງໃຫ້ ສກສ ແກ້ໄຂຂໍ້ຂັດແຍ່ງດັ່ງກ່າວນັ້ນຄືນໃໝ່ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕາມກົດໝາຍ.

### 2.2.3 ຂັ້ນຕອນການຈັດຕັ້ງປະຕິບັດ

ຄຳຊີ້ຂາດຂອງສານທີ່ໃຊ້ໄດ້ເດັດຂາດທາງດ້ານກົດໝາຍ ຈະຖືກນຳມາຈັດຕັ້ງປະຕິບັດຕາມຂັ້ນຕອນຂອງກົດໝາຍ ດັ່ງລຸ່ມນີ້:

**ກ. ການສົ່ງຄຳຊີ້ຂາດໄປບັງຄັບປະຕິບັດ**

ພາຍຫຼັງທີ່ສານປະຊາຊົນທີ່ກ່ຽວຂ້ອງໄດ້ອອກຄຳຊີ້ຂາດ ຕໍ່ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດແລ້ວ ຕ້ອງໄດ້ແຈ້ງໃຫ້ຄູ່ກໍລະນີຮັບຊາບ ແລະ ສົ່ງຄຳຊີ້ຂາດດັ່ງກ່າວ ໄປຍັງພະແນກຍຸຕິທຳແຂວງ, ນະຄອນຫຼວງ ພາຍໃນກຳນົດເວລາ ສາມສິບ ວັນ[112].

**ຂ. ການຄົ້ນຄວ້າເພື່ອຈັດຕັ້ງປະຕິບັດ**

ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຈະຕ້ອງໄດ້ຄົ້ນຄວ້າຄຳຊີ້ຂາດຂອງສານປະຊາຊົນໃຫ້ລະອຽດ ເພື່ອ ເຂົ້າໃຈ ແລະ ກະກຽມເງື່ອນໄຂຕ່າງໆໃນການຈັດຕັ້ງປະຕິບັດຕາມຂັ້ນຕອນຂອງກົດໝາຍ

**ຄ. ການຮຽກຄູ່ຄວາມມາປຶກສາຫາລືໃນການປະຕິບັດ**

ກ່ອນຈະລົງມືປະຕິບັດຕົວຈິງນັ້ນພາຍໃນກຳນົດເວລາສິບວັນ ນັບແຕ່ໄດ້ຮັບຄຳຊີ້ຂາດຂອງສານ ພະນັກງານຈັດຕັ້ງປະຕິບັດຕ້ອງໄດ້ຮຽກຄູ່ຄວາມເຂົ້າມາຫ້ອງການປະຕິບັດເພື່ອແຈ້ງໃຫ້ຊາບ, ແນະນຳ ແລະ ຊຸກຍູ້, ປຸກລະດົມ, ວາງກຳນົດເວລາພ້ອມທັງຫາວິທີການປະຕິບັດຄຳຕັດສິນຊຶ່ງອີງໃສ່ເງື່ອນໄຂຕົວຈິງທາງດ້ານເສດຖະກິດຂອງຜູ້ຖືກປະຕິບັດ ເພື່ອເຮັດໃຫ້ການປະຕິບັດຄຳຊີ້ຂາດຂອງສານເປັນໄປຕາມກຳນົດເວລາທີ່ກົດໝາຍໄດ້ກຳນົດໄວ້ຄືຫົກສິບວັນ; ຜ່ານການປຶກສາຫາລືຄູ່ຄວາມສາມາດຕົກລົງກັນໄດ້ ຫຼື ບໍ່ໄດ້ກໍຕາມກຽວກັບວິທີການ (ການໃຊ້ແທນໜີ້ສິນ). ໃນການຈັດຕັ້ງປະຕິບັດຄຳຊີ້ຂາດນັ້ນພະນັກງານປະຕິບັດຄຳຕັດສິນຂອງສານຈະຕ້ອງໄດ້ເຮັດບົດບັນທຶກທຸກຄັ້ງທີ່ຮຽກຄູ່ຄວາມເຂົ້າມາພົບເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຕົວຈິງ.

ນອກນັ້ນແລ້ວ ພະນັກງານປະຕິບັດຄຳຕັດສິນ ກໍຍັງຕ້ອງໄດ້ອະທິບາຍເຖິງມາດຕະການທາງດ້ານກົດໝາຍທີ່ຈະຕ້ອງໄດ້ນຳໃຊ້ເຂົ້າໃນການປະຕິບັດ ຖ້າຫາກວ່າຜູ້ຖືກປະຕິບັດບໍ່ໃຫ້ຄວາມຮ່ວມມື.

ໃນລະຍະເວລາຂອງການປະຕິບັດຄຳຕັດສິນຂອງສານນີ້ຫົວໜ້າຫ້ອງການ ຫຼື ຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນ ສາມາດນຳໃຊ້ມາດຕະການທາງດ້ານກົດໝາຍ ເຊັ່ນ ການອອກຄຳສັ່ງອາຍັດຊັບ, ຄຳສັ່ງຍຶດຊັບທີ່ສານຍັງບໍ່ທັນອອກຄຳສັ່ງຍຶດຊັບ ຫຼື ອາຍັດຊັບນັ້ນໄດ້ ຫາກເຫັນວ່າຜູ້ຖືກປະຕິບັດຄຳຕັດສິນຂອງສານມີເຈດຕະນາຫຼົບຫຼີກ ບໍ່ຢາກປະຕິບັດຄຳຕັດສິນນັ້ນ.

---

[111] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ ປີ 2012) ມາດຕາ 42

[112]ກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ ປີ 2008) ມາດຕາ 23

**ງ. ການປະຕິບັດຕົວຈິງ**

ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຈະລົງມືປະຕິບັດຕົວຈິງພາຍຫຼັງໄດ້ມີການປຶກສາຫາລືເຖິງວິທີການປະຕິບັດຈາກຄູ່ຄວາມ, ເຖິງຄວາມສາມາດຕົວຈິງທາງດ້ານເສດຖະກິດຂອງຜູ້ຖືກປະຕິບັດ ຊຶ່ງທາງພະນັກງານປະຕິບັດຄຳຕັດສິນກໍຈະໄດ້ເຮັດບົດບັນທຶກນັ້ນໄວ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຕົວຈິງ, ພາຍໃນກຳນົດຫົກສິບວັນ ຖ້າຜູ້ຖືກປະຕິບັດຄຳຕັດສິນຂອງສານ ຫາກໄດ້ປະຕິບັດຕາມຄຳຕັດສິນຂອງສານຢ່າງຄົບຖ້ວນແລ້ວ ກໍຖືວ່າການຈັດຕັ້ງປະຕິບັດຄຳຕັດສິນຂອງສານນັ້ນສິ້ນສຸດລົງ.

ໃນກໍລະນີທີ່ຜູ້ຖືກປະຕິບັດບໍ່ຍອມປະຕິບັດ ມີເຈດຕະນາແກ່ຍາວເວລາ ຫຼື ການປະຕິບັດຄຳຕັດສິນຍັງບໍ່ທັນຄົບຖ້ວນນັ້ນທາງຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຈະຕ້ອງໄດ້ນຳໃຊ້ມາດຕະການ ເຊັ່ນ ກວດກາຂຶ້ນບັນຊີຊັບສິນ, ການອອກຄຳສັ່ງຍຶດຊັບ ຫຼື ອາຍັດຊັບ, ອອກຄຳສັ່ງຕັດເງິນເດືອນ ຫຼື ລາຍໄດ້ຕ່າງໆຂອງຜູ້ຖືກປະຕິບັດເພື່ອນຳມາຊຳລະ, ອອກຄຳສັ່ງຍົກຍ້າຍ, ຄຳສັ່ງປັບໃໝຜູ້ຖືກປະຕິບັດຄຳຊີ້ຂາດຂອງສານນັ້ນຕາມແຕ່ກໍລະນີ.

ກ່ອນຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຕາມຄຳຕັດສິນຂອງສານຈະອອກຄຳສັ່ງອາຍັດຊັບ ຫຼື ຍຶດຊັບນັ້ນຫົວໜ້າຫ້ອງການ ຫຼື ຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຕ້ອງໄດ້ອອກຄຳສັ່ງກວດກາ ແລະ ຂຶ້ນບັນຊີຊັບສິນຂອງຜູ້ຖືກປະຕິບັດ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງໂດຍສະເພາະອົງການປົກຄອງບ້ານ, ເຈົ້າໜ້າທີ່ຕຳຫຼວດ ແລະ ເຈົ້າຂອງຊັບ ຫຼື ຜູ້ຖືກປະຕິບັດ ເພື່ອລົງກວດກາ ແລະ ຂຶ້ນບັນຊີຊັບສິນວ່າມີຊັບສິນປະເພດໃດແດ່, ຈຳນວນເທົ່າໃດ ແລະ ຢູ່ໃສ. ຜ່ານການກວດກາສຳເລັດແລ້ວ ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຕ້ອງໄດ້ເຮັດບົດບັນທຶກກ່ຽວກັບຊັບທີ່ກວດເຫັນຕົວຈິງ ພ້ອມທັງຂຶ້ນບັນຊີຢ່າງລະອຽດ ແລ້ວເຊັນຢັ້ງຢືນຮັບຮູ້ຈາກຜູ້ເຂົ້າຮ່ວມທັງໝົດ. ໃນກໍລະນີຊັບສິນຂອງຜູ້ຖືກປະຕິບັດຫາກຢູ່ຕ່າງແຂວງ ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຈິບັດຄຳຕັດສິນຂອງສານທີ່ຮັບຜິດຊອບ ຈະສະເໜີໃຫ້ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຈິບັດຄຳຕັດສິນຂອງສານບ່ອນມີຊັບຢູ່ນັ້ນກວດກາຊັບສັບນັ້ນວ່າມີຈິງ ຫຼື ເປັນຂອງຜູ້ຖືກປະຕິບັດແທ້ ຫຼື ບໍ່ ພ້ອມທັງຂຶ້ນບັນຊີຊັບສິນນັ້ນໃຫ້ລະອຽດ ຫຼື ຈະໃຫ້ຈັດຕັ້ງປະຕິບັດຄຳຕັດສິນແທນຕົນເລີຍກໍໄດ້[113].

ເມື່ອພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໄດ້ລົງກວດກາ ແລະ ຂຶ້ນບັນຊີຊັບສິນຂອງຜູ້ຖືກປະຕິບັດລະອຽດແລ້ວ ຈິ່ງອອກຄຳສັ່ງອາຍັດ ຫຼື ຍຶດຊັບດັ່ງກ່າວນັ້ນໄວ້. ເມື່ອຍຶດ ຫຼື ອາຍັດຊັບຂອງຜູ້ທີ່ຖືກປະຕິບັດແລ້ວພະນັກງານຈັດຕັ້ງປະຕິບັດຄຳຕັດສິນຕ້ອງໄດ້ດຳເນີນການຕີລາຄາ ແລະ ປະກາດຂາຍຊັບສິນນັ້ນ ເພື່ອໃຊ້ແທນໜີ້ສິນ.

ຊັບສິນຈະຖືກຕີລາຄາໂດຍຄະນະກຳມະການ ຊຶ່ງຖືກແຕ່ງຕັ້ງໂດຍເຈົ້າຄອງນະຄອນ, ເຈົ້າແຂວງ, ເຈົ້າເມືອງ. ໃນເວລາຕີລາຄາຊັບສິນນັ້ນເຈົ້າຂອງຊັບກໍຕ້ອງໄດ້ເຂົ້າຮ່ວມນຳ, ຖ້າຫາກວ່າເຈົ້າຂອງຊັບບໍ່ໄດ້ເຂົ້າຮ່ວມພາຍຫຼັງຄະນະກຳມະການຕີລາຄາຊັບສິນແລ້ວຕ້ອງໄດ້ເຮັດບົດບັນທຶກການຕີລາຄາແລ້ວແຈ້ງໃຫ້ເຈົ້າຂອງຊັບ ແລະ ເຈົ້າໜ້າທີ່ຊາບພາຍໃນກຳນົດເຈັດວັນ[114].

ພາຍຫຼັງທີ່ໄດ້ຕີລາຄາຊັບແລ້ວຈິ່ງທຳການປະກາດຊັບດັ່ງກ່າວໃຫ້ມວນຊົນຊາບຢ່າງກວ້າງຂວາງ ເພື່ອປະມູນຂາຍຕາມລະບຽບການທີ່ໄດ້ກຳນົດໄວ້ໃນດຳລັດຂອງລັດຖະບານ ເລກທີ 158/ລບ, ລົງວັນທີ 4 ມິຖຸນາ 2013 ວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

**ຈ. ການສິ້ນສຸດການປະຕິບັດ**

ການຈັດຕັ້ງປະຕິບັດຄຳຊີ້ຂາດຂອງສານຈະສິ້ນສຸດລົງໃນກໍລະນີ

- ຜູ້ປະຕິບັດໄດ້ປະຕິບັດຕາມຄຳຕັດສິນຂອງສານຢ່າງຄົບຖ້ວນແລ້ວ;

[113] ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ ປີ 2008) ມາດຕາ28

[114] ດຳລັດຂອງລັດຖະບານເລກທີ 158/ລບ, ລົງວັນທີ 4 ມິຖຸນາ 2013 ວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ມາດຕາ 17

- ເຈົ້າໜີ້ໄດ້ສະລະສິດ. ໃນກໍລະນີທີ່ເຈົ້າໜີ້ໄດ້ຮັບໝາຍຮຽກສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາສະເໜີຕົວຕໍ່ພະນັກງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານໂດຍບໍ່ມີເຫດຜົນພຽງພໍ ກໍໃຫ້ຖືເປັນການສະລະສິດເຊັ່ນດຽວກັນ;
- ຜູ້ຖືກປະຕິບັດໄດ້ເສຍຊີວິດ ໂດຍບໍ່ມີຊັບ, ບໍ່ມີສິດ ຫຼື ພັນທະໃຫ້ຜູ້ອື່ນສືບທອດຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ເມື່ອການຈັດຕັ້ງປະຕິບັດຄໍາຕັດສິນຂອງສານສິ້ນສຸດລົງແລ້ວ ຫົວໜ້າຫ້ອງການຈັດຕັ້ງປະຕິບັດ ຫຼື ຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ຕ້ອງອອກຄໍາສັ່ງປິດສໍານວນຄະດີ ແລະ ແຈ້ງໃຫ້ຄູ່ຄວາມ, ຫົວໜ້າອົງການໄອຍະການປະຊາຊົນ, ຫ້ອງວ່າການສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ ແລະ ອົງການປົກຄອງທ້ອງຖິ່ນຊາບ[115].

## 3. ການຮັບຮູ້ ແລະ ປະຕິບັດຄໍາຕັດສິນຂອງຄະນະກໍາມະການຕັດສິນຕ່າງປະເທດ

ໃນສະພາບປັດຈຸບັນນີ້ການເປີດກວ້າງທາງເສດຖະກິດ ຄຽງຄູ່ກັບການດໍາເນີນທຸລະກິດນັ້ນອາດຈະມີຂໍ້ຂັດແຍ່ງເກີດຂຶ້ນ ແຕ່ການແກ້ໄຂຂໍ້ຂັດແຍ່ງນັ້ນຂຶ້ນກັບຄວາມສະໝັກໃຈຂອງຄູ່ສັນຍາວ່າຈະດໍາເນີນຢູ່ໃສ, ພາຍໃນປະເທດ ຫຼື ຕ່າງປະເທດ. ຖ້າຄູ່ກໍລະນີຫາກເລືອກການແກ້ໄຂຂໍ້ຂັດແຍ່ງນັ້ນ ດ້ວຍຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງຂອງຕ່າງປະເທດແລ້ວ ການປະຕິບັດຄໍາຕັດສິນຂອງຄະນະກໍາມະການຕ່າງປະເທດນັ້ນແນ່ນອນແມ່ນຈະຖືກປະຕິບັດຢູ່ອີກປະເທດໜຶ່ງ. ໃນການຮັບຮູ້ຄໍາຕັດສິນຂອງຄະນະກໍາມະການຕ່າງປະເທດນັ້ນ ກໍຕ້ອງຢູ່ບົນພື້ນຖານການຕົກລົງລະຫວ່າງປະເທດ, ການເຂົ້າເປັນພາຄີຂອງອະນຸສັນຍາ ແລະ ສົນທິສັນຍາຕ່າງໆ. ສປປ ລາວ ໄດ້ເປັນພາຄີຕາມສົນທິສັນຍານິວຢອກ 1958 ວ່າດ້ວຍການຮັບຮູ້ ແລະ ບັງຄັບປະຕິບັດຄໍາຕັດສິນຂອງຄະນະກໍາມະການຕ່າງປະເທດ ຫຼື ສາກົນ ມາດຕາ 1 ຂໍ້ 1 ໄດ້ກໍານົດໄວ້ວ່າ " ສົນທິສັນຍາສະບັບນີ້ ໃຊ້ປະຕິບັດຕໍ່ການຮັບຮູ້ ແລະ ການຈັດຕັ້ງປະຕິບັດຄໍາຕັດສິນ ຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ໄດ້ຕັດສິນຢູ່ດິນແດນຂອງລັດໃດລັດໜຶ່ງ ທີ່ບໍ່ແມ່ນດິນແດນຂອງລັດຮ້ອງຂໍໃຫ້ຮັບຮູ້ ແລະ ຈັດຕັ້ງປະຕິບັດ ແລະ ແມ່ນຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງບຸກຄົນ ຫຼື ນິຕິບຸກຄົນດ້ວຍກັນ. ສົນທິສັນຍາສະບັບນີ້ຍັງໃຊ້ປະຕິບັດຕໍ່ບັນດາຄໍາຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ບໍ່ໄດ້ຖືວ່າແມ່ນຄໍາຕັດສິນພາຍໃນຂອງລັດທີ່ຖືກຮ້ອງຂໍໃຫ້ມີການຮັບຮູ້ ແລະ ຈັດຕັ້ງປະຕິບັດນັ້ນ". ນີ້ກໍໝາຍຄວາມວ່າ ສປປ ລາວ ຈະຍອມຮັບຄໍາຕັດສິນຂອງຄະນະກໍາມະການຕ່າງປະເທດຂອງບັນດາປະເທດທີ່ເປັນພາຄີໃນສົນທິສັນຍາດັ່ງກ່າວ. ພ້ອມດຽວກັນນັ້ນຄໍາຕັດສິນຂອງ ສກສ ຫຼື ຫກສ ຂອງ ສປປ ລາວ ກໍສາມາດນໍາໄປຈັດຕັ້ງປະຕິບັດຢູ່ໃນບັນດາປະເທດທີ່ເປັນພາຄີຂອງສົນທິສັນຍາດັ່ງກ່າວນີ້ເຊັ່ນກັນ. ເພື່ອໃຫ້ສອດຄ່ອງກັບສະພາບການຕົວຈິງ ກົດໝາຍຂອງສປປລາວກໍໄດ້ກໍານົດເຖິງບັນຫາ ໂດຍສະເພາະແມ່ນກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປັບປຸງ ປີ 2010 ແລະ ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ສະບັບປັບປຸງ ປີ 2012.

ເພື່ອເຮັດໃຫ້ຄໍາຕັດສິນຂອງຄະນະກໍາມະການຕ່າງປະເທດສາມາດນໍາໃຊ້ ແລະ ປະຕິບັດຢູ່ ສປປ ລາວນັ້ນ ຕ້ອງໄດ້ຜ່ານຂັ້ນຕອນການຮັບຮູ້ຄໍາຕັດສິນຈາກສານປະຊາຊົນຂອງ ສປປ ລາວ. ການຮ້ອງຂໍ ແລະ ການພິຈາລະນາຂອງສານໃນການອອກຄໍາຕັດສິນຮັບຮູ້ນັ້ນ ຕ້ອງໄດ້ປະຕິບັດຕາມຂັ້ນຕອນຂອງກົດໝາຍ ດັ່ງນີ້:

### 3.1 ການຍື່ນຄໍາຮ້ອງຂໍ

ບຸກຄົນ ຫຼື ນິຕິບຸກຄົນທີ່ມີຈຸດປະສົງໃຫ້ສານພິຈາລະນາຮັບຮູ້ຄໍາຕັດສິນຂອງຄະນະກໍາມະການຕ່າງປະເທດ ແລະ ນໍາມາຈັດຕັ້ງປະຕິບັດໃນ ສປປ ລາວ ນັ້ນຕ້ອງໄດ້ປະກອບຄໍາຮ້ອງຂໍໂດຍມີເນື້ອໃນທີ່ຈະແຈ້ງ, ບົ່ງບອກເຖິງລາຍ

[115] ກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ (ສະບັບປັບປຸງ ປີ 2008) ມາດຕາ 29

ລະອຽດທີ່ຢູ່ອາໄສຂອງຕົນ ແລະ ຄູ່ກໍລະນີ, ບົ່ງບອກເຖິງຂໍ້ຂັດແຍ່ງ ແລະ ຈໍານວນໜີ້ສິນ, ຊັບສິນທີ່ຍັງຄ້າງປະຕິບັດ ພ້ອມທັງລົງລາຍເຊັນໃນຄໍາຮ້ອງ. ນອກນີ້ ຜູ້ຮ້ອງຂໍກໍຕ້ອງມີເອກະສານໃນການແກ້ໄຂຜ່ານມາຕົດຂັດມາພ້ອມ ເຊັ່ນ ຄໍາຕັດສິນຂອງຄະນະກໍາມະການຕ່າງປະເທດ, ໜັງສືຢັ້ງຢືນຂອງສານຕ່າງປະເທດທີ່ກ່ຽວຂ້ອງວ່າຄໍາຕັດສິນດັ່ງກ່າວນັ້ນ ໃຊ້ໄດ້ຢ່າງເດັດຂາດ, ສົນທິສັນຍາສາກົນທີ່ກ່ຽວຂ້ອງ ຊຶ່ງ ສປປ ລາວ ເປັນພາຄີ, ເອກະສານອື່ນທີ່ກ່ຽວຂ້ອງເອກະສານຄໍາຮ້ອງຂໍ ແລະ ເອກະສານຄັດຕິດນັ້ນ ທີ່ເປັນພາສາຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ໂດຍມີການຢັ້ງຢືນຄວາມຖືກຕ້ອງຈາກ ສໍານັກງານທະບຽນສານ[116]. ເມື່ອປະກອບເອກະສານຄົບຖ້ວນແລ້ວ ຕ້ອງໄດ້ຍື່ນເອກະສານດັ່ງກ່າວນັ້ນຜ່ານກະຊວງການຕ່າງປະເທດ ເພື່ອນໍາສະເໜີຕໍ່ກະຊວງຍຸຕິທໍາ ເພື່ອກວດກາກ່ອນສະເໜີຕໍ່ສານປະຊາຊົນສູງສຸດ ເພື່ອສົ່ງໃຫ້ສານປະຊາຊົນທີ່ມີສິດອໍານາດພິຈາລະນາຕາມກົດໝາຍ ແລະ ລະບຽບການ[117].

### 3.2 ຂັ້ນຕອນການພິຈາລະນາຂອງສານ

ສານປະຊາຊົນທີ່ໄດ້ຮັບຄໍາຮ້ອງຂໍໃຫ້ຮັບຮູ້ຄໍາຕັດສິນ ຂອງຄະນະກໍາມະການຕ່າງປະເທດ ຕ້ອງໄດ້ນໍາເອົາຄະດີດັ່ງກ່າວນັ້ນອອກມາພິຈາລະນາຕັດສິນພາຍໃນກໍານົດເວລາບໍ່ໃຫ້ກາຍ ສາມສິບວັນ ແລະ ຕ້ອງຮຽກເອົາຄູ່ກໍລະນີມາຮັບຊາບ ແລະ ຊີ້ແຈ້ງຕໍ່ສານ.

ໃນການພິຈາລະນາຂອງສານປະຊາຊົນນັ້ນອາດຈະພິຈາລະນາຮັບຮູ້ ຫຼື ບໍ່ຮັບຮູ້ຄໍາຕັດສິນຂອງຄະນະກໍາມະການຕ່າງປະເທດແລ້ວແຕ່ກໍລະນີຄື:

ການພິຈາລະນາຮັບຮູ້ຄໍາຕັດສິນຂອງຄະນະກໍາມະການຕ່າງປະເທດນັ້ນ ສານຈະຕ້ອງໄດ້ກວດກາເບິ່ງຄູ່ກໍລະນີນັ້ນຖືສັນຊາດຂອງປະເທດທີ່ເປັນພາຄີຂອງສົນທິສັນຍານິວຢອກ ປີ 1958 ວ່າດ້ວຍການຮັບຮູ້ ແລະ ບັງຄັບປະຕິບັດຄໍາຕັດສິນຂອງກໍາມະການຕັດສິນຕ່າງປະເທດ ຫຼື ສາກົນ. ຄໍາຕັດສິນນັ້ນຕ້ອງບໍ່ຂັດກັບ ລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການ ກ່ຽວກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ; ຄູ່ກໍລະນີຝ່າຍທີ່ມີພັນທະໃຊ້ແທນໜີ້ສິນມີຊັບສິນ, ກິດຈະການ, ຮຸ້ນ, ເງິນຝາກ ຫຼື ຊັບສິນອື່ນ ຢູ່ ສປປ ລາວ, ຜ່ານການກວດກາແລ້ວຖ້າເຫັນວ່າຖືກຕ້ອງຕາມເງື່ອນໄຂຂ້າງເທິງນີ້ ສານປະຊາຊົນຕ້ອງໄດ້ຕັດສິນຮັບຮູ້ຄໍາຕັດສິນຂອງຄະນະກໍາມະການຕ່າງປະເທດນັ້ນ[118].

ສານປະຊາຊົນຈະພິຈາລະນາບໍ່ຮັບຮູ້ຄໍາຕັດສິນຂອງຄະນະກໍາມະການຕ່າງປະເທດ ຖ້າກວດກາແລ້ວຫາກເຫັນວ່າມີກໍລະນີໃດໜຶ່ງ ດັ່ງນີ້:

- ຄໍາຕັດສິນດັ່ງກ່າວຍັງຢູ່ໃນຂັ້ນຕອນຂອງການດໍາເນີນຄະດີຊຶ່ງຍັງບໍ່ເປັນຄໍາຕັດສິນທີ່ໃຊ້ໄດ້ເດັດຂາດ;
- ຜູ້ເສຍຄະດີໃນຄໍາຕັດສິນ ຂອງຄະນະກໍາມະການຕ່າງປະເທດນັ້ນບໍ່ໄດ້ເຂົ້າຮ່ວມ ໃນການດໍາເນີນໂດຍມີການຕັດສິນລັບຫຼັງຜູ້ກ່ຽວ;
